LAOS
Simply Beautiful

ADB



# ແຜນພັດທະນາການທ່ອງທ່ຽວ ເມືອງເຟືອງ, ແຂວງວຽງຈັນ

**ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

**ຮ່ວມກັບ**

**ມະຫາວິທະຍາໄລແຫ່ງຊາດ ແລະ ອົງການປົກຄອງແຂວງວຽງຈັນ**

ສະໜັບສະໜູນໂດຍ:

ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ ໃນອານຸພາກພື້ນແມ່ນ້ຳຂອງ ໄລຍະ 2

ປີ 2023

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງວຽງຈັນ

ເລກທີ 350 /ຈຂ ວຈ

ວັນທີ 07 ເມສາ 2023

# ຂໍ້ຕົກລົງ

ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ແຜນພັດທະນາການທ່ອງທ່ຽວ ຂອງເມືອງເຟືອງ ແຂວງວຽງຈັນ ສໍາລັບປີ 2023-2033

- ອີງຕາມ ກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລື ການຜ່ານຮ່າງແຜນພັດທະນາການທ່ອງທ່ຽວຂອງເມືອງເຟືອງ ແຂວງວຽງຈັນ ໄລຍະປີ 2023-2033, ຄັ້ງວັນທີ 27/1/2023.
- ອີງຕາມ ໜັງສືລາຍງານຂອງພະແນກ ຖວທ ແຂວງວຽງຈັນ ສະບັບເລກທີ 241/ຖວທ ວຈ ລົງວັນທີ 24/2/2023
- ອີງຕາມ ມະຕິຕົກລົງຂອງສະພາປະຊາຊົນແຂວງວຽງຈັນ ສະບັບເລກທີ 17/ຄປຈ, ລົງວັນທີ 31/3/2023, ວ່າດ້ວຍການຮັບຮອງແຜນພັດທະນາການທ່ອງທ່ຽວຂອງເມືອງເຟືອງ ແຂວງວຽງຈັນ ໃນໄລຍະປີ 2023-2033

## ເຈົ້າແຂວງ ຕົກລົງ:

**ມາດຕາ 01** ເຫັນດີຮັບຮອງ ແລະ ປະກາດໃຊ້ ແຜນພັດທະນາການທ່ອງທ່ຽວຂອງເມືອງເຟືອງ ແຂວງວຽງຈັນ ໃນໄລຍະປີ 2023-2033,

**ມາດຕາ 02** ມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງວຽງຈັນ, ອົງການປົກຄອງເມືອງເຟືອງ ເປັນເຈົ້າການນໍາເອົາແຜນພັດທະນາການທ່ອງທ່ຽວເມືອງເຟືອງສະບັບນີ້ ໄປຈັດຕັ້ງເຜີຍແຜ່ ແລະ ຈັດຕັ້ງຜັນຂະຫຍາຍໃຫ້ປະກົດຜົນເປັນຈິງ.

**ມາດຕາ 03** ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ, ເມືອງ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກ ໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາການທ່ອງທ່ຽວ ສະບັບນີ້ ໃຫ້ໄດ້ຮັບຜົນສໍາເລັດເປັນຢ່າງດີ.

**ມາດຕາ 04** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນໍາໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ບ່ອນສົ່ງ:

| | |
|---|---|
| - ທ່ານເຈົ້າແຂວງວຽງຈັນ | 1 ສະບັບ |
| - ກົມພັດທະນາການທ່ອງທ່ຽວ | 1 ສະບັບ |
| - ພະແນກ ຖວທ ແຂວງວຽງຈັນ | 1 ສະບັບ |
| - ອົງການປົກຄອງເມືອງເຟືອງ | 1 ສະບັບ |
| - ພາກສ່ວນກ່ຽວຂ້ອງ | 1 ສະບັບ |
| - ເກັບໄວ້ສໍານາ | 1 ສະບັບ |

ຄໍາພັນ ສິດທິດໍາພາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງວຽງຈັນ
ຄະນະປະຈຳ

ເລກທີ 17 /ຄປຈ

ແຂວງວຽງຈັນ, ວັນທີ 31. 3. 2023

# ມະຕິ

## ວ່າດ້ວຍການຮັບຮອງ ກ່ຽວກັບແຜນພັດທະນາການທ່ອງທ່ຽວ ເມືອງເຟືອງ ໄລຍະປີ 2023-2033 ຂອງແຂວງວຽງຈັນ

- ອີງຕາມ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ໜັງສືສະເໜີຂອງທ່ານເຈົ້າແຂວງ ແຂວງວຽງຈັນ ສະບັບເລກທີ 028/ຈຂ.ວຈ, ລົງວັນທີ 13 ມີນາ 2023;
- ອີງຕາມ ການຕົກລົງເຫັນດີຂອງຄະນະປະຈຳ ສະພາປະຊາຊົນແຂວງວຽງຈັນ ໃນຄັ້ງວັນທີ 28 ມີນາ 2023.

### ຄະນະປະຈຳສະພາປະຊາຊົນແຂວງວຽງຈັນ ຕົກລົງ:

**ມາດຕາ 01:** ເຫັນດີຮັບຮອງເອົາແຜນພັດທະນາການທ່ອງທ່ຽວ ເມືອງເຟືອງ ໄລຍະປີ 2023-2033 ຂອງແຂວງວຽງຈັນ.

**ມາດຕາ 02:** 1.) ມອບໃຫ້ໃຫ້ອົງການປົກຄອງແຂວງຊີ້ນຳ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງວຽງຈັນ ຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເຂັ້ມງວດ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ;

2.) ມອບໃຫ້ຄະນະກຳມະການທີ່ກ່ຽວຂ້ອງ ຂອງສະພາປະຊາຊົນແຂວງວຽງຈັນ ດຳເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເປັນປົກກະຕິ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນທີ່ໄດ້ກຳນົດໄວ້ໃນ ກົດໝາຍຢ່າງເຂັ້ມງວດ ແລ້ວລາຍງານມາຍັງຄະນະປະຈຳ ສະພາປະຊາຊົນແຂວງວຽງຈັນ ເປັນແຕ່ລະໄລຍະ;

3.) ຄະນະປະຈຳສະພາປະຊາຊົນແຂວງ, ເຈົ້າແຂວງ, ຮອງເຈົ້າແຂວງ, ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງ ປະຕິບັດຕາມມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 03:** ມະຕິສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາປະຊາຊົນແຂວງວຽງຈັນ**
**ປະທານ**

ບຸນສອນ ເພັດລາວັນ

ບ່ອນສົ່ງ:
- ປະທານ,ຮອງປະທານ ສພຊ ທ່ານລະ 1 ສະບັບ;
- ເຈົ້າແຂວງ ແຂວງວຽງຈັນ 1 ສະບັບ;
- ຮອງເຈົ້າແຂວງ ແຂວງວຽງຈັນ 1 ສະບັບ;
- ຄະນະປະຈຳ ສພຊ ທ່ານລະ 1 ສະບັບ;
- ພະແນກ ຖວທ ແຂວງວຽງຈັນ 1 ສະບັບ;
- ສຳເນົາ 2 ສະບັບ.

# ສາລະບານ


ສາລະບານຮູບພາບ ............................................................ i

ສາລະບານຕາຕະລາງ ແລະ ເສັ້ນສະແດງ ............................................................ iv

ພາກທີ່ I ............................................................ 1

ພາກສະເໜີ ............................................................ 1

1. ສະພາບລວມ ............................................................ 1

1.1. ຈຸດພິເສດທາງດ້ານທີ່ຕັ້ງ ແລະ ພູມສັນຖານຂອງເມືອງເຟືອງ ............................................................ 1

1.2. ປະຫວັດຄວາມເປັນມາຂອງເມືອງເຟືອງ ............................................................ 2

1.3. ສະພາບເສດຖະກິດ-ສັງຄົມຂອງເມືອງເຟືອງ ............................................................ 3

2. ສະພາບການທ່ອງທ່ຽວ ............................................................ 3

2.1 ສະພາບການທ່ອງທ່ຽວຢູ່ ສປປ ລາວ ............................................................ 3

2.2 ສະພາບການທ່ອງທ່ຽວຢູ່ແຂວງວຽງຈັນ ............................................................ 4

2.3 ສະພາບການທ່ອງທ່ຽວຢູ່ເມືອງເຟືອງ ............................................................ 6

3. ນະໂຍບາຍຕໍ່ວຽກງານການທ່ອງທ່ຽວ ............................................................ 7

3.1 ນະໂຍບາຍຕໍ່ວຽກງານການທ່ອງທ່ຽວຂອງ ສປປ ລາວ ............................................................ 7

3.2 ນະໂຍບາຍຕໍ່ວຽກງານການທ່ອງທ່ຽວແຂວງວຽງຈັນ ............................................................ 8

3.3 ນະໂຍບາຍຕໍ່ວຽກງານການທ່ອງທ່ຽວເມືອງເຟືອງ ............................................................ 9

4. ສະຫຼຸບການຈັດຕັ້ງປະຕິບັດວຽກງານການທ່ອງທ່ຽວຂອງເມືອງເຟືອງ, ແຂວງວຽງຈັນ ໃນໄລຍະປີ 2016 - 2020 ............................................................ 9

4.1 ວຽກງານພັດທະນາການທ່ອງທ່ຽວ. ............................................................ 9

4.2 ວຽກງານຄຸ້ມຄອງການທ່ອງທ່ຽວ. ............................................................ 10

4.3 ວຽກງານໂຄສະນາການທ່ອງທ່ຽວ. ............................................................ 11

4.4 ວຽກງານບຸກຄະລາກອນ. ............................................................ 12

4.5 ການຈັດຕັ້ງປະຕິບັດແຜນການລົງທຶນ. ............................................................ 12

ພາກທີ່ II ............................................................ 14

ການວິເຄາະສະພາບການທ່ອງທ່ຽວຂອງເມືອງເຟືອງ ແຂວງວຽງຈັນ ............................................................ 14

1. ການວິເຄາະທ່າແຮງດ້ານຊັບພະຍາກອນການທ່ອງທ່ຽວ ............................................................ 14

1.1 ແຫຼ່ງທ່ອງທ່ຽວທາງທຳມະຊາດ ............................................................ 14

1.2 ແຫຼ່ງທ່ອງທ່ຽວທາງວັດທະນະທຳ ............................................................ 25

1.3 ແຫຼ່ງທ່ອງທ່ຽວທາງປະຫວັດສາດ ............................................................ 31

1.4 ການທ່ອງທ່ຽວທາງດ້ານກະສິກຳ........33
1.5 ການວິເຄາະທ່າແຮງບົ່ມຊ້ອນຂອງຜະລິດຕະພັນທ້ອງຖິ່ນ ແລະ ເຄື່ອງທີ່ລະນຶກ........34
2. ສະຫຼຸບທ່າແຮງບົ່ມຊ້ອນທາງດ້ານການທ່ອງທ່ຽວຂອງເມືອງເຟືອງ........35
2.1 ທ່າແຮງທາງດ້ານທຳມະຊາດ........35
2.2 ທ່າແຮງທາງດ້ານວັດທະນະທຳ........36
2.3 ທ່າແຮງທາງດ້ານປະຫວັດສາດ........36
3. ຕະຫຼາດນັກທ່ອງທ່ຽວ ແລະ ວິເຄາະກະແສນັກທ່ອງທ່ຽວ........37
3.1 ຕະຫຼາດນັກທ່ອງທ່ຽວ........37
3.2 ວິເຄາະກະແສນັກທ່ອງທ່ຽວ........40
4. ການວິເຄາະສະພາບແວດລ້ອມທາງດ້ານພື້ນຖານໂຄງລ່າງ........48
4.1 ເສັ້ນທາງ ແລະ ການຄົມມະນາຄົມ........48
4.2 ໄຟຟ້າ ແລະ ນ້ຳປະປາ........49
4.3 ລະບົບໂທລະຄົມ ແລະ ການສື່ສານ ເພີ່ມລາຍລະອຽດໃສ່ຕື່ມ........49
4.4 ທີ່ພັກ ແລະ ຮ້ານອາຫານ........49
5. ການວິເຄາະການທ່ອງທ່ຽວເຊື່ອມຕໍ່ພາຍໃນ ແລະ ບັນດາເຂດໃກ້ຄຽງ........50
5.1 ການທ່ອງທ່ຽວເຊື່ອມຕໍ່ພາຍໃນ (ວົງຈອນການທ່ອງທ່ຽວພາຍໃນເມືອງເຟືອງ)........50
5.2 ການທ່ຽວເຊື່ອມຕໍ່ບັນດາເຂດໃກ້ຄຽງ........50
6. ການວິເຄາະການນຳໃຊ້ທີ່ດິນ ແລະ ແຜນພັດທະນາຂະແໜງການອື່ນ........52
6.1 ແຜນພັດທະນາກະສິກຳ ແລະ ປ່າໄມ້........53
6.2 ແຜນພັດທະນາໂຄງລ່າງພື້ນຖານທີ່ສຳຄັນ........53
6.3 ແຜນການພັດທະນາການເຊື່ອມໂຍງກັບເມືອງອ້ອມຂ້າງ........54
6.4 ການພັດທະນາຕົວເມືອງ ແລະຊົນນະບົດ........54
6.5 ແຜນພັດທະນາດ້ານອຸດສາຫະກຳ ແລະ ການຄ້າ........55
6.6 ແຜນພັດທະນາວຽກງານສັງຄົມ........56
6.7 ແຜນພັດທະນາວຽກສາທາລະນະສຸກ........56
6.8 ແຜນພັດທະນາພະລັງງານ ແລະ ບໍ່ແຮ່........56
7. ວິເຄາະຈຸດດີ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍ (SWOT Analysis)........57
ພາກທີ່ III........60
ແຜນພັດທະນາການທ່ອງທ່ຽວ ແຕ່ປີ 2023-2033........60
1. ບ່ອນອີງ........60
2. ວິໄສທັດ/ຈຸດໝາຍລວມ:........60

3. ເປົ້າໝາຍ: ປະກອບມີ 3 ເປົ້າໝາຍໃຫຍ່: ....... 60
4. ຄາດໝາຍຕົ້ນຕໍ/ຄາດໝາຍສູ້ຊົນ ....... 61
5. ການກຳນົດເຂດ ແລະ ແນວຄວາມຄິດການພັດທະນາ ....... 62
5.1 ການກຳນົດເຂດພັດທະນາການທ່ອງທ່ຽວ ....... 62
5.2 ແນວຄວາມຄິດພັດທະນາແຫຼ່ງທ່ອງທີ່ສຳຄັນ ແລະ ໂດ່ດເດັ່ນ ....... 75
6. ກິດຈະກຳການທ່ອງທ່ຽວຫຼັກ ....... 92
6.1 ກິດຈະກຳໃນເຂດລ່ອງນ້ຳລຶກ ....... 92
6.2 ກິດຈະກຳໃນເຂດຜາທໍ່ໜໍ່ຄຳ (ເຂດເທດສະບານເມືອງ) ....... 93
6.3 ກິດຈະກຳໃນເຂດສັງສິນໄຊ ....... 94
7. ວົງຈອນການທ່ອງທ່ຽວ ....... 95
7.1 ລະດູການທ່ອງທ່ຽວ ....... 95
7.2 ເສັ້ນທາງການທ່ອງທ່ຽວ ....... 96
8. ແຜນພັດທະນາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ....... 99
8.1 ໂຄງລ່າງເສັ້ນທາງ ....... 99
8.2 ການຄົມມະນາຄົມຂົນສົ່ງ ....... 104
8.3 ໂຄງລ່າງນ້ຳປະປາ ....... 107
8.4 ປ້າຍບອກທາງ ....... 109
8.5 ທີ່ພັກແຮມ ....... 112
8.7 ຫ້ອງນ້ຳສາທາລະນະ ....... 113
8.8 ສູນບໍລິການນັກທ່ອງທ່ຽວ ....... 114
8.9 ໂຄງລ່າງດ້ານສາທາລະນະສຸກ ....... 114
9. ແຜນພັດທະນາຜະລິດຕະພັນການທ່ອງທ່ຽວ ....... 115
9.1 ການຄົ້ນຄວ້າ-ອອກແບບຜະລິດຕະພັນ ....... 115
9.2 ການຖ່າຍທອດ ....... 115
9.3 ການຜະລິດ ....... 116
9.4 ການຫຸ້ມຫໍ່ ....... 117
9.5 ການຈຳໜ່າຍ ....... 117
9.6 ແຜນການແລະຂັ້ນຕອນໃນການພັດທະນາຜະລິດຕະພັນ ....... 117
10. ແຜນງານ ແລະ ໂຄງການບູລິມະສິດ ....... 118
10.1 ເປົ້າໝາຍທີ 1: ເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່ໂດດເດັ່ນ ແລະ ມີຄຸນນະພາບ ....... 118
10.2 ເປົ້າໝາຍທີ 2: ຊຸກຍູ້ການພັດທະນາຕາມທິດສີຂຽວ ແລະ ຍືນຍົງ ....... 127

10.3 ເປົ້າໝາຍທີ 3: ເຊື່ອມໂຍງການທ່ອງທ່ຽວກັບບັນດາເມືອງທີ່ໃກ້ຄຽງ ແລະ ພາກພື້ນ ....................133
10.4 ຕາຕະລາງສະຫຼຸບລວມແຜນງານບູລິມະສິດ ..................................................................135
ພາກທີ່ IV ......................................................................................................138
ຂໍ້ແນະນໍາການປ້ອງກັນ ແລະ ການແກ້ໄຂຜົນກະທົບ .......................................................138
1. ຂໍ້ແນະນໍາການອອກແບບ ແລະ ການຄຸ້ມຄອງສິ່ງປຸກສ້າງ ..................................................138
2. ຂໍ້ແນະນໍາການມີສ່ວນຮ່ວມຂອງຊຸມຊົນ ແລະ ແກ້ໄຂຜົນກະທົບທາງດ້ານວັດທະນະທໍາ-ສັງ ຄົມ ..... 141
2.1 ການມີສ່ວນຮ່ວມຂອງຊຸມຊົນ ................................................................................. 141
2.2 ການປ້ອງກັນ ແລະ ແກ້ໄຂຜົນກະທົບທາງດ້ານວັດທະນະທໍາ-ສັງຄົມ .....................................142
3. ຂໍ້ແນະນໍາການປ້ອງກັນ ແລະ ແກ້ໄຂຜົນກະທົບທາງດ້ານທໍາມະຊາດ ແລະ ສິ່ງແວດລ້ອມ.............142
4. ຂໍ້ແນະນໍາການຄຸ້ມຄອງ ແລະ ຮັກສາຄວາມປອດໄພນັກທ່ອງທ່ຽວ ........................................146
4.1 ການຮັກສາຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ...........................................................146
4.2 ການປະຊາສໍາພັນ ແລະ ການແຈ້ງເຕືອນກ່ຽວກັບວິກິດການ ..............................................146
4.3 ກໍານົດການປະຊາສໍາພັນ ແລະ ການແຈ້ງເຕືອນຂອງຈຸດໝາຍປາຍທາງການທ່ອງທ່ຽວເມືອງເຟືອງ.....147
5. ຂໍ້ແນະນໍາແຜນການແກ້ໄຂ ແລະ ຊ່ວຍເຫຼືອຜູ້ປະກອບການໃນພາວະວິກິດການ ........................148
ພາກທີ່ V .......................................................................................................150
ໜ້າທີ່ຮັບຜິດຊອບ, ມາດຕະການ, ການຕິດຕາມ - ກວດກາ ແລະ ປະເມີນຜົນ ...............................150
1. ໜ້າທີ່ຮັບຜິດຊອບຂອງພາກລັດ,ພາກທຸລະກິດ ແລະ ປະຊາຊົນທ້ອງຖິ່ນ ................................150
2. ມາດຕະການຈັດຕັ້ງປະຕິບັດ................................................................................... 151
3. ການຕິດຕາມ, ກວດກາ ແລະ ປະເມີນຜົນ ..................................................................152
ລາຍຊື່ຄະນະຮັບຜິດຊອບ ........................................................................................153

# ສາລະບານຮູບພາບ


ຮູບທີ 1: ແຜນທີ່ຕັ້ງ ແລະ ຂອບເຂດເມືອງເຟືອງ ........................................ 1

ຮູບທີ 2: ຖ້ຳຜາຫຼວງ ຫຼື ຖ້ຳນາງສຸມຸນທາ........................................ 19

ຮູບທີ 3: ຜາທອງ........................................20

ຮູບທີ 4: ແຜນຜັງສະແດງທີ່ຕັ້ງພູຜາຫີນ........................................ 21

ຮູບທີ 5: ແຜນທີ່ນຳໃຊ້ທີ່ດິນ ........................................23

ຮູບທີ 6: ເຂດພັດທະນາອ່າງນ້ຳຕິງ ........................................25

ຮູບທີ່ 7: ທຳທຳມາດ (ເບື້ອງຊ້າຍ), ສິມເກົ່າ (ເບື້ອງຂວາ)........................................26

ຮູບທີ 8: ວັດສິນໄຊຍະຣາມ (ທີ່ມາ: Facebook_ຜະລິດຕະພັນລາວ (ຮູບຂວາ)........................................27

ຮູບທີ 9: ສິມເຟືອງ (ເບື້ອງຊ້າຍ), ຂັ້ນໄດນາກ 7 ສຽນ (ເບື້ອງຂວາງ) ........................................27

ຮູບທີ 10: ສິມວັດສັງສິນໄຊ (ເບື້ອງຊ້າຍ), ພະປະທານ (ເບື້ອງຂວາງ) ........................................28

ຮູບທີ 11: ປະສາດກອງເຂົ້າ ໃນງານບຸນກອງເຂົ້າປະຈຳປີ ........................................29

ຮູບທີ 12: ແຜນທີ່ຕັ້ງຂອງວັດຕ່າງໆ........................................ 31

ຮູບທີ 13: ຮູບພາບທຳມູນເຊື້ອກົກແຕ້ຈາລຶກຄວາມແຄ້ນ ........................................32

ຮູບທີ 14: ສວນໝາກນາວ ........................................34

ຮູບທີ 15: ຮູບຜະລິດຕະພັນຈັກສານ (ຕິບເຂົ້າ) ແລະ ກີ່ຕ່ຳຫູກ........................................34

ຮູບທີ 16: ການຍ້ອມຝ້າຍຂອງປະຊາຊົນບ້ານນາແຊງ ........................................35

ຮູບທີ 17: ແຜນຜັງທີ່ຕັ້ງ-ການພົວພັນ........................................52

ຮູບທີ 18: ແຜນທີ່ແບ່ງເຂດການທ່ອງທ່ຽວໃນເມືອງເຟືອງ........................................64

ຮູບທີ 19: ແຜນທີ່ແບ່ງເຂດພັດທະນາການທ່ອງທ່ຽວ ເຂດລ່ອງນ້ຳລີກ........................................67

ຮູບທີ 20: ແຜນທີ່ແບ່ງເຂດພັດທະນາການທ່ອງທ່ຽວ ເຂດຜາທໍ່ໜໍ່ຄຳ........................................ 71

ຮູບທີ 21: ແຜນທີ່ແບ່ງເຂດພັດທະນາການທ່ອງທ່ຽວ ເຂດສັງສິນໄຊ........................................74

ຮູບທີ 22: ແຜນຜັງແບ່ງເຂດ ແຫຼ່ງທ່ອງທ່ຽວໜ້າເຂື່ອນນ້ຳລີກ........................................76

ຮູບທີ 23: ຮູບຈຳລອງການປັບປຸງແຫຼ່ງທ່ອງທ່ຽວໜ້າເຂື່ອນນ້ຳລີກ........................................76

ຮູບທີ 24: ແຜນຜັງແນວຄວາມຄິດພັດທະນາເຂດດອນກາງ ແລະ ພື້ນທີ່ໃກ້ຄຽງ........................................77

ຮູບທີ 25: ຮູບຈຳລອງການພັດທະນາເຂດສະຫງວນແຄມນ້ຳລີກ........................................78

ຮູບທີ 26: ຮູບຈຳລອງການປັບປຸງສະພາບແວດລ້ອມຊຸມຊົນ ........................................78

ຮູບທີ 27: ຮູບຈຳລອງການປັບປຸງຖະໜົນສາຍຫຼັກໃນຕົວເມືອງເຟືອງ........................................79

ຮູບທີ 28: ແຜນຜັງທີ່ຕັ້ງ ແລະ ຮູບຈຳລອງສວນປະຕູເມືອງ........................................79

ຮູບທີ 29: ຮູບຈຳລອງການປັບປຸງພູມິທັດສາມແຍກບ້ານທ່າ........................................80

ຮູບທີ 30: ແຜນຜັງແນວຄິດອອກແບບສວນສາທາລະນະຫ້ວຍຫຼ້າ ........................................ 81

ຮູບທີ 31: ຮູບຕົວຢ່າງການພັດທະນາພື້ນທີ່ແຄມຫ້ວຍຫຼ້າ ........................................................................ 81
ຮູບທີ 32: ຮູບຈໍາລອງການຈັດງານບຸນກອງເຂົ້າສາມໝື່ນຕູບເຟືອງ............................................................... 81
ຮູບທີ 33: ຮູບຈໍາລອງພະພຸດທະຮູບໃຫຍ່ ແລະ ຈຸດຊົມວິວພູຂຽວ ..............................................82
ຮູບທີ 34: ແຜນຜັງຈັດສັນພິພິທະພັນຈາລຶກຄວາມແຄ້ນ ແລະ ຮູບຈໍາລອງບັນຍາກາດພາຍຫຼັງການປັບປຸງ..82
ຮູບທີ 35: ແຜນຜັງລວມ ເຂດຜາທໍ່ໜໍ່ຄໍາ..........................................................................................83
ຮູບທີ 36: ແຜນຜັງລວມ ເຂດບໍລິການນັກທ່ອງທ່ຽວ...........................................................................83
ຮູບທີ 37: ຮູບທັດສະນີຍະພາບ ເຂດບໍລິການນັກທ່ອງທ່ຽວ.....................................................................84
ຮູບທີ 38: ບ່ອນຈອດລົດ.....................................................................................................84
ຮູບທີ 39: ຈຸດເຊົ່າລົດຖີບ....................................................................................................84
ຮູບທີ 40: ຫ້ອງນໍ້າສາທາລະນະ.............................................................................................85
ຮູບທີ 41: ສູນຕ້ອນຮັບນັກທ່ອງທ່ຽວ ແລະ ສູນຂໍ້ມູນ.......................................................................85
ຮູບທີ 42: ສາລານັ່ງພັກຜ່ອນ................................................................................................86
ຮູບທີ 43: ເສັ້ນທາງຍ່າງ ແລະ ເສັ້ນທາງລົດຖີບ..........................................................................86
ຮູບທີ 44: ເສັ້ນທາງເຂົ້າເຖິງແຫຼ່ງທ່ອງທ່ຽວຜາທໍ່ໜໍ່ຄໍາ.......................................................................87
ຮູບທີ 45: ປ້າຍຊີ້ບອກ........................................................................................................87
ຮູບທີ 46: ຖັງຂີ້ເຫຍື້ອ.........................................................................................................88
ຮູບທີ 47: ແຜນທີ່ຈັດສັນເຂດສາມແຍກນາລັງ ..................................................................................88
ຮູບທີ 48: ຮູບຕົວຢ່າງເວທີສະແດງສິນລະປະກາງແຈ້ງ ............................................................................84
ຮູບທີ 49: ຮູບຈໍາລອງສວນສາທາລະນະສັງສິນໄຊ..................................................................................88
ຮູບທີ 50: ຮູບຈໍາລອງອຸມົງເຂົ້າຖໍ້າ (ຊ້າຍ) ແລະ ຂົວຊົມຖໍ້າຜາຫຼວງ ຫຼື ຖໍ້ານາງສຸມຸນທາ (ຂວາ).............90
ຮູບທີ 51: ຮູບຈໍາລອງການປັບປຸງພູມິທັດຈຸດຊົມວິວຜາທອງ......................................................................... 91
ຮູບທີ 52: ຮູບຈໍາລອງສວນຮູບປັ້ນນິທານສັງສິນໄຊ ................................................................................. 91
ຮູບທີ 53: ແຜນທີ່ເສັ້ນທາງການທ່ອງທ່ຽວໃນເຂດລ່ອງນໍ້າລີກ ....................................................................97
ຮູບທີ 54: ແຜນທີ່ເສັ້ນທາງການທ່ອງທ່ຽວໃນເຂດເທດສະບານ....................................................................98
ຮູບທີ 55: ແຜນທີ່ເສັ້ນທາງການທ່ອງທ່ຽວໃນເຂດເທດສະບານ....................................................................99
ຮູບທີ 56: ແຜນທີ່ປັບປຸງ-ກໍ່ສ້າງເສັ້ນທາງເຊື່ອມຈອດກັບເມືອງໃກ້ຄຽງ ......................................... 101
ຮູບທີ 57: ຮູບປັບປຸງເສັ້ນທາງຈາກຕົວເມືອງຟືອງຫາບ້ານຜາສັງ ................................................................ 101
ຮູບທີ 58: ແຜນທີ່ປັບປຸງ-ກໍ່ສ້າງເສັ້ນທາງເຊື່ອມຈອດແຫຼ່ງທ່ອງທ່ຽວພາຍໃນເມືອງເຟືອງ.................... 103
ຮູບທີ 59: ແຜນທີ່ກໍ່ສ້າງເສັ້ນທາງລຽບນໍ້າລີກ ........................................................................................ 104
ຮູບທີ 60: ຖະໜົນໃນເມືອງກ່ອນ ແລະ ຫຼັງການປັບປຸງ (ຊ້າຍ-ກ່ອນປັບປຸງ, ຂວາ-ຫຼັງປັບປຸງ) ............. 104
ຮູບທີ 61: ຕົວຢ່າງລົດເມໄຟຟ້າປະຈໍາທາງ ............................................................................................ 106
ຮູບທີ 62: ແຜນທີ່ເສັ້ນທາງແລ່ນລົດເມໂດຍສານໄຟຟ້າສາທາລະນະ .................................................. 107

ຮູບທີ 63: ແຜນທີ່ການຜະລິດ ແລະ ການສະໜອງນໍ້າປະປາໃນເຂດລ່ອງນໍ້າລີກ ແລະ ເທດສະບານເມືອງ 108
ຮູບທີ 64: ແຜນທີ່ການຜະລິດ ແລະ ການສະໜອງນໍ້າປະປາເຂດຈຸດສຸມຜາສັງ .............................. 108
ຮູບທີ 65: ຮູບຕົວຢ່າງປ້າຍແຜນທີ່ທ່ອງທ່ຽວ ...................................................................... 110
ຮູບທີ 66: ຕາຕະລາງກໍານົດຈຸດທີ່ຕັ້ງປ້າຍຊີ້ບອກທາງຢູ່ຈຸດທາງແຍກ ............................................. 111
ຮູບທີ 67: ຮູບຕົວປ້າຍຊີ້ບອກທາງເຂົ້າຫາແຫຼ່ງທ່ອງທ່ຽວ ......................................................... 112
ຮູບທີ 68: ການກໍ່ສ້າງໃນເທດສະບານເມືອງ ........................................................................ 139
ຮູບທີ 69: ການກໍ່ສ້າງແຄມນ້ຳ ແລະ ໜ້ານ້ຳ ......................................................................... 139
ຮູບທີ 70: ການກໍ່ສ້າງເທິງໂນນພູ ...................................................................................... 140
ຮູບທີ 71: ເຂດສະຫງວນຕີນຜາ .......................................................................................... 140
ຮູບທີ 72: ຕົວຢ່າງຫ້ອງນໍ້າລະບົບປໍ້າອັດຕະໂນມັດ ................................................................ 143
ຮູບທີ 73: ຮູບຕົວຢ່າງການກໍ່ສ້າງ ຫຼື ດັດແປງຝາຝັ່ງ ................................................................ 145

# ສາລະບານຕາຕະລາງ ແລະ ເສັ້ນສະແດງ

ຕາຕະລາງທີ 1: ສະຖິຕິນັກທ່ອງທ່ຽວ ແລະ ລາຍຮັບຈາກການທ່ອງທ່ຽວຂອງແຂວງວຽງຈັນ ແຕ່ປີ 2010-2020.....5

ຕາຕະລາງທີ 2: ສະຖິຕິຫົວໜ່ວຍທຸລະກິດທ່ອງທ່ຽວຂອງແຂວງວຽງຈັນ ປີ 2023.....6

ຕາຕະລາງທີ 3: ການນາໃຊ້ທີ່ດິນໃນເມືອງເຟືອງ.....22

ເສັ້ນສະແດງທີ 1: ສະຖິຕິນັກທ່ອງທ່ຽວເຂົ້າມາທ່ອງທ່ຽວ ຢູ່ 6 ແຂວງພາກກາງ (ບໍລິຄໍາໄຊ, ຄໍາມ່ວນ, ສະຫວັນນະເຂດ, ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ໄຊສົມບູນ) ປີ 2015-2020.....37

ເສັ້ນສະແດງທີ 2: ສະຖິຕິນັກທ່ອງທ່ຽວສາກົນເຂົ້າມາທ່ອງທ່ຽວແຂວງວຽງຈັນ ປີ 2015-2020.....38

ເສັ້ນສະແດງທີ 3: ສະຖິຕິນັກທ່ອງທ່ຽວເຂົ້າມາທ່ອງທ່ຽວບັນດາເມືອງ, ແຂວງວຽງຈັນ ປີ 2020.....38

ເສັ້ນສະແດງທີ 4: ສະຖິຕິລາຍຮັບຈາກນັກທ່ອງທ່ຽວເຂົ້າມາທ່ອງທ່ຽວບັນດາເມືອງ, ແຂວງວຽງຈັນ ປີ 2020.....39

ເສັ້ນສະແດງທີ 5: ສະຖິຕິນັກທ່ອງທ່ຽວສາກົນ ແລະ ພາຍໃນເຂົ້າມາທ່ອງທ່ຽວເມືອງເຟືອງ, ແຂວງວຽງຈັນ ປີ 2020-2022 (ປີ 2022, 3 ເດືອນ).....40

ຕາຕະລາງທີ 4: ສໍາຫລວດຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວພາຍໃນ.....41

ຕາຕະລາງທີ 5: ສໍາຫລວດຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວພາຍໃນ.....42

ເສັ້ນສະແດງທີ 6: ລະດັບຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວ ທີ່ມາທ່ອງທ່ຽວເມືອງເຟືອງ.....43

ຕາຕະລາງທີ 6: ຕາຕະລາງກະແສນັກທ່ອງທ່ຽວ ທີ່ເຂົ້າມາທ່ອງທ່ຽວ ໃນໄລຍະປັດຈຸບັນ.....45

ຕາຕະລາງທີ 7: ຂໍ້ມູນລົດໂດຍສານປັດຈຸບັນ.....105

ຕາຕະລາງທີ 8: ຈຸດທີ່ຕັ້ງປ້າຍແຜນທີ່ທ່ອງທ່ຽວ.....109

ຕາຕະລາງທີ 9: ຈຸດທີ່ຕັ້ງປ້າຍຊີ້ບອກທາງ.....111

ຕາຕະລາງ 10: ປະເພດວິກິດການທີ່ສາມາດສົ່ງຜົນກະທົບຕໍ່ຈຸດຫມາຍປາຍທາງການທ່ອງທ່ຽວ.....147

# ພາກທີ I
# ພາກສະເໜີ

## 1. ສະພາບລວມ

### 1.1. ຈຸດພິເສດທາງດ້ານທີ່ຕັ້ງ ແລະ ພູມສັນຖານຂອງເມືອງເຟືອງ

ເມືອງເຟືອງແມ່ນເມືອງໜຶ່ງໃນ 11 ເມືອງຂອງແຂວງວຽງຈັນ, ຢູ່ຫ່າງຈາກເທດສະບານແຂວງໄປທາງທິດຕາເວັນຕົກສ່ຽງເໜືອປະມານ 75 ກິໂລແມັດ, ສ້າງຕັ້ງໃນວັນທີ່ 9/7/1985, ມີເນື້ອທີ່ທັງໝົດ 153.660.64 ເຮັກຕາ, ມີຊາຍແດນຕິດກັບເມືອງຕ່າງໆ ຄື: ທິດຕາເວັນອອກຕິດກັບເມືອງຫີນເຫີບ, ທິດຕາເວັນອອກສ່ຽງເໜືອຕິດກັບເມືອງວັງວຽງ, ທິດຕາເວັນອອກສ່ຽງໃຕ້ຕິດກັບເມືອງສັງທອງ, ທິດຕາເວັນຕົກຕິດກັບເມືອງແມດ, ທິດເໜືອຕິດກັບເມືອງກາສີ ແລະ ທິດໃຕ້ຕິດກັບເມືອງໝື່ນ.

ເມືອງເຟືອງເປັນເມືອງທີ່ມີພື້ນທີ່ຮາບພຽງເປັນສ່ວນຫຼາຍ, ເປັນເມືອງຍຸດທະສາດສຳຄັນຫຼາຍດ້ານເປັນຕົ້ນດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ດ້ານການພັດທະນາເສດຖະກິດ-ສັງຄົມ, ມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນເປັນຕົ້ນແມ່ນ: ສາຍນ້ຳລີກ, ນ້ຳຕິງ ແລະ ນ້ຳສັງ, ມີທາດອິນຊີວັດຖຸໃນດິນໃນລະດັບປານກາງ ຊຶ່ງເໝາະສົມໃນການປູກຝັງ, ລ້ຽງສັດ, ມີແຮ່ທາດຕ່າງໆ, ມີທິວທັດທຳມະຊາດທີ່ສວຍງາມສາມາດພັດທະນາເປັນແຫຼ່ງທ່ອງທ່ຽວໄດ້ຫຼາຍແຫ່ງ, ມີທາງຫຼວງຂອງແຂວງເລກທີ່ 4501 ຜ່ານ ແລະ ເຊື່ອມຕໍ່ໃສ່ທາງຫຼວງແຫ່ງຊາດເລກທີ່ 11 ແລະ ດ່ານບ້ານວັງ ເມືອງໝື່ນ.




ຮູບທີ 1: ແຜນທີ່ຕັ້ງ ແລະ ຂອບເຂດເມືອງເຟືອງ

### 1.2. ປະຫວັດຄວາມເປັນມາຂອງເມືອງເຟືອງ

ເມືອງເຟືອງເປັນເມືອງໜຶ່ງ ທີ່ມີຕຳນານກ່າວຂານມາແຕ່ດົນນານທີ່ອຸດົມສົມບູນໄປດ້ວຍຊັບໃນດິນສິນໃນນ້ຳ, ເປັນທົ່ງກ້ວາງ, ມີແມ່ນ້ຳລຳເຊທີ່ໃສໄຫຼເຢັນ, ມີປ່າໄມ້ຕຶບໜາ, ມີຜາປັ້ງຍາຍຢ່າງສວຍສົດງົດງາມ, ຜາທີ່ເປັນມິ່ງຂວັນຂອງເມືອງແມ່ນຜາທໍ່ໝໍ່ຄຳ, ປະຊາຊົນມີມູນເຊື້ອຕໍ່ສູ້ພິລະອາດຫານເປັນແກ່ນສານຂອງການປະຕິວັດ, ດຸໝັ່ນຂະຫຍັນພຽນ, ມີຄວາມສາມັກຄີ, ມີວິຖີການດຳລົງຊີວິດທີ່ເປັນເອກະລັກທາງດ້ານສິລະປະວັດທະນະທຳ, ຮີດຄອງປະເພນີຂອງຕົນ, ມີນ້ຳໃຈໂອບເອື້ອອາລີ ແລະ ທັງກ້າແກ່ນຕໍ່ສູ້ບໍ່ຍອມຈຳນົນ.

ດ້ານການປົກຄອງໃນເມື່ອກ່ອນ ເມືອງເຟືອງເປັນຕາແສງໜຶ່ງທີ່ກັບເມືອງວັງວຽງ, ແຕ່ຍ້ອນອີງໃສ່ສະພາບການເຕີບໃຫຍ່ຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ເງື່ອນໄຂຕ່າງໆ, ໃນປີ 1982-1984 ຕາແສງເມືອງເຟືອງຈຶ່ງໄດ້ແຍກອອກຈາກເມືອງວັງວຽງມາເປັນກິ່ງເມືອງເຟືອງ ໂດຍແມ່ນ ທ່ານ ທິດໄມ ບັນທະລາດ ໄດ້ຖືກມອບໝາຍແຕ່ງຕັ້ງໃຫ້ເປັນຫົວໜ້າກິ່ງ ຊຶ່ງລວມມີ 9 ຕາແສງ ຄື:

1. ຕາແສງບ້ານດອນ.
2. ຕາແສງປາກງົ້ວາ.
3. ຕາແສງຜາບ່ອງ.
4. ຕາແສງຫີນເຫີບ
5. ຕາແສງໂພນທອນ
6. ຕາແສງເມືອງໝື່ນ
7. ຕາແສງຜາໃໝ່
8. ຕາແສງພູເຍີຍ
9. ຕາແສງໂພນໄຊ (ຕັ້ງຢູ່ບ້ານໂພນແບ່ງ)

ໂດຍອີງຕາມແນວທາງປ່ຽນແປງໃໝ່ຂອງພັກ ແລະ ລັດ ເຮັດໃຫ້ເມືອງເຟືອງໄດ້ມີການພັດທະນາຢ່າງຕໍ່ເນື່ອງ ແລະ ເປັນລະບົບ; ຕົກມາຮອດທີ່ 9/7/1985 ຈຶ່ງໄດ້ປະກາດສ້າງຕັ້ງເປັນເມືອງເຟືອງຢ່າງສົມບູນ ແລະ ໄດ້ແຕ່ງຕັ້ງທ່ານ ຈານ ຝົນທອງມາລາ ເປັນເຈົ້າເມືອງ. ເຖິງຢ່າງໃດກໍຕາມ ໂດຍໄດ້ຮັບການຊີ້ນຳຈາກຂັ້ນເທິງຢ່າງເອົາໃຈໃສ່ ແລະ ຍ້ອນຄວາມຕັດສິນໃຈສູງຂອງການນຳເມືອງໃນແຕ່ລະໄລຍະໄດ້ເປັນເຈົ້າການຊີ້ນຳ-ນຳພາຢ່າງຫ້າວຫັນບວກກັບການປະຕິບັດໜ້າທີ່ວຽກງານຂອງເຈົ້າໜ້າທີ່, ພະນັກງານ ແລະ ການປະກອບສ່ວນຂອງປະຊາຊົນບັນດາເຜົ່າໃນແຕ່ລະໄລຍະຈົນຮອດປະຈຸບັນ ເມືອງເຟືອງກໍໄດ້ມີການພັດທະນາເປັນກ້າວໆມາ ເຮັດໃຫ້ດິນແດນແຫ່ງນີ້ມີບາດກ້າວອັນໃໝ່ທີ່ເຕັມໄປດ້ວຍຄວາມຈະເລີນກ້າວໜ້າທາງດ້ານວັດຖຸ ແລະ ຈິດໃຈທີ່ມີຫຼາຍສີສັນ, ບ້ານເມືອງໄດ້ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ການໄປມາຫາສູ່ກັນແມ່ນສະດວກສະບາຍ, ຊີວິດການເປັນຢູ່ຂອງປະຊົນນັບມື້ນັບດີຂຶ້ນ, ພື້ນຖານໂຄ່ງລ່າງໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ; ຖ້າທຽບໃສ່ສະໄໝກ່ອນການປົດປ່ອຍແລ້ວ ອາດເວົ້າໄດ້ວ່າລື່ນກັນປານຟ້າກັບດິນ; ເພາະແຕ່ກ່ອນຖ້າຈະເດີນທາງໄປສະເຂດອື່ນແມ່ນໄດ້ກຽມແພ ແລະ ໄດ້ເດີນທາງແມ່ນ້ຳໃຊ້ເວລາເປັນເດືອນຫາສອງເດືອນ ທັງສ່ຽງອັນຕະລາຍທີ່ສຸດ. ແຕ່ກ່ອນຈະກ້າວມາເຖິງຈຸດນີ້ໄດ້ກໍຍ້ອນຫຼາຍປັດໄຈ; ສິ່ງໜຶ່ງທີ່ລືມບໍ່ໄດ້ກໍແມ່ນຜົນງານຄຸນງາມຄວາມດີຂອງນັກປະຕິວັດ, ປະຊາຊົນບັນດາເຜົ່າທີ່ໄດ້

ສະຫຼະຊີວິດ, ເລືອດເນື້ອຂອງຕົນຕໍ່ສູ້ຍາດເອົາເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນມາໃຫ້ພວກເຮົາໄດ້ດໍາລົງຊີວິດປົກກະຕິ ແລະ ທໍາມາຫາກິນດ້ວຍຄວາມສະຫງົບສຸກ.

### 1.3. ສະພາບເສດຖະກິດ-ສັງຄົມຂອງເມືອງເຟືອງ

ເມືອງເຟືອງປະກອບມີ 43 ບ້ານ, ມີ 8.444 ຄົວເຮືອນ, ມີພົນລະເມືອງທັງໝົດ 48.320 ຄົນ, ຍິງ 24.824 ຄົນ, ໃນນັ້ນ: ມີຊົນເຜົ່າລາວ 18.567 ຄົນ, ຍິງ 10.381 ຄົນ, ຊົນເຜົ່າໄຕ 5.424 ຄົນ, ຍິງ. 2.601 ຄົນ ເຜົ່າກຶມມຸ 10.960 ຄົນ, ຍິງ 5.378 ຄົນ, ເຜົ່າມົ້ງ 11.675 ຄົນ, ຍິງ 6.049 ຄົນ ແລະ ເຜົ່າອື່ນໆ 251 ຄົນ, ຍິງ 102 ຄົນ, ຄົນຕ່າງດ້າວ 137 ຄົນ, ຍິງ 72 ຄົນ, ຄວາມໜາແໜ້ນສະເລ່ຍ 35 ຄົນ/1 ກມ2, ອັດຕາການເພີ່ມຂຶ້ນຂອງປະຊາກອນ 1,5 %/ປີ.

ໂດຍລວມແລ້ວ ໃນປີ 2016-2020 ສະພາບເສດຖະກິດຂອງເມືອງ ໄດ້ສືບຂະຫຍາຍຕົວຢ່າງຕໍ່ເນື່ອງດ້ວຍອັດຕາການເຕີບໂຕຂອງຜະລິດຕະພັນພາຍໃນເມືອງ ເຊັ່ນ: ຂົງເຂດກະສິກໍາ-ການປະມົງ 4,50%/ປີ, ອຸດສາຫະກໍາ 10,05%/ປີ, ການບໍລິການ 10,60%/ປີ, ລວມຍອດລາຍຮັບພາຍໃນເມືອງຮອດປີ 2019 ປະຕິບັດໄດ້ 560.450.254.000 ກີບ, ເທົ່າກັບ 96,13% ຂອງແຜນການ, ລາຍຮັບສະເລ່ຍ/ຫົວຄົນ 7.590.500 ກີບໃນປີ 2014 ມາເປັນ 11.920.923 ກີບ/ຄົນ/ປີ, ໃນປະຈຸບັນ ຫຼື ເທົ່າກັບ 1.355 ໂດລາສະຫະລັດ, ເທົ່າກັບ 89,61 % ຂອງແຜນການ, ສະເລ່ຍເຂົ້າເປືອກໃສ່ຫົວຄົນຜູ້ໜຶ່ງໄດ້ຮັບ 655 ກິໂລ/ຄົນ/ປີ, ເທົ່າກັບ 87,13% ຂອງແຜນການ.

ໂຄງປະກອບເສດຖະກິດໄດ້ມີການຫັນປ່ຽນໄປຕາມທິດຢ່າງຕັ້ງໜ້າ, ການຜະລິດດ້ານກະສິກໍາຕິດພັນກັບອຸດສາຫະກໍາ ແລະ ການບໍລິການ ຊຶ່ງມີການຫັນປ່ຽນ ດັ່ງນີ້: ຂົງເຂດກະສິກໍາ-ປ່າໄມ້ ແລະ ການປະມົງກວມເອົາ 35,27%; ຂົງເຂດອຸດສາຫະກໍາ-ກໍ່ສ້າງ ກວມເອົາ 33,78%; ການບໍລິການ ກວມເອົາ 30,95%.

ໂດຍລວມແລ້ວການດຸ່ນດ່ຽງທາງດ້ານແຮງງານໃນໄລຍະທີ່ຜ່ານມາເຫັນວ່າຍັງປະຕິບັດບໍ່ທັນຄ່ອງຕົວ, ການພັດທະນາກໍາລັງແຮງງານບໍ່ທັນສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມຂອງເມືອງ, ການລົງທຶນສ່ວນຫຼາຍແມ່ນຂະຫຍາຍຕົວຢູ່ຕາມເທດສະບານເມືອງທີ່ມີພື້ນຖານໂຄງລ່າງເອື້ອອໍານວຍ, ການສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງບໍ່ທັນກວ້າງຂວາງ, ເຮັດໃຫ້ຍັງມີແຮງງານໃນຊົນນະບົດເຄື່ອນຍ້າຍເຂົ້າໄປຊອກຫາວຽກເຮັດງານທໍາຢູ່ຕົວເມືອງໃຫຍ່ ແລະ ຕ່າງປະເທດ.

## 2. ສະພາບການທ່ອງທ່ຽວ

### 2.1 ສະພາບການທ່ອງທ່ຽວຢູ່ ສປປ ລາວ

ສປປ ລາວ ມີທີ່ຕັ້ງຢູ່ໃຈກາງຂອງບັນດາປະເທດອະນຸພາກພື້ນແມ່ນໍ້າຂອງ, ມີເສັ້ນທາງເຊື່ອມຕໍ່ໄປຫາປະເທດໃກ້ຄຽງ ຄື: ຈີນ, ຫວຽດນາມ, ໄທ, ກໍາປູເຈຍ ແລະ ມຽນມາ, ສປປ ລາວ ມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນການທ່ອງທ່ຽວ, ມີສະຖານທີ່ທ່ອງທ່ຽວທີ່ໂດດເດັ່ນຫຼາຍແຫ່ງທີ່ມີຄວາມເປັນເອກະລັກສະເພາະຕົວ, ມີຮ່ອງຮອຍສະຖາປັດຕະຍະກໍາທີ່ເກົ່າແກ່ທີ່ຈາລຶກເຖິງເຫດການປະຫວັດສາດຂອງບັນພະບູລຸດ ແລະ ມີຄວາມເປັນເອກະລັກສະເພາະທາງດ້ານວັດທະນະທໍາ-ມໍຣະດົກຂອງລາວ.

ສປປ ລາວ ມີແຫຼ່ງທ່ອງທ່ຽວທັງໝົດຈຳນວນ 2.208 ແຫ່ງ, ແຫຼ່ງທ່ອງທ່ຽວທາງທຳມະຊາດ 1.318 ແຫ່ງ ວັດທະນາທຳ 596 ແຫ່ງ, ປະຫວັດສາດ 294 ແຫ່ງ. ໃນນັ້ນ, ໄດ້ສຳຫຼວດຂັ້ນພື້ນຖານແລ້ວຈຳນວນ 1.040 ແຫ່ງ, ໄດ້ເປີດບໍລິການແລ້ວ ຈຳນວນ 817 ແຫ່ງ, ໄດ້ຮັບການພັດທະນາສ່ວນໃດໜຶ່ງຈຳນວນ 590 ແຫ່ງ. ສຳເລັດສຳຫຼວດຈັດສັນ-ກຳນົດຂອບເຂດ ແລະ ກຳນົດແນວຄວາມຄິດການພັດທະນາແລ້ວ ຈຳນວນ 42 ແຫ່ງ, ໃນນີ້ສຳເລັດການປັກໝາຍ 20 ແຫ່ງ. ພື້ນທີ່ສ່ວນໃຫຍ່ຂອງປະເທດມີອາກາດປອດໂປ່ງບໍລິສຸດເໝາະແກ່ການມາພັກຜ່ອນເພື່ອສຸຂະພາບ, ມີປ່າໄມ້ຂຽວສົດງົດງາມຕຶບໜາ, ມີພູຜາ, ຜາຫີນໜາມໜໍ່, ຖ້ຳຂະໜາດນ້ອຍ ແລະ ໃຫຍ່ຫຼາຍແຫ່ງຢັ້ງຢາຍຢູ່ບັນດາແຂວງໃນທົ່ວປະເທດ. ມີນ້ຳຕົກຕາດທີ່ມີຊື່ສຽງ ແລະ ໃຫຍ່ທີ່ສຸດໃນອາຊີຕາເວັນອອກສ່ຽງໃຕ້ເຊັ່ນ: ນ້ຳຕົກຕາດຄອນພະເພັງ-ຫຼີ່ຜີ, ມະຫານະທີສີພັນດອນແຂວງຈຳປາສັກ, ທິວທັດທຳມະຊາດທີ່ສວຍສົດງົດງາມນີ້ໄດ້ກາຍເປັນສັນຍານາມໃຫ້ ສປປ ລາວ ວ່າແມ່ນ "ອັນຍະມະນີແຫ່ງແມ່ນ້ຳຂອງ" ປະຊາຊົນຄົນລາວມີນ້ຳໃຈໂອບເອື້ອອາລີຕ້ອນຮັບແຂກດ້ວຍຄວາມຍິ້ມແຍ້ມແຈ່ມໃສ. ນອກຈາກນັ້ນ, ຍັງມີແຫຼ່ງທ່ອງທ່ຽວປະຫວັດສາດຊຶ່ງເປັນສະໜໍລະພູມຂອງຊາດທີ່ໄດ້ຈາລຶກໄວ້ໃນປະຫວັດສາດໃນສະໄໝສົງຄາມຕໍ່ສູ້ກູ້ຊາດ ເຊັ່ນ: ສະຖານທີ່ທ່ອງທ່ຽວປະຫວັດສາດຖ້ຳທ່ານຜູ້ນຳ ແລະ ຖ້ຳຂະແໜງການທີ່ເມືອງວຽງໄຊແຂວງຫົວພັນ; ຖ້ຳປິວ, ພູກູດຈອມເຫຼັກແຂວງຊຽງຂວາງ, ເສັ້ນທາງປະຫວັດສາດໂຮຈິມິນ ຊາກເສດເຫຼືອສົງຄາມບັ້ນຮົບລາມເຊີນ 719 ທີ່ແຂວງສະຫວັນນະເຂດ ແລະ ອື່ນໆ ຊຶ່ງລ້ວນແຕ່ຍັງຖືກຮັກສາໄວ້ໃຫ້ເປັນແຫຼ່ງທ່ອງທ່ຽວທາງປະຫວັດສາດຂອງປະເທດເຮົາ. ປະຊາຊົນລາວປະກອບດ້ວຍຫຼາຍຊົນເຜົ່າ ຊຶ່ງມີພາສາປາກເວົ້າ, ສິລະປະວັດທະນະທຳຮີດຄອງປະເພນີ ແລະ ການນຸ່ງຖືທີ່ເປັນເອກະ ລັກສະເພາະແຕກຕ່າງກັນ. ໄປຄຽງຄູ່ກັນນັ້ນປະເທດເຮົາຍັງມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ, ພື້ນຖານໂຄງລ່າງໄດ້ຮັບການພັດທະນາ ແລະ ປັບປຸງໃຫ້ດີເລື້ອຍໆ, ເສດຖະກິດຂອງປະເທດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

ໃນໄລຍະທີ່ຜ່ານມາ ສະພາບການທ່ອງທ່ຽວໂດຍລວມຂອງ ສປປ ລາວ ມີທ່າອ່ຽງການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ແຂງແຮງ ໂດຍສະເພາະແມ່ນຕະຫຼາດທ່ອງທ່ຽວພາກພື້ນ ແລະ ສາກົນ ເຊັ່ນ: ໃນປີ 2010 ມີນັກທ່ອງທ່ຽວເຂົ້າມາທ່ອງທ່ຽວ ສປປ ລາວ ຈຳນວນ 2.513.028 ຄົນ, ສ້າງລາຍຮັບ 381.669.031 ໂດລາສະຫາລັດ, ສະເລ່ຍໄລຍະພັກເຊົາ 4.5 ວັນ, ປີ 2015 ມີນັກທ່ອງທ່ຽວທັງໝົດ 4.684.429 ຄົນ ສ້າງລາຍຮັບໄດ້ 725.365.681 ໂດລາສະຫາລັດ, ສະເລ່ຍໄລຍະພັກເຊົາ 4.8 ວັນ, ແລະ ໃນໄລຍະທ້າຍປີ 2019 ໄດ້ເລີ່ມມີການແຜ່ລະບາດຂອງເຊື້ອພະຍາດ COVID 19 ໃນທົ່ວໂລກ ໄດ້ສົ່ງຜົນກະທົບຢ່າງໃຫຍ່ຫຼວງຕໍ່ອຸດສະຫະກຳການທ່ອງທ່ຽວເຮັດໃຫ້ການທ່ອງທ່ຽວຢຸດສະຫງັກ, ມີການຈຳກັດການເດີນທາງຂອງນັກທ່ອງທ່ຽວສາກົນ ແລະ ເຮັດໃຫ້ຈຳນວນຕົວເລກຂອງນັກທ່ອງທ່ຽວສາກົນໄດ້ຫຼຸດລົງ, ປີ 2020 ມີນັກທ່ອງທ່ຽວເຂົ້າມາທ່ອງທ່ຽວເຂົ້າມາທ່ອງທ່ຽວ ສປປ ລາວ ພຽງແຕ່ 886.447 ຄົນ, ສ້າງລາຍຮັບໄດ້ 213.367.141 ໂດລາສະຫາລັດ, ປີ 2021 ມີນັກທ່ອງທ່ຽວພາຍໃນປະເທດທັງໝົດ 828.592 ຄົນ ສ້າງລາຍຮັບໄດ້ປະມານ 93.589.466 ໂດລາສະຫາລັດ. ປີ 2022 ມີນັກທ່ອງທ່ຽວທັງໝົດ 1.294.365 ຄົນ ສ້າງລາຍຮັບໄດ້ປະມານ 264.511.231 ໂດລາສະຫາລັດ.

### 2.2 ສະພາບການທ່ອງທ່ຽວຢູ່ແຂວງວຽງຈັນ

ແຂວງວຽງຈັນຕັ້ງຢູ່ພາກກາງຂອງ ສປປ ລາວ ມີເສັ້ນທາງຫຼວງແຫ່ງຊາດເລກທີ່ 13 ເໜືອ, ເສັ້ນທາງດ່ວນນະຄອນຫຼວງວຽງຈັນ-ວັງວຽງ ແລະ ມີເສັ້ນທາງລົດໄຟລາວ-ຈີນ ຜ່ານ, ມີລະບົບໂທລະຄົມມະນາຄົມທີ່ສະດວກ

ວ່ອງໄວ, ມີເສັ້ນທາງທ່ອງທ່ຽວເຊື່ອມຕໍ່ກັບ 5 ແຂວງພາກກາງ ແລະ 8 ແຂວງພາກເໜືອ, ມີຊາຍແດນຕິດຈອດກັບ ຈັງຫວັດເລີຍ (ປະເທດໄທ) ປະມານ 97 ກິໂລແມັດ. ແຂວງວຽງຈັນເປັນແຂວງໜຶ່ງທີ່ມີຄວາມຫຼາກຫຼາຍທາງດ້ານ ຊັບພະຍາກອນການທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ເຊັ່ນ: ທຳມະຊາດເມືອງວັງວຽງ, ເມືອງເຟືອງ, ອ່າງນ້ຳງື່ມ, ປ່າແປກພູເຂົາຄວາຍ; ປະຊາຊົນກໍມີມູນເຊື້ອດຸໝັ່ນ, ມີຄວາມສາມັກຄີຮັກແພງໂອບເອື້ອ ອາລີຍິ້ມແຍ້ມແຈ່ມໃສໃນການຕ້ອນຮັບແຂກບ້ານແຂກເມືອງທີ່ມາຢ້ຽມຢາມ; ມີສິລະປະວັດທະນະທຳອັນດີງາມທີ່ ເປັນເອກະລັກສະເພາະທີ່ສືບທອດກັນມາແຕ່ດົນນານເປັນຕົ້ນແມ່ນ: ສິລະປະການຟ້ອນລາຍງົ້າວຂອງຊາວບ້ານປາກ ກະຍຸງ, ສິລະປະການຂັບລຳກ້ຽວຢອກໄຍກັນຂອງບ່າວສາວ (ຂັບງື່ມ-ເປົ່າແຄນ) ທີ່ດາລົງຊີວິດຕິດພັນກັບສາຍນ້ຳ ງື່ມ, ມີງານບຸນເທດສະການບຸນຊ່ວງເຮືອ, ບຸນບັ້ງໄຟ, ບຸນກິນຈຽງຂອງພີ່ນ້ອງເຜົ່າມົ້ງ, ບຸນເກຣີຂອງເຜົ່າກຶມມຸ ແລະ ອື່ນໆອັນເປັນທ່າແຮງໃນການດຶງດູດນັກທ່ອງທ່ຽວເຂົ້າມາທ່ຽວແຂວງວຽງຈັນໃຫ້ນັບມື້ນັບຫຼາຍຂຶ້ນ; ຕະຫລອດ ໄລຍະຜ່ານມາວຽກງານທ່ອງທ່ຽວຂອງແຂວງວຽງຈັນກໍໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ຊຶ່ງສາມາດສັງເກດໄດ້ຈາກ ການເພີ່ມຂຶ້ນຂອງຫົວໜ່ວຍທຸລະກິດເຊັ່ນ: ໂຮງແຮມ, ເຮືອນພັກ, ຮ້ານອາຫານ-ຮ້ານກິນດື່ມ, ສະຖານທີ່ທ່ອງ ທ່ຽວ ແລະ ທຸລະກິດອື່ນໆ ອັນເປັນພື້ນຖານໃຫ້ແກ່ເສດຖະກິດ-ສັງຄົມຂອງແຂວງໄດ້ມີການຂະຫຍາຍຕົວຢ່າງໝັ້ນທ່ຽງ, ພື້ນຖານໂຄງລ່າງໃນເຂດເທດສະບານແຂວງ ແລະ ບັນດາເມືອງ ກໍ່ໄດ້ຮັບການປັບປຸງໃຫ້ດີເທື່ອລະກ້າວເຊັ່ນກັນ ຊຶ່ງ ມັນສະແດງອອກໃນການເຂົ້າມາທ່ອງທ່ຽວໃນ ແຂວງວຽງຈັນ ນັບມື້ນັບເພີ່ມຄື:

ຕາຕະລາງທີ 1: ສະຖິຕິນັກທ່ອງທ່ຽວ ແລະ ລາຍຮັບຈາກການທ່ອງທ່ຽວຂອງແຂວງວຽງຈັນ ແຕ່ປີ 2010-2020

| ລ/ດ | ລາຍການ | 2010 | 2015 | 2016 | 2017 | 2018 | 2019 | 2020 | ອັດຕາການເພີ່ມ |
|---|---|---|---|---|---|---|---|---|---|
| 1 | ຈຳນວນນັກທ່ອງທ່ຽວທັງໝົດ | 353.874 | 561.855 | 589.948 | 592.650 | 671.419 | 712.030 | 390.981 | ຫຼຸດລົງ 55,1% |
| 2 | ນັກທ່ອງທ່ຽວຕ່າງປະເທດ | N/A | 216.083 | 226.887 | 238.776 | 295.583 | 329.857 | 129.419 | ຫຼຸດລົງ 60,8 % |
| 3 | ນັກທ່ອງທ່ຽວພາຍໃນປະເທດ | N/A | 345.772 | 363.061 | 353.874 | 375.836 | 382.173 | 261.562 | ຫຼຸດລົງ 31,6% |
| 4 | ສ້າງລາຍຮັບໄດ້ທັງໝົດ | 134 ຕື້ກີບ | 190 ຕື້ກີບ | 199,6 | 204,4 | 240.6 | 261 ຕື້ກີບ | 124 ຕື້ກີບ | ຫຼຸດລົງ 52% |

ຍ້ອນສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ສະພາບການເດີນທາງຂອງນັກທ່ອງທ່ຽວທັງ ພາຍໃນ ແລະ ສາກົນ ມີການຫຼຸດລົງຢ່າງຕໍ່ເນື່ອງ ຊຶ່ງເຮັດໃຫ້ຂະແໜງການທ່ອງທ່ຽວເກີດມີຜົນກະທົບຢ່າງໜັກ ໜ່ວງ ເຊັ່ນ: ລາຍຮັບຈາກການທ່ອງທ່ຽວຂອງແຂວງວຽງຈັນຫຼຸດລົງເຖິງ 52%.

ປັດຈຸບັນທົ່ວແຂວງວຽງຈັນມີຫົວໜ່ວຍທຸລະກິດທ່ອງທ່ຽວເຖິງ 815 ຫົວໜ່ວຍ ຊຶ່ງສາມາດໃຈ້ແຍກໄດ້ ດັ່ງນີ້:

ຕາຕະລາງທີ 2: ສະຖິຕິຫົວໜ່ວຍທຸລະກິດທ່ອງທ່ຽວຂອງແຂວງວຽງຈັນ ປີ 2023

| ລ/ດ | ລາຍການ | ຫົວໜ່ວຍ | ຈຳນວນ | ຈຳນວນຫ້ອງ | ໝາຍເຫດ |
|---|---|---|---|---|---|
| 1 | ໂຮງແຮມ | ແຫ່ງ | 44 | 2.357 | |
| 2 | ຣີສອດ | ແຫ່ງ | 28 | 789 | |
| 3 | ເຮືອນພັກ | ແຫ່ງ | 332 | 4.013 | |
| 4 | ຮ້ານອາຫານ-ກິນດື່ມ | ຮ້ານ | 310 | | |
| 5 | ບໍລິສັດທ່ອງທ່ຽວ | ບໍລິສັດ | 38 | | |
| 6 | ໜ່ວຍບໍລິການທ່ອງທ່ຽວ | ໜ່ວຍ | 63 | | |
| 7 | ແຫຼ່ງທ່ອງທ່ຽວທັງໝົດ | ແຫ່ງ | 211 | | |

ເມື່ອທຽບໃສ່ບັນດາແຂວງໃນທົ່ວປະເທດ ເຫັນວ່າແຂວງວຽງຈັນ ແມ່ນແຂວງໜຶ່ງທີ່ມີການຂະຫຍາຍຕົວດ້ານການທ່ອງທ່ຽວທີ່ສູງ ຊຶ່ງສັງເກດໄດ້ຈາກບັນດາຕົວເລກຫົວໜ່ວຍບໍລິການດ້ານການທ່ອງທ່ຽວທີ່ຂ້ອນຂ້າງສູງ.

### 2.3 ສະພາບການທ່ອງທ່ຽວຢູ່ເມືອງເຟືອງ

ໃນໄລຍະທີ່ຜ່ານມາ ວຽກງານການທ່ອງທ່ຽວຂອງເມືອງເຟືອງໄດ້ມີທ່າຂະຫຍາຍຕົວຢ່າງຕໍ່ເນື່ອງ, ເປັນຕົ້ນແມ່ນການປັບປຸງ ແລະ ຍົກລະດັບຄຸນນະພາບຂອງການໃຫ້ບໍລິການໃຫ້ດີເທື່ອລະກ້າວ, ມີການຄຸ້ມຄອງໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ບັນດາຮ້ານກິນດື່ມ, ຮ້ານອາຫານ, ເຮືອນພັກກໍໄດ້ມີການຂະຫຍາຍຕົວ, ໂດຍສະເພາະແມ່ນຢູ່ເທດສະບານເມືອງ, ກຸ່ມບ້ານພັດທະນາຜາສັງ ແລະ ເຂດລ້ອງລີກ, ທົ່ວເມືອງມີເຮືອນພັກທັງໝົດ 30 ແຫ່ງ, ມີ 326 ຫ້ອງນອນ, ຣີສອດ 5 ແຫ່ງ ຄື: ຣີສອດເພັດມັງກອນ, ສວນນໍ້າລີກວິວຣີສອດຜາຕັ້ງ, ຣີສອດນໍ້າສາມສາຍ, ຣີສອດເຟືອງດາວ ແລະ ຣີສອດວ່າງນໍ້າຕົງ. ເຮືອນແພແຄມນໍ້າລີກມີ 11 ແຫ່ງ ຊຶ່ງບ່ອນທີ່ພົ້ນເດັ່ນ ຄື: ເຮືອນແພເຮືອນພັກບ້ານເມືອງເຟືອງເຮືອນລາວ, ເຮືອນແພເຮືອນພັກແຄນລາວ, ເຮືອນແພເຮືອນພັກວັງນໍ້າທິບ, ເຮືອນແພເຮືອນພັກບ້ານສາມໝື່ນວິວໂຮມສະເຕ, ເຮືອນແພຜາເລືອງວັງວິວ, ເຮືອນແພຣີສອດເພັດມັງກອນ. ຮ້ານອາຫານ 14 ຮ້ານ, ຮ້ານກິນດື່ມມີ 6 ຫົວໜ່ວຍ,(ຮ້ານອາຫານ, ຮ້ານກິນດື່ມຍັງເປັນທຸລະກິດແບບຄອບຄົວ, ເຮືອນພັກກໍຍັງບໍ່ໄດ້ຈັດລະດັບ), ມີແຫຼ່ງທ່ອງທ່ຽວທັງໝົດ 62 ແຫ່ງ ໃນນັ້ນແຫ່ງທ່ອງທ່ຽວທາງທຳມະຊາດມີ 56 ແຫ່ງ (ເປີດໃຫ້ບໍລິການແລ້ວ 3 ແຫ່ງ: ຫາດຜາຕັ້ງ, ຫາດດອນກາງໃຫຍ່, ຫາດດອນກາງນ້ອຍນໍ້າສາມຄອນ, ແຫຼ່ງທ່ອງທ່ຽວທາງວັດທະນະທຳມີ 4 ແຫ່ງ (ວັດສິນໄຊຍະລາມ ບ້ານໂນນຫີນແຮ່, ວັດບຸນຍາຣິດສັດຕະທຳມາຍາຣາມ ບ້ານນາເມືອງ, ວັດສິນໄຊໂພໄຊຍະຣາມ ແລະ ວັດສີສຸກໄຊຍະຣາມ ບ້ານສາມໝື່ນ), ແຫຼ່ງທ່ອງທ່ຽວທາງປະຫວັດສາດມີ 2 ແຫ່ງ (ລັງຫາດ ແລະ ຕົ້ນແຕ້ຈາລຶກຄວາມແຄ້ນຂອງຊາວແຂວງວຽງຈັນທີ່ເມືອງເຟືອງ).ນອກຈາກນັ້ນ, ນັກທ່ອງທ່ຽວທີ່ເຂົ້າມາທ່ຽວມາພັກເຊົາພາຍໃນເມືອງມີທັງໝົດ 50.905 ເທື່ອຄົນເພີ່ມຂຶ້ນ 2 ເທົ່າ, ໃນນີ້ມີນັກທ່ອງທ່ຽວຕ່າງປະເທດ 787 ເທື່ອຄົນ;

ຜ່ານມາມີນັກລົງທຶນສະເໜີຂໍມາລົງທຶນດ້ານການບໍລິການການທ່ອງທ່ຽວທຳມະຊາດ 06 ໂຄງການໄດ້ຈັດຕັ້ງປະຕິບັດແລ້ວ 03 ໂຄງການ ຄື: ໂຄງການບໍລິການການທ່ອງທ່ຽວຕາມລ້ອງສາຍນ້ຳລຶກ (ຫາດດອນກາງ), ໂຄງການສວນນ້ຳລຶກວິວຣີສອດຜາຕັ້ງ ແລະ ຣີສອດອ່າງນ້ຳຕົງບ້ານຫ້ວຍເດື່ອ.

## 3. ນະໂຍບາຍຕໍ່ວຽກງານການທ່ອງທ່ຽວ

### 3.1 ນະໂຍບາຍຕໍ່ວຽກງານການທ່ອງທ່ຽວຂອງ ສປປ ລາວ

ລັດຖະບານໄດ້ສົ່ງເສີມການທ່ອງທ່ຽວຕິດພັນກັບການອະນຸລັກຮີດຄອງປະເພນີ, ວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດໃຫ້ຍືນຍົງ, ຊຸກຍູ້ໃຫ້ປະຊາຊົນມີສ່ວນຮ່ວມໃນການທ່ອງທ່ຽວນັບມື້ນັບຫຼາຍຂຶ້ນ, ສົ່ງເສີມຜະລິດຕະພັນທ່ອງທ່ຽວ, ແຫຼ່ງທ່ອງທ່ຽວໃຫ້ມີລັກສະນະເພີ່ມຂຶ້ນ, ສົ່ງເສີມຜະລິດຕະພັນຫັດຖະກຳທີ່ເປັນເອກະລັກທ້ອງຖິ່ນ, ປັບປຸງຮ້ານອາຫານ, ໂຮງແຮມ, ຣີສອດ, ເຮືອນພັກໃຫ້ມີຄຸນນະພາບ; ເພີ່ມລາຍການນຳທ່ຽວໃຫ້ມີຫຼາຍຮູບແບບ ແລະ ຫຼາຍວິທີ ທັງນີ້ກໍເພື່ອຊຸກດັນໃຫ້ວຽກງານການທ່ອງທ່ຽວກາຍເປັນຫົວຈັກໃນການຂັບເຄື່ອນຂົງເຂດເສດຖະກິດອື່ນໆໃຫ້ມີການຂະຫຍາຍຕົວ.

ເພື່ອຍູ້ແຮງເສດຖະກິດໃນຂົງເຂດການບໍລິການ, ລັດຖະບານໄດ້ພະຍາຍາມເອົາວຽກງານການພັດທະນາການທ່ອງທ່ຽວຕິດພັນຢ່າງສະໜິດແໜ້ນກັບການພັດທະນາຂະແໜງການອື່ນໆທີ່ປິ່ນອ້ອມ ຍ້ອນວ່າການທ່ອງທ່ຽວຊຸກຍູ້ໃຫ້ຂະແໜງການອື່ນໆມີການພັດທະນາໂດຍທາງກົງ ແລະ ທາງອ້ອມ ເຊັ່ນ: ລະບົບຄົມມະນາຄົມຂົນສົ່ງ, ວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ວຽກງານກະສິກຳ-ປ່າໄມ້, ວຽກງານຫັດຖະກຳ, ວຽກງານສາທາລະນະສຸກ, ວຽກງານການສຶກສາ, ໄຟຟ້າ-ນ້ຳປະປາ, ໂທລະຄົມມະນາຄົມ, ການເງິນ-ທະນາຄານ ແລະ ອື່ນໆ. ນອກຈາກນັ້ນແລ້ວ, ລັດຖະບານມີນະໂຍບາຍສົ່ງເສີມການບໍລິການ ແລະ ການຈຳໜ່າຍສິນຄ້າພາຍໃນຢູ່ກັບທີ່ຊຶ່ງເປັນການສ້າງລາຍໄດ້ໃຫ້ແກ່ປະຊາຊົນ, ປັບປຸງ ແລະ ພັດທະນາແຫຼ່ງທ່ອງທ່ຽວ ແລະ ພັດທະນາຂະແໜງການທ່ອງທ່ຽວໃຫ້ກາຍເປັນອຸດສາຫະກຳການທ່ອງທ່ຽວ ແລະ ຍືນຍົງ; ເປີດກ້ວາງການມີສ່ວນຮ່ວມຂອງປະຊາຊົນ, ດຶງດູດນັກທ່ອງທ່ຽວຈາກຫຼາຍພາກພື້ນ ແລະ ສົ່ງເສີມການລົງທຶນຂອງທຸກພາກທຸລະກິດຈາກພາຍໃນ ແລະ ຕ່າງປະເທດດ້ວຍການວາງນະໂຍບາຍ ເພື່ອສ້າງສະພາບແວດລ້ອມ, ເງື່ອນໄຂອຳນວຍຄວາມສະດວກຕ່າງໆ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການບໍລິການການລົງທຶນຜ່ານປະຕູດຽວ.

ລັດຖະບານໄດ້ກຳນົດເອົາວຽກງານທ່ອງທ່ຽວເຂົ້າໃນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 9 (2021-2025) ໂດຍແນໃສ່ພັດທະນາ ແລະ ປັບປຸງໂຄງລ່າງພື້ນຖານ, ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ພ້ອມທັງຍົກລະດັບການບໍລິການການຂອງສະຖານທີ່ພັກແຮມ, ຮ້ານອາຫານ ແລະ ບໍລິສັດທ່ອງທ່ຽວໃຫ້ມີຄຸນນະພາບສູງ ແລະ ທັນສະໄໝ; ປັບປຸງ ແລະ ພັດທະນາແຫຼ່ງທ່ອງທ່ຽວ ໂດຍສະເພາະສຸມໃສ່ພັດທະນາການທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ກະສິກຳ ຕິດພັນກັບການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ, ສ້າງຜະລິດຕະພັນຮັບໃຊ້ການທ່ອງທ່ຽວໃຫ້ມີຄວາມຫຼາກຫຼາຍ, ເພີ່ມການນຳໃຊ້ຜະລິດຕະພັນທ້ອງຖິ່ນ, ການນຳໃຊ້ວັດຖຸດິບພາຍໃນ, ຜັກປອດສານພິດໃຫ້ຫຼາຍ ເພື່ອຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດ. ສ້າງເງື່ອນໄຂອຳນວຍຄວາມສະດວກ ໂດຍນຳໃຊ້ລະບົບເຕັກໂນໂລຊີເພື່ອໂຄສະນາດຶງດູດນັກ

ທ່ອງທ່ຽວກຸ່ມເປົ້າໝາຍ ແລະ ເຊື່ອມໂຍງລາຍການທ່ອງທ່ຽວກັບພາກພື້ນ-ສາກົນ, ຈັດຕັ້ງປະຕິບັດແຜນຟື້ນຟູການທ່ອງທ່ຽວຂອງ ສປປ ລາວ ໄລຍະ 2021-2025 ໂດຍສະເພາະການສົ່ງເສີມການທ່ອງທ່ຽວພາຍໃນ "ລາວທ່ຽວລາວ" ເພື່ອຊ່ວຍກະຕຸ້ນເສດຖະກິດພາຍໃນປະເທດ ໂດຍມີນະໂຍບາຍສົ່ງເສີມ ແລະ ສະໜັບສະໜູນການທ່ອງທ່ຽວພາຍໃນໃຫ້ຫຼາຍ ເປັນຕົ້ນ: ການສ້າງເງື່ອນໄຂໃນການຈອງການບໍລິການທີ່ມີຫຼາຍທາງເລືອກ, ລາຍການທ່ອງທ່ຽວມີສ່ວນຫຼຸດລາຄາຕາມກົນໄກການຕະຫຼາດ, ການຫຼຸດລາຄາຄ່າ ໂດຍການຄົ້ນຄວ້ານະໂຍບາຍທ່ຽວຍາວໃນທ້າຍອາທິດ (Long weekend) ເພື່ອສົ່ງເສີມໃຫ້ນັກທ່ອງທ່ຽວພາຍໃນໄດ້ທ່ອງທ່ຽວ ຫຼື ເດີນທາງພາຍໃນໄດ້ຫຼາຍວັນ ແລະ ທັງເປັນການກະຈາຍລາຍຮັບໃຫ້ກວ້າງຂວາງ (ຄືກັບຫຼາຍໆປະເທດກຳລັງຈັດຕັ້ງປະຕິບັດ ເພື່ອສ້າງເງື່ອນໄຂໃຫ້ນັກທ່ອງທ່ຽວມີເວລາທ່ອງທ່ຽວໃຊ້ຈ່າຍຫຼາຍ) ໄປຄຽງຄູ່ກັບການຄົ້ນຄວ້າໃນການກະກຽມຄວາມພ້ອມ ເພື່ອຕ້ອນຮັບນັກທ່ອງທ່ຽວສາກົນເປັນກຸ່ມ, ການຮ່ວມມືການທ່ອງທ່ຽວກັບປະເທດໃກ້ຄຽງ ແລະ ປະເທດທີ່ມີຄວາມສ່ຽງຕໍ່າຕໍ່ການແຜ່ເຊື້ອພະຍາດ ໂຄວິດ-19. ພາຍຫຼັງພະຍາດໂຄວິດ-19 ໄດ້ເບົາບາງລົງ, ຂະແໜງການທ່ອງທ່ຽວຕ້ອງໄດ້ສົ່ງເສີມ ແລະ ເພີ່ມທະວີການຜະລິດ ແລະ ການຊົມໃຊ້ພາຍໃນໃຫ້ນັບມື້ນັບຫຼາຍຄຽງຄູ່ກັບການສ້າງຄວາມປອດໄພ, ຄວາມໝັ້ນໃຈໃຫ້ຜູ້ບໍລິໂພກ ແລະ ນັກທ່ອງທ່ຽວແມ່ນເປັນສິ່ງສຳຄັນຍ້ອນການລະບາດໃນຄັ້ງນີ້ໄດ້ປ່ຽນແປງແບບແຜນການດຳລົງຊີວິດເປັນຕົ້ນຄວາມກັງວົນໃນການທ່ອງທ່ຽວ, ການເດີນທາງທີ່ຕ້ອງເອົາໃຈໃສ່ປະຕິບັດມາດຕະການສຸຂະອະນາໄມ, ການເຮັດວຽກ ແລະ ຮ່ຳຮຽນຢູ່ບ້ານ. ສະນັ້ນ, ການວາງແຜນພັດທະນາ ແລະ ສົ່ງເສີມການທ່ອງທ່ຽວຕ້ອງຄຳນຶງເຖິງ "ຄວາມປົກກະຕິແບບໃໝ່ (new normal)" ເພື່ອເຮັດໃຫ້ນັກເດີນທາງ ແລະ ນັກທ່ອງທ່ຽວມີຄວາມໝັ້ນໃຈໃນມາດຕະຖານ ແລະ ຄວາມປອດໄພຂອງສະຖານທີ່ພັກ, ການຂົນສົ່ງໂດຍສານ, ການບໍລິການອາຫານ, ການທ່ອງທ່ຽວສີຂຽວຈົນໄປຮອດການສະໜອງຜະລິດຕະພັນກະສິກຳ ໂດຍສົ່ງເສີມການນຳໃຊ້ວັດຖຸດິບທ້ອງຖິ່ນ, ການປະກັນໄພໃຫ້ມີຄວາມໜ້າເຊື່ອຖື, ໄດ້ມາດຕະຖານ ແລະ ອື່ນໆ. ທ່າອ່ຽງ ແລະ ການປ່ຽນແປງພຶດຕິກຳຂອງນັກທ່ອງທ່ຽວໃນຕໍ່ໜ້າ ແມ່ນຈະມີຄວາມສົນໃຈຕໍ່ກິດຈະກຳການທ່ອງທ່ຽວໃນເຂດຊົນນະບົດ ແລະ ທຳມະຊາດຫຼາຍ.

### 3.2 ນະໂຍບາຍຕໍ່ວຽກງານການທ່ອງທ່ຽວແຂວງວຽງຈັນ

ແຂວງວຽງຈັນ ໄດ້ຖືເອົາວຽກງານການທ່ອງທ່ຽວເປັນຂະແໜງໜຶ່ງທີ່ສຳຄັນໃນພັດທະນາເສດຖະກິດ-ສັງຄົມໃນການພັດທະນາແຫຼ່ງທ່ອງທ່ຽວຢູ່ພາຍໃນແຂວງວຽງຈັນ ແມ່ນຕ້ອງພັດທະນາແຫຼ່ງທ່ອງທ່ຽວລະດັບຊາດໃຫ້ໄດ້ຢ່າງນ້ອຍປີລະ 01 ແຫ່ງ, ລະດັບທ້ອງຖິ່ນໃຫ້ໄດ້ 02-03 ແຫ່ງຕໍ່ປີ. ໃນນີ້ແມ່ນຈະຕ້ອງໄດ້ເລັ່ງໃສ່ການພັດທະນາແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດເປັນຫຼັກຕໍ່ມາແມ່ນທາງດ້ານວັດທະນະທຳ ແລະ ປະຫັວດສາດຕາມລຳດັບທີ່ເໝາະສົມ. ຈາກນັ້ນໄດ້ແບ່ງຂັ້ນຄຸ້ມຄອງ ແລະ ແບ່ງບູລິມະສິດໃຫ້ແກ່ນັກລົງທຶນວ່າອັນໃດທີ່ເໝາະສົມແກ່ໃຫ້ສຳປະທານຂອງນັກລົງທຶນທ້ອງຖິ່ນ ທັງນີ້ກໍ່ເພື່ອເປັນການຫຼີກລ້ຽງບໍ່ໃຫ້ມີການຄັດແຍ່ງລະຫ່ວາງນັກລົງທຶນພາຍໃນ, ຕ່າງປະເທດ ແລະ ນັກລົງທຶນໃນທ້ອງຖິ່ນ ຊຶ່ງລວມໄປເຖິງການແຕະຕ້ອງເຖິງສິດຜົນປະໂຫຍດຂອງປະຊາຊົນຢູ່ໃນທ້ອງຖິ່ນນັ້ນ ແລະ ອີກດ້ານໜຶ່ງກໍ່ເພື່ອເປັນການສະດວກໃນການລົງໂຄສະນາລະດົມແຫຼ່ງທຶນເພື່ອມາພັດທະນາເປັນແຕ່ລະໄລຍະ (ພະ ແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງວຽງຈັນ, (2011-2020).

### 3.3 ນະໂຍບາຍຕໍ່ວຽກງານການທ່ອງທ່ຽວເມືອງເຟືອງ

ໄລຍະຜ່ານມາ ການນຳເມືອງພວກເຮົາກໍໃຫ້ຄວາມສຳຄັນຕໍ່ກັບວຽກງານພັດທະນາການທ່ອງທ່ຽວ ຊຶ່ງກອງປະຊຸມໃຫຍ່ອົງຄະນະພັກເມືອງເຟືອງສະໄໝທີ VII ໄດ້ວາງຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ III ແມ່ນ ກຳນົດເຂດພັດທະນາເປັນ 4 ເຂດ ເຊັ່ນ:

- ເຂດທີ 1: ກຳນົດເອົາຈຸດສຸມຜາສັງ ແລະກຸ່ມບ້ານນ້ຳປຸ່ງ-ໜອງປໍ: ເປັນເຂດປູກພືດອຸດສາຫະກຳ, ໄມ້ອຸດສາຫະກຳ, ໄມ້ໃຫ້ໝາກ, ລ້ຽງສັດໃຫຍ່ເປັນຕົ້ນຕໍ, ການທ່ອງທ່ຽວ ແລະການປູກເຂົ້າເປັນສຳຮອງ;
- ເຂດພັດທະນາທີ 2: ກຳນົດເອົາກຸ່ມບ້ານໂພນທອນ: ເປັນເຂດປູກເຂົ້າເປັນຕົ້ນຕໍ, ຖືເອົາການລ້ຽງສັດໃຫຍ່, ປູກພືດເປັນສິນຄ້າ ແລະ ປູກໄມ້ອຸດສາຫະກຳເປັນສຳຮອງ;
- ເຂດພັດທະນາທີ 3: ກຳນົດເອົາເຂດບ້ານນາພຶງ ຫາ ບ້ານນາທູນ ເປັນເຂດອຸດສາຫະກຳ;
- ເຂດພັດທະນາທີ 4: ກຳນົດເອົາກຸ່ມບ້ານໂພນສະຫວາດ, ກຸ່ມເທດສະບານ ແລະ ກຸ່ມບ້ານນາໃໝ່ ເປັນເຂດບໍລິການ ແລະການທ່ອງທ່ຽວເປັນຕົ້ນຕໍ, ຖືເອົາການປູກເຂົ້າ, ການລ້ຽງສັດ, ປູກໄມ້ອຸດສາຫະກຳເປັນສຳຮອງ.

ພ້ອມດຽວກັນນັ້ນ ໃນກອງປະຊຸມໃຫຍ່ຄັ້ງທີ VI ຂອງຜູ້ແທນອົງຄະນະພັກແຂວງວຽງຈັນ ກໍໄດ້ກຳນົດເອົາເມືອງເຟືອງຂອງພວກເຮົາເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ເພື່ອພັດທະນາວຽກງານການທ່ອງທ່ຽວ ເພື່ອເປັນການສົ່ງເສີມເສດຖະກິດ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

## 4. ສະຫຼຸບການຈັດຕັ້ງປະຕິບັດວຽກງານການທ່ອງທ່ຽວຂອງເມືອງເຟືອງ, ແຂວງວຽງຈັນ ໃນໄລຍະປີ 2016 - 2020

### 4.1 ວຽກງານພັດທະນາການທ່ອງທ່ຽວ.

ໃນໄລຍະຜ່ານມາຫຼາຍຂະແໜງການກ່ຽວຂ້ອງຂັ້ນສູນກາງ, ແຂວງວຽງຈັນ ແລະ ເມືອງເຟືອງ ໄດ້ເອົາໃຈໃສ່ພັດທະນາສະພາບເສດຖະກິດ-ສັງຄົມຂອງເມືອງເຟືອງ ຢ່າງກ້ວາງຂວາງເປັນຕົ້ນແມ່ນການປັບປຸງເສັ້ນທາງເຊື່ອມຕໍ່ລະຫວ່າງເມືອງກັບເມືອງ, ການພັດທະນາສາທາລະນຸປະໂພກ ເຊັ່ນ: ເສັ້ນທາງ, ໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ, ການຂົນສົ່ງ, ຕະຫຼາດ. ການພັດທະນາການທ່ອງທ່ຽວເມືອງເຟືອງ ໄດ້ຮັບການພັດທະນາເປັນຈຸດໝາຍປາຍທາງການທ່ອງທ່ຽວໃໝ່ທີ່ໂດດເດັ່ນທີ່ເຕັມໄປດ້ວຍຄວາມອຸດົມສົມບູນທາງດ້ານຊັບພະຍາກອນການທ່ອງທ່ຽວທາງດ້ານທຳມະຊາດທີ່ຍັງບໍ່ທັນຖືກປ່ຽນແປງສະພາບເດີມເຮັດໃຫ້ນັກທ່ອງທ່ຽວທີ່ມີຈຸດປະສົງມາທ່ຽວທ່ຽວເມືອງເຟືອງແມ່ນເພື່ອສຳພັດກັບທິວທັດທຳມະຊາດ, ມີປະຫວັດສາດ ແລະ ວັດທະນະທຳ ທີ່ຕິດພັນກັບບູຮານນະຄະດີ ແລະ ເລື່ອງເລົ່າທີ່ເປັນທີ່ຮູ້ຈັກກັນຢ່າງກ້ວາງຂວາງ ເປັນຕົ້ນແມ່ນວັດສິນໄຊຍະຣາມທີ່ມີຊື່ສຽງ ຊຶ່ງໄດ້ສ້າງຮູບປັ້ນຕະຍະກຳພຸດທະສາສະໜາ ແລະ ເລື່ອງເລົ່າສັງສິນໄຊ ເປັນທີ່ເຄົາລົບນັບຖືຈາກປະຊາຊົນທົ່ວໄປ ແລະ ນັກທ່ອງທ່ຽວ. ສະຖານທີ່ທ່ອງທ່ຽວທາງທຳມະຊາດຈຳນວນໜຶ່ງໄດ້ມີການພັດທະນາ ແລະ ເປີດການບໍລິການ ໂດຍສະເພາະເຂດລຸ່ມລ່ອງນ້ຳລີກ ເຊັ່ນ: ລີສອດ, ເຮືອນແພແຄມນ້ຳ. ນອກນັ້ນ, ກໍຍັງມີອ່າງນ້ຳຕຶງ ແລະ ບັນດາຜາຕ່າງໆຈຳນວນໜຶ່ງທີ່ໄດ້ຮັບການພັດທະນາຈາກການລົງທຶນຂອງພາກທຸລະກິດ. ແຕ່ໃນໄລຍະຜ່ານມາການພັດທະນາຕ່າງໆທີ່ຕິດພັນກັບການທ່ອງທ່ຽວແມ່ນຍັງບໍ່ທັນຖືກວາງແຜນອອກແບບໃຫ້ມີຄວາມກົມກືນກັບສະພາບແວດລ້ອມ ແລະ ຄວາມຍືນ

ຍືນ, ພັດທະນາແບບທຸລະກິດຄອບຄົວ ເຮັດໄປຕາມແນວຄວາມຄິດຂອງເຈົ້າຂອງທຸລະກິດໂດຍບໍ່ມີຄວາມສອດຄ່ອງກັບແນວທາງການພັດທະນາການທ່ອງທ່ຽວທີ່ມີຄວາມຍືນຍົງ ຊຶ່ງອາດຈະສົ່ງຜົນກະທົບຕໍ່ທ່າແຮງການທ່ອງທ່ຽວຂອງເມືອງໃນອະນາຄົດໄດ້ ໂດຍສະເພາະຄວາມປອດໄພຂອງກິດຈະກຳການທ່ອງທ່ຽວ. ກິດຈະກຳການທ່ອງທ່ຽວ ຍັງບໍ່ແທດເໝາະກັບຄວາມຕ້ອງການຂອງຕະຫຼາດ ແລະ ຍັງບໍ່ໄດ້ຂຸດຄົ້ນເອົາທ່າແຮງສຳຄັນທີ່ຍັງບົ່ມຊ້ອນຢູ່ມາເປັນຈຸດຂາຍໄດ້. ນອກຈາກນັ້ນ, ການດຶງດູດການລົງທຶນຈາກນັກລົງທຶນພາຍໃນ ແລະ ຕ່າງປະເທດຍັງບໍ່ທັນກ້ວາງຂວາງເທົ່າທີ່ຄວນ ໂດຍສະເພາະແມ່ນການສ້າງສິ່ງຮອງຮັບນັກທ່ອງທ່ຽວ ເຊັ່ນ: ໂຮງແຮມ, ເຮືອນພັກ, ຣີສອດ, ຮ້ານອາຫານ ແລະ ຫ້ອງປະຊຸມທີ່ໄດ້ມາດຕະຖານມີຈຳນວນຈຳກັດ ແລະ ບໍ່ສາມາດຕອບສະໜອງຕາມຄວາມຕ້ອງການຂອງຜູ້ມາໃຊ້ບໍລິການໄດ້ຢ່າງພຽງພໍ. ສຳລັບເສັ້ນທາງເຂົ້າເຖິງແຫຼ່ງທ່ອງທ່ຽວຍັງມີຄວາມຫຍຸ້ງຍາກເຮັດໃຫ້ນັກທ່ອງທ່ຽວມາທ່ຽວເມືອງເຟືອງບໍ່ສາມາດເຂົ້າເຖິງແຫຼ່ງທ່ອງທ່ຽວທີ່ໂດດເດັ່ນຫຼາຍແຫ່ງ ໂດຍສະເພາະເຂດຜາຫອຍ.

ໂດຍອີງຕາມຂໍ້ມູນໃນໄລຍະຜ່ານມາເມືອງເຟືອງໄດ້ພັດທະນາໂຄງລ່າງພື້ນຖານທີ່ຕິດພັນກັບການທ່ອງທ່ຽວຕ່າງໆຂອງເມືອງທີ່ທາງພາກລັດ ແລະ ພາກທຸລະກິດໄດ້ພັດທະນາ ປະກອບມີ:

- ໄດ້ລົງເກັບກຳສະຖິຕິ ແລະ ປະຫວັດຄວາມເປັນມາຂອງສະຖານທີ່ທ່ອງທ່ຽວໄດ້ທັງໝົດ 62 ແຫ່ງ, ແຫຼ່ງທ່ອງທ່ຽວທາງດ້ານວັດທະນະທຳ 4 ແຫ່ງ, ແຫຼ່ງທ່ອງທ່ຽວທາງດ້ານປະຫວັດສາດ 2 ແຫ່ງ, ແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດ 56 ແຫ່ງ, ໃນນັ້ນບ່ອນທີ່ມີເງື່ອນໄຂຈະພັດທະນາເປັນແຫຼ່ງທ່ອງທ່ຽວໄດ້ມີທັງໝົດ 19 ແຫ່ງ;
- ໃນໄລຍະ 5 ປີ ຜ່ານມາໄດ້ສົ່ງເສີມພາກສ່ວນເອກະຊົນພາຍໃນມາລົງທຶນພັດທະນາແຫຼ່ງທ່ອງທ່ຽວທຳມະຊາດໄດ້ 3 ໂຄງການ ລວມມູນຄ່າການລົງທຶນ 5.400.000.000 ກີບ;
- ນອກຈາກນີ້ກໍ່ໄດ້ເອົາໃຈໃສ່ພັດທະນາການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ ໂດຍການສົ່ງເສີມການຈັດງານບຸນປະເພນີຕ່າງໆ ຂອງທ້ອງຖິ່ນເຊັ່ນ: ບຸນບັ້ງໄຟ, ບຸນກິນຈຽງ ແລະ ບຸນເກືອ;
- ບັນດາແຫຼ່ງທ່ອງທ່ຽວທີ່ໄດ້ຮັບການພັດທະນາ ແລະ ເປີດບໍລິການແລ້ວມີ 4 ແຫ່ງ.

### 4.2 ວຽກງານຄຸ້ມຄອງການທ່ອງທ່ຽວ.

ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານໃນແຕ່ລະໄລຍະ ເພື່ອເຮັດໃຫ້ການຄຸ້ມຄອງການທ່ອງທ່ຽວມີຄວາມເປັນລະບຽບຮຽບຮ້ອຍ, ຫ້ອງການ ຖວທ ເມືອງ ໄດ້ສົມທົບກັບຫ້ອງການທີ່ກ່ຽວຂ້ອງລົງກວດກາຫົວໜ່ວຍທຸລະກິດຢ່າງເປັນປົກກະຕິ ເພື່ອໃຫ້ເຂົາເຈົ້າໄດ້ເຄື່ອນໄຫວຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ, ເອົາໃຈໃສ່ສຶກສາອົບຮົມດ້ານວິຊາການໃຫ້ແກ່ເຈົ້າຂອງທຸລະກິດ ແລະ ພະນັກງານບໍລິການ ເພື່ອຍົກລະດັບຄວາມຮູ້ຄວາມສາມາດປະກອບສ່ວນເຂົ້າໃນການພັດທະນາການທ່ອງທ່ຽວໃຫ້ມີຄຸນນະພາບ. ມາຮອດປະຈຸບັນນີ້ທົ່ວເມືອງເຟືອງມີການລົງທຶນໃນຂະແໜງການທ່ອງທ່ຽວທັງໝົດ 8.851.000.000 ຕື້ກີບ.

- ທົ່ວເມືອງເຟືອງມີຫົວໜ່ວຍທຸລະກິດທີ່ໄດ້ອອກອະນຸຍາດດຳເນີນທຸລະກິດທ່ອງທ່ຽວໄປແລ້ວທັງໝົດ 42 ຫົວໜ່ວຍ ເຊັ່ນ: ເຮືອນພັກ 24 ແຫ່ງ, ຮ້ານອາຫານ, ຮ້ານກິນດື່ມ 15 ແຫ່ງ, ໜ່ວຍບໍລິການທ່ອງທ່ຽວຕາມສາຍນ້ຳລີກ 1 ຫົວໜ່ວຍ.

- ມີນັກທ່ອງທ່ຽວເຂົ້າມາທ່ອງທ່ຽວ ແລະ ພັກແຮມຄືນຕາມເຮືອນພັກມີຈຳນວນທັງໝົດ 50.905 ຄົນ. ຍິງ 21.940 ຄົນ. ນັກທ່ອງທ່ຽວພາຍໃນ 50.118 ຄົນ, ຍິງ 21.750 ຄົນ. ນັກທ່ອງທ່ຽວຕ່າງປະເທດ 787 ຄົນ, ຍິງ 190 ຄົນສາມາດສ້າງລາຍຮັບເຂົ້າເມືອງກວ່າ 12.529.500.000 ກີບ. ສຳລັບ 6 ເດືອນຕົ້ນປີ 2022 ມີນັກທ່ອງທ່ຽວ 22,987 ຄົນ, ສ້າງລາຍຮັບໄດ້ 5,792,250,000,000 ກີບ.

ຜ່ານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການທ່ອງທ່ຽວ ໃນໄລຍະຜ່ານມາເຫັນວ່າສະພາບການຄຸ້ມຄອງທຸລະກິດທ່ອງທ່ຽວ ຍັງມີບາງອັນບໍ່ທັນສອດຄ່ອງກັບສະພາບການ ແລະ ທັດກຸມເທົ່າທີ່ຄວນ ເປັນຕົ້ນແມ່ນເລື່ອງການປຸກສ້າງ, ການພັດທະນາກິດຈະກຳການທ່ອງທ່ຽວຕ່າງໆ ຊຶ່ງເຫັນວ່າມີຫຼາຍກິດຈະກຳບໍ່ສາມາດປະຕິບັດຕາມລະບຽບການລົງທຶນ, ລະບຽບການທາງດ້ານຄວາມປອດໄພແກ່ນັກທ່ອງທ່ຽວ ແລະ ຄວາມຍືນຍົງທາງດ້ານທຳມະຊາດ ຊຶ່ງໃນຕໍ່ໜ້າຂະແໜງການກ່ຽວຂ້ອງຕ້ອງໄດ້ອອກລະບຽບການສະເພາະສຳລັບຄຸ້ມຄອງກິດຈະກຳການທ່ອງທ່ຽວຢູ່ເມືອງເຟືອງເປັນຕົ້ນແມ່ນການປຸກສ້າງເຮືອນພັກ, ຮ້ານອາຫານ, ລີສອດຕາມແຄມແມ່ນ້ຳຕ້ອງມີຄວາມຮັບປະກັນເລື່ອງຄວາມປອດໄພ ແລະ ບໍ່ທຳລາຍສິ່ງແວດລ້ອມ, ກິດຈະກຳຮ້ານອາຫານບໍລິເວນແຄມນ້ຳຕ້ອງຮັບປະກັນວ່າບໍ່ກະທົບຕໍ່ກິດຈະກຳທ່ອງທ່ຽວອື່ນ, ບໍ່ທຳລາຍສິ່ງແວດລ້ອມ ແລະ ທັດສະນີຍະພາບຂອງທຳມະຊາດ, ຕ້ອງໄດ້ຮັບໃບອະນຸຍາດດຳເນີນກິດຈະການຢ່າງຖືກຕ້ອງຈຶ່ງສາມາດບໍລິການໄດ້ ຊຶ່ງທັງໝົດທີ່ກ່າວມາຂ້າງເທິງນັ້ນກໍເພື່ອເຮັດໃຫ້ເມືອງເຟືອງກາຍເປັນເມືອງທ່ອງທ່ຽວທີ່ມີຄວາມສວຍງາມ ແລະ ມີຄວາມຍືນຍົງ, ສາມາດດຶງດູດນັກທ່ອງທ່ຽວໄດ້ຕະຫຼອດໄປ.

**4.3 ວຽກງານໂຄສະນາການທ່ອງທ່ຽວ.**

ວຽກງານໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວແມ່ນວຽກງານທີ່ສຳຄັນເປັນຕົວຊີ້ວັດໃນການເຕີບໃຫຍ່ຂະໂຫຍຂອງການທ່ອງທ່ຽວ ເພື່ອດຶງດູດເອົານັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດເຂົ້າມາທ່ຽວຊົມເມືອງເຟືອງໃຫ້ນັບມື້ນັບຫຼາຍຂຶ້ນ. ຕາມຄຳຂວັນທີ່ວ່າ:

| | |
|---|---|
| ຜາທໍ່ໜໍ່ຄຳລືຊາ | ທົ່ງນາແສນກ້ວາງໃຫຍ່ |
| ປ່າໄມ້ດົກໜາ | ພູຜາອ້ອມບັງ |
| ສຽງດັງທົ່ວແຄ້ວນ | ແດນເຊື້ອວິລະຊົນ |

ຫ້ອງການ ຖວທ ເມືອງກໍ່ໄດ້ເກັບກຳສັງລວມປະຫວັດຄວາມເປັນມາ ແລະ ຂໍ້ມູນ, ຮູບພາບແຫຼ່ງທ່ອງທ່ຽວທີ່ໂດດເດັ່ນຂອງເມືອງ 15 ແຫຼ່ງ ສົ່ງໃຫ້ພະແນກ ຖວທ ແຂວງເພື່ອວາງສະແດງ ແລະ ລົງໂຄສະນາຕາມສື່ໜັງສືພິມ ແລະທາງເວບໄຊຂອງກະຊວງ ຖວທ. ອັນພົ້ນເດັ່ນກວ່າໝູ່ແມ່ນ ໄດ້ນຳພາຄະນະຖ່າຍທຳລາຍການລາວທ່ຽວລາວຈາກໂທລະພາບລາວສະຕາ ລົງຖ່າຍທຳໂຄສະນາແຫຼ່ງທ່ອງທ່ຽວຂອງເມືອງ ເຊັ່ນ: ຖ້ຳຜາທໍ່, ຖ້ຳຜາລັງ, ຖ້ຳຜາແທ, ຖ້ຳຜາຮາງ, ຫາດດອນກາງ, ງານພິທີລ້ຽງເຈົ້າຜາທໍ່, ນ້ຳຕົກຕາດຫ້ວຍປຸ່ງ, ນ້ຳຕົກຕາດຫ້ວຍນ້ຳກະມີ, ນ້ຳຕົກຕາດຫ້ວຍແກ້ງທ້າງ, ຖ່າຍໂຄສະນາສະຖານທີ່ພັກແຮມ ແລະ ໄດ້ນຳພາກົມໜັງສືພິມວຽງຈັນທາມ ລົງເກັບກຳຂໍ້ມູນ ແລະຮູບພາບແຫຼ່ງທ່ອງທ່ຽວຫາດດອນກາງ, ຫນ້ຳເຂື່ອນນ້ຳລີກ 1-2 ລວມທັງໝົດ: 11 ຄັ້ງ ເພື່ອໂຄສະນາອອກລາຍການຜ່ານໂທລະພາບ ແລະໜ້າໜັງສືພິມ.

ໃນໄລຍະຜ່ານມານັກທ່ອງທ່ຽວໄດ້ຮັບຮູ້ຂໍ້ມູນການທ່ອງທ່ຽວຂອງເມືອງເຟືອງຜ່ານບັນດາສື່ຕ່າງໆຂອງທາງພາກລັດ ແລະ ບໍລິສັດທ່ອງທ່ຽວ ເປັນຕົ້ນແມ່ນສື່ທາງສັງຄົມອອນລາຍ ເຮັດໃຫ້ນັກທ່ອງທ່ຽວຮູ້ຈັກ ແລະ ມີຄວາມສົນໃຈຢາກໄປທ່ຽວເມືອງເຟືອງຫຼາຍຂຶ້ນ, ຊຶ່ງຜ່ານມາກໍມີຫຼາຍກະແສທັງຈາກເນັດໄອດໍ້ ແລະ ເພຈຕ່າງໆຂອງການທ່ອງທ່ຽວກໍໄດ້ເຮັດໂຄສະນາ ແລະ ລີວິວກ່ຽວກັບກິດຈະກໍາການທ່ອງທ່ຽວຂອງເມືອງເຟືອງ ຊຶ່ງເຮັດໃຫ້ມີຄົນສົນໃຈຫຼາຍ ແລະ ຖືໄດ້ວ່າເປັນຊ່ອງທາງໜຶ່ງທີ່ໄດ້ຮັບຜົນຫຼາຍ ແລະ ເຂົ້າເຖິງກຸ່ມຄົນໄດ້ວ່ອງໄວທີ່ສຸດ. ໃນຕໍ່ໜ້າພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ສົມທົບກັນເກັບກໍາຂໍ້ມູນ ແລະ ເອົາໃຈໃສ່ໃນການເຜີຍແຜ່ຂໍ້ມູນຂ່າວສານການທ່ອງທ່ຽວໃຫ້ຫຼາຍ ແລະ ເປັນປົກກະຕິຕື່ມ, ພ້ອມດຽວກັນນັ້ນກໍຕ້ອງໄດ້ຄົ້ນຄ້ວາກ່ຽວກັບສັນຍາລັກທີ່ເປັນເອກະລັກຂອງເມືອງເຟືອງວ່າແມ່ນຫຍັງ ເປັນຕົ້ນແມ່ນການຈັດກິດຈະກໍາ ຫຼື ງານເທດສະການກ່ຽວກັບເຟືອງທີ່ສື່ຄວາມໝາຍເຖິງຄວາມເປັນມາຂອງເມືອງເຟືອງ ແລະ ບັນດາງານເທດສະການທີ່ໄດ້ຮັບຄວາມນິຍົມໃນໄລຍະຜ່ານມາເຊັ່ນວ່າ: ພິທີແຫ່ທຽນເຜິ້ງຢູ່ວັດສົບໄຊ.

**4.4 ວຽກງານບຸກຄະລາກອນ.**

ປະຈຸບັນ ພະນັກງານຫ້ອງການ ຖວທ ເມືອງ ມີທັງໝົດ 10 ຄົນ ໃນນີ້ມີຜູ້ຮັບຜິດຊອບກ່ຽວກັບທ່ອງທ່ຽວ 2 ຄົນ, ຜ່ານມາຫ້ອງການ ຖວທ ເມືອງເຟືອງໄດ້ສົມທົບກັບພະແນກ ຖວທ ແຂວງວຽງຈັນ ແລະ ກະຊວງ ຖວທ ຈັດຊຸດຝຶກອົບຮົມການບໍລິການໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ ໃຫ້ແກ່ຜູ້ປະກອບການ ແລະ ພະນັກງານປະຈໍາຢູ່ເມືອງເຟືອງ, ແຂວງວຽງຈັນ, ມີຜູ້ເຂົ້າຮ່ວມທັງໝົດ 62 ຄົນ, ຍິງ 38 ຄົນ, ເພື່ອເປັນການພັດທະນາບຸກຄະລາກອນໃນຕໍ່ໜ້າສະເໜີຝຶກອົບຮົມກ່ຽວກັບການບໍລິການສ່ວນໜ້າ, ການປຸງແຕ່ງອາຫານ ແລະ ເຄື່ອງດື່ມ, ສະຖານທີ່ທ່ອງທ່ຽວໃດມີພະນັກງານບໍລິການຫຼາຍ ແລະ ມີທ່າແຮງສາມາດຈັດຫົວຂໍ້ສະເພາະໄດ້, ຝຶກອົບການທ່ອງທ່ຽວທາງນໍ້າ, ການປະຖົມພະຍາບານຂັ້ນຕົ້ນ, ການທ່ອງທ່ຽວທາງຖໍ້າ, ວຽກງານວາງແຜນ ແລະ ພັດທະນາການທ່ອງທ່ຽວຮ່ວມກັບສູນກາງ ແລະ ແຂວງ. ພ້ອມດຽວກັນນັ້ນກໍສະເໜີໃຫ້ມີການຊັບຊ້ອນ ຫຼື ປະກອບບຸກຄະລາກອນທີ່ເຮັດວຽກໃນຂະແໜງທ່ອງທ່ຽວໃຫ້ພຽງພໍ ແລະ ມີທັກສະໃນການພັດທະນາດ້ານຕ່າງໆຕື່ມເພື່ອຈະໄດ້ປະກອບສ່ວນເຂົ້າໃນວຽກງານພັດທະນາການທ່ອງທ່ຽວ ເມືອງເຟືອງໃຫ້ມີໝາກຜົນຫຼາຍເລື້ອຍໆ.

**4.5 ການຈັດຕັ້ງປະຕິບັດແຜນການລົງທຶນ.**

ເພື່ອເຮັດໃຫ້ເສດຖະກິດມີການຂະຫຍາຍຕົວສະເລ່ຍ 11% ແລະ ລວມຍອດລາຍຮັບໃຫ້ໄດ້ 583,01 ຕື້ກີບ, ໃນນັ້ນຕ້ອງການ; ການລົງທຶນທັງໝົດ 1.453.710.000.000 ກີບ, ຜ່ານການຈັດຕັ້ງປະຕິບັດຕົວຈິງໃນໄລຍະ 5 ປີຜ່ານມາການລົງທຶນປະຕິບັດໄດ້ 880.500.000.000 ກີບ, ເທົ່າກັບ 60,56% ຂອງແຜນການ 5 ປີ, ການຈັດຕັ້ງປະຕິບັດສ່ວນຫຼາຍແມ່ນໂຄງການກໍ່ສ້າງພື້ນຖານໂຄງລ່າງ ເຊັ່ນ: ກໍ່ສ້າງໂຮງຮຽນ, ຊົນລະປະທານ, ອ່າງເກັບນໍ້າ, ໂຮງໝໍ, ສຸກສາລາ, ວິຊາການ ແລະອື່ນໆ.

4.5.1 ການລົງທຶນຂອງລັດ.

ຜ່ານການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ໃນໄລຍະ 5 ປີຜ່ານມາມີທັງໝົດ 41 ໂຄງການ, ມີມູນຄ່າ: 226.150.000.000 ກີບ, ກວມເອົາ 25,69% ຂອງການລົງທຶນທັງໝົດ, ການລົງທຶນສ່ວນຫຼາຍແມ່ນເລັ່ງ

ໃສ່ໂຄງການກໍ່ສ້າງພື້ນຖານໂຄງລ່າງ ເຊັ່ນ: ກໍ່ສ້າງ-ສ້ອມແປງເສັ້ນທາງ, ກໍ່ສ້າງ-ສ້ອມແປງຊົນລະປະທານ, ອ່າງເກັບນ້ຳ, ໂຮງຮຽນ, ໂຮງໝໍ, ສຸກສາລາ ແລະ ໂຄງການສົ່ງເສີມວິຊາການ.

4.5.2. ການລົງທຶນຂອງເອກະຊົນພາຍໃນ ແລະຕ່າງປະເທດ.

ພວກເຮົາໄດ້ປະຕິບັດນະໂຍບາຍສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດຢ່າງສະເໝີຕົ້ນສະເໝີປາຍ, ເອົາໃຈໃສ່ຕິດຕາມຄຸ້ມຄອງບັນດາໂຄງການທີ່ແຂວງ ແລະ ສູນກາງໄດ້ອະນຸຍາດໃຫ້ຈັດຕັ້ງປະຕິບັດຢູ່ພາຍໃນເມືອງໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ, ຊຶ່ງມີທັງໝົດ 30 ໂຄງການ, ມູນຄ່າ 289.240.000.000 ກີບ, ກວມ 32,85% ຂອງການລົງທຶນທັງໝົດ, ເທົ່າກັບ 31,50% ຂອງແຜນການ, ໃນນັ້ນເປັນການລົງທຶນຂອງເອກະຊົນພາຍໃນ 27 ໂຄງການ, ລວມມູນຄ່າ 274.030.000.000 ກີບ, ເປັນການລົງທຶນຂອງຕ່າງປະເທດ 03 ໂຄງການ, ມູນຄ່າ 15,210 ຕື້ກີບ, ລົງທຶນໃສ່ຂະແໜງການບໍ່ແຮ່ມີ 19 ໂຄງການ, ມີມູນຄ່າ 263,373 ຕື້ກີບ, ຂະແໜງອຸດສາຫະກຳ-ການຄ້າ 01 ໂຄງການ, ມູນຄ່າ 1 ຕື້ກີບ ແລະ ຂະແໜງກະສິກຳ-ປ່າໄມ້ 03 ໂຄງການ,ມູນຄ່າ 15,210 ຕື້ກີບ, ການລົງທຶນຫຼາຍກວ່າໝູ່ແມ່ນວຽກງານພະລັງງານບໍ່ແຮ່. ນອກຈາກນີ້ການລົງທຶນຂອງພາກທຸລະກິດທີ່ຕິດພັນກັບການທ່ອງທ່ຽວໃນໄລຍະຜ່ານມາປະກອບມີ: ການລົງທຶນສ້າງສະຖານທີ່ພັກເຂດລ້ອງແມ່ນ້ຳລີກ ເຊັ່ນ: ເຮືອນແພ, ລີສອດ, ຮ້ານອາຫານຜາຕັ້ງ, ຫາດດອນກາງໃຫຍ່.

ອີງໃສ່ຂໍ້ມູນການລົງທຶນໃນດ້ານຕ່າງໆ ໂດຍສະເພາະແມ່ນວຽກງານທີ່ຕິດພັນກັບການທ່ອງທ່ຽວຂອງເມືອງເຟືອງ ໃນທັດສະນະທາງດ້ານວິຊາການເຫັນວ່າຍັງມີບາງອັນທີ່ຈະຕ້ອງໄດ້ມີການປັບປຸງໃຫ້ມີຄວາມສອດຄ່ອງ ເປັນຕົ້ນແມ່ນ ການພັດທະນາເຮືອນແພ, ຮ້ານອາຫານ ຢູ່ບໍລິເວນແຄມນ້ຳແມ່ນຍັງມີຫຼາຍອັນທີ່ອາດຈະສົ່ງຜົນກະທົບຕໍ່ການທ່ອງທ່ຽວທີ່ມີຄວາມຍືນຍົງ, ຮູບແບບການພັດທະນາບາງອັນຍັງບໍ່ເປັນມິດກັບສະພາບແວດລ້ອມ ແລະ ສ້າງສິ່ງກີດຂວາງຕໍ່ທຳມະຊາດ, ການລົງທຶນບາງກິດຈະກຳຍັງບໍ່ສອດຄ່ອງກັບລະບຽບການລົງທຶນ, ສະນັ້ນ ຈຶ່ງເຫັນໄດ້ວ່າເພື່ອເປັນການພັດທະນາການທ່ອງທ່ຽວໃຫ້ມີຄວາມຍືນຍົງ, ປົກປັກຮັກສາທຳມະຊາດ, ວັດທະນະທຳອັນດີງາມ ແລະ ອຸດົມສົມບູນໄວ້ໃຫ້ໄດ້ຊື່ນຊົມຕະຫຼອດໄປ ບັນດາກິດຈະກຳພັດທະນາການທ່ອງທ່ຽວທີ່ເປັນການລົງທຶນຂອງທັງພາກລັດ ແລະ ພາກເອກະຊົນກໍຕາມ ຕ້ອງໄດ້ຍຶດຖືເອົາການພັດທະນາທີ່ສອດຄ່ອງກັບທ່າແຮງຂອງເມືອງເປັນຫຼັກ, ການລົງທຶນດ້ານສະຖານທີ່ພັກແຮມ ຄວນເປັນໃນຮູບແບບລີສອດ, ບູຕິກທີ່ມີຄວາມເປັນເອກະລັກ, ເໝາະສຳລັບການພັກຜ່ອນ, ບໍ່ທຳລາຍສິ່ງແວດລ້ອມ ແລະ ຄວາມເປັນທຳມະຊາດຂອງເມືອງເຟືອງ. ການສ້າງເຮືອນແພ ແລະ ຮ້ານອາຫານບໍລິເວນແຄມນ້ຳຕ້ອງຮັບປະກັນບໍ່ໃຫ້ມີຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມ, ຜູ້ລົງທຶນຕ້ອງປະຕິບັດຕາມແຜນການລົງທຶນ ແລະ ຄຳແນະນຳຂອງພາກສ່ວນກ່ຽວຂ້ອງຢ່າງເຄັ່ງຄັດ, ພາກລັດທີ່ຄຸ້ມຄອງການລົງທຶນ ແລະ ການພັດທະນາການທ່ອງທ່ຽວຢູ່ເມືອງເຟືອງ ຕ້ອງເປັນເຈົ້າການໃນການລົງຊຸກຍູ້ພາກທຸລະກິດໃຫ້ລົງທຶນສອດຄ່ອງກັບແຜນພັດທະນາ, ຕ້ອງເອົາໃຈໃສ່ໃນການລົງຕິດຕາມ ແລະ ວາງມາດຕະການທີ່ເໝາະສົມໃນການຈັດຕັ້ງປະຕິບັດ ເພື່ອເຮັດໃຫ້ການທ່ອງທ່ຽວຂອງເມືອງເຟືອງຍັງຄົງມີຄວາມເປັນເອກະລັກ ແລະ ສາມາດດຶງດູດນັກທ່ອງທ່ຽວໃຫ້ມາທ່ຽວຊົມຕະຫຼອດໄປ.

# ພາກທີ່ II

# ການວິເຄາະສະພາບການທ່ອງທ່ຽວຂອງເມືອງເຟືອງ ແຂວງວຽງຈັນ

ສະພາບການທ່ອງທ່ຽວຂອງເມືອງເຟືອງ ໄດ້ມີການສຶກສາ ແລະ ວິເຄາະຂໍ້ມູນທາງດ້ານຊັບພະຍາກອນການທ່ອງທ່ຽວທີ່ເປັນທ່າແຮງບົ່ມຊ້ອນ, ວິເຄາະຂໍ້ມູນດ້ານນັກທ່ອງທ່ຽວ, ວິເຄາະຂໍ້ມູນດ້ານພື້ນຖານໂຄງລ່າງທີ່ຕອບສະໜອງໃຫ້ແກ່ການທ່ອງທ່ຽວ, ວິເຄາະເງື່ອນໄຂທາງດ້ານທີ່ຕັ້ງ-ການພົວພັນ, ວິເຄາະຂໍ້ມູນທາງດ້ານແຜນການ ລວມເຖິງວິເຄາະທ່າອ່ຽງຂອງການພັດທະນາເພື່ອວາງແຜນການພັດທະນາການທ່ອງທ່ຽວໃນຕໍ່ໜ້າ.

## 1. ການວິເຄາະທ່າແຮງດ້ານຊັບພະຍາກອນການທ່ອງທ່ຽວ

ເມືອງເຟືອງເປັນເມືອງທີ່ຕັ້ງຢູ່ເຂດພູດອຍ ມີທົ່ງພຽງຂະໜາດນ້ອຍທີ່ອ້ອມຮອບດ້ວຍພູເຂົາ ແລະ ປ່າໄມ້, ມີແມ່ນໍ້າລີກ ແລະ ແມ່ນໍ້າສັງເປັນແມ່ນໍ້າສາຍຫຼັກໄຫຼຜ່ານ, ມີພູຜາຫີນຈານວນຫຼາຍຕັ້ງສະຫງ່າ ຊຶ່ງເປັນກຸ່ມຜາຫີນທີ່ຕໍ່ເນື່ອງມາຈາກເຂດເມືອງວັງວຽງ, ປະຊາຊົນດາລົງຊີວິດແບບລຽບງ່າຍຕາມຮີດຄອງປະເພນີຂອງທ້ອງຖິ່ນ ແລະ ມີຈິດໃຈຮັກເຊື້ອແພງຊາດຢ່າງສູງສົ່ງ, ປັດໄຈທັງໝົດເຫຼົ່ານີ້ໄດ້ຫຼໍ່ຫຼອມໃຫ້ເມືອງເຟືອງກາຍເປັນດິນແດນທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທໍາມະຊາດ, ປະຫວັດສາດ, ວັດທະນະທໍາ ແລະ ກະສິກໍາທີ່ໜ້າສົນໃຈຢ່າງຫຼວງຫຼາຍ.

ຈາກບົດລາຍງານຂອງເມືອງບອກໃຫ້ຮູ້ວ່າ ທົ່ວຂອບເຂດເມືອງເຟືອງມີແຫຼ່ງທ່ອງທ່ຽວທີ່ໄດ້ລົງສໍາຫຼວດເບື້ອງຕົ້ນ ແລ້ວ 62 ແຫ່ງ ໃນນັ້ນເປັນແຫຼ່ງທ່ອງທ່ຽວທາງດ້ານວັດທະນະທໍາ 4 ແຫ່ງ, ແຫຼ່ງທ່ອງທ່ຽວທາງດ້ານປະຫວັດສາດ 2 ແຫ່ງ, ແຫຼ່ງທ່ອງທ່ຽວທາງດ້ານທໍາມະຊາດ 56 ແຫ່ງ. ນອກຈາກນັ້ນ ຍັງມີຊັບພະຍາກອນທາງຊັບພະຍາກອນທໍາມະຊາດ, ປະຫວັດສາດ, ວັດທະນະທໍາ ແລະ ກະສິກໍາອີກຈໍານວນຫຼາຍທີ່ເປັນທ່າແຮງບົ່ມຊ້ອນ ແຕ່ຍັງບໍ່ທັນໄດ້ຮັບການຂຸດຄົ້ນ ແລະ ພັດທະນາ ຊຶ່ງຈາກການສໍາຫຼວດໃນປີ 2022 ສາມາດສະຫຼຸບໄດ້ດັ່ງນີ້:

### 1.1 ແຫຼ່ງທ່ອງທ່ຽວທາງທໍາມະຊາດ

ແຫຼ່ງທ່ອງທ່ຽວທໍາມະຊາດ ຖືວ່າເປັນທ່າແຮງບົ່ມຊ້ອນອັນຕົ້ນຕໍຂອງການທ່ອງທ່ຽວເມືອງເຟືອງ ໂດຍສະເພາະພູຜາຫີນປູນທີ່ຕັ້ງສະຫງ່າຢູ່ທົ່ວບໍລິເວນ, ພູເຂົາ ແລະ ປ່າໄມ້ ທີ່ຍັງອຸດົມສົມບູນດ້ວຍສັດປ່າ ແລະ ລະບົບນິເວດ, ແມ່ນໍ້າລໍາທານທີ່ໃສສະອາດ, ນໍ້າຕົກຕາດ ແລະ ທິວທັດທໍາມະຊາດທີ່ສວຍງາມ ຊຶ່ງທັງໝົດນີ້ຍັງລໍຖ້າການສໍາຫຼວດ ແລະ ວາງແຜນພັດທະນາຢ່າງເໝາະສົມ, ຊັບພະຍາກອນທໍາມະຊາດທີ່ມີທ່າແຮງໃນການພັດທະນາເປັນແຫຼ່ງທ່ອງທ່ຽວໃນເມືອງເຟືອງໄດ້ສັງລວມແຍກເປັນກຸ່ມ ດັ່ງນີ້:

- ພູຜາຫີນ ແລະ ຖໍ້າ
- ພູເຂົາ ແລະ ປ່າໄມ້
- ແມ່ນໍ້າ ແລະ ນໍ້າຕົກຕາດ
- ສັດ ແລະ ຊີວະນາໆພັນ
- ທິວທັດທໍາມະຊາດ

**1.1.1 ພູຜາຫີນ ແລະ ຖ້ຳ**

ເມືອງເຟືອງຕັ້ງຢູ່ໃນເຂດແລວພູເຂົາຫີນປູນ ທີ່ຕໍ່ເນື່ອງມາຈາກເມືອງວັງວຽງ ຈຶ່ງປະກົດມີພູຜາຈຳນວນຫຼາຍ ຕັ້ງຢູ່ທົ່ວເມືອງ, ພູຜາເຫຼົ່ານັ້ນ ນອກຈາກມີຄວາມໂດດເດັ່ນທາງດ້ານຮູບຮ່າງທາງກາຍະພາບແລ້ວ ຍັງມີຖ້ຳຈຳນວນ ຫຼາຍຊຸກເຊື່ອງຢູ່, ຖ້ຳບາງແຫ່ງມີຄວາມສວຍງາມຂອງໂຄງປະກອບທາງທໍລະນີ, ຖ້ຳບາງແຫ່ງກ່ຽວໂຍງກັບການຕໍ່ສູ້ກູ້ຊາດ ແລະ ຖ້ຳບາງແຫ່ງມີທຳມະຊາດທີ່ອຸດົມສົມບູນ, ພູຜາ ແລະ ຖ້ຳຈຳນວນໜຶ່ງຖືກນຳໄປເຊື່ອມໂຍງກັບນະວະ ນິຍາຍພື້ນບ້ານ ໂດຍສະເພາະຕຳນານສັງສິນໄຊ ໂດຍນຳມາຫ້ອຍຕໍ່ກັນເປັນເລື່ອງລາວຕັ້ງຢູ່ເທິງພູມີປະເທດອັນສວຍ ງາມເຮັດໃຫ້ພູຜາ ແລະ ຖ້ຳເຫຼົ່ານັ້ນມີຄວາມໝາຍທີ່ໜ້າສົນໃຈຫຼາຍຕື່ມ.

ຈາກການເກັບກຳສະຖິຕິພູຜາ ແລະ ຖ້ຳຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ ເຟືອງເຫັນວ່າ ພາຍໃນເມືອງເຟືອງມີຜາຫີນທັງໝົດ 25 ແຫ່ງ ແລະ ຖ້ຳ 24 ແຫ່ງ ດັ່ງລາຍຊື່ຕໍ່ໄປນີ້:

| | | |
|---|---|---|
| 1. ຜາທໍ່ໝໍ່ຄຳ | 10 ຜາຮາງ | 19 ຜາຫອຍ |
| 2. ຜາຕົ໊ງ | 11 ຜາຕົງ | 20 ຜາທອງ |
| 3. ຜາເລືອງ | 12 ຜາຫຼວງ | 21 ຜານົກກົກ |
| 4. ຜາປູ່ | 13 ຜາຂາດ | 22 ຜາແໜງ |
| 5. ຜາແດງ | 14 ຜາສະເດັນ | 23 ຜາຫຼ່າມຊ້າງ |
| 6. ຜາລົມ | 15 ຜາດິນຈີ່ | 24 ຜາຂາດ |
| 7. ຜາລັງ | 16 ຜາແຊນ | 25 ຜາກ້າ |
| 8. ຜາໃໝ່ | 17 ຜາສັງ | |
| 9. ຜາຕອງ | 18 ຜາຄຸ | |

**ລາຍຊື່ຖ້ຳ**

| | | |
|---|---|---|
| ຖ້ຳຜາຫຼວງ,ຖ້ຳສ້ອມນາງສຸມູນທາ | ຖ້ຳນົກແອ່ນ, ຜາເລືອງ | ຖ້ຳລົມ, ຜາລົມ |
| ຖ້ຳພະ, ຜາຕົງ | ຖ້ຳຊອດຜາ, ຜາແດງ | ຖ້ຳເຈຍດັງວຶກ, ຜາລົມ |
| ຖ້ຳນ້ຳ, ຜາຕົງ | ຖ້ຳເຈຍ, ຜາແດງ | ຖ້ຳຜາໃໝ່, ຜາໃໝ່ |
| ຖ້ຳລົມ, ຜາເລືອງ | ຖ້ຳເຍືອງ, ຜາແດງ | ຖ້ຳແກບ, ຜາຂາດ |
| ຖ້ຳທະຫານ, ຜາເລືອງ | ຖ້ຳຢາທຳ, ຜາລົມ | ຖ້ຳພິກອງກ໋ອຍ, ຜາຂາດ |
| ຖ້ຳປ່າໄມ້, ຜາເລືອງ | ຖ້ຳຄານ, ຜາລົມ | ຖ້ຳພະ, ຜາດິນຈີ່ |
| ຖ້ຳແປວປ່ອງຟ້າ, ຜາເລືອງ | ຖ້ຳລັກເຊ , ຜາລົມ | ຖ້ຳພຣະລືສີ, ຜາແຊນ |
| ຖ້ຳແຂນ, ຜາເລືອງ | ຖ້ຳເຈຍບີ້, ຜາລົມ | ຖ້ຳນ້ຳ, ຜາແຊນ |

**ກ. ຜາທໍ່:**

ເປັນຜາຫີນປູນທີ່ຕັ້ງສະຫງ່າຢູ່ຈຸດໃຈກາງເມືອງເຟືອງ ເປັນມິ່ງຂວັນຂອງເມືອງນອກຈາກລັກສະນະທີ່ເປັນ ເອກະລັກສະເພາະແລ້ວຜາທໍ່ໝໍ່ຄຳໄດ້ເຊື່ອງຊ້ອນ ຄວາມລຶກລັບທີ່ຍັງບໍ່ທັນມີໃຜໄດ້ຮູ້ ໜ້າຜາເມື່ອເຮົາແນມເບິ່ງຈາກ

ບ້ານນາທົ່ວ, ນາແຍງ ຈະເປັ່ງປະກາຍສີຄຳຢູ່ຫຼາຍຈຸດ ແຕ່ມີຈຸດໜຶ່ງທີ່ເປັ່ງປະກາຍຊັດເຈນກວ່າຈຸດອື່ນໆ ປະຊາຊົນໃນທ້ອງຖິ່ນມີຄວາມເຊື່ອວ່ານັ້ນແມ່ນຄຳທີ່ມີຄຸນຄ່າມະຫາສານ ແລະ ເຂົາເຈົ້າເອີ້ນຈຸດດັ່ງກ່າວວ່າ: "ໜໍ່ຄຳ" ຈຶ່ງກາຍເປັນສ່ວນໜຶ່ງຂອງຊື່ຜາທີ່ເອີ້ນວ່າ: ຜາທໍ່ໜໍ່ຄຳ.

ນອກຈາກນີ້ໃນບໍລິເວນຜາທໍ່ ກໍຍັງມີຖ້ຳເຈັຍບີ້ຕັ້ງຢູ່ບໍລິເວນຜາທໍ່ເດີນທາງຈາກບ້ານນາທົ່ວປະມານ 1,6 ກິໂລແມັດ ຫຼື 800 ແມັດ ຈາກຂົວນ້ຳຕຶງໄປຫາຖ້ຳເຈັຍບີ້ ຄວາມໝາຍຂອງຄຳວ່າ ເຈັຍບີ້ ແມ່ນເຈັຍຊະນິດໜຶ່ງທີ່ມີຂະໜາດນ້ອຍ ແຕ່ກ່ອນແມ່ນມີຈຳນວນຫຼາຍໃນເຂດນີ້ ແຕ່ໃນປະຈຸບັນເກືອບບໍ່ມີແລ້ວ, ສ່ວນເສັ້ນທາງເຂົ້າປາກຖ້ຳແມ່ນມີຄວາມລຳບາກ ຍ້ອນຕ້ອງປີນຜາຫີນຂຶ້ນໄປມານ 3 ແມັດ ຈຶ່ງຮອດປາກຖ້ຳ ແລະ ທາງເຂົ້າຖ້ຳມີຂະໜາດນ້ອຍອີກແຕ່ພໍເຂົ້າໄປທາງໃນຖ້ຳແລ້ວກໍຈະກວ້າງອອກ ແລະ ຫີນບາງກຸ່ມກ້ອນທີ່ຢູ່ໃນຖ້ຳມີລັກສະນະຄືນ້ຳຕົກຕາດພ້ອມກັບມີແສງເປັ່ງປະກາຍຄືເພັດ ນອກຈາກນີ້ຍັງມີນົມຜາຕັ້ງ ແລະ ນົມຜາຢ້ອນນຳອີກ ຊຶ່ງເໝາະແກ່ການພັດທະນາເປັນແຫຼ່ງທ່ອງທ່ຽວ.

**ຂ. ຜາຕັ້ງ**

ຜາຕັ້ງກໍເປັນຜາໜຶ່ງທີ່ມີຄວາມສຳຄັນ ຊຶ່ງຕັ້ງຢູ່ທາງທິດເໜືອຂອງເມືອງ ເປັນຜາທີ່ມີຂະໜາດໃຫຍ່ ແລະ ສູງ (ສູງປະມານ 9.600 ແມັດ) ມີປ່າໄມ້ດົບໜາອ້ອມຮອບຕີນຜາ ແລະ ຕິດພັນກັບວິຖີຊີວິດຂອງປະຊາຊົນຫຼາຍບ້ານອ້ອມຂ້າງ ເຊັ່ນ: ທິດເໜືອຕິດກັບບ້ານນາແຊງ, ທິດໃຕ້ຕິດກັບບ້ານນາໃໝ່ ແລະ ບ້ານປາກງວ້າ, ທິດຕາເວັນອອກຕິດກັບບ້ານໜອງເປັດ, ທິດຕາເວັນຕົກຕິດກັບສາຍນ້ຳລີກ ແລະ ບ້ານຄອງເລືອງ ຜາຕັ້ງຖືວ່າມີທ່າແຮງເປັນແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດ.

ນອກຈາກເປັນຜາສູງໃຫຍ່ແລ້ວ ພາຍໃນຜາຍັງມີຖ້ຳ 2 ຖ້ຳຄື: ຖ້ຳພຣະ ຊຶ່ງມີພື້ນທີ່ກວ້າງ, ມີຄວາມຍາວ 800 ແມັດ ແລະ ຖ້ຳນ້ຳ ມີຄວາມຍາວ 450 ແມັດ ຊຶ່ງມີສາຍນ້ຳສະອາດໄຫຼຜ່ານ ຢ່າງໃດກໍຕາມຜາຕັ້ງກໍຍັງບໍ່ທັນໄດ້ມີການສຳຫຼວດລະອຽດ ແລະ ຍັງບໍ່ທັນມີການພັດທະນາກິດຈະກຳທ່ອງທ່ຽວ ຫຼື ການບໍລິການອື່ນໆເທື່ອ, ມີພຽງຫາດຜາຕັ້ງທີ່ຢູ່ຕີນຜາດ້ານທິດເໜືອທີ່ສ້າງເປັນບ່ອນຫຼິ້ນນ້ຳ.

**ຄ. ຜາດິນຈີ່**

ຜາດິນຈີ່ ຕັ້ງຢູ່ບ້ານນາອ່າງ ໄລຍະຫ່າງຈາກຕົວເມືອງໄປທາງທິດໃຕ້ປະມານ 18 km ສາມາດເຂົ້າເຖິງດ້ວຍລົດ, ຜາດິນຈີ່ ເປັນແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດຍັງບໍ່ໄດ້ສຳຫຼວດ ແລະ ຍັງບໍ່ໄດ້ເປີດບໍລິການທ່ອງທ່ຽວບໍລິເວນຜາມີສາຍຫ້ວຍດິນຈີ່ໄຫຼຜ່ານລົງໃສ່ນາຂອງປະຊາຊົນ ຈຶ່ງໄດ້ພາກັນຕ້ານນ້ຳຂຶ້ນເປັນຝາຍເພື່ອຊົມໃຊ້ນ້ຳເຂົ້າເຮັດນາ. ນອກຈາກນີ້ ຊາວບ້ານຍັງໄດ້ພົບເຕົາດິນຈີ່ ແລະ ກ້ອນດິນຈີ່ທີ່ມີຂະໜາດໃຫຍ່ທີ່ຄົນປະຖົມບູຮານປັ້ນຂຶ້ນຢູ່ໃນຂອບເຂດບໍລິເວນຕີນຜາໜ່ວຍນີ້ ຜູ້ເຖົ້າຜູ້ແກ່ເຂດນີ້ຈຶ່ງເອີ້ນວ່າ: ຜາດິນຈີ່.

ຜາດິນຈີ່ນີ້ທາງໃນຈະມີຖ້ຳເອີ້ນວ່າ: ຖ້ຳພະ ພາຍໃນຖ້ຳມີພະພຸດທະຮູບສ່ຽງທວາຍທີ່ສັກສິດ 1 ອົງ ເປັນພະພຸດທະຮູບສ່ຽງທວາຍເນື້ອຄູ່,ຄັ້ງໜຶ່ງໄດ້ມີຊາຍຄົນໜຶ່ງມາສ່ຽງທວາຍແລ້ວບໍ່ສົມປາດຖະໜາກັບຍິງສາວຄົນນັ້ນ ລາວຈຶ່ງທຳລາຍພະພຸດທະຮູບດັ່ງກ່າວ ເຮັດໃຫ້ພະສຽນຂອງພະພຸດທະຮູບໄດ້ແຕກຫັກອອກ ຕໍ່ມາມີຢ່າພໍ່ອົງໜຶ່ງມາຈາກປະເທດໄທ ໄດ້ມາດັດແປງຕໍ່ຄືນໃຫ້ຢູ່ສະພາບເກົ່າ ພໍຕົກຮອດປີ 1950 ມີຄົນມາທຳລາຍເພື່ອຫວັງເອົາຄຳທີ່ຝັງຢູ່ໃນພະພຸດທະຮູບດັ່ງກ່າວ ເມື່ອຊາວບ້ານເຫັນແນວນັ້ນຈຶ່ງພາກັນເອົາພະພຸດທະຮູບອົງນັ້ນມາປະດິດສະຖານໄວ້ທີ່ວັດບ້ານນາອ່າງທີ່ຢູ່ໃນສະພາບເປ່ເພເຖິງປະຈຸບັນ.

**ງ. ຜາຂາດ:**

ຕັ້ງຢູ່ບ້ານນາອ່າງ ຫ່າງຈາກຕົວເມືອງໄປທາງທິດໃຕ້ປະມານ 19 km ຫ່າງຈາກທາງຫຼວງປະມານ 1 km ການເຂົ້າຫາສະຖານທີ່ທ່ອງທ່ຽວແມ່ນເດີນທາງດ້ວຍລົດ ເປັນແຫຼ່ງທ່ອງທ່ອງທາງດ້ານທໍາມະຊາດ ຍັງບໍ່ທັນໄດ້ສໍາຫຼວດ, ບໍ່ທັນມີການພັດທະນາ ແລະ ຍັງບໍ່ໄດ້ເປີດບໍລິການ ໂດຍແມ່ນພາກສ່ວນກະຊວງປ້ອງກັນປະເທດເປັນຜູ້ຄຸ້ມຄອງ. ປະຫວັດຄວາມເປັນມາເມື່ອເວົ້າເຖິງຜາຂາດແລ້ວຈະກ່າວເຖິງຕໍານານສັງສິນໄຊຕອນໜຶ່ງທີ່ໄດ້ກ່າວວ່າ: ກ່ອນຈະໄດ້ຊື່ວ່າຜາຂາດນັ້ນສັງສິນໄຊກໍາລັງຕໍ່ສູ້ກັບຍັກກຸມພັນ, ທ້າວສັງສິນໄຊ ໄດ້ໃຊ້ລູກທະນູຂອງຕົນຕໍ່ສູ້ກັບຍັກກຸມພັນລູກທະນູຂອງທ້າວສັງສິນໄຊໄດ້ໄປຖືກຜາໜ່ອຍນັ້ນຂາດອອກ ຈຶ່ງໄດ້ເອີ້ນ: ຜາຂາດ ມາເຖິງທຸກວັນນີ້.

ຜາໜ່ອຍນີ້ມີຖໍ້າ 2 ຖໍ້າຄື: ຖໍ້າແກບ ແລະ ຖໍ້າຜີກອງກ໋ອຍ.

- ຖໍ້າແກບ: ໄດ້ຊື່ມາຈາກສິ່ງລີ້ລັບທີ່ຢູ່ໃນຖໍ້ານັ້ນຊາວບ້ານຮ້ອງກັນວ່າ: ຜີບັງບົດເປັນຜີທີ່ບໍ່ສາມາດມີໃຜແນມເຫັນໄດ້ ຜີດັ່ງກ່າວໄດ້ລັກເອົາເຄື່ອງຂອງຊາວບ້ານມາໄວ້ໃນຖໍ້າເມື່ອຊາວບ້ານພົບເຫັນກອງແກບກະຈາຍຢູ່ໃນຖໍ້າຈໍານວນຫຼາຍ ຈຶ່ງໄດ້ເອີ້ນຖໍ້ານີ້ວ່າ: ຖໍ້າແກບ.
- ຖໍ້າຜີກອງກ໋ອຍ: ໄດ້ຊື່ມາຈາກສິ່ງມະຫັດສະຈັນທີ່ເຫຼືອເຊື່ອຂອງທໍາມະຊາດ ຫຼື ທີ່ຊາວບ້ານໄດ້ຍິນສຽງຮ້ອງຂອງຜີກ້ອງກອຍຮ້ອງກ້ອງດັງມາຈາກຖໍ້າບາງມື້ໄດ້ຍິນສຽງໃນຕອນກາງຄືນ, ບາງມື້ພັດໄດ້ຍິນສຽງໃນຕອນກາງເວັນ, ບາງຄົນກໍ່ໄດ້ພົບເຫັນຕົວຈິງ ດັ່ງນັ້ນຊາວບ້ານຈຶ່ງເອີ້ນແຕ່ງນີ້ວ່າ: ຖໍ້າຜີກ້ອງກອຍ.

**ຈ. ຜາແຊນ:**

ຜາແຊນຕັ້ງຢູ່ບ້ານນາງອ່າງ ເມືອງເຟືອງ ແຂວງວຽງຈັນ ໄລຍະຫ່າງຈາກຕົວເມືອງ 20 km ການເດີນທາງເຂົ້າຫາແຫຼ່ງທ່ອງແມ່ນເດີນທາງດ້ວຍລົດ ເປັນແຫຼ່ງທ່ອງທ່ຽວທາງດ້ານທໍາມະຊາດຍັງບໍ່ທັນໄດ້ສໍາຫຼວດ ຍັງບໍ່ໄດ້ມີການພັດທະນາ ແລະ ຍັງບໍ່ໄດ້ເປີດບໍລິການໂດຍແມ່ນພາກສ່ວນກະຊວງປ້ອງກັນປະເທດເປັນຜູ້ຄຸ້ມຄອງ.

ປະຫວັດຄວາມເປັນມາ ຄໍາວ່າແຊນ ແມ່ນໄດ້ມາຈາກຄໍາວ່າແສນ ຍ້ອນໃນສະໄໝກ່ອນຢູ່ໃນຜາແຫ່ງນີ້ແມ່ນມີພຣະພຸດທະຮູບຈໍານວນຫຼວງຫຼາຍ ເປັນໝື່ນເປັນແສນອີງຢູ່ໃນຜາແຫ່ງນີ້ ປະຊາຊົນຂອບເຂດນີ້ໄດ້ເອີ້ນຊື່ວ່າ: ຜາແສນ ຫຼັງຈາກເວລາຜ່ານໄປຫຼາຍປີ ສໍານຽງສຽງເວົ້າຂອງຄົນໃນທ່ອງຖິ່ນນັ້ນໄດ້ຜິດພ້ຽນຈາກສໍານຽງເດີມຈາກຄໍາແສນກາຍມາເປັນຄໍາແຊນ ຈຶ່ງໄດ້ໃສ່ຊື່ວ່າ: ຜາແຊນຈົນຮອດປະຈຸບັນ.

ຢູ່ໃນຜາແຫ່ງນີ້ແມ່ນມີຖໍ້າຢູ່ 2 ຖໍ້າຄື: ຖໍ້າພຣະລືສີ ແລະ ຖໍ້ານໍ້າ.

- ຖໍ້າພຣະລືສີ: ອີງໃສ່ການບອກເລົ່າປາກຕໍ່ປາກຂອງປະຊາຊົນເຂດນີ້ ໃນສະໄໝກ່ອນມີພຣະລືສີອົງໜຶ່ງໄດ້ຈໍາສິນບໍາເພັນພາວະນາຢູ່ໃນຖໍ້າແຫ່ງນີ້ເປັນເວລາດົນນານ ຈຶ່ງເອີ້ນວ່າ: ຖໍ້າພຣະລືສີ ຈົນຮອດປະຈຸບັນ.
- ຖໍ້ານໍ້າ: ໄດ້ຊື່ມາຈາກນໍ້າທີ່ໄຫຼລອດຖໍ້າ ຕາມການເລົ່າຂາດຂອງຜູ້ເຖົ້າຜູ້ແກ່ໃນພື້ນທີ່ນັ້ນໄດ້ກ່າວເຖິງຄວາມລຶກລັບຂອງຖໍ້ານັ້ນວ່າ: ຢູ່ໃນຖໍ້າມີເຄື່ອງປະດັບເງິນຄໍາເອ້ຍ້ອງຕ່າງໆຫຼາຍຢ່າງໃນສະໄໝກ່ອນ ເມື່ອຍາມມີບຸນຜູ້ຄົນຈະພາກັນມາຢືມເອົາເຄື່ອງຂອງເອ້ຍ້ອງ ແລະ ເຄື່ອງປະດັບ ເມື່ອສໍາເລັດບຸນປະເພນີແລ້ວກໍ່ຈະເອົາມາສົ່ງຄືນໄວ້ບ່ອນເກົ່າ, ແຕ່ຕົກມາຮອດປັດຈຸບັນແມ່ນບໍ່ມີໃຜຂໍຢືມວັດຖຸສິ່ງຂອງຈາກຖໍ້າ ແລະ ຍັງຄົງເປັນເລື່ອງເລົ່າຕໍ່ໆກັນມາ.

**ສ. ຜາເລືອງ:**

ຜາເລືອງຕັ້ງຢູ່ບ້ານສາມໝື່ນ ແລະ ບ້ານຄອງເລືອງ ເມືອງເຟືອງ ແຂວງວຽງຈັນ ໄລຍະຫ່າງຈາກຕົວເມືອງໄປຫາຜາເລືອງປະມານ 7 km ແລະ ຫ່າງຈາກທາງຫຼວງ 150 m ການເດີນທາງເຂົ້າຫາສະຖານທີ່ທ່ອງທ່ຽວແມ່ນເດີນທາງດ້ວຍລົດ ເປັນແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດ ຍັງບໍ່ທັນໄດ້ຮັບການພັດທະນາ ແລະ ຍັງບໍ່ທັນໄດ້ເປີດບໍລິການ ໂດຍແມ່ນເມືອງ ແລະ ບ້ານຄຸ້ມຄອງ.

ປະຫວັດຄວາມເປັນມາຂອງຜາເລືອງ ຕາມເລົ່າລືມາແຕ່ບູຮານນະການວ່າ: ມີນົກອິນຊີໃຫຍ່ໂຕໜຶ່ງບິນມາຈັບຜາທີ 1 ຜານັ້ນເລີຍທໍ່ລົງ (ຕໍ່າລົງ) ເຂົາເຈົ້າເລີຍເອີ້ນວ່າ: ຜາທໍ່ ຫຼື ຜາທໍ່ໝໍ່ຄຳ ແລ້ວບິນໄປຈັບຜາທີ 2 ຜານັ້ນຄອນໄປຄອນມາເປັນກຸບເລືອງໆ ເຂົາເຈົ້າເລີຍເອີ້ນວ່າຜາເລືອງ ຫຼື ຜາເລື່ອງຕັ້ງແຕ່ໃດມາ. ຢູ່ຜານີ້ມີ 6 ຖ້ຳຄື: ຖ້ຳລົມຍາວ 360 m, ຖ້ຳທະຫານ, ຖ້ຳປ່າໄມ້, ຖ້ຳແປວປ່ອງຟ້າ, ຖ້ຳແຂນ 300 m ມີນ້ຳຕະຫຼອດທັງລະດູແລ້ງ, ຝົນ ແລະ ຖ້ຳນົກແອ່ນ.

**ຊ. ຜາຕອງ:**

ຜາຕອງ ຕັ້ງຢູ່ບ້ານໂນນຫີນແຮ່ ໄລຍະຫ່າງຈາກຕົວເມືອງປະມານ 20 km ແລະ ຫ່າງຈາກທາງຫຼວງປະມານ 600 m ການເດີນທາງເຂົ້າຫາສະຖານທີ່ທ່ອງທ່ຽວແມ່ນເດີນທາງດ້ວຍລົດ ເປັນແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດ ຍັງບໍ່ທັນໄດ້ຮັບການພັດທະນາ ແລະ ຍັງບໍ່ທັນໄດ້ເປີດບໍລິການ ໂດຍແມ່ນກະຊວງປ້ອງກັນປະເທດເປັນຜູ້ຄຸ້ມຄອງ.

ປະຫວັດຄວາມເປັນມາຂອງຜາຕອງ ຍ້ອນຄວາມສົມບູນຮັ່ງມີຂອງຊັບພະຍາກອນທຳມະຊາດນາໆຊະນິດຍ້ອນຄວາມອຸດົມຂອງແຜ່ນດິນລາວເຮົາຢູ່ໃນຂອບເຂດບໍລິເວນອ້ອມຜາແຫ່ງນີ້ເກີດມີໃບຕອງນາໆຊະນິດ ໄດ້ເກີດຂຶ້ນເປັນຈຳນວນຫຼວງຫຼາຍ ຊາວບ້ານໄດ້ພົບເຫັນຄືແນວນັ້ນຈຶ່ງໄດ້ເອີ່ນຜາໜ່ວຍນີ້ວ່າ: ຜາຕອງ ແຕ່ມີຊາວບ້ານອີກກຸ່ມໜຶ່ງໄດ້ພົບເຫັນນົກກົກ ເປັນສັດທີ່ຫາຍາກທີ່ສຸດ (ໃກ້ຈະສູນພັນໃນປະຈຸບັນນີ້) ຈຶ່ງເອີ້ນອີກຊື່ໜຶ່ງວ່າ: ຜານົກກົກ.

**ຍ. ຜາລັງ:**

ຜາລັງ ຕັ້ງຢູ່ບ້ານນາລັງ ເມືອງເຟືອງ ແຂວງວຽງຈັນ ໄລຍະຫ່າງຈາກຕົວເມືອງປະມານ 13 km ແລະ ຫ່າງຈາກທາງຫຼວງປະມານ 1000 m ການເດີນທາງເຂົ້າຫາສະຖານທີ່ທ່ອງທ່ຽວແມ່ນເດີນທາງດ້ວຍລົດ ເປັນແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດ ຍັງບໍ່ທັນໄດ້ຮັບການພັດທະນາ ແລະ ຍັງບໍ່ທັນໄດ້ເປີດບໍລິການ .

ປະຫວັດຄວາມເປັນມາຂອງການຕັ້ງຊື່ຜາລັງ ແມ່ນກ່ຽວຂ້ອງກັບເລື່ອງເລົ່ານິທານນົກອິນຊີໃຫຍ່ທີ່ມາງອຍຢູ່ຍອດຜາ ແລະ ເວລານົກບິນໄປແລ້ວດຶງ ແລະ ລັງເອົາຜາເຮັດໃຫ້ຜາມີລັກສະນະຄືດງໍດັ່ງທີ່ເຫັນມາຮອດທຸກມື້ນີ້ຢ່າງໃດກໍ່ຕາມ ຜາລັງເປັນຜາທີ່ມີຊັບພະຍາກອນທຳມະຊາດມີຖ້ຳ, ປ່າໄມ້ ແລະ ທົ່ງນາຂອງປະຊາຊົນອ້ອມຮອບມີຄວາມສວຍງາມ ເປັນເອກະລັກສະເພາະມີທິວທັດປະກອບກັບທົ່ງນາເຂົ້າຂຽວ ເໝາະແກ່ການພັດທະນາເປັນຈຸດການແວ່ພັກເຊົາ.

**ດ. ຜາຫຼວງ:**

ຜາຫຼວງຕັ້ງຢູ່ບ້ານນາອ່າງ ເມືອງເຟືອງ ແຂວງວຽງຈັນ ໄລຍະຫ່າງຈາກຕົວເມືອງປະມານ 26 km ຫ່າງຈາກທາງຫຼວງປະມານ 6 km ການເດີນທາງເຂົ້າຫາສະຖານທີ່ທ່ອງທ່ຽວແມ່ນເດີນທາງດ້ວຍລົດ ເປັນແຫຼ່ງທ່ອງທ່ຽວ

ທາງດ້ານທຳມະຊາດ ຍັງບໍ່ທັນໄດ້ຮັບການພັດທະນາ ແລະ ຍັງບໍ່ທັນໄດ້ເປີດບໍລິການ ໂດຍແມ່ນກະຊວງປ້ອງກັນປະເທດເປັນຜູ້ຄຸ້ມຄອງ.

ຜາແຫ່ງນີ້ ແມ່ນມີຖ້ຳ 1 ແຫ່ງຄື: ຖ້ຳຜາຫຼວງ ຫຼື ຖ້ຳສ້ອມນາງສຸມຸນທາ ເປັນຖ້ຳທີ່ເຊື່ອມໂຍງກັບວັນນະກຳສັງສິນໄຊ ເປັນຖ້ຳທີ່ຍັກກຸມພັນໄດ້ເອົານາງສຸມຸນທາໄປເຊື່ອງໄວ້ ແລະໄດ້ເອົາກ້ອນຫີນມາອັດປາກຖ້ຳໄວ້ເພື່ອບໍ່ໃຫ້ນາງສຸມຸນທາລັກໂຕນໜີ. ຈຸດພິເສດຂອງຖ້ຳ ແມ່ນເປັນຖ້ຳທີ່ມີຂະໜາດໃຫຍ່ ແລະ ປາກຖ້ຳຕັ້ງຢູ່ຫນ້ຳຜາສູງຈາກພື້ນດິນປະມານ 120 ແມັດ ເສັ້ນທາງຫາຖ້ຳຄ້ອນຂ້າງລຳບາກ, ພາຍໃນຖ້ຳແບ່ງເປັນ 3 ຫ້ອງໂຖງ: ບໍລິເວນຫ້ອງໂຖງທຳອິດ ເປັນບ່ອນອາໄສຂອງເຈຍຢູ່ຈຳນວນຫຼາຍ ມີຂີ້ເຕັມພື້ນສົ່ງກິ່ນເໝັນ ຕອນຄ້າຍຄ່ຳເຈຍເຫຼົ່ານີ້ຈະບິນອອກຈາກປາກຖ້ຳເປັນສາຍຍາວຢຽດຫຼາຍກິໂລແມັດພໍຮອດຕອນເຊົ້າກໍ່ຈະກັບເຂົ້າຖ້ຳຄືເກົ່າ ພຶດຕິກຳຂອງເຈຍເຫຼົ່ານີ້ເປັນປະກົດການທີ່ຫາກເບິ່ງໄດ້ຍາກ, ເຂົ້າໄປດ້ານໃນຈະພົບອີກຫ້ອງໂຖງໜຶ່ງທີ່ມີລັກສະນະພິເສດຫຼາຍ ພາຍໃນໂຖງນີ້ຈະພົບເຫັນຫີນຍ້ອຍ, ໜໍ່ຫີນ ແລະ ສະເກັດຫີນສີຂາວໃສຄ້າຍຄືກັບແກ້ວ ບາງອັນຄ້າຍຄືສະເກັດຫິມະ ຫ້ອງນີ້ບໍ່ມີເຈຍອາໄສຢູ່, ຖັດເຂົ້າໄປດ້ານໃນມີໂຖງນ້ອຍອີກຫ້ອງໜຶ່ງມີລັກສະນະຄ້າຍຄືຫ້ອງຜ່ານມາ ແຕ່ມີຈຸດພິເສດຄືມີແຜ່ນຫີນຄ້າຍຕຽງນອນ ແລະ ມີອ່າງນ້ຳນ້ອຍອັນໜຶ່ງ ຊາວບ້ານອ້າງວ່າ ນີ້ແມ່ນຫ້ອງນອນຂອງນາງສຸມຸນທາ.



ຮູບທີ 2: ຖ້ຳຜາຫຼວງ ຫຼື ຖ້ຳນາງສຸມຸນທາ

**៣. ຜາສັງ:**

ຜາສັງຕັ້ງຢູ່ບ້ານນາຄໍາ ເມືອງເຟືອງ ແຂວງວຽງຈັນ ໄລຍະຫ່າງຈາກຕົວເມືອງປະມານ 30 km ຫ່າງຈາກທາງຫຼວງປະມານ 2 km ການເດີນທາງເຂົ້າຫາສະຖານທີ່ທ່ອງທ່ຽວແມ່ນເດີນທາງດ້ວຍລົດ ເປັນແຫຼ່ງທ່ອງທ່ຽວທາງດ້ານທໍາມະຊາດ ຍັງບໍ່ທັນໄດ້ຮັບການພັດທະນາ ແລະ ຍັງບໍ່ທັນໄດ້ເປີດບໍລິການ ໂດຍແມ່ນກະຊວງປ້ອງກັນປະເທດເປັນຜູ້ຄຸ້ມຄອງ.

ປະຫວັດຄວາມເປັນມາຂອງຜາສັງ ໄດ້ມາຈາກຕໍານານນິທານເລື່ອງສັງສິນໄຊຄື: ເມື່ອສັງສິນໄຊຈະໄປຕໍ່ສູ້ກັບຍັກກຸມພັນ, ຫອຍສັງໄດ້ມາຢູ່ພັກເຊົາລໍຖ້າກຽມຊ່ວຍເຫຼືອສັງສິນໄຊຢູ່ສະຖານທີ່ນີ້ປະຊາຊົນເຂດນີ້ແມ່ນໄດ້ເອີ້ນຊື່ຕາມສາຍແມ່ນໍ້າສັງທີ່ໄຫຼມາຈາກຕີນພູເປີຍມາປ່ອງໃສ່ຜາໜ່ວຍນີ້ແລ້ວໄຫຼລົງສູ່ແມ່ນໍ້າຂອງ.

**ຖ. ຜາຫອຍ:**

ເປັນຜາທີ່ມີຄວາມສູງ ແລະ ໃຫຍ່ ຊຶ່ງຕັ້ງຢູ່ເລິກເຂົ້າໄປໃນປ່າທາງທິດຕາເວັນຕົກຂອງເຂດຕົວເມືອງ ຜາຫອຍ ແມ່ນອ້ອມຮອບດ້ວຍພູນ້ອຍໃຫຍ່ເຮັດໃຫ້ມີເສັ້ນທາງເຂົ້າເຖິງທີ່ລໍາບາກ ແລະ ຍາກຕໍ່ການພັດທະນາແຫຼ່ງທ່ອງທ່ຽວເມືອງທຽບກັບຜາອື່ນໆ ຢ່າງໃດກໍ່ຕາມຜາຫອຍນັບວ່າເປັນຜາທີ່ມີຕິດພັນກັບທໍາມະຊາດຫຼາຍທີ່ສຸດ ບໍລິເວນຜາກໍຍັງມີນໍ້າຕົກຕາດຫຼາຍແຫ່ງ, ມີປ່າໄມ້ ແລະ ສັດປ່າທີ່ຍັງອຸດົມສົມບູນ ເຫມາະແກ່ການສ້າງເປັນເຂດສະຫງວນຮັກສາຊີວະນາໆພັນຂອງເມືອງເປັນປ່າຕົ້ນນໍ້າ.

**ທ. ຜາທອງ:**

ເປັນຜາໜຶ່ງທີ່ມີຄວາມສວຍງາມ ຕັ້ງຢູ່ຕິດກັບຜາຂາດ ແລະ ຜາດິນຈີ່ ກຸ່ມຜາເຫຼົ່ານີ້ມີຄວາມພິເສດຄືເປັນຜານ້ອຍບາງຕັ້ງລຽນເປັນແຖວຍາວ ແລະ ຕິດກັບໜອງນໍ້າທີ່ເກີດຈາກການກັ້ນຝາຍ ຊຶ່ງມັນໄດ້ສ້າງບັນຍາກາດທີ່ວທັດອັນສະຫງົບ ແລະ ສວຍງາມໃຫ້ກັບບໍລິເວນນີ້.



ຮູບທີ 3: ຜາທອງ




ຮູບທີ 4: ແຜນຜັງສະແດງທີ່ຕັ້ງພູຜາຫີນ

### 1.1.2 ພູເຂົາ ແລະ ປ່າໄມ້

ເມືອງເຟືອງເປັນເມືອງທີ່ມີພູສູງອ້ອມຮອບ ຍັງມີປ່າໄມ້ຕຶບໜາ ແລະ ທຳມະຊາດທີ່ອຸດົມສົມບູນ, ຈາກການວິເຄາະພາບຖ່າຍທາງອາກາດເຫັນວ່າ ດິນປ່າໄມ້ ແລະ ພູສູງກວມເອົາຫຼາຍກວ່າ 70 % ໃນນັ້ນເປັນດິນປ່າດົງເກືອບ 40 %, ປ່າດົງເຫຼົ່ານີ້ມີອານາເຂດເຊື່ອມຈອດກັບປ່າຂອງເມືອງໃກ້ຄຽງກາຍເປັນຜືນປ່າຂະໜາດໃຫຍ່ ຊຶ່ງມັນຄືພື້ນທີ່ຕົ້ນນ້ຳ ແລະ ແຫຼ່ງທຳມະຊາດທີ່ອຸດົມສົມບູນແຫ່ງໜຶ່ງຂອງແຂວງວຽງຈັນ.

ຕາຕະລາງທີ 3: ການນາໃຊ້ທີ່ດິນໃນເມືອງເຟືອງ

| ປະເພດການນຳໃຊ້ທີ່ດິນ | ເນື້ອທີ່ (ເຮັກຕາ) | ສ່ວນຮ້ອຍ % |
|---|---|---|
| ດິນປ່າໄມ້ | 34,446 | 39.7 % |
| ດິນພູສູງ | 5,622 | 6.5 % |
| ດິນປ່າຜະລິດ | 26,127 | 30 % |
| ດິນກະສິກຳ | 16,432 | 19 % |
| ດິນປຸກສ້າງ | 1,338 | 1.5 % |
| ເຂດແຫຼ່ງນ້ຳ | 2,802 | 3.2 % |
| **ລວມເນື້ອທີ່ທັງໝົດທົ່ວເມືອງ** | **86,767 ເຮັກຕາ** | **100%** |

ເຂດທີ່ມີປ່າໄມ້ທຳມະຊາດອຸດົມສົມບູນທີ່ສຸດຄືເຂດອ້ອມຮອບອ່າງນ້ຳລີກທາງດ້ານທິດເໜືອ ເຊື່ອມຕໍ່ກັບຊາຍແດນເມືອງວັງວຽງ ແລະ ເມືອງແມດ, ລວມເຖິງເຂດພູເບື້ອງຕາເວັນອອກ ແລະ ຕາເວັນຕົກຂອງເມືອງ; ເນື້ອທີ່ປ່າໄມ້ ສະຫງວນຂອງເມືອງເຟືອງມີທັງໝົດ 13.629,95 ເຮັກຕາ.




ຮູບທີ 5: ແຜນທີ່ນຳໃຊ້ທີ່ດິນ

### 1.1.3. ສັດ ແລະ ຊີວະນານາພັນ

ຈາກການບອກເລົ່າຂອງປະຊາຊົນ ເຮັດໃຫ້ພວກເຮົາຮູ້ວ່າຢູ່ເມືອງເຟືອງຍັງມີສັດປ່າຫາຍາກຫຼາຍຊະນິດທີ່ຍັງຫຼົງເຫຼືອຢູ່ເປັນຕົ້ນແມ່ນຊ້າງ, ເສືອ, ກວາງ ແລະ ຟານ ຊຶ່ງສັດເຫຼົ່ານີ້ແມ່ນອາໄສຢູ່ຕາມພູສູງທີ່ມີປ່າໄມ້ຕຶບໜາ ໂດຍສະເພາະລຽບຕາມເຂດຊາຍແດນຕໍ່ກັບເມືອງວັງວຽງ, ເມືອງແມດ ແລະ ເມືອງຫີນເຫີບ, ສ່ວນຢູ່ຕາມຜາຫີນຕ່າງໆ

ແມ່ນປະກົດເຫັນຈຳພວກສັດນ້ອຍປະເພດລີງ, ຄ່າງ, ກະທອກ, ກະແຕ, ລີງ, ຄ່າງ, ນົກ, ເຈຍ, ໝູ, ແລະ ອື່ນໆອີກຫຼາຍຊະນິດ, ປັດຈຸບັນຍັງບໍ່ມີເອກະສານການສຳຫຼວດມາອ້າງອີງ ຈຶ່ງຂາດຂໍ້ມູນລາຍລະອຽດ.

### 1.1.4. ແມ່ນ້ຳ ແລະ ນ້ຳຕົກຕາດ

ເມືອງເຟືອງມີແມ່ນ້ຳ 3 ສາຍສຳຄັນໄຫຼຜ່ານ ຄື: ແມ່ນ້ຳລີກ, ແມ່ນ້ຳສັງ ແລະ ນ້ຳຕົງ.

**ກ.ແມ່ນ້ຳລີກ**

ແມ່ນ້ຳລີກໄຫຼຜ່ານທາງດ້ານທິດເໜືອຂອງເມືອງ ມີຄວາມຍາວ 20,55 ກມ ແຕ່ກ້ອງເຂື່ອນນ້ຳລີກ 1-2 ຫາຕາດປືນຊາຍແດນເມືອງຫີນເຫີບໄຫຼຜ່ານ 7 ບ້ານຄື: ບ້ານນາແຊງ, ບ້ານຄອນເລືອງ, ບ້ານປາກງວ້າ, ບ້ານສີສະອາດ, ບ້ານສາມໝື່ນ, ບ້ານແກ້ງຊຽງ ແລະ ບ້ານເມືອງເຟືອງ; ແມ່ນ້ຳລີກເປັນ ແມ່ນ້ຳ ໃຫຍ່ ມີນ້ຳໃສສະອາດ ມີແກ້ງ ແລະ ຫາດດອນ ຈຳນວນຫຼາຍ, ໃນລະດູແລ້ງເລີ່ມແຕ່ເດືອນທັນວາຮອດເດືອນພຶດສະພາລະດັບນ້ຳຕື້ນເຂີນ ເໝາະແກ່ການຫຼິ້ນ ນ້ຳ ແລະ ລ່ອງເຮືອຕາມລຳແມ່ນ້ຳ; ລຳແມ່ນ້ຳລີກຊ່ວງທີ່ໄຫຼຜ່ານເມືອງເຟືອງມີລັກສະນະແຕກຕ່າງກັນແບ່ງອອກເປັນ 3 ຊ່ວງຄື:

1) ຊ່ວງເໜືອເຂື່ອນ ແມ່ນ້ຳລີກຖືກສ້າງເຂື່ອນຜະລິດກະແສໄຟຟ້ານ້ຳຕົກຢູ່ບໍລິເວນບ້ານນາແຊງເຮັດໃຫ້ນ້ຳລີກຊ່ວງນີ້ກາຍເປັນທະເລຊາບ, ຢູ່ເໜືອເຂື່ອນມີເກາະດອນຈຳນວນຫຼາຍ ແລະ ມີແກ້ງຕາດຢູ່ຕາມຫ້ວຍຕ່າງໆທີ່ປ່ອງລົງມາຫາອ່າງ ເຊັ່ນ: ແກ້ງຫ້ວຍຕຸ້ມ ຫ່າງຈາກໜ້າເຂື່ອນປະມານ 2 ກິໂລແມັດ, ແກ້ງນ້ຳກຳຫ່າງຈາກໜ້າເຂື່ອນໄປປະມານ 8 ກິໂລແມັດ, ແກ້ງທ້າງ ຫ່າງຈາກໜ້າເຂື່ອນໄປປະມານ 3 ກິໂລແມັດ, ແກ້ງຫ້ວຍເປືອຍ ຫ່າງຈາກໜ້າເຂື່ອນໄປປະມານ 8 ກິໂລແມັດ, ແກ້ງຫ້ວຍຊໍ ຫ່າງຈາກໜ້າເຂື່ອນໄປປະມານ 6 ກິໂລແມັດ ໜ້າເຂື່ອນນ້ຳລີກນີ້ເໝາະສົມແກ່ການພັດທະນາການທ່ອງທ່ຽວແບບພັກຜ່ອນ, ສຶກສາທຳມະຊາດ-ຊີວະນາໆພັນຕິດພັນກັບການປະມົງ.
2) ຊ່ວງກ້ອງເຂື່ອນຫາດອນກາງບ້ານເມືອງເຟືອງເປັນເຂດທີ່ມີນ້ຳຄ່ອນຂ້າງຕື້ນ, ມີຊຸມຊົນຕັ້ງຖິ່ນຖານແຄມນ້ຳມີຮົ້ວສວນ ແລະ ທົ່ງນາລຽບຕາມແມ່ນ້ຳ, ແມ່ນ້ຳລີກຊ່ວງນີ້ເຂົ້າເຖິງໄດ້ງ່າຍ ຈຶ່ງເໝາະສົມແກ່ການພັດທະນາເປັນຮ້ານອາຫານ, ທີ່ພັກ, ແຫຼ່ງທ່ອງທ່ຽວແບບພັກຜ່ອນ ແລະ ຫຼິ້ນນ້ຳຂອງຜູ້ຄົນທົ່ວໄປ.
3) ຊ່ວງດອນກາງ ບ້ານເມືອງເຟືອງ ຫາຊາຍແດນເມືອງຫີນເຫີບ ເປັນຊ່ວງທີ່ມີແກ້ງຫຼາຍ, ນ້ຳຄ່ອນຂ້າງໄຫຼແຮງ, ສອງຂ້າງມີຮົ້ວສວນ ແລະ ປ່າໄມ້ກວມເປີເຊັນສ່ວນຫຼາຍ, ແມ່ນ້ຳລີກຊ່ວງນີ້ເໝາະແກ່ການທ່ອງທ່ຽວແບບ ພະຈົນໄພ ລ່ອງເຮືອ ລ່ອງແກ້ງ ແລະ ຊົມທຳມະຊາດ.

**ຂ. ແມ່ນ້ຳສັງ**

ແມ່ນຳສັງ ເປັນແມ່ນ້ຳທີ່ຢູ່ທາງໃຕ້ຂອງເມືອງ ຕິດກັບຊາຍແດນເມືອງໝື່ນ, ແມ່ນ້ຳນີ້ໄຫຼຕໍ່ໃສ່ບ້ານວັງມ້າ, ບ້ານຊໍ້ ແລະ ອອກສູ່ນ້ຳຂອງເຂດບ້ານທ່ານາສາ ເມືອງສັງທອງ, ຄວາມຍາວທີ່ໄຫຼຜ່ານເມືອງເຟືອງແມ່ນ 20 ກິໂລແມັດ, ມີການສ້າງເຂື່ອນເກັບນ້ຳຂະໜາດນ້ອຍຢູ່ເບື້ອງທິດຕາເວັນຕົກເຂດຜາສັງ ສຳລັບນຳໃຊ້ເຂົ້າໃນຊົນລະປະທານ.

**ຄ. ແມ່ນ້ຳຕົງ**

ແມ່ນ້ຳຕົງເປັນນ້ຳສາຂາຂອງແມ່ນ້ຳລີກ ໄຫຼຈາກສາຍພູທິດຕາເວັນຕົກຜ່ານບ້ານຫ້ວຍເດື່ອ ໄປທາງທິດເໜືອຜ່ານຕົວເມືອງແລ້ວໄປປ່ອງໃສ່ແມ່ນ້ຳລີກຢູ່ບໍລິເວນດອນກາງບ້ານເມືອງເຟືອງ, ແມ່ນ້ຳຕົງມີຄວາມຍາວທັງໝົດ 67,30 ກມ ແຕ່ອ່າງນ້ຳຕົງບ້ານຫ້ວຍເດື່ອຫາຫາດດອນກາງບ້ານເມືອງເຟືອງ, ໄຫຼຜ່ານທັງໝົດ 16 ບ້ານ, ມີການສ້າງ

ເຂື່ອນກັ້ນເຮັດອ່າງເກັບນ້ຳເອີ້ນວ່າ ອ່າງນ້ຳຕຶງ ຢູ່ບໍລິເວນບ້ານຫ້ວຍເດື່ອ, ແມ່ນ້ຳນີ້ມີຄວາມສຳຄັນຫຼາຍຕໍ່ການຜະລິດກະສິກຳຢູ່ບໍລິເວນຕອນກາງຂອງເມືອງ ຊຶ່ງເປັນພື້ນທີ່ທົ່ງນາສ່ວນຫຼາຍ, ເປັນແມ່ນ້ຳບໍ່ໃຫຍ່, ໄຫຼຊ້າ ແລະ ສີນ້ຳບໍ່ໃສເທົ່າກັບແມ່ນ້ຳລີກ; ປັດຈຸບັນຢູ່ໜ້າເຂື່ອນນ້ຳຕຶງໄດ້ຮັບການພັດທະນາເປັນແຫຼ່ງທ່ອງທ່ຽວ ແລະ ເປີດໃຫ້ບໍລິການໃນຕົ້ນປີ 2022 ຜ່ານມາ.



ຮູບທີ 6: ເຂດພັດທະນາອ່າງນ້ຳຕຶງ

### 1.1.5. ທິວທັດທຳມະຊາດ ແລະ ຈຸດຊົມວິວ

ເມືອງເຟືອງຕັ້ງຢູ່ທົ່ງພຽງຂະໜາດນ້ອຍທີ່ມີພູເຂົາອ້ອມຮອບ, ເປັນເມືອງທີ່ມີພູມີທັດອັນໂດດເດັ່ນມີພູຜາຫີນທີ່ສູງຊັນຕັ້ງຢູ່ຢັ້ງຢາຍທົ່ວເມືອງ ແລະ ມີພູສູງອອ້ມຮອບ ປະກອບກັບທົ່ງນາທີ່ກວ້າງໃຫຍ່ເຮັດໃຫ້ເກີດມີທິວທັດທີ່ສວຍງາມ, ທິວທັດທີ່ສວຍງາມນີ້ສາມາດສັງເກດເຫັນໄດ້ຕະຫຼອດເສັ້ນທາງຕັ້ງແຕ່ທິດເໜືອຈົນຮອດທິດໃຕ້ຂອງເມືອງ, ຖ້າຫາກຢູ່ຈຸດສູງຍິ່ງເຫັນທິວທັດອັນກວ້າງຂວາງສວຍງາມທີ່ປະກອບດ້ວຍທົ່ງພຽງ, ຜາຫີນ, ພູເຂົາ-ປ່າໄມ້ສະຫຼັບສັບຊ້ອນ, ເມກໝອກ ແລະ ແສງແດດ; ບ່ອນທີ່ເໝາະສົມສຳລັບສ້າງເປັນຈຸດຊົມວິວຄືໜ້າຜາ ແລະ ຈອມຜາຕ່າງໆ ເຊັ່ນ: ຜາທໍ່, ຜາຕັ້ງ, ຜາເລືອງ, ຜາຫອຍ, ຜາຄຸ, ຜາຄູນ, ຜາຕອງ, ຜາຫຼວງ ແລະ ຜາແຖ; ນອກຈາກນີ້ຍັງລວມເຖິງສາຍພູດ້ານຕາເວັນອອກຂອງຕົວເມືອງ ຄື: ພູຂຽວ, ພູວຽງ ແລະ ພູນ້ອຍອື່ນໆທີ່ຢູ່ໃກ້ກັນ, ພູເຫຼົ່ານີ້ມີທ່າແຮງສູງສຳລັບສ້າງເປັນຈຸດຊົມວິວ ແລະ ທີ່ພັກແບບຣີສອດຫຼູຫຼາ ເພາະໃກ້ຕົວເມືອງ ແລະ ເຫັນວິວກວ້າງໄກ.

## 1.2 ແຫຼ່ງທ່ອງທ່ຽວທາງວັດທະນະທຳ

ແຫຼ່ງທ່ອງທ່ຽວທາງວັດທະນະທຳພາຍໃນເມືອງເຟືອງສາມາດແບ່ງອອກເປັນ 4 ປະເພດໄດ້ແກ່: ແຫຼ່ງທ່ອງທ່ຽວທາງວັດວາອາຮາມທີ່ໂດດເດັ່ນ, ແຫຼ່ງທ່ອງທ່ຽວທີ່ຕິດພັນກັບຮີດຄອງປະເພນີ, ແຫຼ່ງທ່ອງທ່ຽວທີ່ຕິດພັນກັບການດຳລົງຊີວິດ ແລະ ແຫຼ່ງທ່ອງທ່ຽວທີ່ຕິດພັນກັບນິທານ-ວັນນະຄະດີ.

### 1.2.1. ແຫຼ່ງທ່ອງທ່ຽວທາງວັດວາອາຮາມທີ່ໂດດເດັ່ນ

ວັດແມ່ນສະຖານທີ່ສຳຄັນຕໍ່ຈິດໃຈ, ພິທີກຳ ແລະ ການພົວພັນທາງສັງຄົມ, ວັດມີຄວາມຜູກພັນກັບການດຳລົງຊີວິດຂອງປະຊາຊົນຊາວເມືອງເຟືອງຕັ້ງແຕ່ອາດີດຕະການ ແຕ່ລະບ້ານຈະພະຍາຍາມລະດົມທຶນຮອນເພື່ອກໍ່ສ້າງວັດປະຈຳບ້ານຂອງຕົນ, ວັດໃດມີກຳລັງສັດທາຫຼາຍກໍ່ສ້າງໃຫຍ່ໂຕອະລັງການຕາມປັດໄຈ, ຕາມການລົງສຳຫຼວດພົບວ່າ ເກືອບທຸກບ້ານຈະມີວັດ 1 ແຫ່ງ ບາງບ້ານກໍມີ 2 ແຫ່ງ ໃນນັ້ນວັດທີ່ມີຊື່ສຽງ ແລະ ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວຫຼາຍແມ່ນມີ 4 ແຫ່ງ ໄດ້ແກ່: ວັດສີສຸກໄຊຍະຣາມ ບ້ານສາມໝື່ນ, ວັດສີນໄຊຍະລາມ ບ້ານໂນນຫີນແຮ່, ວັດບຸນຍາຣິດສັດຕະທຳມາຍະຣາມ ບ້ານນາເມືອງ ແລະ ວັດສັງສິນໄຊໂພຍະຣາມ ບ້ານຜາສັງ.

**ກ. ວັດສີສຸກໄຊຍະຣາມ**

ບ້ານສາມໝື່ນ ເປັນວັດເກົ່າແກ່ອາຍຸຫຼາຍຮ້ອຍປີ, ວັດນີ້ມີສິ່ງທີ່ໜ້າສົນໃຈຄື ຫໍທຳມາດເສົາດຽວ ຕັ້ງຢູ່ພາຍໃນສາລາຕໍ່ໜ້າຂັ້ນໄດສິມເກົ່າ ຫໍທຳມາດນີ້ມີຮູບຊົງ ແລະ ລວດລາຍສວຍງາມເປັນເອກະລັກ ຖືໄດ້ວ່າເປັນວັດຖຸທີ່ມີຄຸນຄ່າສູງທາງດ້ານສະຖາປັດຕະຍະກຳ ແລະ ສິລະປະກຳຂອງທ້ອງຖິ່ນ, ພ້ອມກັນນີ້ ພາຍໃນວັດຍັງມີສິມເກົ່າຫຼັງນ້ອຍຫຼັງໜຶ່ງທີ່ມີສະພາບຊຸມໂຊມຫຼາຍ ຍັງເຫຼືອແຕ່ຖານ ແລະ ຝາສ່ວນຫຼັງຄາແມ່ນເສຍຫາຍໝົດແລ້ວ, ປັດຈຸບັນອຳນາດການປົກຄອງກໍ່ໄດ້ເຫັນເຖິງຄວາມສຳຄັນ ແລະ ແຈ້ງໃຫ້ມີການອະນຸລັກຮັກສາໄວ້ແລ້ວ ແຕ່ຍັງຂາດກົນໄກການຄຸ້ມຄອງ ແລະ ມາດຕະການຟື້ນຟູປະຕິສັງຂອນທີ່ເໝາະສົມ.



ຮູບທີ່ 7: ຫໍທຳມາດ (ເບື້ອງຊ້າຍ), ສິມເກົ່າ (ເບື້ອງຂວາ)

**ຂ. ວັດສີນໄຊຍະຣາມ**

ບ້ານໂນນຫີນແຮ່ເປັນວັດທີ່ມີຊື່ສຽງໂດ່ງດັງ ມີຊາວພຸດຈາກທົ່ວສາລະທິດມາຢ້ຽມຢາມເປັນປະຈຳມີທັງມາຈາກນະຄອນຫຼວງວຽງຈັນ ແລະ ແຂວງອື່ນໆ ລວມເຖິງຊາວໄທ, ໃນໄລຍະຜ່ານມາ ຂ່າວການມາຢ້ຽມຢາມຂອງ

ບຸກຄົນທີ່ມີຊື່ສຽງ ແລະ ບົດບາດສູງໃນສັງຄົມ ຍິ່ງເຮັດໃຫ້ເກີດກະແສດຶງດູດຜູ້ຄົນຫຼາຍ; ພາຍໃນວັດມີການກໍ່ສ້າງອາຄານສາສະໜາ, ຮູບປັ້ນ ແລະ ສະຖານທີ່ຈຳລອງກ່ຽວຂ້ອງກັບພຸດທະປະຫວັດ, ພະທຳຄຳສອນ ແລະ ເຫດການຕ່າງໆທາງພຸດສາສະໜາຢ່າງຫຼວງຫຼາຍ, ວັດແຫ່ງນີ້ເປັນວັດໃຫຍ່ມີການຈັດເທດສະການ ແລະ ກິດຈະກຳຢ່າງເປັນປະຈຳ ຖືເປັນວັດທີ່ມີທ່າແຮງສູງໃນດ້ານການທ່ອງທ່ຽວທາງວັດທະນະທຳ ໂດຍສະເພາະການທ່ອງທ່ຽວຕິດພັນກັບພຸດສາສະໜາ.



ຮູບທີ 8: ວັດສິນໄຊຍະຣາມ (ທີ່ມາ: Facebook_ຜະລິດຕະພັນລາວ (ຮູບຂວາ)

**ຄ. ວັດບຸນຍາຣິດສັດຕະທຳມາຍາຣາມ**

ບ້ານນາເມືອງ ເປັນວັດທີ່ມີຄວາມໂດດເດັ່ນທາງດ້ານສະຖາປັດຕະຍະກຳ ໂດຍສະເພາະສິມເຟືອງ (ສິມທີ່ປະດັບປະດາດ້ວຍເຟືອງທັງຫຼັງ), ພະພຸດທະຮູບ ແລະ ຂັ້ນໄດພະຍານາກໃຫຍ່ ເປັນສິລະປະທີ່ປານີດສວຍງາມ, ນອກຈາກນີ້ ທີ່ຕັ້ງວັດເປັນເນີນພູສາມາດເຫັນທິວທັດໄດ້ກວ້າງໄກສະຫວາດສະເຫວີຍອີກດ້ວຍ.



ຮູບທີ 9: ສິມເຟືອງ (ເບື້ອງຊ້າຍ), ຂັ້ນໄດນາກ 7 ສຽນ (ເບື້ອງຂວາງ)

**ງ. ວັດສັງສິນໄຊໂພຄະຣາມ**

ບ້ານຜາສັງເປັນວັດທີ່ມີສິມອ່ອນສ້ອຍສວຍງາມ ເປັນສະຖາປັດຕະຍະກຳທີ່ເປັນເອກະລັກຂອງເມືອງເຟືອງທາງໃນມີພະປະທານປະທັບຢູ່ເທິງຊ້າງສີໂຫ 3 ສຽນ ແລະ ຫອຍສັງໂອບກອດພະອົງ ເປັນສິລະປະກຳທີ່ໜ້າສົນໃຈຢ່າງຍິ່ງ.



ຮູບທີ 10: ສິມວັດສັງສິນໄຊ (ເບື້ອງຊ້າຍ), ພະປະທານ (ເບື້ອງຂວາງ)

ນອກຈາກນີ້, ຍັງມີວັດທີ່ໜ້າສົນໃຈອື່ນອີກເຊັ່ນ ວັດໂພນທອນ, ວັດສີບຸນໂຮມ ບ້ານນາພື່ງ, ວັດບ້ານນາໃໝ່ ເປັນຕົ້ນ.

#### 1.2.2. ການທ່ອງທ່ຽວທີ່ຕິດພັນກັບຮີດຄອງປະເພນີ

ຊາວເມືອງເຟືອງແມ່ນຖືຮີດ 12 ຄອງ 14 ຕາມປະເພນີລາວທົ່ວໄປ, ໃນຮອບໜຶ່ງປີກໍ່ຈະມີການຈັດງານປະເພນີ ຕ່າງໆຕາມແຕ່ລະດູການ ໃນນັ້ນງານບຸນປະເພນີທີ່ໂດດເດັ່ນ ແລະ ສຳຄັນຂອງຊາວເມືອງເຟືອງ ປະກອບມີ: ບຸນກອງເຂົ້າ ຫຼື ບຸນພະທາຍເຂົ້າ, ບຸນພະເວດ, ບຸນຊ່ວງເຮືອ ບ້ານຄອນເລືອງ, ບຸນບັ້ງໄຟ ບ້ານໂນນຫີນແຮ່, ບຸນລ້ຽງເຈົ້າພາທໍ່, ບຸນເຂົ້າພັນສາ (ພິທີແຫ່ທຽນເຜິ້ງ, ວັດສິນໄຊ) ແລະ ອື່ນໆ.

ບຸນກອງເຂົ້າ ຫຼື ບຸນພະທາຍເຂົ້າເປັນປາງບຸນທີ່ສຳຄັນປະຈຳປີຂອງແຕ່ລະບ້ານ, ມັກຈັດໃນລະຫວ່າງເດືອນ 12-2 ຂອງທຸກປີ, ເປັນງານບຸນໃຫຍ່ທີ່ມີປະຊາຊົນເຕົ້າໂຮມກັນຈຳນວນຫຼາຍ, ສິ່ງທີ່ໜ້າສົນໃຈຄືການຈັດພິທີບູຊາກອງເຂົ້າຕາມຮີດຄອງປະເພນີ ໂດຍມີການຕົກແຕ່ງປະດັບປະດາ ແລະ ສ້າງປະສາດເຂົ້າຢ່າງສວຍງາມ.





ຮູບທີ 11: ປະສາດກອງເຂົ້າ ໃນງານບຸນກອງເຂົ້າປະຈຳປີ

ບຸນຊ່ວງເຮືອບ້ານ ຄອນເລືອງ ກໍ່ເປັນງານບຸນໃຫຍ່ທີ່ມີຄົນໄປຮ່ວມງານຈຳນວນຫຼາຍໃນແຕ່ລະປີ.

### 1.2.3. ການທ່ອງທ່ຽວທີ່ຕິດພັນກັບການດຳລົງຊີວິດ

ການດຳລົງຊີວິດຂອງຊາວເມືອງເຟືອງ ສ່ວນຫຼາຍຍັງຕິດພັນກັບກະສິກຳ ແລະ ທຳມະຊາດ, ເປັນສັງຄົມທີ່ມີຄວາມລຽບງ່າຍ ແລະ ເອື້ອເຟື້ອເກື້ອກູນກັນຊຶ່ງກັນ ແລະ ກັນ, ປະຊາຊົນຫຼາຍບ້ານຍັງຄົງຮັກສາວິຖີຊີວິດປະຈຳວັນຕາມແບບປະເພນີດັ້ງເດີມໄວ້ດີພໍສົມຄວນ ເຊັ່ນ: ວິຖີການທຳມາຫາກິນ, ການປະຕິບັດຮີດຄອງປະເພນີ, ການພົວພັນທາງສັງຄົມ ແລະ ອື່ນໆ; ການຕໍ່າຫູກທໍຜ້າຢູ່ເຮືອນເປັນກິດຈະວັດປະຈຳວັນອັນໜຶ່ງຂອງແມ່ຍິງ ຊຶ່ງໄດ້ຊ່ວຍເພີ່ມສີສັນ ແລະ ບັນຍາກາດໃຫ້ແກ່ຊຸມຊົນ, ບ້ານທີ່ຍັງມີການຕໍ່າຫູກຫຼາຍທີ່ສຸດ ຄື ບ້ານນາແຊງ, ບ້ານນາໃໝ່ ແລະ ບ້ານຄອນເລືອງ.

ບ້ານນາແຊງ ເປັນບ້ານທີ່ມີຄວາມໂດດເດັ່ນທາງດ້ານທີ່ຕັ້ງ ຊຶ່ງຢູ່ຕິດກັບແມ່ນ້ຳລີກ, ພູມສັນຖານຄ້ອຍຊັນຫາແມ່ນ້ຳສາມາດລະບາຍນ້ຳໄດ້ດີ, ບ້ານນີ້ຍັງຄົງມີສະພາບແວດລ້ອມ ແລະ ແຜນຜັງຊຸມຊົນແບບດັ່ງເດີມ, ເຮືອນຊານປະຊາຊົນປຸກຕາມຄວາມເຊື່ອຖື ແລະ ກົນເກນຂອງສັງຄົມປະເພນີ, ຍັງມີເຮືອນເກົ່າແບບເຮືອນຮ້ານຢູ່ຫຼາຍຫຼັງທີ່ມີຄຸນຄ່າທາງດ້ານສະຖາປັດຕະຍະກຳ ແລະ ພູມປັນຍາການກໍ່ສ້າງຂອງທ້ອງຖິ່ນ, ສະຫຼຸບແລ້ວບ້ານນີ້ມີທ່າແຮງສ້າງເປັນບ້ານທົດລອງການທ່ອງທ່ຽວຊຸມຊົນຂອງເມືອງເຟືອງໃນໄລຍະທຳອິດນີ້ໄດ້.

### 1.2.4. ແຫຼ່ງທ່ອງທ່ຽວທີ່ຕິດພັນກັບນິທານ-ວັນນະຄະດີ

ວັນນະກຳທີ່ເປັນເລື່ອງເລົ່າປາກຕໍ່ປາກຂອງຊາວເມືອງເຟືອງຈາກຮຸ່ນສູ່ຮຸ່ນ ສືບທອດມາຫຼາຍຊົ່ວອາຍຸຄົນປະກອບມີ 3 ເລື່ອງທີ່ໂດດເດັ່ນ ຄື: ເລື່ອງສັງສິນໄຊ, ເລື່ອງນົກອິນຊີໃຫຍ່ ແລະ ເລື່ອງສາມໝື່ນຕູບເຟືອງ.

ວັນນະກຳສັງສິນໄຊ ຕອນຍັກກຸມພັນຈັບນາງສຸມຸນທາໄປເປັນເມຍ ຖືກນຳມາໄປຜູກຕິດເຂົ້າກັບສະພາບແວດລ້ອມຂອງເມືອງຈຶ່ງກາຍເປັນມາຍາຄະຕິຂອງສະຖານທີ່ຕ່າງໆເຫຼົ່ານັ້ນເຊັ່ນ:ຊາວບ້ານອ້າງເຖິງຖ້ຳເຈຍ (Crytal Cave) ຢູ່ພູຜາຫຼວງ ວ່າເປັນສະຖານທີ່ທີ່ຍັກກຸມພັນໄດ້ເນລະມິດມາໃຫ້ເປັນປະສາດແກ້ວ ສຳລັບເປັນບ່ອນປະທັບຂອງນາງ ສຸມຸນທາ ທີ່ໄດ້ລັກພາຕົວມາແຕ່ເມືອງມະນຸດ, ພູຜາຂາດ ເປັນອີກສະຖານທີ່ໜຶ່ງທີ່ຖືກນຳໄປເຊື່ອມໂຍງກັບວັນນະກຳສັງສິນໄຊ ໂດຍອ້າງວ່າຮູບຮ່າງໜ້າຜາທີ່ຂາດອອກຈາກກັນນັ້ນເປັນຍ້ອນຖືກລູກທະນູຂອງສິນໄຊຕອນທີ່ຕໍ່ສູ້ກັບຍັກ, ທົ່ງກຸມ ກໍ່ເຊັ່ນດຽວກັນ ເກີດຈາກການຕໍ່ສູ້ກັນຂອງສິນໄຊ ແລະ ຍັກກຸມພັນ ເຮັດໃຫ້ເກີດເປັນທົ່ງທີ່ກ້ຽງແປນ, ຜາສັງ ແມ່ນຫອຍສັງຂອງສິນໄຊ ແລະ ສະຖານທີ່ອື່ນໆອີກ, ເລື່ອງລາວຕ່າງໆເຫຼົ່ານີ້ແມ່ນໄດ້ຮັບການບອກເລົ່າຕໍ່ໆກັນຈາກຮຸ່ນສູ່ຮຸ່ນ ແລະ ຄາດວ່າຈະຍັງຄົງຝັງຢູ່ໃນຄະຕິຂອງຊາວເມືອງເຟືອງຕະຫຼອດໄປ.

ເລື່ອງສາມໝື່ນຕູບເຟືອງ ເປັນຕຳນານທີ່ກ່າວເຖິງຄວາມອຸດົມຮັ່ງມີຂອງເມືອງເຟືອງ ໂດຍສະເພາະໝໍ່ຄຳທີ່ສ່ອງແສງສະຫງ່າຢູ່ເທິງຜາທໍ່ ມີຜູ້ຄົນຈາກທຸກສາລະທິດເດີນທາງມາລໍຖ້າເອົາໝໍ່ຄຳດັ່ງກ່າວ ຈຶ່ງພາກັນຕັ້ງຕູບເຟືອງເປັນບ່ອນພັກພິງຫຼາຍເຖິງສາມສິບພັນຕູບ.

ນອກຈາກນັ້ນແລ້ວຍັງມີເລື່ອງເລົ່າລືມາແຕ່ບູຮານນະການວ່າ: ມີນົກອິນຊີໃຫຍ່ໂຕໜຶ່ງບິນມາຈັບຜາທີ 1 ຜານັ້ນເລີຍທໍ່ລົງ (ຕ່ຳລົງ) ເຂົາເຈົ້າເລີຍເອີ້ນວ່າ: ຜາທໍ່ ຫຼື ຜາທໍ່ໝໍ່ຄຳ ແລ້ວບິນໄປຈັບຜາທີ 2 ເຮັດໃຫ້ຜານັ້ນຄອນໄປຄອນມາເປັນກຸບເລືອງໆ ເຂົາເຈົ້າເລີຍເອີ້ນວ່າຜາເລືອງ ຫຼື ຜາເລື່ອງຕັ້ງແຕ່ໃດມາ; ຈາກນັ້ນ ນົກອິນຊີຕົວດັ່ງກ່າວ ກໍໄດ້ບິນໄປຈັບຜາທີ 3 ຊຶ່ງໄດ້ເຮັດໃຫ້ຜາໜ່ວຍດັ່ງກ່າວນັ້ນຕິ່ງອອກ ຜູ້ຄົນຈຶ່ງຮຽກຊື່ຜານັ້ນວ່າຜາຕິ່ງ ຫຼື ຜາຕິ້ງໃນປັດຈຸບັນ.




ຮູບທີ 12: ແຜນທີ່ຕັ້ງຂອງວັດຕ່າງໆ

## 1.3 ແຫຼ່ງທ່ອງທ່ຽວທາງປະຫວັດສາດ

### 1.3.1. ຫໍມູນເຊື້ອກິາແຕ້ຈາລຶກຄວາມແຄ້ນ

ສະຖານທີ່ທາງປະຫວັດສາດໃນພື້ນທີ່ເມືອງເຟືອງ ອັນທີ່ພົ້ນເດັ່ນທີ່ສຸດແມ່ນພິພິທະພັນຕົ້ນແຕ້ຈາລຶກຄວາມແຄ້ນຢູ່ວັດບ້ານນາທໍ່ວ ຊຶ່ງເປັນບ່ອນທຸບຕີທໍລະມານ ແລະ ຂ້າແຂນຄໍນັກປະຕິວັດ ແລະ ປະຊາຊົນຜູ້ຈົ່ງຮັກພັກດີຕໍ່ປະເທດຊາດຈຳນວນ 17 ສະຫາຍ ໃນສະໄໝຕໍ່ສູ້ກູ້ຊາດຈາກພວກລ່າເມືອງແບບໃໝ່ ລະຫວ່າງປີ 1964-1969, ຕົ້ນແຕ່ແຫ່ງນີ້ກາຍເປັນສັນຍາລັກຈາລຶກຄວາມແຄ້ນ ແລະ ວິລະກຳອັນອົງອາດກ້າຫານຂອງປະຊາຊົນຊາວເມືອງ

ເຟືອງ ທີ່ບໍ່ຍອມເປັນຂ້ອຍຂ້າໃຫ້ພວກປະຕິການຂາຍຊາດ ແລະ ຈັກກະພັດຜູ້ອຳມະຫິດ; ປັດຈຸບັນ ຕົ້ນແຕ້ດັ່ງກ່າວ ໄດ້ມີການອະນຸລັກຮັກສາໄວ້ ພ້ອມທັງມີການກໍ່ສ້າງສີລາຈາລຶກຊື່ຂອງຜູ້ເສຍສະຫຼະທັງ 17 ສະຫາຍ ແລະ ພິພິທະພັນວາງສະແດງປະຫວັດ, ຮູບພາບ ແລະ ອາວຸດຍຸດໂທປະກອນ, ຢ່າງໃດກໍຕາມ ທາງອຳນາດການປົກຄອງເມືອງຍັງຕ້ອງການປັບປຸງສະຖານທີ່ແຫ່ງນີ້ໃຫ້ມີຄວາມໂດດເດັ່ນສວຍງາມ ແລະ ມີສິ່ງອຳນວຍຄວາມສະດວກສະບາຍຫຼາຍຕື່ມ ເພື່ອດຶງດູດນັກທ່ອງທ່ຽວ ກໍຄືຊາວໜຸ່ມເຍົາວະຊົນ ແລະ ປະຊາຊົນລາວທົ່ວໄປເຂົ້າມາສຶກສາຮຽນຮູ້, ຊື່ນຊົມ ແລະ ລະລຶກຄຸນງາມຄວາມດີຂອງບັນພະບູລຸດຜູ້ອົງອາດກ້າຫານ ແລະ ເສຍສະຫຼະເພື່ອປະເທດຊາດ.



ຮູບທີ 13: ຮູບພາບຫໍມູນເຊື້ອກົກແຕ້ຈາລຶກຄວາມແຄ້ນ

### 1.3.2 ຖໍ້າທ່ານ ສຸພານຸວົງ ຢູ່ຜາແຖ

ຖໍ້າທ່ານສຸພານຸວົງຕັ້ງຢູ່ຜາແຖ ຊຶ່ງເປັນບ່ອນແວະພັກເຊົາຂອງຜູ້ນຳໃນເວລາໂຕນອອກຈາກຄຸກໂພນເຄັງ ເພື່ອເດີນທາງກັບໄປເຂດປົດປ່ອຍ ໃນຊ່ວງປີ 1960, ຖໍ້າດັ່ງກ່າວຕັ້ງຢູ່ເຂດບ້ານນາເມືອງ ກຸ່ມຜາສັງ ຊຶ່ງຢູ່ທາງດ້ານໃຕ້ຂອງເມືອງເຟືອງ. ປັດຈຸບັນຍັງບໍ່ທັນມີການພັດທະນາໃດໆ ແຕ່ເປັນສະຖານທີ່ສຳຄັນທີ່ຄວນມີການອະນຸລັກ ແລະ ພັດທະນາເປັນແຫຼ່ງທ່ອງທ່ຽວ ເພື່ອຈາລຶກ ແລະ ເຜີຍແຜ່ວິລະກຳປະຫວັດສາດໃຫ້ນັກທ່ອງທ່ຽວ ແລະ ອະນຸຊົນຄົນຮຸ່ນຫຼັງໄດ້ສຶກສາຮຽນຮູ້ສືບໄປ.

### 1.3.3 ລັງທາດ

ແມ່ນສະຖານທີ່ບ່ອນຝັງສົບຄົນບູຮານຢູ່ໃກ້ກັບຜາທໍ່ ໂດຍມີການສ້າງເຈດີກວມ, ຖືເປັນເປັນແຫຼ່ງບູຮານຄະດີທີ່ໜ້າສົນໃຈອັນໜຶ່ງ ແຕ່ຍັງບໍ່ທັນໄດ້ຮັບການສຶກສາສຳຫຼວດຢ່າງເປັນທາງການ.

### 1.4 ການທ່ອງທ່ຽວທາງດ້ານກະສິກຳ

ພື້ນຖານການດຳລົງຊີວິດຂອງປະຊາຊົນເມືອງເຟືອງແມ່ນການເຮັດກະສິກຳ ໂດຍສະເພາະການເຮັດນາ, ຮົ້ວສວນ ແລະ ລ້ຽງສັດ, ປັດຈຸບັນການເຮັດນາຍັງຄົງເປັນອາຊີບຫຼັກຂອງປະຊາຊົນສ່ວນຫຼາຍ, ການປູກໝາກໄມ້ ແລະ ພືດອຸດສາຫະກຳອື່ນໆ ແມ່ນເປັນກະສິກຳເສີມ, ໝາກໄມ້ທີ່ພົບເຫັນປູກຫຼາຍແມ່ນໝາກກ້ຽງ, ໝາກນາວ, ໝາກໂມ ໝາກກວ້ຍ, ໝາກຫຸ່ງ, ໝາກສາລີ, ໝາກແຕງ, ໝາກຖົ່ວ ແລະ ພວມມີການທົດລອງປູກໝາກໄມ້ປະເພດອື່ນໆ ອີກຈຳນວນໜຶ່ງ.

ເຂດລ່ອງແມ່ນ້ຳລີກ ພົບເຫັນສວນໝາກໄມ້ກິນໝາກຫຼາຍຊະນິດເປັນຕົ້ນ ສວນໝາກກ້ຽງ, ສວນໝາກນາວ, ສວນໝາກຫຸ່ງ, ໝາກເງາະ, ໝາກກ້ຽງໃຫຍ່, ສ່ວນເຂດບ້ານໂພນສະຫວາດຫາບ້ານນ້ຳປຸ່ງແມ່ນມີສວນໝາກກ້ວຍ ແລະ ສວນຢາງພາລາ, ເຂດບ້ານຜາຫຼວງກໍ່ມີການປູກສວນໝາກກ້ຽງຈຳນວນຫຼາຍເຊັ່ນກັນ ໃນເຂດນີ້ມີທ່າແຮງສູງໃນການປູກໄມ້ກິນໝາກເນື່ອງຈາກມີຝຸ່ນຂີ້ເຈຍທີ່ໄດ້ຈາກຖ້ຳຜາຫຼວງ ຫຼື ຖ້ຳນາງແອ່ນ; ສຳລັບການປູກໝາກໂມແມ່ນນິຍົມປູກໃນລະດູເກັບກ່ຽວສຳເລັດແລ້ວ ໂດຍນຳໃຊ້ພື້ນທີ່ທົ່ງນາຕາມລຳແມ່ນ້ຳສຳຄັນເຊັ່ນ: ແມ່ນ້ຳລີກ, ແມ່ນ້ຳຕຶງ ແລະ ແມ່ນ້ຳສັງ.

ອີງໃສ່ເງື່ອນໄຂສະພາບແວດລ້ອມ ແລະ ພື້ນຖານການຜະລິດຂອງປະຊາຊົນ, ການກະສິກຳເມືອງເຟືອງສາມາດພັດທະນາໃຫ້ກາຍເປັນສ່ວນໜຶ່ງຂອງວົງຈອນການທ່ອງທ່ຽວໄດ້ເຊັ່ນກັນ ແຕ່ອາດຕ້ອງໄດ້ກຽມຄວາມພ້ອມອີກຫຼາຍດ້ານ ເປັນຕົ້ນແມ່ນການຫັນປ່ຽນຂະບວນການຜະລິດແບບປະຖົມປະຖານສູ່ການຜະລິດແບບມີເຕັກນິກວິທະຍາສາດອັນກ້າວໜ້າ ເພື່ອເປັນຕົ້ນແບບໃຫ້ແກ່ການສຶກສາຮຽນຮູ້ຂອງຊາວກະສິກອນ, ນັກຮຽນນັກສຶກສາ ແລະ ຜູ້ສົນໃຈທາງດ້ານກະສິກຳທົ່ວໄປ, ຄຽງຄູ່ກັນນັ້ນ ການພັດທະນາຜະລິດຕະພັນກະສິກຳໃຫ້ມີຄວາມໂດດເດັ່ນກໍ່ເປັນອີກວຽກງານໜຶ່ງ ທີ່ຕ້ອງໄດ້ຍົກລະດັບເພື່ອສ້າງແຮງຈູງໃຈແກ່ນັກທ່ອງທ່ຽວທີ່ຕ້ອງການມາທ່ຽວຊົມ, ທ່ຽວຊີມ ແລະ ຈັບຈ່າຍຊື້ເປັນຂອງຕ້ອນຂອງຝາກ, ປັດໄຈເຫຼົ່ານີ້ຈະຊ່ວຍຊຸກຍູ້ໃຫ້ກະສິກຳກາຍເປັນຈຸດໝາຍປາຍທາງຂອງການທ່ອງທ່ຽວຂອງເມືອງເຟືອງໃນອະນາຄົດຂ້າງໜ້າ.

- ສວນໝາກກ້ຽງຂອງທ່ານບຸນມີ ຢູ່ຫາດດອນຄູນ (ບ້ານຄອນເລືອງ)
- ສວນໝາກກ້ຽງຢູ່ບ້ານຜາຫຼວງ
- ສວນໝາກນາວ ຢູ່ບ້ານສາມໝື່ນ
- ເຂດບ້ານນາຂອບ ປູກພືດລົ້ມລຸກ ເປັນຕົ້ນ ໝາກແຕງ, ສາລີ, ມັນຕົ້ນ ທີ່ສາມາດຂາຍສົ່ງ ເພື່ອຮັບໃຊ້ໃຫ້ຕະຫຼາດຂອງເມືອງ
- ສວນໝາກນັດຢູ່ບ້ານດອນ, ບ້ານນາກາງ, ບ້ານທ່າ
- ບ້ານໂພນທອນ ປູກໝາກແຕງໄລຍະແລ້ງ ລະດູຝົນປູກເຂົ້າ (ເຂດ3)
- ບ້ານໂພນສີ ປູກພືດລົ້ມລຸກ, ສາລີ, ໝາກແຕງ, ຖົ່ວດິນ (ຕາມລ້ອງນ້ຳລີກ ເຂດທີ່1)
- ສວນໝາກກ້ຽງຢູ່ບ້ານໜອງປໍ



ຮູບທີ 14: ສວນໝາກນາວ

## 1.5 ການວິເຄາະທ່າແຮງບົ່ມຊ້ອນຂອງຜະລິດຕະພັນທ້ອງຖິ່ນ ແລະ ເຄື່ອງທີ່ລະນຶກ

### 1.5.1 ຫັດຖະກຳ

ການຜະລິດຫັດຖະກຳຢູ່ເມືອງເຟືອງຍັງມີລັກສະນະບໍ່ກ້ວາງຂວາງ, ການຜະລິດຍັງບໍ່ເປັນຂະບວນ, ພົບເຫັນຫຼາຍກວ່າໝູ່ແມ່ນການຕໍ່າຫູກຢູ່ບັນດາບ້ານລຽບຕາມແມ່ນ້ຳລີກເຊັ່ນ: ບ້ານຄອນເລືອງ ມີການຕໍ່າຫູກຫຼາຍທີ່ສຸດເຖິງ 188 ຄອບຄົວ, ຮອງລົງມາແມ່ນຢູ່ບ້ານນາໃໝ່, ບ້ານນາແຊງ ແລະ ບ້ານເມືອງເຟືອງຕາມລຳດັບ, ສິນຄ້າທີ່ນິຍົມຜະລິດສ່ວນຫຼາຍເປັນແພສິ້ນ ແລະ ຕີນສິ້ນ ສົ່ງຂາຍໃຫ້ຮ້ານພາຍໃນເມືອງ ແລະ ສົ່ງໄປນະຄອນຫຼວງວຽງຈັນ, ບັນຫາຂອງສິນຄ້າເຫຼົ່ານີ້ຄືຂາດເອກະລັກ ແລະ ບໍ່ມີການຕໍ່ຍອດເປັນຜະລິດຕະພັນທີ່ຫຼາກຫຼາຍ ຈຶ່ງສົ່ງຜົນເຮັດໃຫ້ລາຄາຕໍ່າບໍ່ສົມຄູ່ກັບແຮງງານທັງໆທີ່ຢູ່ບ້ານນາແຊງ ມີຄົນສາມາດຜະລິດນ້ຳຫົວເຊື້ອຍ້ອມນິນໃຊ້ສຳລັບຍ້ອມຜ້າ ຊຶ່ງປັດຈຸບັນສົ່ງອອກຂາຍຕ່າງປະເທດຢ່າງດຽວ.

ນອກຈາກການຕໍ່າຫູກແລ້ວ ຍັງມີການຈັກສານຕິບເຂົ້າ ແລະ ພາເຂົ້າຈຳນວນ 3 ຄອບຄົວ ຢູ່ບ້ານນາໃຫມ່ແຕ່ເປັນການຜະລິດເພື່ອສະໜອງໃຫ້ຄົນຊົມໃຊ້ພາຍໃນເມືອງເຟືອງເອງ.



ຮູບທີ 15: ຮູບຜະລິດຕະພັນຈັກສານ (ຕິບເຂົ້າ) ແລະ ກີ່ຕໍ່າຫູກ



ຮູບທີ 16: ການຍ້ອມຝ້າຍຂອງປະຊາຊົນບ້ານນາແຊງ

### 1.5.2 ອາຫານ ແລະ ເຄື່ອງດື່ມ

ຊາວເມືອງເຟືອງມີອາຫານທີ່ເປັນເອກະລັກຫຼາຍຢ່າງ ແຕ່ອາຫານທີ່ຜະລິດເປັນສິນຄ້າຢ່າງຈິງຈັງໃນປັດຈຸບັນ ມີພຽງຊີ້ນຫມູໂຄ້ນ ແລະ ຊີ້ນງົວໂຄ້ນຂອງເພັດມັງກອນຣິສອດ, ເຫລົ້າແກບ 100 ປີ ບ້ານນາໃຫມ່, ນໍ້າດື່ມເກືອແຮ່ ກາສາມຜາ ທີ່ເອີ້ນວ່າ ນໍ້າສະຕິ ບ້ານທ່າ; ອາຫານເຫຼົ່ານີ້ຖືວ່າເປັນຜະລິດຕະພັນທີ່ແຊບ ແລະ ມີເອກະລັກ ແຕ່ຄວນ ໄດ້ຮັບການພັດທະນາບັນຈຸພັນ (ການຫຸ້ມຫໍ່) ແລະ ສ້າງເຄື່ອງໝາຍສັນຍາລັກຂອງເມືອງ ເພື່ອໃຫ້ເປັນທີ່ສົນໃຈຂອງ ຕະຫຼາດຫຼາຍອີກ.

## 2. ສະຫຼຸບທ່າແຮງບົ່ມຊ້ອນທາງດ້ານການທ່ອງທ່ຽວຂອງເມືອງເຟືອງ

ອີງໃສ່ຜົນການວິເຄາະທ່າແຮງບົ່ມຊ້ອນຂອງການທ່ອງທ່ຽວສາມາດສະຫຼຸບໄດ້ວ່າ ທ່າແຮງຕົ້ນຕໍທີ່ຈະກາຍເປັນ ສິ່ງດຶງດູດນັກທ່ອງທ່ຽວຂອງເມືອງເຟືອງ ປະກອບດ້ວຍ:

### 2.1 ທ່າແຮງທາງດ້ານທໍາມະຊາດ

ເມືອງເຟືອງມີຈຸດເດັ່ນທີ່ສຸດຄືທໍາມະຊາດ ໂດຍສະເພາະຄວາມອຸດົມສົມບູນຂອງພູຜາປ່າໄມ້, ແມ່ນໍ້າໃສເຢັນ, ອາກາດທີ່ເຢັນສະບາຍເກືອບທັງປີ ແລະ ທິວທັດທໍາມະຊາດທີ່ສວຍງາມ ລາຍລະອຽດມີຄື:

- **ແມ່ນໍ້າລີກ:** ເປັນແມ່ນໍ້າທີ່ມີນໍ້າໄສເຢັນຕະຫຼອດທັງປີ, ລະດັບນໍ້າໃນລະດູແລ້ງເໝາະສົມກັບການຫຼິ້ນນໍ້າທີ່ສຸດ, ສ່ວນລະດູຝົນກໍ່ສາມາດລ່ອງແກ່ງແບບປະຈົນໄພ, ບັນຍາກາດແຄມນໍ້າລີກເໝາະສົມແກ່ການພັກຜ່ອນໃນຮູບ ແບບຕ່າງໆ ບໍ່ວ່າຈະເປັນການກິນອາຫານ, ຕາກອາກາດ, ພັກແຮມ, ຕັ້ງແຄ້ມ, ສ້າງສັນ ແລະ ອື່ນໆ.
- **ອ່າງເກັບນໍ້າ:** ໂດຍສະເພາະອ່າງນໍ້າລີກ ແລະ ອ່າງນໍ້າຕຶງ, ອ່າງນໍ້າລີກ ເປັນທະເລຊາບທີ່ເກີດຈາກການສ້າງ ເຂື່ອນໄຟຟ້ານໍ້າຕົກ ເປັນອ່າງນໍ້າຂະໜາດໃຫຍ່ຂອງເມືອງເຟືອງ ມີທ່າແຮງທາງດ້ານການປະມົງ, ການທ່ອງທ່ຽວທີ່ ຕິດພັນກັບການປະມົງ, ການພັກຜ່ອນ ແລະ ການສຶກສາທໍາມະຊາດ ເນື່ອງຈາກມີອານາເຂດຕິດກັບປ່າສະຫງວນ ຍອດນໍ້າລີກເຊື່ອມຈອດກັບເມືອງວັງວຽງ ແລະ ເມືອງແມດ; ສໍາລັບອ່າງນໍ້າຕຶງ ການເດີນທາງເຂົ້າເຖິງໄດ້ງ່າຍ ແລະ

ປັດຈຸບັນມີການພັດທະນາເປັນສະຖານທີ່ທ່ອງທ່ຽວ, ຣີສອດ ແລະ ຮ້ານອາຫານເຮືອແພທີ່ມີການອອກແບບທາງດ້ານສະຖາປັດຕະຍະກໍາທີ່ກົມກືນກັບສະພາບແວດລ້ອມທີ່ສວຍງາມ.

• **ພູຜາຢູ່ເມືອງເຟືອງ** ສ່ວນຫຼາຍມີຄວາມສູງສະຫງ່າຕັ້ງໂດດເດັ່ນຢູ່ທ່າມກາງແວດລ້ອມຂອງທົ່ງນາ ແລະ ປ່າໄມ້ ມັນຄືອົງປະກອບສໍາຄັນທາງດ້ານພູມີທັດທີ່ສ້າງຄວາມປະທັບໃຈໃຫ້ແກ່ຜູ້ທີ່ພົບເຫັນ, ໃນລະດູໜາວທີ່ມີເມກໝອກສີຂາວປົກຫຸ້ມໄປທົ່ວອານາບໍລິເວນ ຫາກບ່ອນສູງເບິ່ງຈະເຫັນຍອດແຫຼມຂອງພູຜາເຫຼົ່ານັ້ນລ່ອງລອຍຢູ່ປານກັບວ່າເປັນເມືອງສະຫວັນຊັ້ນຟ້າ.

• **ຖໍ້າຜາຫຼວງ** (ຖໍ້າເຈຍ) ຫຼື ຖໍ້າສ້ອມນາງສຸມຸນທາ ເປັນຖໍ້າທີ່ມີຫີນຍ້ອຍ ແລະ ຫີນແກ້ວ (Crystal) ທີ່ສວຍງາມ, ພ້ອມນັ້ນຍັງເປັນບ່ອນຢູ່ຂອງເຈຍຈໍານວນຫຼາຍ (ຄາດວ່າອາດເປັນຖໍ້າແຫ່ງສຸດທ້າຍທີ່ມີເຈຍອາໄສຢູ່) ໃນເວລາຮຸ່ງເຊົ້າ ແລະ ຄ້າຍຄໍ່າ ຂະບວນເຈຍເຂົ້າອອກຖໍ້າເປັນສາຍຕໍ່ກັນຍາວຫຼາຍກິໂລແມັດ ໃນແຕ່ລະຄັ້ງໃຊ້ເວລາຫຼາຍສິບນາທີຈິ່ງສຸດ.

• **ນໍ້າຕົກຕາດ ແລະ ທໍາມະຊາດເຂດຜາຫອຍ** ເປັນເຂດທີ່ຍັງມີທໍາມະຊາດທີ່ອຸດົມສົມບູນ ແຕ່ການເດີນທາງເຂົ້າເຖິງໄດ້ຍາກ.

## 2.2 ທ່າແຮງທາງດ້ານວັດທະນະທໍາ

ສິ່ງທີ່ພົ້ນເດັ່ນທີ່ສຸດທາງດ້ານວັດທະນະທໍາຄື ການດໍາລົງຊີວິດຂອງປະຊາຊົນໃນວິຖີທາງທີ່ລຽບງ່າຍ ແລະ ຍຶດຖືປະຕິບັດຕາມຮີດ 12 ຄອງ 14 ຢ່າງເຄັ່ງຄັດ ມັນໄດ້ກາຍເປັນເບົ້າຫຼໍ່ຫຼອມ ແລະ ກໍ່ເກີດງານບຸນປະເພນີ, ວັດວາອາຮາມ, ສິລະປະວັນນະຄະດີທີ່ໜ້າສົນໃຈຫຼາຍຢ່າງ ເປັນຕົ້ນແມ່ນ:

• **ວັດ 4 ແຫ່ງ** ທີ່ມີຊື່ສຽງໂດ່ງດັງ ແລະ ດຶງດູດຜູ້ຄົນມາທ່ຽວຊົມໃນແຕ່ລະປີເປັນຈໍານວນຫວງຫຼາຍ ໄດ້ແກ່: ວັດສີສຸກໄຊຍະຣາມ ບ້ານສາມໝື່ນ, ວັດສີນໄຊຍະລາມ ບ້ານໂນນຫີນແຮ່, ວັດບຸນຍາຣິດສັດຕະທໍາມາຍາຣາມ ບ້ານນາ ເມືອງ ແລະ ວັດສີນໄຊໂພຍະຣາມ ບ້ານຜາສັງ.

• **ຕໍານານສາມໝື່ນຕູບເຟືອງ** ຄືເລື່ອງເລົ່າທີ່ສ້າງພາບຊົງຈໍາ ເຖິງຄວາມອຸດົມຮັ່ງມີທາງດ້ານຊັບພະຍາກອນທໍາມະຊາດຂອງເມືອງເຟືອງ ໂດຍສະເພາະໜໍ່ຄໍາທີ່ຕັ້ງຢູ່ໜ້າຜາທໍ່ ທີ່ທຸກຄົນທົ່ວສາລະທິດປາດຖະໜາຢາກຄອບຄອງ.

• **ວັນນະຄະດີສັງສິນໄຊ** ເປັນວັນນະຄະດີອໍາມະຕະຂອງລາວ ແຕ່ຖືກນໍາມາເລົ່າໃຫ້ພູກໂຍງເຂົ້າກັບສະພາບແວດລ້ອມ-ພູຜາຢູ່ໃນເມືອງເຟືອງກາຍເປັນການນໍາສະເໜີວັນນະຄະດີສັງສິນໄຊທີ່ໜ້າຕື່ນຕາຕື່ນໃຈ, ເຮັດໃຫ້ຜູ້ຄົນເກີດຄວາມຮູ້ສຶກສະເໝືອນວ່າມັນມີຢູ່ຈິງ ແລະ ສາມາດສໍາພັດສະຖານທີ່ເຫຼົ່ານັ້ນໄດ້ຈິງ.

• **ບຸນກອງເຂົ້າ** ເປັນໜຶ່ງໃນຮີດ 12 ຂອງຊາວລາວທີ່ຖືປະຕິບັດກັນມາດົນນານ ແຕ່ສໍາລັບບຸນກອງເຂົ້າຢູ່ເມືອງເຟືອງມີຄວາມພິເສດຄືການສ້າງປະສານກອງເຂົ້າ ແລະ ຕົກແຕ່ງປະດັບປະດາງານດ້ວຍຮວງເຂົ້າ ໂດຍເປັນການດຶງເອົາພາບຄວາມຊົງຈໍາໃນຕໍານານສາມໝື່ນຕູບເຟືອງມາປະຍຸກສ້າງໃໝ່.

## 2.3 ທ່າແຮງທາງດ້ານປະຫວັດສາດ

ສໍາລັບແຫຼ່ງທ່ອງທ່ຽວທາງປະຫວັດສາດ ຖືວ່າຍັງບໍ່ທັນໂດດເດັ່ນເທົ່າທີ່ຄວນ ແຕ່ວ່າກໍ່ມີຄວາມສໍາຄັນໃນຖານະເປັນອົງປະກອບເສີມຂອງການທ່ອງທ່ຽວ ເພື່ອເພີ່ມຄວາມຫຼາກຫຼາຍ ແລະ ສີສັນໃຫ້ແກ່ການທ່ອງທ່ຽວຂອງເມືອງເຟືອງ.

# 3. ຕະຫຼາດນັກທ່ອງທ່ຽວ ແລະ ວິເຄາະກະແສນັກທ່ອງທ່ຽວ

## 3.1 ຕະຫຼາດນັກທ່ອງທ່ຽວ

ຕາຕະລາງຂ້າງລຸ່ມນີ້, ສະແດງໃຫ້ເຫັນການສົມທຽບສະຖິຕິການທ່ອງທ່ຽວຂອງເມືອງເຟືອງທຽບໃສ່ບັນດາເມືອງຕ່າງໆໃນແຂວງ ແລະ ການສົມທຽບຈໍານວນນັກທ່ອງທ່ຽວຂອງບັນດາແຂວງທີ່ນອນຢູ່ພາກກາງ ເພື່ອເປັນການສົມທຽບທ່າແຮງ ແລະ ຄວາມນິຍົມຊົມຊອບຂອງນັກທ່ອງທ່ຽວທີ່ມາທ່ອງທ່ຽວແຕ່ລະບ່ອນ. ຊຶ່ງມີລາຍລະອຽດຕາມຕາຕະລາງ ລຸ່ມນີ້.

ເສັ້ນສະແດງທີ 1: ສະຖິຕິນັກທ່ອງທ່ຽວເຂົ້າມາທ່ອງທ່ຽວ ຢູ່ 6 ແຂວງພາກກາງ (ບໍລິຄໍາໄຊ, ຄໍາມ່ວນ, ສະຫວັນນະເຂດ, ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ໄຊສົມບູນ) ປີ 2015-2020




ແຫຼ່ງຂໍ້ມູນຈາກ: ບົດລາຍງານສະຖິຕິການທອງທ່ຽວຂອງ ສປປ ລາວ 2020

ເສັ້ນສະແດງຂ້າງເທິງນີ້ ແມ່ນຂໍ້ມູນສະຖິຕິກ່ຽວກັບຈໍານວນນັກທ່ອງທ່ຽວທີ່ເຂົ້າມາທ່ອງທ່ຽວ 6 ແຂວງພາກກາງ ປີ 2015-2020, ໃນນີ້, ແຂວງທີ່ມີນັກທ່ອງທ່ຽວເຂົ້າມາຫຼາຍກ່ວາໝູ່ແມ່ນນະຄອນຫຼວງວຽງຈັນ, ລອງລົງມາແຂວງສະຫວັນນະເຂດ, ລໍາດັບທີ 3 ແມ່ນແຂວງວຽງຈັນ, ຄໍາມ່ວນ, ບໍລິຄໍາໄຊ ແລະ ໄຊສົມບູນ. ເຫັນວ່າການທ່ອງທ່ຽວຢູ່ແຂວງວຽງຈັນມີທ່າອ່ຽງຂະຫຍາຍຕົວທີ່ດີ, ໃນຕໍ່ໜ້າຖ້າຫາກມີການປັບປຸງສິ່ງອໍານວຍຄວາມສະດວກ ເຊັ່ນ: ເສັ້ນທາງ ເຂົ້າຫາແຂວງ ແລະ ເມືອງ ກໍຈະສາມາດດຶງດູດໃຫ້ນັກທ່ອງທ່ຽວຢາກມາທ່ອງທ່ຽວໃຫ້ຫຼາຍຂຶ້ນ. ເຖິງຢ່າງໃດກໍຕາມ, ຍ້ອນໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດ ໂຄວິດ-19 ປີ 2020-2021 ເຮັດໃຫ້ຈໍານວນນັກທ່ອງທ່ຽວ ຫຼຸດລົງທຸກໆແຂວງຢູ່ພາກກາງກໍ ຄືຂອບເຂດທົ່ວປະເທດ.

ເສັ້ນສະແດງທີ 2: ສະຖິຕິນັກທ່ອງທ່ຽວສາກົນເຂົ້າມາທ່ອງທ່ຽວແຂວງວຽງຈັນ ປີ 2015-2020




ແຫຼ່ງຂໍ້ມູນຈາກ: ບົດລາຍງານສະຖິຕິການທອງທ່ຽວຂອງ ສປປ ລາວ 2020

ເສັ້ນສະແດງທີ 2 ສະແດງໃຫ້ເຫັນຈຳນວນນັກທ່ອງທ່ຽວສາກົນທີ່ເຂົ້າມາທ່ອງທ່ຽວແຂວງວຽງຈັນ ໃນໄລຍະປີ 2015-2020. ໃນນີ້, ປີ 2015-2017 ຈຳນວນນັກທ່ອງທ່ຽວເພີ່ມຂຶ້ນຢ່າງຕໍ່ເນື່ອງ, ແຕ່ຮອດປີ 2018 ແລະ 2020 ຈຳນວນນັກທ່ອງທ່ຽວຫຼຸດລົງ ເນື່ອງຈາກໄດ້ຮັບຜົນກະທົບຈາກການແຜ່ລະ ບາດຂອງພະຍາດ ໂຄວິດ-19.

ເສັ້ນສະແດງທີ 3: ສະຖິຕິນັກທ່ອງທ່ຽວເຂົ້າມາທ່ອງທ່ຽວບັນດາເມືອງ, ແຂວງວຽງຈັນ ປີ 2020




ແຫຼ່ງຂໍ້ມູນຈາກ: ບົດລາຍງານສະຖິຕິການທອງທ່ຽວຂອງແຂວງວຽງຈັນ

ເສັ້ນສະແດງທີ 3 ສະແດງໃຫ້ເຫັນຈຳນວນນັກທ່ອງທ່ຽວທີ່ມາທ່ອງທ່ຽວໃນແຕ່ລະຕົວເມືອງ (11 ເມືອງ) ຂອງແຂວງວຽງຈັນ, ເມືອງທີ່ມີນັກທ່ອງທ່ຽວຫຼາຍທີ່ສຸດແມ່ນເມືອງວັງວຽງ ມີຈຳນວນນັກທ່ອງທ່ຽວ 48.003 ເທື່ອຄົນ ປີ 2020, ລອງລົງມາແມ່ນເມືອງທຸລະຄົມມີຈຳນວນນັກທ່ອງທ່ຽວ 14.480 ເທື່ອຄົນ ແລະ ຕໍ່ມາກໍແມ່ນເມືອງເຟືອງ ມີຈຳນວນນັກທ່ອງທ່ຽວ 10.125 ເທື່ອຄົນ. ເມືອງເຟືອງຖືວ່າເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່

ເກີດຂຶ້ນໃໝ່ໄລຍະປີ 2016 ເປັນຕົ້ນມາ, ຊຶ່ງໄດ້ເລີ່ມເປັນທີ່ສົນໃຈຂອງນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ, ເຖິງແນວໃດກໍຕາມ, ສິ່ງອຳນວຍຄວາມສະດວກເຊັ່ນ: ຖະໜົນຫົນທາງການເຂົ້າເຖິງແຫຼ່ງທ່ອງທ່ຽວຍັງບໍ່ທັນສະດວກ, ທີ່ພັກອາໄສຍັງບໍ່ທັນໄດ້ມາດຕະຖານ ແລະ ພຽງພໍກັບນັກທ່ອງທ່ຽວ. ກິດຈະກຳປິ່ນອ້ອມຍັງບໍ່ທັງຫລາກຫຼາຍ ເພື່ອຕອບສະໜອງກັບນັກທ່ອງທ່ຽວແຕ່ລະກະແສ ແລະ ການບໍລິການການທ່ອງທ່ຽວຍັງບໍ່ທັນເຮັດໄດ້ດີ. ສະນັ້ນ, ເພື່ອເປັນການກຽມຄວາມພ້ອມ ແລະ ປັບປຸງໃນດ້ານຕ່າງ ທາງອຳນາດການປົກຄອງເມືອງເຟືອງຄວນເລັ່ງປັບປຸງ ແລະ ຟື້ນຟູການທ່ອງທ່ຽວເພື່ອຕອບສະ ໜອງກັບຄວາມຕ້ອງການຂອງນັກທ່ອງທ່ຽວແຕ່ລະກະແສທີ່ກຳລັງຈະເຂົ້າມາ.

ເສັ້ນສະແດງທີ 4: ສະຖິຕິລາຍຮັບຈາກນັກທ່ອງທ່ຽວເຂົ້າມາທ່ອງທ່ຽວບັນດາເມືອງ, ແຂວງວຽງຈັນ ປີ 2020




ແຫຼ່ງຂໍ້ມູນຈາກ: ບົດລາຍງານສະຖິຕິການທອງທ່ຽວຂອງແຂວງວຽງຈັນ

ເສັ້ນສະແດງທີ 4 ແມ່ນສະແດງໃຫ້ເຫັນລາຍຮັບຈາກການທ່ອງທ່ຽວຂອງບັນດາເມືອງ ຂອງແຂວງວຽງຈັນ ປີ 2020, ເຫັນວ່າລາຍຮັບຫລັກຈາກການທ່ອງທ່ຽວແມ່ນມາຈາກເມືອງວັງວຽງ ຊຶ່ງເປັນແຫຼ່ງທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວມາໄດ້ຫຼາຍປີແລ້ວ. ຮອງລົງມາແມ່ນລາຍຮັບຈາກເມືອງທຸລະຄົມ, ເປັນເມືອງໜຶ່ງທີ່ນັກທ່ອງທ່ຽວໄປທ່ຽວ, ເຮັດກິດຈະກຳຢູ່ອ່າງນໍ້າງື່ມ ແລະ ຄາຊີໂນ ແລະ ຕາມດ້ວຍເມືອງເຟືອງ ແລະ ເມືອງໝື່ນເປັນແຫຼ່ງທ່ອງທ່ຽວໃຫມ່ທີ່ກຳລັງໄດ້ຮັບຄວາມສົນໃຈຈາກນັກທ່ອງທ່ຽວໂດຍສະເພາະທຳມະຊາດ, ທ່ອງທ່ຽວທາງນໍ້າ ແລະ ຖໍ້າ.

ເສັ້ນສະແດງທີ 5: ສະຖິຕິນັກທ່ອງທ່ຽວສາກົນ ແລະ ພາຍໃນເຂົ້າມາທ່ອງທ່ຽວເມືອງເຟືອງ, ແຂວງວຽງຈັນ ປີ 2020-2022 (ປີ 2022, 3 ເດືອນ)




ແຫຼ່ງຂໍ້ມູນຈາກ: ບົດລາຍງານສະຖິຕິການທອງທ່ຽວຂອງແຂວງວຽງຈັນ

ເສັ້ນສະແດງທີ 5 ສະແດງໃຫ້ເຫັນໃນປີ 2020, 2021 ແລະ 2022 (3 ເດືອນ) ແມ່ນຈຳນວນນັກທ່ອງທ່ຽວສາກົນ ແລະ ພາຍໃນທີ່ເຂົ້າມາທ່ອງທ່ຽວຢູ່ເມືອງເຟືອງ,ໃນນີ້, ຈຳນວນນັກທ່ອງທ່ຽວກຸ່ມໃຫຍ່ທີ່ມາທ່ອງທ່ຽວແມ່ນນັກທ່ອງທ່ຽວພາຍໃນ ຊຶ່ງກວມເອົາ 98% ຂອງຈຳນວນນັກທ່ອງທ່ຽວທັງໝົດທີ່ມາທ່ອງທ່ຽວເມືອງເຟືອງ. ສະນັ້ນ, ໃນສະພາບປັດຈຸບັນ ຈຶ່ງເວົ້າໄດ້ວ່ານັກທ່ອງທ່ຽວພາຍໃນເປັນກຸ່ມນັກທ່ອງທ່ຽວທີ່ມີທ່າແຮງຂອງເມືອງ. ການພັດທະນາການທ່ອງທ່ຽວຄວນແນ່ໃສ່ການພັດທະນາສິ່ງອຳນວຍຄວາມສະດວກ ແລະ ປັບປຸງປັບປຸງການບໍລິການໃຫ້ຖືກກັບຄຸນລັກສະນະຂອງ ກະແສ ແລະ ກຸ່ມນັກທ່ອງທ່ຽວ ຊຶ່ງໃນຂໍ້ຕໍ່ໄປອາດຈະໄດ້ມີການໄຈ້ແຍກຄຸນລັກສະນະຂອງແຕ່ລະກຸ່ມ.

### 3.2 ວິເຄາະກະແສນັກທ່ອງທ່ຽວ

ໃນເດືອນທັນວາ ປີ 2021 ຜ່ານມານີ້, ພະແນກສະຖິຕິ ແລະ ວິໄຈການທ່ອງທ່ຽວ, ກົມພັດທະນາການທ່ອງທ່ຽວໄດ້ລົງສຳຫລວດເກັບກຳຂໍ້ມູນຄຸນລັກສະນະ ແລະ ຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວພາຍໃນທີ່ມາທ່ອງທ່ຽວຈຸດໝາຍປາຍທາງການທ່ອງທ່ຽວທີ່ເມືອງເຟືອງ. ການລົງສຳຫລວດເກັບກຳຂໍ້ມູນຜ່ານແບບສອບຖາມ(multi-choices) ເປັນລາຍບຸກຄົນໃນຈຳນວນກຸ່ມຕົວຢ່າງທັງໝົດແມ່ນ 150 ທ່ານ/ແບບຟອມ. ຫລັງຈາກນັ້ນ, ໄດ້ນຳເອົາຂໍ້ມູນທັງໝົດມາເຂົ້າໂປຣແກຣມ SPSS ເພື່ອນຳມາວິເຄາະເປັນຕົວເລກສະຖິຕິ ຊຶ່ງລວມມີທັງໝົດ 17 ຄຳຖາມດັ່ງນີ້: ສະຖານທີ່ສຳພາດ, ທີ່ພັກອາໄສ, ເພດ, ອາຍຸ, ອາຊີບ, ລາຍຮັບຕໍ່ເດືອນ, ຜູ້ເດີນທາງຮ່ວມມານຳ, ຈຸດປະສົງການເດີນທາງເຂົ້າເມືອງ, ເດີນທາງທ່ອງທ່ຽວຄັ້ງນີ້ໂດຍ, ຈຳນວນຄັ້ງທີ່ເຂົ້າມາທ່ອງທ່ຽວໃນເມືອງນີ້, ແຫຼ່ງຂໍ້ມູນພື້ນຖານໃນການຕັດສິນໃຈມາທ່ອງທ່ຽວ, ສະຖານທີ່ພັກແຮມ, ປະເພດກິດຈະກຳທີ່ໃຊ້ບໍລິການ, ໄລຍະເວລາໃນການພັກເຊົາ, ຄ່າໃຊ້ຈ່າຍໃນການມາທ່ອງທ່ຽວຄັ້ງນີ້, ລະດັບຄວາມເພິ່ງພໍໃຈເມື່ອທຽບກັບຕັ້ງໃຈ, ໃນປີນີ້ທ່ານໄດ້ໄປທ່ອງທ່ຽວແຂວງໃດແດ່. ໃນແຜນພັດທະນາການທ່ອງທ່ຽວເມືອງເຟືອງສະບັບ, ໄດ້ຍົກໃຫ້ເຫັນບາງຈຸດ ແລະ ຄຳ

ຄິດເຫັນຂອງນັກທ່ອງທ່ຽວພາຍໃນ (ອີງໃສ່ຜົນການສຳຫລວດຈຳນວນ 150 ທ່ານ, ຄິດໄລ່ເປັນເປີເຊັນ) ເປັນຕາຕະລາງດັ່ງລຸ່ມນີ້:

ຕາຕະລາງທີ 4: ສຳຫລວດຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວພາຍໃນ

| ລັກສະນະ | | ຈຳນວນ | ເປີເຊັນ |
|---|---|---|---|
| ເພດ | ຍິງ | 94 | 62.7 |
| | ຊາຍ | 56 | 37.3 |
| ອາຍຸ | ຕ່ຳກວ່າ 19 | 23 | 15.3 |
| | 20-29 | 29 | 19.3 |
| | 30-39 | 62 | 41.3 |
| | 40-49 | 36 | 24.0 |
| | 50-60 | 0 | 0 |
| | ຫຼາຍກວ່າ 60 | 0 | 0 |
| ຈຸດປະສົງຂອງການເດີນທາງ | ທ່ອງທ່ຽວ ແລະ ພັກຜ່ອນ | 150 | 100 |
| | ຢ້ຽມຢາມຄອບຄົວ | 0 | 0 |
| | ທຸລະກິດ | 0 | 0 |
| | ກອງປະຊຸມ, ສຳມະນາ | 0 | 0 |
| | ການສຶກສາ, ທັດສະນະ | 0 | 0 |
| | ທາງຜ່ານ | 0 | 0 |
| | ງານບຸນປະເພນີ | 0 | 0 |
| | ອື່ນໆ | 0 | 0 |
| ການເດີນທາງ | ເຮືອບິນ | 0 | 0 |
| | ໂດຍສານສາທາລະນະ | 0 | 0 |
| | ລົດສ່ວນຕົວ | 150 | 100 |
| | ຜ່ານບໍລິສັດທ່ອງທ່ຽວ | 0 | 0 |
| | ເຮືອ | 0 | 0 |
| | ລົດໄຟ | 0 | 0 |
| | ອື່ນໆ | 0 | 0 |

ໃນຕາຕະລາງທີ 2 ນີ້, ສະແດງໃຫ້ເປັນຈຳນວນເປີເຊັນນັກທ່ອງທ່ຽວພາຍໃນທີ່ມາທ່ອງທ່ຽວຢູ່ເມືອງເຟືອງ ໃນຈຳນວນ 150 ທ່ານ, ໃນນີ້, ເປັນເພດຊາຍ 62,7% ແລະ ເພດຍິງ 37,3%, ຊ່ວງໄວອາຍູ 30-39ປີ ແມ່ນກວມເອົາ 41,3% ເປັນຈຳນວນເປີເຊັນສູງກ່າວໝູ່, ຊ່ວງໄວອາຍູ 40-49ປີ ແມ່ນກວມເອົາ 24%, ຊ່ວງໄວອາຍູ 20-29ປີ, ແມ່ນກວມເອົາ 19,3% ແລະ ຊ່ວງໄວອາຍູຕ່ຳກວ່າ 19 ປີ ແມ່ນກວມເອົາ 15,3%. ຈຸດປະສົງຂອງນັກທ່ອງທ່ຽວສ່ວນໃຫຍ່ແມ່ນເພື່ອພັກຜ່ອນ ກວມ 100% ແລະ ການເດີນທາງເຂົ້າມາແມ່ນສ່ວນຫຼາຍໃຊ້ລົດສ່ວນຕົວ.

ຕາຕະລາງທີ 5: ສຳຫລວດຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວພາຍໃນ

| ລັກສະນະ | | ຈຳນວນ | ເປີເຊັນ |
|---|---|---|---|
| ແຫຼ່ງຂໍ້ມູນໃນການຕັດສິນໃຈເດີນທາງ | ເວບໄຊສ໌ | 12 | 8.0 |
| | ເຟດສ໌ບຸກ | 109 | 72.7 |
| | ວາລະສານ | 0 | 0 |
| | ໂທລະພາບ,ວິທະຍຸ | 1 | 0.7 |
| | ໝູ່ເພື່ອນ | 83 | 55.3 |
| | ບໍລິສັດທ່ອງທ່ຽວ | 0 | 0 |
| | ອື່ນໆ | 3 | 2.0 |
| ສະຖານທີ່ພັກ | ໂຮງແຮມ | 0 | 0 |
| | ເຮືອນພັກ | 38 | 25.3 |
| | ໂຮມສະເຕ (ເຮືອນໃກ້ ແຄມນ້ຳລຶກ) | 30 | 20 |
| | ເຮືອນພີ່ນ້ອງ | 0 | 0 |
| | ອື່ນໆ (ເຮືອນແພແຄມນ້ຳ) | 82 | 54.7 |
| ສິ່ງທີ່ທ່ານມັກໃນການທ່ອງທ່ຽວ | ທຳມະຊາດ | 150 | 100 |
| | ປະຫວັດສາດ | 0 | 0 |
| | ວັດທະນະທຳ | 64 | 42.7 |
| | ບຸນປະເພນີ | 0 | 0 |
| | ອື່ນໆ | 0 | 0 |
| ໄລຍະການພັກເຊົາ | 1 ວັນ | 99 | 66.0 |
| | 2 ວັນ | 51 | 34.0 |
| | 300.000 | 32 | 21.3 |

| | | | |
|---|---|---|---|
| ຄ່າໃຊ້ຈ່າຍ | 450.000 | 1 | 0.7 |
| | 500.000 | 54 | 36.0 |
| | 550.000 | 12 | 8.0 |
| | 600.000 | 11 | 7.3 |
| | 750.000 | 1 | 0.7 |
| | 800.000 | 1 | 0.7 |
| | 1.000.000 | 25 | 16.7 |
| | 2.500.000 | 12 | 8.0 |
| | 3.000.000 | 1 | 0.7 |

ໃນຕາຕະລາງທີ 3 ນີ້, ສະແດງໃຫ້ເຫັນຂໍ້ມູນກ່ຽວກັບແຫຼ່ງຂໍ້ມູນທີ່ເຂົ້າເຖິງນັກທ່ອງທ່ຽວ ແລະ ເຮັດໃຫ້ນັກທ່ອງທ່ຽວຕັດສິນໃຈມາທ່ອງທ່ຽວເມືອງເຟືອງ, ອັນດັບ 1 ແມ່ນແຫຼ່ງຂໍ້ມູນຈາກ Facebook 72,7%, ໝູ່ຄູ່ບອກປາກຕໍ່ປາກກວມເອົາ 55,3%, ຈາກໂທລະພາບ ແລະ ວິທະຍຸກວມເອົາ 8% ແລະ ຈາກເວບໄຊສ໌ ມີພຽງ 0.7%. ຈາກຂໍ້ມູນດັ່ງກ່າວນີ້ເຫັນໄດ້ວ່າສື່ອອນລາຍແມ່ນມີອິດທະພົນຢູ່ໃນການໂຄສະນາປະຊາສຳພັນເຖິງກຸ່ມນັກທ່ອງທ່ຽວ. ນອກນີ້, ນັກທ່ອງທ່ຽວສ່ວນໃຫຍ່ແມ່ນມັກພັກຢູ່ເຮືອນແພແຄມນໍ້າ, ບັງກະໂລ ກວມເອົາ 54,7% ແລະ ພັກຢູ່ເຮືອນ (homestay) ຢູ່ເປັນຫລັງດຽວ ແລະ ແຕ່ງກິນເອງ ແມ່ນກວມເອົາ 20%. ມັກທ່ອງທ່ຽວທາງທຳມະຊາດ 100% ແລະ ທ່ອງທ່ຽວທາງວັດທະນະທຳ 42%, ໄລຍະການພັກເຊົາ 1 ວັນແມ່ນ 66% ແລະ 2 ວັນແມ່ນ 34%, ສະເລ່ຍລາຍ ຈ່າຍຕໍ່ວັນ ປະມານ 500.000ກີບ ກວມເອົາ 36%, 300.000 ກີບ ກວມເອົາ 21,3%, 1.000.000 ກີບ ກວມເອົາ 16.7% ແລະ 2.500.000 ກີບ ກວມເອົາ 8%.

ເສັ້ນສະແດງທີ 6: ລະດັບຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວ ທີ່ມາທ່ອງທ່ຽວເມືອງເຟືອງ



ອີງໃສ່ການສຳຫລວດຄວາມເພິ່ງພໍໃຈຂອງກຸ່ມນັກທ່ອງທ່ຽວ ຕົວຢ່າງ 150 ທ່ານ ເຫັນວ່າ, ຫຼາຍກວ່າ 50% ແມ່ນມີຄວາມເພິ່ງພໍໃຈໃນລະດັບດີ, ສ່ວນ 24% ແມ່ນ ມີຄວາມພໍໃຈຫຼາຍ, ແລະ ພຽງ 20,7% ແມ່ນ ຮູ້ສຶກທຳມະດາກັບການມາທ່ອງທ່ຽວຢູ່ເມືອງເຟືອງ.

ກຸ່ມນັກທ່ອງທ່ຽວທີ່ເຂົ້າມາທ່ອງທ່ຽວເມືອງເຟືອງແມ່ນມີ 2 ກຸ່ມໃຫຍ່ຄື: ນັກທ່ອງທ່ຽວພາຍໃນ (ກຸ່ມນັກທ່ອງທ່ຽວໄວກາງຄົນ, ກຸ່ມນັກທ່ອງທ່ຽວແບບຄອບຄົວ ແລະ ນັກທ່ອງທ່ຽວສາກົນທີ່ອາໃສຢູ່ລາວ), ແລະ ນັກທ່ອງທ່ຽວໄທ. ຊຶ່ງລຸ່ມນີ້ແມ່ນການວິເຄາະກະແສນັກທ່ອງທ່ຽວແຕ່ລະກຸ່ມ ເຖິງຄຸນລັກສະນະ ແລະ ຂໍ້ຈຳກັດຂອງການຕອບສະໜອງຄວາມຕ້ອງການການບໍລິການແຕ່ລະກຸ່ມ ມີລາຍລະອຽດດັ່ງນີ້:

ຕາຕະລາງທີ 6: ຕາຕະລາງກະແສນັກທ່ອງທ່ຽວທີ່ເຂົ້າມາທ່ອງທ່ຽວໃນໄລຍະປັດຈຸບັນ

| ກະແສນັກທ່ອງທ່ຽວ | ຄຸນລັກສະນະນັກທ່ອງທ່ຽວ (ສັນຊາດ, ອາຍຸ, ລາຍຮັບ, ເດີນທາງມາຈາກໃສ, ອື່ນໆ) | ສິ່ງດຶງດູດໃຈ | ມາທ່ຽວໄລຍະໃດ | ຄາດຄະເນ ການໃຊ້ຈ່າຍ/ ຄືນ(k) | ນັກທ່ອງທ່ຽວ ຮູ້ຂໍ້ມູນຈາກ ໃສ? | ຂໍ້ຫຍຸ້ງຍາກສຳລັບນັກທ່ອງທ່ຽວ ກຸ່ມນີ້ມີຫຍັງແດ່ |
|---|---|---|---|---|---|---|
| **ນັກທ່ອງທ່ຽວພາຍໃນ** | | | | | | |
| ກຸ່ມນັກທ່ອງທ່ຽວໄວກາງຄືນ | – ອາຍຸ 19-39 ປີ<br>– ນັກທ່ອງທ່ຽວເປັນກຸ່ມຂັບລົດມາເອງ ຈອງທີ່ພັກ ແລະ ຈັດລາຍການທ່ອງທ່ຽວເອງ<br>– ເດີນທາງຈາກນະຄອນຫຼວງວຽງຈັນ<br>– ພັກຢູ່ເຮືອແພ ຫລື ເຮືອນໂຮມສະເຕແບບແຕ່ງກິນເອງລອງນ້ຳລີກ<br>– ໄລຍະພັກເຊົາ 1-2 ວັນ | – ທຳມະຊາດສາຍນ້ຳລີກ, ກິດຈະກຳທາງນ້ຳ<br>– ວັດສີນໄຊຍະຣາມ, ບ້ານໂນນຫີນແຮ່, (ຢັ້ງມຢາມ)<br>– ວັດສີນໄຊໂພໄຊຍະຣາມ, ບ້ານຜາສັງ,<br>– ວັດບຸນຍະຣິດສັດຕະທຳມາຍາຣາມ, ບ້ານນາເມືອງ.<br>– ວັດສີສຸກໄຊຍະຣາມ, ບ້ານສາມໝື່ນ<br>– ໃສ່ບາດຢູ່ເຮືອແພ ແຄມນ້ຳລີກ<br>– ປີນຜາ, ທ່ອງທ່ຽວຖ້ຳ | ເດືອນ 10 – 5 (high season)<br>ເດືອນ 6 – 9 (low season) | 300,000-500,000 | Facebook<br>Tik tok<br>Youtube<br>ບອກປາກຕໍ່ປາກ<br>ສື່ວິທະຍຸ, ໂທລະພາບ | ການບໍລິການກິດຈະກຳການທ່ອງທ່ຽວຍັງບໍ່ຫລາກຫຼາຍ ເພື່ອຕອບທສະໜອງກັບຄວາມຕ້ອງການຂອງນັກທ່ອງທ່ຽວກຸ່ມນີ້ ເຊັ່ນ: ຄວາມສະອາດ ແລະ ຄວາມປອດໄພຢູ່ເຮືອນແພ ແລະ ຄວາມປອດໄພທາງດ້ານກິດຈະກຳທາງນ້ຳ ແລະ ການບໍລິການຍັງບໍ່ໄດ້ມາດຕະຖານ |
| ກຸ່ມນັກທ່ອງທ່ຽວແບບຄອບຄົວ ແລະ ຜູ້ສູງອາຍຸ, ສະແຫວງບຸນ | – ອາຍຸ 40-55 ປີ<br>– ນັກທ່ອງທ່ຽວເປັນກຸ່ມຂັບລົດມາເອງ ຈອງທີ່ພັກ ແລະ ຈັດລາຍການທ່ອງທ່ຽວເອງ | – ວັດສີນໄຊຍະຣາມ, ບ້ານໂນນຫີນແຮ່, (ຢັ້ງມຢາມ)<br>– ວັດສີນໄຊໂພໄຊຍະຣາມ, ບ້ານຜາສັງ,<br>– ວັດບຸນຍະຣິດສັດຕະທຳມາຍາຣາມ, | ເດືອນ 10 – 5 (high season)<br>ເດືອນ 6 – 9 (low season) | 500,000-1,000,000 | Facebook<br>Tik tok<br>youtube<br>ບອກປາກ | ສິ່ງອຳນວຍຄວາສະດວກຕອບສະໜອງນັກທ່ອງທ່ຽວແບບຄອບຄົວຍັງບໍ່ທັນໄດ້ດີ ເຊັ່ນ: ຄວາມສະອາດ ແລະ ຄວາມ |

| | | | | | | |
|---|---|---|---|---|---|---|
| | – ເດີນທາງຈາກນະຄອນຫຼວງວຽງຈັນ<br>– ພັກຢູ່ໂຮງແຮມ ແລະ ເຮືອນພັກໃນຕົວເມືອງ<br>– ໄລຍະພັກເຊົາ 1-2 ວັນ | ບ້ານນາເມືອງ.<br>– ວັດສີສຸກໄຊຍະຣາມ, ບ້ານສາມໝື່ນ<br>– ທ່ຽວຊົມທຳມະຊາດຕາມລອງນ້ຳລີກ, ຜາຕັ່ງ, ຜາ | | | ຕໍ່ປາກ<br>ສື່ວິທະຍຸ,<br>ໂທລະພາບ | ປອດໄພຢູ່ເຮືອນແພ ແລະ ຄວາມປອດໄພທາງດ້ານກິດຈະກຳທາງນ້ຳ ແລະ ການບໍລິການຍັງບໍ່ໄດ້ມາດຕະຖານ |
| ກຸ່ມນັກທ່ອງທ່ຽວຕ່າງປະເທດທີ່ເປັນຊາວຊານ, ອົງການຈັດຕັ້ງສາກົນ, ບັນດາສະຖານທູດທີ່ອາໄສຢູ່ລາວ | – ອາຍຸ 30-55 ປີ<br>– ນັກທ່ອງທ່ຽວເປັນກຸ່ມຂັບລົດມາເອງ ຈອງທີ່ພັກ ແລະ ຈັດລາຍການທ່ອງທ່ຽວເອງ<br>– ເດີນທາງຈາກນະຄອນຫຼວງວຽງຈັນ<br>– ພັກຢູ່ໂຮງແຮມ ແລະ ເຮືອນພັກ ໃນຕົວເມືອງ<br>– ໄລຍະພັກເຊົາ 1-2 ວັນ | – ທຳມະຊາດສາຍນ້ຳລີກ, ກິດຈະກຳທາງນ້ຳ<br>– ປີນຜາ, ທ່ອງທ່ຽວຖ້ຳ<br>– ຍ່າງປ່າ<br>– ຂີ່ລົດຖີບ, ລົດຈັກ | ເດືອນ 10 – 5 (high season)<br>ເດືອນ 6 – 9 (low season) | 500,000-1,000,000 | Facebook<br>Tik tok<br>youtube<br>ບອກປາກຕໍ່ປາກ<br>ສື່ວິທະຍຸ,<br>ໂທລະພາບ | ກິດຈະກຳພະຈົນໄພຍັງບໍ່ທັນຫລາກຫຼາຍ ເພື່ອຮອງຮັບ ແລະ ດຶງໃຫ້ກຸ່ມນັກທ່ອງທ່ຽວໃຊ້ເວລາຢູ່ເມືອງເຟືອງຍາວຂຶ້ນສິ່ງອຳນວຍຄວາມສະດວກຍັງບໍ່ທັນໄດ້ມາດຕະຖານ ເຊັ່ນ: ຄວາມສະອາດ ແລະ ຄວາມປອດໄພຢູ່ເຮືອນແພ, ແລະ ຄວາມປອດໄພທາງດ້ານກິດຈະກຳທາງນ້ຳ ແລະ ການບໍລິການຍັງບໍ່ໄດ້ມາດຕະຖານ |
| ນັກທ່ອງທ່ຽວໄທ | ນັກທ່ອງທ່ຽວໄວກາງຄົນ, ອາຍຸ 25-49 ປີ, ນັກທ່ອງທ່ຽວເປັນກຸ່ມຂັບລົດມາເອງ, ມາກັບບໍລິສັດທ່ອງທ່ຽວ bikers, off road<br>- ສົນໃຈມາທ່ຽວກ່ຽວກັບສາສະໜາ | – ວັດສົບໄຊຍະຣາມ, ບ້ານໂນນຫີນແຮ່,<br>– ວັດສົບໄຊໂພໄຊຍະຣາມ, ບ້ານຜາສັງ,<br>– ທຳມະຊາດສາຍນ້ຳລີກ, ກິດຈະກຳທາງນ້ຳ | ເດືອນ 10 – 5 (high season)<br>ເດືອນ 6 – 9 (low season) | 500,000-2,500,000 | Facebook<br>Tik tok<br>youtube<br>ບອກປາກຕໍ່ປາກ | ກິດຈະກຳພະຈົນໄພຍັງບໍ່ທັນຫລາກຫຼາຍ ເພື່ອຮອງຮັບ ແລະ ດຶງໃຫ້ກຸ່ມນັກທ່ອງທ່ຽວໃຊ້ເວລາຢູ່ເມືອງເຟືອງຍາວຂຶ້ນ……<br>ສິ່ງອຳນວຍຄວາມສະດວກຍັງບໍ່ |

| | | | | | | |
|---|---|---|---|---|---|---|
| | - ມາປະຕິບັດທຳ<br>- ເຮັດບຸນ<br>- ສັກກາລະບູຊາ<br>- ໃນຕໍ່ໜ້າຖ້າເປີດດ່ານສາກົນບ້ານວັງ - ປາກຊິມຈະເປັນໂອກາດດຶງດູດນັກທ່ອງທ່ຽວໄທມາທ່ຽວຫຼາຍ (ຂອກຂໍ້ມູນເພີ່ມກ່ຽວກັບໄລຍະພັກເຊົາ, ໄລຍະເດີນທາງ) ສື່ໂຄສະນາທີ່ເຂົ້າເຖິງກຸ່ມນັກທ່ອງທ່ຽວເຫຼົ່ານີ້ແມ່ນມາຈາກຊ່ອງທາງໃດ | | | | | ທັນໄດ້ມາດຕະຖານ ເຊັ່ນ: ຄວາມສະອາດ ແລະ ຄວາມປອດໄພຢູ່ເຮືອນແພ, ແລະ ຄວາມປອດໄພທາງດ້ານກິດຈະກຳທາງນ້ຳ ແລະ ການບໍລິການຍັງບໍ່ໄດ້ມາດຕະຖານ |

## 4. ການວິເຄາະສະພາບແວດລ້ອມທາງດ້ານພື້ນຖານໂຄງລ່າງ

### 4.1 ເສັ້ນທາງ ແລະ ການຄົມມະນາຄົມ

ເມືອງເຟືອງເປັນເມືອງໜຶ່ງທີ່ມີເສັ້ນທາງການເຂົ້າເຖິງຫຼາຍເສັ້ນທາງ ຊຶ່ງໃນນີ້ມີເສັ້ນທາງຈາກນະຄອນຫຼວງວຽງຈັນ, ຈາກບັນແຂວງ ແລະ ບັນດາເມືອງ ຫາ ເມືອງ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

- **ເສັ້ນທາງທີ່ 1:** ເປັນເສັ້ນທາງລົດຈາກນະຄອນຫຼວງວຽງຈັນ ມາຕາມເສັ້ນທາງດ່ວນວຽງຈັນ-ວັງວຽງ ລົງສະຖານີເມືອງຫີນເຫີບ ໃນຍະທາງ 65 ກິໂລແມັດ. ໃຊ້ເວລາໃນການເດີນທາງ 45 ນາທີ.
- **ເສັ້ນທາງທີ່ 2:** ເດີນທາງດ້ວຍລົດ ເລີ່ມຈາກນະຄອນຫຼວງວຽງຈັນມາຕາມແລວທາງຫຼວງແຫ່ງຊາດ 13 ເໜືອ ຈົນຮອດທາງແຍກເມືອງຫີນເຫີບ ໃນຍະທາງ 95 ກິໂລແມັດ ແລະ ລ້ຽວຊ້າຍມາເສັ້ນທາງນໍ້າເບີ 4501 ແຕ່ເມືອງຫີນເຫີບຫາເມືອງເຟືອງ ປັດຈຸບັນແມ່ນກຳລັງກໍ່ສ້າງທາງປູຢາງ 2 ຊັ້ນຄາດໝາຍໃຫ້ສຳເລັດໃນປີ 2025, ໄລຍະທາງ 28 ກິໂລແມັດ.
- **ເສັ້ນທາງທີ່ 3:** ເດີນທາງຈາກນະຄອນຫຼວງວຽງຈັນຕາມເສັ້ນທາງລຽບແມ່ນ້ຳຂອງ (ທາງເລກທີ 11) ຜ່ານເມືອງສັງທອງ ຮອດບ້ານວັງ ລວມໄລຍະທາງ 100 ກິໂລແມັດ, ຈາກນັ້ນລ້ຽວຂວາເຂົ້າສູ່ເສັ້ນທາງເລກທີ 4501 ຜ່ານເທດສະບານເມືອງໝື່ນ, ເຂດຈຸດສຸມຜາສັງມຸ່ງໜ້າສູ່ເທດສະບານເມືອງເຟືອງ ລວມໄລຍະທາງ 86 ກິໂລແມັດ.
- **ເສັ້ນທາງທີ່ 4:** ເປັນເສັ້ນທາງລົດ (ເສັ້ນທາງນໍ້າເບີ 4503) ແຕ່ບ້ານເລົ່າຄຳ ຫາ ບ້ານນາດີ ເມືອງແມດ ປັດຈຸບັນ ແມ່ນກຳລັງສຳຫຼວດ-ອອກແບບເປັນທາງປູຢາງ 2 ຊັ້ນ, ໄລຍະທາງ 36 ກິໂລແມັດ, ໃຊ້ເວລາໃນການເດີນທາງປະມານ 1 ຊົ່ວໂມງ.
- **ເສັ້ນທາງທີ່ 5:** ເປັນເສັ້ນທາງລົດ (ເສັ້ນທາງນໍ້າເບີ 4512) ແຕ່ບ້ານຜາສັງ ຫາ ບ້ານເມືອງຄີ່ ເມືອງແມດ ປັດຈຸ ບັນເປັນທາງດິນແດງ ສາມາດເດີນທາງໄດ້ 2 ລະດູ, ໄລຍະທາງ 32 ກິໂລແມັດ,ໃຊ້ເວລາໃນການເດີນທາງປະມານ 1 ຊົ່ວໂມງ.
- **ເສັ້ນທາງທີ່ 6:** ເປັນເສັ້ນທາງລົດ (ເສັ້ນທາງນໍ້າເບີ 4707) ເລີ່ມແຕ່ບ້ານໃໝ່ ຫາ ບ້ານນາເລືອງ ເມືອງຫີນເຫີບ ເປັນເສັ້ນທາງດິນແດງ ສາມາດເດີນທາງໄດ້ 2 ລະດູ, ໃຊ້ເວລາໃນການເດີນທາງ 1 ຊົ່ວໂມງ.
- **ເສັ້ນທາງທີ່ 7:** ເປັນເສັ້ນທາງລົດ (ເສັ້ນທາງນໍ້າເບີ 4690) ແຕ່ບ້ານໜອງເປັດ ຫາ ບ້ານນໍ້າແປ ເມືອງວັງວຽງ ເປັນ ທາງດິນແດງ ສາມາດເດີນທາງໄດ້ລະດູດຽວ. ປັດຈຸບັນແມ່ນກຳລັງຂຶ້ນແຜນໃນການກໍ່ສ້າງ, ໄລຍະທາງ 46 ກິໂລແມັດ, ໃນ ເວລາໃນການເດີນທາງ 1-2 ຊົ່ວໂມງ.
- **ເສັ້ນທາງທີ່ 8:** ເປັນເສັ້ນທາງລົດ ຊຶ່ງເລີ່ມຈາກທາງແຍກ (ເສັ້ນທາງນໍ້າເບີ 4535) ແຕ່ບ້ານນາເມືອງ ຫາ ບ້ານນາ ພົງ ເມືອງຫີນເຫີບ ເປັນເສັ້ນທາງດິນແດງ ສາມາດເດີນທາງໄດ້ລະດູດຽວ, ໄລຍະທາງ 28 ກິໂລແມັດ, ໃນເວລາໃນການເດີນທາງ 1 ຊົ່ວໂມງ.

ນອກຈາກນີ້, ຍັງມີເສັ້ນທາງພາຍໃນເທດສະບານເມືອງ ມີທັງໝົດ 46 ເສັ້ນ, ມີຄວາມຍາວທັງໝົດ 22,293 ແມັດ, ປູຢາງແລ້ວ 13 ເສັ້ນ, ຍາວ 4,484 ແມັດ, ໃນໄລຍະຜ່ານມາເມືອງເຟືອງໄດ້ມີສະມາຄົມຂົນສົ່ງສິນຄ້າ ແລະ ໂດຍ ສານ 01 ສະມາຄົມ, ມີຄິວລົດ 02 ແຫ່ງຄືຢູ່ບ້ານໂພນສະຫວາດ ແລະ ເທດສະບານ

ເມືອງ, ສ່ວນຢູ່ໜ້າເຂື່ອນນ້ຳລີກບ້ານນາແຊງທີ່ມີບໍລິການຝາກລົດຕະຫຼອດ 24 ຊົ່ວໂມງ, ມີບໍລິການເຮືອບັກຂ້າມນ້ຳລີກລະຫວ່າງບ້ານເມືອງເຟືອງຫາບ້ານແກ້ງຊຽງ, ຢູ່ເມືອງເຟືອງມີເສັ້ນທາງຂົນສົ່ງໂດຍສານທາງບົກ 04 ສາຍ ຄື: ສາຍທາງເມືອງເຟືອງ-ນະຄອນຫຼວງວຽງຈັນ, ເມືອງເຟືອງ-ເມືອງໝື່ນ, ໂພນສະຫວາດ-ວັງວຽງ ແລະ ໂພນສະຫວາດ-ນະຄອນຫຼວງວຽງຈັນ, ລວມມີລົດໂດຍສານ ຈຳນວນ 35 ຄັນ.

**4.2 ໄຟຟ້າ ແລະ ນ້ຳປະປາ**

ເມືອງເຟືອງ ມີທັງໝົດ 43 ບ້ານ, ມີຕາຂ່າຍໄຟຟ້າແຮງກາງ 22 KV ແລະ ແຮງຕ່ຳ 0,4 KV, ຄົບທັງໝົດ 43 ບ້ານ ເທົ່າກັບ 100% ຄອບຄົວ. ປະຊາຊົນນຳໃຊ້ໄຟຟ້າຖືກຕ້ອງຕາມເຕັກນິກແລ້ວ 96%. ພາຍໃນເມືອງມີ ເຂື່ອນໄຟຟ້ານ້ຳລີກ 1 ແຫ່ງ, ສະຖານີ 1 ແຫ່ງຢູ່ບ້ານດອນ, ຕາຂ່າຍໄຟຟ້າ 115 KV, ຕາຂ່າຍໄຟຟ້າ 22 KV, ຕາຂ່າຍໄຟຟ້າ 0,4 KV ແລະ ສູນບໍລິການ 1 ແຫ່ງ.

ພາຍໃນເມືອງເຟືອງໄດ້ໃຊ້ນ້ຳປະປາລວມທັງໝົດ 7 ບ້ານ, ໃນນີ້ມີກຸ່ມບ້ານຈັດສັນໂພນສະຫວາດ ມີ 2 ບ້ານ, ຈຳນວນປະຊາກອນໃນພື້ນທີ່ບໍລິການລວມທັງໝົດ 7640 ຄົນ ແຕ່ປະຊາກອນທີ່ຊົມໃຊ້ນ້ຳປະປາລວມມີ 4576 ຄົນ, ສະເລ່ຍເປັນເປີເຊັນ 60% ແລະ ກຸ່ມເທດສະບານເມືອງມີຈຳນວນບ້ານທີ່ໃຊ້ນ້ຳປະປາ 5 ບ້ານ, ປະຊາກອນໃນພື້ນທີ່ບໍລິການລວມທັງໝົດ 5,085 ຄົນ ແລະ ປະຊາກອນທີ່ໃຊ້ນ້ຳປະປາ ລວມ 3,020 ຄົນ, ສະເລ່ຍເປັນເປີເຊັນ 59%.

**4.3 ລະບົບໂທລະຄົມ ແລະ ການສື່ສານ ເພີ່ມລາຍລະອຽດໃສ່ຕື່ມ**

ມາຮອດປັດຈຸບັນນີ້ລະບົບການໂທລະຄົມ ແລະ ການສື່ສານໃນເມືອງເຟືອງມີຄວາມສະດວກສະບາຍໃນການຕິດຕໍ່ພົວພັນ ຊຶ່ງກວມເອົາທັງຫມົດ 98% ຂອງທຸກພື້ນທີ່ທົ່ວເມືອງ ລວມມີທຸກເຄືອຂ່າຍທີ່ສາມາດໃຊ້ໄດ້ ແລະ ລະບົບການບໍລິການດ້ານອິນເຕີເນັດບ້ານ ມີພຽງແຕ່ 1 ເຄືອຂ່າຍທີ່ໃຊ້ບໍລິການໄດ້ ແລະ ມີບາງຈຸດກໍ່ຍັງບໍ່ສາມາດໃຊ້ສັນຍານອິນເຕີເນັດໄດ້ເທື່ອ.

**4.4 ທີ່ພັກ ແລະ ຮ້ານອາຫານ**

ໃນປັດຈຸບັນເມືອງເຟືອງມີເຮືອນພັກລວມທັງໝົດ 30 ແຫ່ງ, ມີຫ້ອງນອນ 326 ຫ້ອງ, ລີສອດ 5 ແຫ່ງ, ມີ 326 ຫ້ອງນອນ, ມີເຮືອນພັກເຮືອນແພແຄມນ້ຳລີກມີ 11 ແຫ່ງ,ມີຈຳນວນອາຄານແພ 83 ຫຼັງມີຫ້ອງນອນທັງໝົດ 115 ຫ້ອງ, ຮ້ານອາຫານ 14 ຮ້ານ ແລະຮ້ານກິນດື່ມມີ 6 ຫົວໜ່ວຍ (ຮ້ານອາຫານ, ຮ້ານກິນດື່ມຍັງເປັນທຸລະກິດນ້ອຍແບບຄອບຄົວ, ເຮືອນພັກກໍຍັງບໍໄດ້ຈັດລະດັບ). ສະຖານພັກແຮມໃນປັດຈຸບັນສ່ວນຫຼາຍແມ່ນເຮືອນພັກຂະໜາດນ້ອຍ, ເມືອງເຟືອງຍັງມີຕ້ອງການໃນການສ້າງໂຮງແຮມ,ຣີສອດ, ເຮືອນພັກ ແລະ ເຮືອນພັກແຮມປະຊາຊົນ (Homestay), ຮ້ານອາຫານ-ຮ້ານກິນດື່ມ ທີ່ໄດ້ມາດຕະຖານເປັນຈຳນວນຫຼວງຫຼາຍ ເພື່ອຮອງຮັບການມາພັກເຊົາຂອງນັກທ່ອງທ່ຽວຈາກພາຍໃນ ແລະ ຕ່າງປະເທດ. ນອກນີ້, ເມືອງເຟືອງຍັງມີຄວາມຈຳເປັນສ້າງປະຊຸມທີ່ໄດ້ມາດຕະຖານ ແລະ ສາມາດຮອງຮັບນັກທ່ອງທ່ຽວໄດ້ຫຼາຍລະດັບ ເພື່ອກະກຽມຕ້ອນຮັບນັກທ່ອງທ່ຽວຈາກບັນດາເມືອງ ແລະ ແຂວງທີ່ໃກ້ຄຽງ. ລວມທັງສະຖານທີ່ບໍລິການສຸຂະພາບ ແລະ ຄວາມປອດໄພໃຫ້ມີຄຸນນະພາບ ເພື່ອຮອງຮັບນັກທ່ອງທ່ຽວໃນເວລາເກີດເຫດສຸກເສີນ.

## 5. ການວິເຄາະການທ່ອງທ່ຽວເຊື່ອມຕໍ່ພາຍໃນ ແລະ ບັນດາເຂດໃກ້ຄຽງ

### 5.1 ການທ່ອງທ່ຽວເຊື່ອມຕໍ່ພາຍໃນ (ວົງຈອນການທ່ອງທ່ຽວພາຍໃນເມືອງເຟືອງ)

ເມືອງເຟືອງ ຍັງມີທ່າແຮງດ້ານການທ່ອງທ່ຽວທີ່ຫຼາກຫຼາຍ ປັດຈຸບັນບັນດາແຫຼ່ງທ່ອງທ່ຽວພາຍໃນເມືອງກຳລັງໄດ້ຮັບການພັດທະນາ ໂດຍສະເພາະແມ່ນບັນດາແຫ່ງທ່ອງທ່ຽວທີ່ມີເອກະລັກສະເພາະ ແລະ ສາມາດເຊື່ອມໂຍງ-ເຊື່ອມຕໍ່ກັນໄດ້ຄື: ບັນດາກິດຈະກຳການທ່ອງທ່ຽວຕາມລ້ອງນໍ້າລຶກ ແມ່ນມີເອກະລັກທາງດ້ານທຳມະຊາດ ແລະ ວັດທະນະທຳ ຊຶ່ງເຊື່ອມຕໍ່ກັນດ້ວຍສາຍນໍ້າລຶກ ແລະ ເສັ້ນທາງ, ນັກທ່ອງທ່ຽວມາທ່ຽວຊົມ ແລະ ພັກເຊົາຕາມເຂດສາຍນໍ້າລຶກ ສ່ວນຫຼາຍຈະແມ່ນກຸ່ມໄວໜຸ່ມມາເຮັດກິດຈະກຳການທ່ອງທ່ຽວທີ່ສອນບ້ານເມືອງເຟືອງເຮືອນລາວ ແລ້ວກະຈາຍອອກໄປສູ່ແຫຼ່ງຕ່າງໆ ເຊັ່ນ: ຫາດດອນກາງໃຫຍ່, ຫາດສາມຄອນ, ຫາດຜາຕັ້ງ, ບັນດາຮ້ານອາຫານແຄມນໍ້າ ແລະ ຂີ່ເຮືອລ່ອງຕາມສາຍນໍ້າລຶກ ແລ້ວໄປທ່ຽວຕໍ່ທີ່ວັດສິນໄຊຍະຣາມ (ວັດບ້ານໂນນຫີນແຮ່) ແລ້ວກໍກັບອອກໄປນະຄອນຫຼວງວຽງຈັນ ຫຼື ໄປທ່ຽວຕໍ່ວັງວຽງ. ກິດຈະກຳການທ່ອງທ່ຽວໃນເຂດເທດສະບານເມືອງ ສ່ວນຫຼາຍແມ່ນການທ່ອງທ່ຽວດ້ານປະຫວັດສາດ ແລະ ສູນກາງຂອງການບໍລິການມີເຮືອນພັກ, ຮ້ານອາຫານ ແລະ ຮ້ານກິນ-ດື່ມໄວ້ບໍລິການນັກທ່ອງທ່ຽວ ແລະ ນັກເດີນທາງແລ້ວເຊື່ອມຕໍ່ກັນກັບບັນດາແຫຼ່ງທ່ອງທ່ຽວເຂດກຸ່ມຜາສັງ ຕາມເສັ້ນທາງຫຼວງເສັ້ນ 4501 ຊຶ່ງກິດຈະກຳການທ່ອງທ່ຽວໃນເຂດກຸ່ມຜາສັງແມ່ນການທ່ອງທ່ຽວທາງດ້ານວັດທະນະທຳ ແລະ ທຳມະຊາດ ປະກອບດ້ວຍແຫຼ່ງທ່ອງທ່ຽວທີ່ໂດດເດັ່ນ ຄື: ວັດສິນໄຊຍະລາມ (ວັດບ້ານໂນນຫີນແຮ່), ວັດບຸນຍາ ຣິດສັດຕະທຳມະຍາຣາມ (ວັດນາເມືອງ), ວັດບ້ານຜາສັງ, ຜາລັງ, ຜາສັງ, ຜາຫຼວງ, ຜາທອງ, ເຂື່ອນນໍ້າຕຶງ... ຊຶ່ງຈາກການສັງເກດບັນດາກິດຈະກຳການທ່ອງທ່ຽວຕ່າງໆທີ່ໄດ້ກ່າວມານັ້ນ ສາມາດສະຫຼຸບໄດ້ວ່າການເຊື່ອມຕໍ່ກັນຂອງການທ່ອງທ່ຽວໃນເມືອງເຟືອງແມ່ນມີລັກສະນະສະເພາະຄືນັກທ່ອງທ່ຽວໄວໜຸ່ມນິຍົມໄປທ່ອງທ່ຽວເຂດລ້ອງນໍ້າລຶກ ນັກທ່ອງທ່ຽວທີ່ຂ້ອນຂ້າງມີອາຍຸສູງຈະໄປທ່ຽວເຂດກຸ່ມຜາສັງ ໂດຍໄດ້ຜ່ານເຂດເທດສະບານເມືອງ.

### 5.2 ການທ່ຽວເຊື່ອມຕໍ່ບັນດາເຂດໃກ້ຄຽງ

ຈາກທີ່ຕັ້ງຂອງເມືອງເຟືອງເຫັນໄດ້ວ່າ ເມືອງເຟືອງຍັງນອນຢູ່ໃນແລວເສດຖະກິດເໜືອ-ໃຕ້ຂອງລາວລວມເຖິງແລວເສດຖະກິດໜຶ່ງແລວໜຶ່ງເສັ້ນທາງຂອງຈີນ ເຖິງແມ່ນວ່າເມືອງເຟືອງບໍ່ໄດ້ຕັ້ງຢູ່ຕິດກັບເສັ້ນທາງເລກທີ 13 ເໜືອ, ທາງດ່ວນວຽງຈັນ-ວັງວຽງ ຫຼື ເສັ້ນທາງລົດໄຟລາວ-ຈີນ ກໍ່ຕາມແຕ່ເນື່ອງຈາກເມືອງເຟືອງມີໄລຍະທາງຫ່າງຈາກເມືອງຫີນເຫີບພຽງ 28 ກິໂລແມັດ, ໃຊ້ເວລາເດີນທາງດ້ວຍລົດ ໂດຍເສັ້ນທາງປູຢາງທີ່ຫາກໍ່ສ້າງສຳເລັດ ປະມານ 30 ນາທີກໍຈະເຖິງເມືອງເຟືອງ.

ເມືອງເຟືອງຕັ້ງຢູ່ໃນແລວເສັ້ນທາງເລກທີ 4501 ເປັນເສັ້ນທາງເຊື່ອມໂຍງຈາກເມືອງຫີນເຫີບຫາເມືອງໝື່ນຕໍ່ໃສ່ກັບເສັ້ນທາງເລກທີ 11 (ເສັ້ນທາງລຽບແມ່ນໍ້າຂອງ), ອີງຕາມທິດທາງຂອງແຂວງວຽງຈັນ ກໍຄືລັດຖະບານມີແຜນຈະຮ່ວມມືກັບປະເທດໄທ ສ້າງຂົວຂ້າມແມ່ນໍ້າຂອງຢູ່ບ້ານວັງ ຖ້າຫາກຂົວດັ່ງກ່າວສ້າງສຳເລັດຈະເຮັດໃຫ້ການຄົມມະນາຄົມຕາມແລວເສັ້ນທາງເລກທີ 4501 ສາມາດເຊື່ອມໂຍງໄປເຖິງຕົວເມືອງ ແລະ ແຫຼ່ງທ່ອງທ່ຽວຕ່າງໆຢູ່ໃນເຂດປະເທດໄທໄດ້ສະດວກສະບາຍຫຍິ່ງ ໂດຍສະເພາະການເຊື່ອມຈອດຫາເມືອງຊຽງຄານຕົວເມືອງທ່ອງທ່ຽວຍອດນິຍົມໃນຈັງຫວັດເລີຍ ພ້ອມທັງເຊື່ອມຕໍ່ໄປຕົວເມືອງເລີຍ, ຕົວເມືອງພິສະນຸໂລກ

ແລະ ຕົວເມືອງອື່ນໆໃນພາກເໜືອຂອງປະເທດໄທ ໄລຍະທາງຈາກເມືອງຊຽງຄານຫາເມືອງເຟືອງປະມານ 130 ກິໂລແມັດ ຄາດວ່າຈະໃຊ້ເວລາເດີນທາງບໍ່ເກີນ 2 ຊົ່ວໂມງ ລວມເວລາໃນການແຈ້ງເອກະສານຜ່ານແດນ.

ປັດຈຸບັນ ລັດຖະບານກຳລັງຊອກຫາແຫຼ່ງທຶນ ເພື່ອທະລຸເສັ້ນທາງລະຫວ່າງເມືອງເຟືອງຫາເມືອງວັງວຽງ. ເສັ້ນທາງດັ່ງກ່າວ ຈະອອກຈາກບ້ານນາໃໝ່ຕັດເຂົ້າເຂດຜາບອງ ເມືອງຫີນເຫີບ ແລະ ອອກໃສ່ບ້ານໂພນຄຳ ເມືອງວັງວຽງ, ຖ້າຫາກເສັ້ນທາງນີ້ສຳເລັດຈະເພີ່ມທ່າແຮງໃຫ້ແກ່ການຄົມມະນາຄົມ ແລະ ການທ່ອງທ່ຽວເຊື່ອມໂຍງຈາກປະເທດໄທຫາເມືອງວັງວຽງ, ແຂວງຫຼວງພະບາງ ຊຶ່ງຈະສ້າງໂອກາດມະຫາສານແກ່ການພັດທະນາການທ່ອງທ່ຽວຂອງເມືອງເຟືອງໄປຄຽງຄູ່ກັນ.

ຈາກຕົວເມືອງເຟືອງຍັງສາມາດເດີນທາງຕໍ່ໄປຫາເມືອງແມດທີ່ຢູ່ທາງດ້ານທິດຕາເວັນຕົກ ເຖິງແມ່ນວ່າປັດຈຸບັນເສັ້ນທາງບໍ່ທັນສະດວກ ແຕ່ຜູ້ຄົນທົ່ວໄປລວມເຖິງລົດໂດຍສານກໍ່ຍັງນິຍົມນຳໃຊ້ເສັ້ນທາງດັ່ງກ່າວເນື່ອງຈາກມີໄລຍະທາງໃກ້ກວ່າຖ້າທຽບໃສ່ເສັ້ນທາງອື່ນໆໃນເທດສະບານແຂວງວຽງຈັນ ຫຼື ນະຄອນຫຼວງວຽງຈັນ; ຈາກເທດສະບານແຂວງວຽງຈັນໄປຫາເມືອງແມດ ຖ້າຫາກເດີນທາງຜ່ານເມືອງເຟືອງຈະມີໄລຍະທາງປະມານ 120 ກິໂລແມັດ, ແຕ່ ຖ້າຫາກເດີນທາງໄປທາງກາສີ ໄລຍະທາງຈະຍາວເຖິງ 200 ກວ່າກິໂລແມັດ.

ນອກຈາກເສັ້ນທາງທີ່ກ່າວມາແລ້ວ ຍັງມີເສັ້ນທາງອີກຈຳນວນໜຶ່ງທີ່ສາມາດເຊື່ອມໂຍງຫາບ້ານ ແລະ ຕົວເມືອງ ອ້ອມຂ້າງ ເຊັ່ນ:

- ເສັ້ນທາງເລກທີ 4690 ແຕ່ບ້ານໜອງເປັດ ຫາ ບ້ານນ້ຳແປ ເມືອງວັງວຽງ ເປັນທາງດິນແດງສາມາດເດີນທາງໄດ້ລະດູດຽວ, ໄລຍະທາງ 46 ກິໂລແມັດ, ໃນເວລາໃນການເດີນທາງ 1-2 ຊົ່ວໂມງ.
- ເສັ້ນທາງເລກທີ 4535 ແຕ່ບ້ານນາເມືອງ ຫາ ບ້ານນາພີງ ເມືອງຫີນເຫີບ ເປັນເສັ້ນທາງດິນແດງສາມາດເດີນທາງໄດ້ລະດູດຽວ, ໄລຍະທາງ 28 ກິໂລແມັດ, ໃນເວລາໃນການເດີນທາງ 1 ຊົ່ວໂມງ.
- ເສັ້ນທາງເລກທີ 4512 ແຕ່ບ້ານຜາສັງ ຫາ ບ້ານເມືອງຄີ່ເມືອງແມດ ປັດຈຸບັນເປັນທາງດິນແດງສາມາດເດີນທາງໄດ້ 2 ລະດູ, ໄລຍະທາງ 32 ກິໂລແມັດ,ໃຊເວລາໃນການເດີນທາງປະມານ 1 ຊົ່ວໂມງ.
- ເສັ້ນທາງແຕ່ບ້ານຜາສັງ ຫາ ບ້ານວັງມ້າ ເມືອງສັງທອງ ປັດຈຸບັນຍັງເປັນທາງດິນ ສາມາດເດີນທາງໄດ້ສະເພາະລົດຈັກ ແລະ ລົດໂຟວິນ ໃນລະດູດແລ້ງລະດູດຽວ, ໄລຍະທາງປະມານ 20 ກິໂລແມັດ; ຖ້າຫາກເສັ້ນທາງນີ້ໄດ້ຮັບການພັດທະນາຈະກາຍເປັນອີກທາງເລືອກໜຶ່ງຂອງການເດີນທາງມາຈາກນະຄອນຫຼວງວຽງຈັນ ຊຶ່ງມີໄລຍະທາງປະມານ 100 ກິໂລແມັດເທົ່ານັ້ນ.




ຮູບທີ 17: ແຜນຜັງທີ່ຕັ້ງ-ການພົວພັນ

## 6. ການວິເຄາະການນຳໃຊ້ທີ່ດິນ ແລະ ແຜນພັດທະນາຂະແໜງການອື່ນ

ໂດຍອີງໃສ່ແຜນພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ3 ປີ 2020-2024 ໄດ້ກຳນົດແຜນໃນການພັດທະນາເມືອງທີ່ພົວພັນເຖິງການນຳໃຊ້ຊັບພະຍາກອນທຳມະຊາດ, ການຊຸກຍູ້ການພັດທະນາໂຄງລ່າງພື້ນຖານ ລວມໄປເຖິງການພັດທະນາເສດຖະກິດ, ວັດທະນະທຳສັງຄົມ ຊຶ່ງໄດ້ກຳນົດແຜນຈຸດສຸມທີ່ສຳຄັນທີ່ຕິດພັນກັບວຽກງານການພັດທະນາການທ່ອງທ່ຽວ ຊຶ່ງປະກອບມີດ້ານຕ່າງໆດັ່ງລຸ່ມນີ້:

### 6.1 ແຜນພັດທະນາກະສິກຳ ແລະ ປ່າໄມ້

ຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າຕາມແລວພັດທະນາທີ່ທາງເມືອງໄດ້ກຳນົດໄວ້ຢ່າງແຂງແຮງ, ໂດຍຖືເອົາບັນດາຄອບຄົວ ແລະບ້ານເປັນຈຸດສຸມ, ສົ່ງເສີມການລ້ຽງສັດໃຫຍ່, ການປູກໄມ້ອຸດສາຫະກຳ, ໄມ້ໃຫ້ໝາກ, ປູກພືດ, ຜັກປອດສານພິດຜະລິດເປັນສິນຄ້າ, ໂດຍໃຫ້ສອດຄ່ອງກັບກົນໄກຕະຫຼາດ, ຕິດພັນກັບການເຊື່ອມໂຍງກັບຕ່າງປະເທດ, ສ້າງບ້ານຕົວແບບດ້ານຕ່າງໆຢູ່ເຂດຊົນນະບົດໃຫ້ນັບມື້ຫຼາຍຂຶ້ນ, ສ້າງໃຫ້ບ້ານເປັນຫົວໜ່ວຍພັດທະນາ, ລົບລ້າງຄວາມທຸກຍາກໃຫ້ໄດ້ຫຼຸດໜ້ອຍຖອຍລົງ, ເອົາໃຈໃສ່ແກ້ໄຂຈານວນ 1.667 ຄອບຄົວທີ່ບໍ່ບັນລຸຕາມມາດຖານຂອງດຳລັດ 348/ນຍໃຫ້ໄດ້ 1.167 ຄອບຄົວ , ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີ.

ນອກນີ້ ໃນວຽກງານການພັດທະນາຕາມທິດສີຂຽວ ແລະ ເປັນມິດຕໍ່ສິ່ງແວດລ້ອມກໍ່ມີແຜນງານຈຸດສຸມຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ, ເອົາໃຈໃສ່ຄຸ້ມຄອງ, ປົກປັກຮັກສາ ແລະ ອະນຸລັກຊັບພະຍາກອນທຳມະຊາດ, ພ້ອມທັງສືບຕໍ່ຄຸ້ມຄອງປ່າໄມ້ຕາມ 3 ປະເພດປ່າ ຄື: ປ່າຜະລິດພູເຍີຍ, ປ່າປ້ອງກັນ ແລະ ປ່າສະຫງວນ, ເອົາໃຈໃສ່ຄຸ້ມຄອງສະກັດກັ້ນການລັກລອບຕັດໄມ້, ການເລື່ອຍໄມ້ທຳລາຍປ່າ ໄມ້ແບບຊະຊາຍ, ໄຟລາມປ່າ, ຄຸ້ມຄອງການນຳເອົາໄມ້ເຂົ້າໂຮງງານເຟີນິເຈີຢ່າງເຂັ້ມງວດ, ຜະລິດເບ້ຍໄມ້ໃຫ້ໄດ້ 3.874.820 ເບ້ຍ, ປູກໄມ້ປະເພດຕ່າງໆໃຫ້ໄດ້ 3.200.760 ເຮັກຕາ, ຟື້ນຟູປ່າທຳມະຊາດດ້ວຍການປູກປ່າເສີມໃຫ້ໄດ້ 3.250 ເຮັກຕາ, ສູ້ຊົນເຮັດໃຫ້ເນື້ອທີ່ປ່າປົກຫຸ້ມໃຫ້ໄດ້ 72%, ທະບຽນສວນປູກໄມ້ໃຫ້ໄດ້ 400 ເຮັກຕາ.

ເອົາໃຈໃສ່ປັບປຸງສະຖານີເຕັກນິກກະສິກຳທີ່ມີແລ້ວ 3 ແຫ່ງ ຄື: ສະຖານີເຕັກນິກກະສິກຳກຸ່ມບ້ານໂພນທອນ, ສະຖານີເຕັກນິກຈຸດສຸມຜາສັງ ແລະ ສະຖານີເຕັກນິກກະສິກຳກຸ່ມບ້ານນາໃໝ່, ພ້ອມທັງສົ່ງພະນັກງານວິຊາການລົງປະຈຳແຕ່ລະສະຖານີເພື່ອສົ່ງເສີມການປູກການລ້ຽງໃຫ້ປະຊາຊົນຢ່າງທົ່ວເຖິງ, ສົມທົບກັບພາກສ່ວນກ່ຽວຂ້ອງຕິດຕາມ, ກວດກາ, ຄຸ້ມຄອງໂຄງການກໍ່ສ້າງຊົນລະປະທານນ້ຳຕົງ 2 ໃຫ້ສຳເລັດຕາມແຜນການ, ຍາດແຍ່ງແຫຼ່ງທຶນເພື່ອມາສ້ອມແປງຊົນລະປະທານໃຫ້ໄດ້ 15 ແຫ່ງ ແລະ ກໍ່ສ້າງໃໝ່ໃຫ້ໄດ້ 4 ແຫ່ງ, ສະໜອງນ້ຳໃສ່ເນື້ອທີ່ນາໃຫ້ໄດ້ 6.515 ຮຕ, ໃນນັ້ນ: ລະດູຝົນໃຫ້ໄດ້ 5.915 ຮຕ ແລະ ລະດູແລ້ງໃຫ້ໄດ້ 600 ຮຕ.

### 6.2 ແຜນພັດທະນາໂຄງລ່າງພື້ນຖານທີ່ສຳຄັນ

ເພື່ອເພີ່ມທະວີການຮ່ວມມື, ການເຊື່ອມໂຍງ ແລະ ເຊື່ອມຈອດກັບບັນດາເມືອງຕ່າງໆ, ຕ່າງແຂວງ ແລະ ຕ່າງປະເທດໃຫ້ມີຄວາມເຂັ້ມແຂງ ຈຳເປັນຕ້ອງສຸມໃສ່ວຽກງານສົ່ງເສີມການຮ່ວມມື, ຂົນຂວາຍ ແລະ ຍາດແຍ່ງການຊ່ວຍເຫຼືອຈາກເພື່ອນມິດ, ຜັກດັນການພັດທະນາພື້ນຖານໂຄງລ່າງໄດ້ຮັບການປັບປຸງພັດທະນາ ແລະ ສາມາດເອື້ອອຳນວຍໃຫ້ແກ່ການບໍລິການທ່ອງທ່ຽວ, ການຄ້າ ແລະການລົງທຶນໃຫ້ໄດ້ດີ: (ວຽກງານການທ່ອງທ່ຽວ, ວຽກກະສິກຳ, ວຽກອຸດສາຫະກຳ-ການຄ້າ, ວຽກໂຍທາທິການ ແລະຂົນສົ່ງ, ວຽກພະລັງງານ ແລະ ໄປສະນີ-ໂທລະຄົມມະນາຄົມ-ການສື່ສານ)

ນອກນີ້ຕ້ອງໄດ້ຍາດແຍ່ງແຫຼ່ງທຶນຈາກພາກລັດ ແລະ ພາກສ່ວນຕ່າງໆເພື່ອມາສ້ອມແປງ ແລະ ຍົກລະດັບທາງດິນແດງລະຫວ່າງບ້ານຕໍ່ບ້ານໃຫ້ໄດ້ 7 ເສັ້ນ, ຍາວ 112,8 ກິໂລແມັດ, ກໍ່ສ້າງທາງປູຢາງຕາມເສັ້ນ

ທາງສາຍສຳຄັນໃຫ້ໄດ້ 10 ໂຄງການ, ຍາວ 137 ກິໂລແມັດ, ກໍ່ສ້າງຂົວເຫຼັກໃຫ້ໄດ້ 1 ແຫ່ງ ຄື: ຂົວຂ້າມນ້ຳລີກ ແຕ່ບ້ານເມືອງເຟືອງຫາບ້ານກ້ຽງຊຽງ, ເອົາໃຈໃສ່ຍາດແຍ່ງແຫຼ່ງທຶນເພື່ອມາທະລຸ ແລະ ກໍ່ສ້າງເສັ້ນທາງຕັດຕາຜ່າບ້ານເປົ້າໝາຍສາມສ້າງ, ເສັ້ນທາງແຕ່ບ້ານປາກຊາງຫາບ້ານວັງມ້າ ເມືອງສັງທອງ ນະຄອນຫຼວງວຽງຈັນ ແລະ ກໍ່ສ້າງເສັ້ນທາງແຕ່ບ້ານນາບອນ ຫາ ບ້ານນ້ຳປຸ່ນນ້ຳແປ ຖ້ຳປູຄຳ ເມືອງວັງວຽງ, ປັບປຸງຄົວລົດແຕ່ລະແຫ່ງພາຍໃນເມືອງໃຫ້ດີກວ່າເກົ່າ, ເພື່ອເຮັດໜ້າທີ່ບໍລິການຂົນສົ່ງໂດຍສານ, ຂົນສົ່ງສິນຄ້າລະຫວ່າງເມືອງຕໍ່ເມືອງ, ລະຫວ່າງເມືອງຕໍ່ແຂວງ ແລະ ຕ່າງແຂວງສະດວກ, ວ່ອງໄວກວ່າເກົ່າ, ຂະຫຍາຍຄົວລົດພາຍໃນເມືອງໃຫ້ໄດ້ 1 ແຫ່ງ ຄື: ຈຸດສຸມຜາສັງ. ສ່ວນວຽກໄປສະນີ-ການສື່ສານ: ບໍລິການ ຝາກ ແລະ ການສົ່ງສິ່ງຂອງທາງໄປສະນີທັງພາຍໃນ ແລະຕ່າງປະເທດໃຫ້ສະດວກ ແລະ ວ່ອງໄວກວ່າເກົ່າ ແລະ ຂະຫຍາຍຕາໜ່າງບໍລິການອອກສູ່ກຸ່ມບ້ານໃຫ້ໄດ້ 1 ກຸ່ມບ້ານ ຄື: ຈຸດສຸມຜາສັງ.

### 6.3 ແຜນການພັດທະນາການເຊື່ອມໂຍງກັບເມືອງອ້ອມຂ້າງ

ໃນແຜນການພັດທະນາເຊື່ອມໂຍງແມ່ນນອນໃນແລວເສດຖະກິດ 443 ຂອງແຂວງ ແລະ ເຂດຜະລິດຂອງເມືອງຕາມທ່າແຮງທີ່ມີ ຊຶ່ງເມືອງເຟືອງແມ່ນນອນໃນກຸ່ມ 4 ເມືອງຕາມແລວທາງຕາເວັນຕົກຫີນເຫີບ-ຊະນະຄາມ ຄື: ເມືອງໝື່ນ, ຊະນະຄາມ, ເມືອງແມດ ແລະ ເມືອງເຟືອງ, ເພື່ອພັດທະນາເສດຖະກິດຂອງເມືອງໃຫ້ມີການເຕີບໃຫ່ຍຂະຫຍາຍຕົວຕາມທ່າແຮງ ແລະ ຕິດພັນຕາມແລວເສດຖະກິດທີ່ແຂວງໄດ້ກຳນົດໄວ້ນັ້ນໃນ 5 ປີຕໍ່ໜ້າເມືອງເຟືອງໄດ້ກຳນົດເຂດພັດທະນາເປັນ 4 ເຂດດັ່ງນີ້: ເຂດທີ 1 ກຳນົດເອົາຈຸດສຸມຜາສັງ ແລະ ກຸ່ມບ້ານນ້ຳປຸ່ງ-ໜອງບໍ່ເປັນເຂດປູກພືດອຸດສາຫະກຳ, ໄມ້ອຸດສາຫະກຳ, ໄມ້ໃຫ້ໝາກ, ລ້ຽງສັດໃຫ່ຍເປັນຕົ້ນຕໍ, ການທ່ອງທ່ຽວ ແລະ ການປູກເຂົ້າເປັນສຳຮອງ, ເຂດພັດທະນາທີ 2 ກຳນົດເອົາກຸ່ມບ້ານໂພນທອນເປັນເຂດປູກເຂົ້າເປັນຕົ້ນຕໍ,ຖືເອົາການລ້ຽງສັດໃຫຍ່, ປູກພືດເປັນສິນຄ້າ ແລະ ປູກໄມ້ອຸດສາຫະກຳເປັນສຳຮອງ, ເຂດພັດທະນາທີ 3 ກຳນົດເອົາເຂດບ້ານນາພຶງຫາບ້ານນາທູນເປັນເຂດອຸດສາຫະກຳ, 4 ກຳນົດເອົາກຸ່ມບ້ານໂພນສະຫວາດ, ກຸ່ມເຫດສະບານ ແລະ ກຸ່ມບ້ານນາໃໝ່ ເປັນເຂດບໍລິການ ແລະ ການທ່ອງທ່ຽວເປັນຕົ້ນຕໍ, ຖືເອົາການປູກເຂົ້າ, ການລ້ຽງສັດ ປູກໄມ້ອຸດສາຫະກຳເປັນສຳຮອງ.

### 6.4 ການພັດທະນາຕົວເມືອງ ແລະຊົນນະບົດ

ການພັດທະນາຕົວເມືອງ ແລະ ຊົນນະບົດກໍເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ແລະ ໄດ້ຈັດເຂົ້າເປັນແຜນງານການພັດທະນາຂອງເມືອງ ໂດຍສ້າງພື້ນຖານໂຄງລ່າງທີ່ຈຳເປັນໃຫ້ແກ່ຊົນນະບົດ ເພື່ອສ້າງຊົນນະບົດໃຫ້ມີຄວາມເຂັ້ມແຂງທັງນີ້ ກໍເພື່ອເປັນການຊຸກຍູ້ສົ່ງເສີມການພັດທະນາການທ່ອງທ່ຽວຂອງເມືອງໃຫ້ມີຄວາມພ້ອມສາມາດຮອງຮັບກິດຈະການການທ່ອງທ່ຽວທີ່ຈະເກີດຂຶ້ນ ເປັນຕົ້ນແມ່ນການພັດທະນາບັນດາໂຄງລ່າງພື້ນຖານ, ຖະໜົນຫົນທາງ, ການບໍລິການ, ທີ່ພັກອາໃສ, ສິ່ງອານວຍຄວາມສະດວກອື່ນໆ ຊຶ່ງແຜນການພັດທະນາຕົວເມືອງ ແລະ ຊົນນະບົດຂອງເມືອງເຟືອງໄດ້ກຳໜົດເຂດຈຸດສຸມພັດທະນາອອກເປັນ 3 ເຂດຈຸດສຸມພັດທະນາຄື:

- **ເຂດລ່ອງນ້ຳລີກ** ຊຶ່ງກຳນົດໃຫ້ເປັນເຂດທ່ອງທ່ຽວທີ່ຕິດພັນກັບນ້ຳລີກ ແລະ ວິຖີຊີວິດແບບດັ່ງເດີມຂອງປະຊາຊົນທີ່ອາໃສຢູ່ລຽບສາຍນ້ຳລີກ ໃນວຽກງານການພັດທະນາຊົນນະບົດແມ່ນຊູກຍູ້ໃຫ້ປະຊາຊົນທີ່ຢູ່ຕາມບ້ານດັ່ງກວ່າມີສ່ວນຮ່ວມໃນການບໍລິການທ່ອງທ່ຽວ ພັດທະນາໝູ່ບ້ານເປັນສ່ວນໜຶ່ງຂອງ

ກິດຈະກຳການທ່ອງທ່ຽວ ເພື່ອຮັບປະກັນການທ່ອງທ່ຽວແບບຍືນຍົງ ແລະ ເປັນການຍົກລະດັບຊີວິດການເປັນຢູ່ປະຊາຊົນໃນເຂດດັ່ງກ່າວ.

- **ເຂດເທດສະບານ** ແມ່ນກຳນົດໃຫ້ມີການພັດທະນາຕົວເມືອງຢ່າງຮອບດ້ານ ໂດຍສະເພາະດ້ານການບໍລິການ, ສ້າງສິ່ງອຳນວຍຄວາມສະດວກສະຖານທີ່ພັກທີ່ໄດ້ມາດຕະຖານ, ພັດຕະຄານ ແລະ ຮ້ານອາຫານ, ຫ້ອງປະຊຸມ ແລະ ອື່ນໆ.
- **ເຂດຜາສັງ** ເປັນເຂດໜຶ່ງທີ່ມີການພັດທະນາໄວ ໂດຍສະເພາະທາງດ້ານວັດທະນາທຳ ຊຶ່ງມີການກໍ່ສ້າງວັດຫຼາຍແຫ່ງພາຍໃນເຂດດັ່ງກ່າວ.

ນອກຈາກນີ້ ເພື່ອຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີເທື່ອລະກ້າວ ຈຳເປັນຕ້ອງພັດທະນາຕົວເມືອງໃຫ້ມີຄວາມປອດໄພ ແລະ ໜ້າຢູ່, ສືບຕໍ່ພັດທະນາຕົວເມືອງ ແລະ ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດໃຫ້ສຳເລັດ 2 ແຫ່ງ ຄື: ຈຸດສຸມຜາສັງ ແລະ ບ້ານໂພນສະຫວາດ, ເອົາໃຈໃສ່ສ້ອມແປງ, ກໍ່ສ້າງເສັ້ນທາງໃນເທດສະບານເມືອງ, ບ້ານໃຈກາງຈຸດສຸມຜາສັງ ແລະ ບ້ານໂພນສະຫວາດໃຫ້ໄດ້ປູຢາງ, ຂະລະບົບນ້ຳປະປາພາຍໃນເທດສະບານເມືອງໃຫ້ທົ່ວເຖິງ, ພ້ອມທັງປັບປຸງຄຸນນະພາບນ້ຳປະປາໃນເທດສະບານເມືອງ ແລະ ໂພນສະຫວາດໃຫ້ໄດ້ມາດຖານ, ປັບປຸງຄົວລົດ ແລະ ຕະຫຼາດເມືອງໃຫ້ສະອາດ, ຈົບງາມ ແລະ ຊຸກຍູ້ໃຫ້ຜູ້ສຳປະທານຕະຫຼາດເມືອງໃຫ້ສືບຕໍ່ກໍ່ສ້າງໃຫ້ສຳເລັດຕາມສັນຍາທີ່ກຳນົດໄວ້, ແກ້ໄຂບັນຫາສິ່ງ ແລະ ເພື່ອຫຼຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ ແລະ ຊົນນະບົດ, ສົ່ງເສີມການຜະລິດກະສິກຳເປັນສິນຄ້າຢ່າງແຂງແຮງ, ໂດຍຕິດພັນກັບການຕະຫຼາດ ແລະ ມູນເຊື້ອການຜະລິດຂອງປະຊາຊົນ, ຈັດງານຕະຫຼາດນັດຢູ່ບັນດາກຸ່ມບ້ານ ເພື່ອສົ່ງເສີມການຜະລິດຂອງປະຊາຊົນ

### 6.5 ແຜນພັດທະນາດ້ານອຸດສາຫະກຳ ແລະ ການຄ້າ

ການພັດທະນາອຸດສາຫະກຳ ກໍເປັນອີກຂະແໜງໜຶ່ງທີ່ມີຄວາມສຳຄັນໃນການພັດທະນາເມືອງເຟືອງ ເພື່ອໃຫ້ການເປັນເມືອງແຫ່ງການທ່ອງທ່ຽວ ຊຶ່ງຈຳເປັນຈະຕ້ອງໄດ້ພັດທະນາທາງດ້ານອຸກສາຫະກຳການຄ້າການລົງທຶນຕ່າງໆ ໂດຍສະເພາະການພັດທະນາສະຖານທີ່ທ່ອງທ່ຽວການບໍລິການຕ່າງໆໃຫ້ແກ່ນັກທ່ອງທ່ຽວ ທີ່ເຂົ້າມາທ່ຽວ ແລະ ຍັງເປັນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ພ້ອມທັງເປັນການພັດທະນາສິ່ງເສີມຜະລິດຕະພັນຂອງທ້ອງຖິ່ນ. ດັ່ງນັ້ນຈຳເປັນຕ້ອງເຮັດໃຫ້ເສດຖະກິດຂອງເມືອງຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ມີຄຸນນະພາບ, ສ້າງໃຫ້ໂຄງປະກອບເສດຖະກິດມີການຫັນປ່ຽນຕາມທິດການຜະລິດກະສິກຳຕິດພັນກັບອຸດສາຫະກຳປຸງແຕ່ງ ແລະ ການບໍລິການຢ່າງເປັນຮູບປະທຳ. ນອກນັ້ນກໍຕ້ອງເອົາໃຈໃສ່ໃນດ້ານການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ພັດທະນາສີມືແຮງງານ, ຍົກສູງລະດັບເຕັກນິກ, ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານລັດ, ລັດວິສາຫະກິດ ແລະ ຜູ້ປະກອບການ, ສ້າງເງື່ອນໄຂທີ່ດີ ແລະ ເອື້ອອຳນວຍໃຫ້ແກ່ການພັດນາເສດຖະກິດ-ສັງຄົມ.

ຂະຫຍາຍຕະຫຼາດຊຸມຊົນໃຫ້ທົ່ວເຖິງທຸກກຸ່ມບ້ານ ດ້ວຍການສ້າງເງື່ອນໄຂເພື່ອດຶງດູດນັກລົງທຶນໃຫ້ມາລົງທຶນ ກໍ່ສ້າງຕະຫຼາດຊຸມຊົນໃຫ້ໄດ້ 3 ແຫ່ງ ຄື: ກໍ່ສ້າງຕະຫຼາດຜາສັງ, ກໍ່ສ້າງຕະຫຼາດໂພນແຍງ ແລະ ກໍ່ສ້າງຕະຫຼາດບ້ານນາໃໝ່

**6.6 ແຜນພັດທະນາວຽກງານສັງຄົມ**

ເພື່ອບັນລຸເງື່ອນໄຂການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ໃນວຽກງານພັດທະນາສັງຄົມ ກໍເປັນໜຶ່ງໃນວຽກຈຸດສຸມ ດ້ວຍການແກ້ໄຂຄອບຄົວທຸກຍາກທີ່ຍັງເຫຼືອໃນຈຳນວນ 53 ຄອບຄົວໃຫ້ໄດ້ 33 ຄອບຄົວ ແລະ ແກ້ໄຂຈຳນວນຄອບຄົວທີ່ບໍ່ບັນລຸຕາມມາດຖານ 348/ລບ ໃຫ້ໄດ້ 1.167 ຄອບຄົວ ແລະ ສູ້ຊົນສ້າງບ້ານພັດທະນາໃຫ້ໄດ້ 50% ຂອງຈຳນວນບ້ານທີ່ຍັງເຫຼືອ, ສູ້ຊົນສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃຫ້ໄດ້ 2 ແຫ່ງຄື: ຈຸດສຸມຜາສັງ ແລະ ກຸ່ມບ້ານໂພນສະຫວາດ ລວມທັງການສ້າງຕັ້ງກຸ່ມການຜະລິດດ້ານຫັດຖະກຳຕ່ຳຫູກ ເພື່ອສ້າງຜະລິດຕະພັນໃຫ້ເປັນສິນຄ້າໂອດ່ອບຂອງເມືອງ, ສ້າງ ແລະ ຍົກລະດັບສີມືແຮງງານໃນຫຼາຍສາຂາວິຊາຊີບໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ, ຊຸກຍູ້ໃຫ້ແຮງງານໄດ້ຮັບການຝຶກອົບຮົມທາງດ້ານຄວາມຮູ້, ຄວາມສາມາດ, ວິຊາຊີບ ແລະ ສີມືແຮງງານໃຫ້ໄດ້ 80 ຄົນໄປ, ເພື່ອຕອບສະໜອງຕະຫຼາດແຮງງານຢູ່ພາຍໃນ ແລະ ຕ່າງປະເທດ, ສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການ-ສັງຄົມໃຫ້ໄດ້ 2 ບ້ານຄື: ບ້ານທ່າ ແລະ ບ້ານຄອນເລືອງ, ເພື່ອເປັນແບບຢ່າງໃນການມີວຽກເຮັດງານທຳ ແລະ ແກ້ໄຂຊີວິດການເປັນຢູ່ພາຍໃນບ້ານໃຫ້ດີ.

**6.7 ແຜນພັດທະນາວຽກສາທາລະນະສຸກ**

ເພື່ອຮັບປະກັນໃນວຽກງານການບໍລິການແກ່ວຽກງານທ່ອງທ່ຽວຂະແໜງສາທາລະນະສຸກ ກໍມີຄວາມສຳຄັນ ຊຶ່ງຕ້ອງມີການປັບປຸງຄຸນນະພາບການບໍລິການສາທາລະນະສຸກໃຫ້ດີກວ່າເກົ່າ, ຮັບປະກັນໃຫ້ປະຊາຊົນບັນດາເຜົ່າໄດ້ເຂົ້າເຖິງການບໍລິການຢ່າງທົ່ວເຖິງ, ຍົກລະດັບການປິ່ນປົວຂອງໂຮງໝໍເມືອງໃຫ້ສາມາດຜ່າຕັດນ້ອຍໄດ້, ເອົາໃຈໃສ່ກໍ່ສ້າງສຸກສາລາ ແລະ ຕິດຕາມ, ກວດກາການກໍ່ສ້າງໂຮງໝໍເມືອງໃຫ້ສຳເລັດ, ພ້ອມທັງສະໜອງອຸປະກອນການແພດ, ຢາ, ແພດໝໍໃຫ້ພຽງພໍ, ປັບປຸງໂຮງໝໍນ້ອຍ 2 ແຫ່ງ ຄື: ໂຮງໝໍນ້ອຍຜາສັງ ແລະ ໂຮງໝໍນ້ອຍບ້ານໂພນສະຫວາດໃຫ້ມີຄວາມເຂັ້ມແຂງທາງດ້ານວິຊາການ, ສ້າງເຮືອນນອນຄົນເຈັບ ແລະ ໂຄງລ່າງອື່ນໆທີ່ມີຄວາມຈຳເປັນ, ເພື່ອຮັບປະກັນເຮັດໃຫ້ການບໍລິການໄດ້ຢ່າງທົ່ວເຖິງ ແລະ ທັນເວລາ, ສະກັດກັ້ນການແຜ່ລະບາດຂອງພະຍາດຕາມລະດູການໃຫ້ໄດ້ຢ່າງທັນການ.

**6.8 ແຜນພັດທະນາພະລັງງານ ແລະ ບໍ່ແຮ່**

ເມືອງເຟືອງກໍເປັນເມືອງໜຶ່ງທີ່ມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ ແລະ ຫຼາກຫຼາຍ ໂດຍສະເພາະຊັບພະຍາກອນແຮ່ທາດຫີນປູນ ແລະ ອື່ນໆ ເຮັດໃຫ້ມີການສຳປະທານຂຸດຄົ້ນແຮ່ທາດເກີດຂຶ້ນຈຳນວນໜຶ່ງ ຊຶ່ງປະກອບມີການກໍ່ສ້າງເຂື່ອນຜະລິດໄຟຟ້ານ້ຳລິກ, ການສຳປະທານບໍ່ຂຸດຫີນຜາ ທີ່ນຳໃຊ້ເຂົ້າໃນການກໍ່ສ້າງພື້ນທີ່ຖານໂຄງລ່າງ, ການກໍ່ຕັ້ງໂຮງງານຜະລິດຊີມັງ, ການສຳປະທານຂຸດຄົ້ນຖ່ານຫີນ, ຂີ້ເຈຍທີ່ຢູ່ຕາມຖ້ຳຕ່າງໆທົ່ວເມືອງ.

ຈາກແຜນພັດທະນາພະລັງງານ ແລະ ບໍ່ແຮ່ຂອງເມືອງ ໄດ້ຕັ້ງເປົ້າການຜະລິດພະລັງງານໄວ້ດັ່ງນີ້: ເຂື່ອນໄຟຟ້ານ້ຳລິກໃຫ້ໄດ້ທັງໝົດ 302.800.000KWh ສ່ວນເປົ້າໝາຍດ້ານການຜະລິດ ແລະ ຄຸ້ມຄອງບໍ່ແຮ່ຂຸດຄົ້ນແຮ່ບາລິດໃຫ້ໄດ້ 800 ໂຕນ, ການຂຸດຄົ້ນຫີນຜາ, ຫີນພູໃຫ້ໄດ້ຈຳນວນ 6.000 ແມັດກ້ອນ ແລະ ຂີ້ເຈຍ 100 ໂຕນພາຍໃນປີ 2022.

ນອກນີ້ ກໍເອົາໃຈໃສ່ຂະຕາຂ່າຍໄຟຟ້າເຂົ້າໂຄງການຕ່າງໆໃຫ້ໄດ້ 4 ໂຄງການ, ຍາດແຍ່ງແຫຼ່ງທຶນເພື່ອມາປັບປຸງລະບົບຕາຂ່າຍກະແສໄຟຟ້າແຮງຕໍ່າຈຸດທີ່ເປັນສາຍເປືອຍມາເປັນສາຍຫຸ້ມໃຫ້ໄດ້ 2 ຈຸດ ຄື: ກຸ່ມໂພນທອນ ແລະ ຈຸດສຸມຜາສັງ.

## 7. ວິເຄາະຈຸດດີ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍ (SWOT Analysis)

| ຈຸດດີ (Strengths) | ຈຸດອ່ອນ (Weaknesses) |
|---|---|
| - ການນໍາພັກ-ລັດ ເອົາໃຈໃສ່ໃນການຊຸກຍູ້ຕິດຕາມ ແລະ ຊີ້ນໍາການພັດທະນາຢ່າງໃກ້ຊິດ.<br>- ເມືອງເຟືອງມີຊັບພະຍາກອນການທ່ອງທ່ຽວທາງທໍາມະຊາດ ແລະ ວັດທະນໍາຍັງມີຄວາມອຸດົມສົມບູນ ແລະ ຍັງມີເອກະລັກສະເພາະຂອງຕົນເອງ<br>- ມີທີ່ຕັ້ງທີ່ເປັນສູນກາງ ແລະ ສາມາດເຊື່ອມຈອດໄດ້ກັບບັນດາເມືອງທ່ອງທ່ຽວທີ່ໂດດເດັ່ນ ແລະ ມີຊື່ສຽງທັງພາຍໃນ ແລະ ປະເທດໃກ້ຄຽງ.<br>- ປະຊາຊົນບັນດາເຜົ່າພາຍໃນເມືອງຍັງຮັກສາຮີດຄອງປະເພນີອັນດີງາມ ແລະ ມີສິນລະປະການຕົບແຕ່ງທີ່ເປັນເອກະລັກສະເພາະ ແລະ ສວຍງາມໂດຍນໍາໃຊ້ເຟືອງມາປະດິດຕົບແຕ່ງເປັນສັນຍາລັກ ຫຼື ຮູບຕ່າງໆ.<br>- ມີອາກາດ-ທໍາມະຊາດ ທີ່ສົດຊື່ນເໝາະສົມແກ່ການພັກຜ່ອນໃນທ້າຍອາທິດ ແລະ ບໍ່ໄກຈາກນະຄອນຫຼວງວຽງຈັນ.<br>- ສະຖານທີ່ທ່ອງທ່ຽວຕິດພັນກັບນິເລື່ອງລາວປະຫວັດສາດທີ່ໜ້າປະທັບໃຈຂອງວິລະຊົນ ແລະ ເລື່ອງລາວຂອງວັນນະຄະດີສັງສິນໄຊ ທີ່ຊ່ວຍເປັນໂຕດຶງດູດຄວາມສົນໃຈຂອງຊາວສາສະນິກະຊົນທີ່ມີຄວາມເຊື່ອຖືໃນເລື່ອງດັ່ງກ່າວ. | - ເສັ້ນທາງເຂົ້າເຖິງຕົວເມືອງ ແລະ ບາງສະຖານທີ່ທ່ອງທ່ຽວຍັງບໍ່ທັນສະດວກ.<br>- ການບັງຄັບໃຊ້ນິຕິກໍາ,ລະບຽບການໃນການຄຸ້ມຄອງການດໍາເນີນທຸລະກິດທ່ອງທ່ຽວຍັງບໍ່ທັນເຂັ້ມງວດ ແລະ ເປັນລະບົບ, ຍັງມີບາງພາກສ່ວນດໍາເນີນການບໍ່ຖືກຕາມລະບຽບເຮັດໃຫ້ການຄຸ້ມຄອງຍັງພົບຄວາມຫຍຸ້ງຍາກ.<br>- ລະບົບນໍ້າໃຊ້ຍັງບໍ່ຕອບສະໜອງພຽງພໍກັບຄວາມຕ້ອງການ.<br>- ສິ່ງອໍານວຍຄວາມສະດວກໃຫ້ແກ່ຜູ້ສູງອາຍຸຕາມສະຖານທີ່ທ່ອງທ່ຽວຍັງຈໍາກັດ.<br>- ຍັງຂາດການສັງລວມເນື້ອໃນປະຫວັດ ແລະ ເລື່ອງເລົ່ານິທານພື້ນເມືອງທີ່ໂດດເດັ່ນຂອງເມືອງ ແລະ ຍັງຂາດຜູ້ນໍາສະເໜີຂໍ້ມູນຕ່າງໆທີ່ຖືກຕ້ອງ.<br>- ການຈັດງານບຸນປະເພນີຕ່າງໆສ່ວນຫຼາຍແມ່ນຮັບຮອງໃຫ້ແກ່ນັກທ່ອງທ່ຽວພາຍໃນເມືອງ ແລະ ແຂວງ ຍັງບໍ່ທັນເປັນທີ່ຮັບຮູ້ຂອງນັກທ່ອງທ່ຽວຈາກແຂວງອື່ນ.<br>- ການບໍລິການຂອງຫົວໜ່ວຍທຸລະກິດທ່ອງທ່ຽວສ່ວນຫຼາຍຍັງບໍ່ໄດ້ຮັບການຝຶກອົບຮົມ, ການບໍລິການຍັງເປັນແບບຄອບຄົວ.<br>- ສະຖານທີ່ບໍລິການການທ່ອງທ່ຽວເຊັ່ນ: ໂຮງແຮມເຮືອນພັກ, ຮ້ານອາຫານ, ຫ້ອງປະຊຸມ ຍັງມີຈໍາກັດ ແລະ ຍັງບໍ່ໄດ້ມາດຕະຖານ. |

| | |
|---|---|
| | - ຄວາມເຂົ້າໃຈຂອງປະຊາຊົນ ຕໍ່ກັບການມີສ່ວນຮ່ວມດ້ານການທ່ອງທ່ຽວຍັງມີຈຳກັດ.<br>- ຍັງຂາດການວາງແຜນໃນການພັດທະນາໃນໄລຍະຍາວບາງຜູ້ດຳເນີນທຸລະກິດ ຫຼື ຜູ້ພັດທະນາຍັງເຫັນໄດ້ພຽງແຕ່ຜົນປະໂຫຍດໃນໄລຍະສັ້ນ<br>- ບຸກຄະລາກອນຂອງພາກລັດທີ່ຮັບຜິດຊອບວຽກງານການທ່ອງທ່ຽວ ຍັງມີຈຳກັດຖ້າທຽບໃສ່ທ່າແຮງ ແລະ ຄວາມຕ້ອງການໃນການພັດທະນາການທ່ອງທ່ຽວ.<br>- ສະພາບການຈັບຈອງທີ່ດິນເປັນຂອງບຸກຄົນແຕ່ບໍ່ໄດ້ຮັບການພັດທະນາຍັງມີຈຳນວນຫຼາຍ<br>- ການປຸກສ້າງສິ່ງອຳນວຍຄວາມສະດວກສະຖານທີ່ພັກເຊົາຕາມແຄມນ້ຳບໍ່ໄດ້ຮັບການປະເມີນ ແລະ ມາດຕະການເພື່ອຮອງຮັບຜົນກະທົບດ້ານສິ່ງແວດລ້ອມ.<br>- ການພັດທະນາກິດຈະກຳການທ່ອງທ່ຽວມີລັກສະນະຄ້າຍຄືກັນ ເຮັດໃຫ້ການທ່ອງທ່ຽວບໍ່ມີຄວາມຫຼາກຫຼາຍ ແລະ ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ. |
| **ໂອກາດ (Opportunities)** | **ສິ່ງທ້າທາຍ (Threats)** |
| - ນັກລົງທຶນຈາກພາຍໃນ ແລະ ຕ່າງປະເທດມີຄວາມສົນໃຈມາລົງທຶນພັດທະນາການມາທ່ອງທ່ຽວຢ່າງຫຼວງຫຼາຍ.<br>- ເມືອງເຟືອງໄດ້ຮັບຄວາມສົນໃຈຈາກນັກທ່ອງທ່ຽວຫຼາຍເຮັດໃຫ້ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວໃໝ່.<br>- ພັກ-ລັດຖະບານພວມສຸມໃສ່ໃນການພັດທະນາໂຄງລ່າງພື້ນຖານ ຊຶ່ງຈະເປັນຂໍ້ສະດວກໃນການເຂົ້າ-ອອກ, ອອກ-ເຂົ້າຂອງນັກທ່ອງທ່ຽວ ໄດ້ສະດວກ.<br>- ລັດຖະບານໄດ້ເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນ ຊຶ່ງມີສອງສະຖານີທີ່ຢູ່ບໍ່ໄກຈາກເມືອງເຟືອງ ເປັນ | - ການລະບາດຂອງພະຍາດ Covid 19 ທີ່ຮຸນແຮງມີລັກສະນະຍາວນານ ໄດ້ສົ່ງຜົນກະທົບຕໍ່ການພັດທະນາການທ່ອງທ່ຽວ.<br>- ທ່າແຮງດ້ານການທ່ອງທ່ຽວພາຍໃນເມືອງຍັງບໍ່ໄດ້ຮັບການສຳຫຼວດ, ຈັດສັນ ແລະ ກຳນົດຂອບເຂດຈຶ່ງເຮັດໃຫ້ການພັດທະນາໃນຂົງເຂດອື່ນສົ່ງຜົນກະທົບຕໍ່ແຫຼ່ງທ່ອງທ່ຽວເປັນຕົ້ນການຂຸດຄົ້ນແຮ່ທາດຕ່າງໆ.<br>- ໂຮງງານອຸດສະຫະກຳຢູ່ໃກ້ຕົວເມືອງເຮັດໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ເຊັ່ນ: ໂຮງງານຂຸດຄົ້ນຖ່ານຫີນ, ໂຮງງານຊີມັງ.<br>- ການຄຸ້ມຄອງສັດລ້ຽງຢູ່ຕາມເສັ້ນທາງເທດສະບານ |

| | |
|---|---|
| ໂອກາດທີ່ດີທີ່ນັກທ່ອງທ່ຽວຈະມາທ່ຽວ ເມືອງເຟືອງຫຼາຍແບບກ້າວກະໂດດໃນອະນາຄົດ<br>- ເມືອງເຟືອງເປັນຈຸດໃຈກາງເຊື່ອມຕໍ່ກັບບັນດາເມືອງທ່ອງທ່ຽວທີ່ສຳຄັນ ເຊັ່ນ: ນະຄອນຫຼວງວຽງຈັນ ແລະ ເມືອງວັງວຽງ. | ເມືອງ |

# ພາກທີ່ III

# ແຜນພັດທະນາການທ່ອງທ່ຽວ ແຕ່ປີ 2023-2033

## 1. ບ່ອນອີງ

- ອີງຕາມ ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 9 (2021-2025)
- ອີງຕາມ ແຜນພັດທະນາການທ່ອງທ່ຽວຂອງ ສປປ ລາວ ສໍາລັບປີ (2021-2025)
- ອີງຕາມ ບົດສະຫຼຸບການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ່ II (ປີ 2015 – 2019) ແລະ ທິດທາງແຜນການ 5 ປີ ຄັ້ງທີ່ III ສໍາລັບປີ (2020 – 2024), ສະບັບເລກທີ່ 157/ຖວທ, ລົງວັນທີ່ 11 ທັນວາ 2019
- ອີງຕາມ ແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ຄັ້ງທີ່ VI (2021 – 2025) ຂອງແຂວງວຽງຈັນ
- ອີງຕາມ ແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ຄັ້ງທີ່ III ສໍາລັບປີ (2020 – 2024) ຂອງເມືອງ ເຟືອງ

## 2. ວິໄສທັດ/ຈຸດໝາຍລວມ:

"ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວເມືອງເຟືອງໃຫ້ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວທາງດ້ານທໍາມະຊາດ ແລະ ວັດທະນະທໍາທີ່ໂດດເດັ່ນ, ມີຄຸນນະພາບ ແລະ ຍືນຍົງ ປະກອບສ່ວນຢ່າງແຂງແຮງເຂົ້າໃນການພັດທະນາຂະແໜງເສດຖະກິດຂອງເມືອງ ແລະ ແຂວງ, ເຊື່ອມໂຍງການທ່ອງທ່ຽວກັບບັນດາເມືອງທີ່ໃກ້ຄຽງ ແລະ ພາກພື້ນ".

## 3. ເປົ້າໝາຍ: ປະກອບມີ 3 ເປົ້າໝາຍໃຫຍ່:

### ເປົ້າໝາຍທີ 1: ເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່ໂດດເດັ່ນ ແລະ ມີຄຸນນະພາບ

- ພັດທະນາໂຄງລ່າງພື້ນຖານ ແລະ ສິ່ງອໍານວຍຄວາມສະດວກດ້ານການທ່ອງທ່ຽວໃຫ້ມີຄຸນນະພາບ;
- ພັດທະນາຜະລິດຕະພັນ ແລະ ກິດຈະກໍາການທ່ອງທ່ຽວໃຫ້ມີຄວາມເປັນເອກະລັກສະເພາະ, ມີຄວາມຫຼາກຫຼາຍ, ສາມາດດຶງດູດນັກທ່ອງທ່ຽວໃຫ້ຢູ່ຫຼາຍວັນ ແລະ ໃຊ້ຈ່າຍຫຼາຍ;
- ໂຄສະນາຜ່ານຫຼາຍຊ່ອງທາງໃຫ້ເຂົ້າເຖິງກຸ່ມເປົ້າໝາຍຕະຫຼາດຫຼັກ;
- ປັບປຸງການບໍລິການໃຫ້ມີຄວາມສະອາດ, ປອດໄພ ແລະ ສ້າງຄວາມປະທັບໃຈໃຫ້ແກ່ນັກທ່ອງທ່ຽວ.

### ເປົ້າໝາຍທີ 2: ຊຸກຍູ້ການພັດທະນາຕາມທິດສີຂຽວ ແລະ ຍືນຍົງ

- ສົ່ງເສີມການມີສ່ວນຮ່ວມໃນການປົກປັກຮັກສາຊັບພະຍາກອນການທ່ອງທ່ຽວ, ສິ່ງແວດລ້ອມ ແລະ ຄວາມເປັນເອກະລັກສະເພາະທາງດ້ານວັດທະນະທໍາຂອງທ້ອງຖິ່ນ;
- ສົ່ງເສີມການພັດທະນາທີ່ເປັນມິດກັບສິ່ງແວດລ້ອມ ແລະ ການບໍລິຫານຄຸ້ມຄອງໃຫ້ມີປະສິດທິພາບ;
- ພັດທະນາການທ່ອງທ່ຽວ ໃຫ້ເປັນໜຶ່ງໃນທ່າແຮງບູລິມະສິດ ແລະ ເປັນແຫຼ່ງລາຍຮັບທີ່ສໍາຄັນຂອງເມືອງ;

- ສ້າງວຽກເຮັດງານທໍາ ແລະ ກະຈາຍລາຍຮັບລົງສູ່ປະຊາຊົນທ້ອງຖິ່ນ;
- ນໍາໃຊ້ທ່າແຮງຂອງການທ່ອງທ່ຽວ ໃນການຊຸກຍູ້ການພັດທະນາໂຄງລ່າງພື້ນຖານ ແລະ ການບໍລິການຂອງຂະ ແໜງການອ້ອມຂ້າງໃຫ້ມີການພັດທະນາໄປພ້ອມໆກັນ;
- ສ້າງນະໂຍບາຍທີ່ເອື້ອອໍານວຍໃຫ້ແກ່ການລົງທຶນໃນຂະແໜງການທ່ອງທ່ຽວ;
- ສົ່ງເສີມການຜະລິດ ແລະ ນໍາໃຊ້ຜະລິດຕະພັນຂອງທ້ອງຖິ່ນທີ່ເປັນມິດຕໍ່ສິ່ງແວດລ້ອມ;
- ສົ່ງເສີມການຜະລິດ ແລະ ບໍລິໂພກອາຫານສະອາດ ແລະ ປອດໄພ.

**ເປົ້າໝາຍທີ 3: ເຊື່ອມໂຍງການທ່ອງທ່ຽວກັບບັນດາເມືອງທີ່ໃກ້ຄຽງ ແລະ ພາກພື້ນ**

- ພັດທະນາການທ່ອງທ່ຽວຂອງເມືອງເຟືອງໃຫ້ສາມາດເຊື່ອມໂຍງກັບບັນດາຕົວເມືອງທ່ອງທ່ຽວ ໂດຍສຸມໃສ່ນັກທ່ອງທ່ຽວທີ່ມາຈາກນະຄອນຫຼວງວຽງຈັນ, ວັງວຽງ, ໄຊຍະບູລີ, ຫຼວງພະບາງ ແລະ ປະເທດໄທ (ຈັງຫວັດເລີຍ);
- ປັບປຸງໂຄງລ່າງພື້ນຖານ ແລະ ສິ່ງອໍານວຍຄວາມສະດວກຕາມເສັ້ນທາງຫຼັກເຂົ້າເຖິງເມືອງເຟືອງ ທັງພາຍໃນ ແລະ ພາກພື້ນ;
- ຊຸກຍູ້ສົ່ງເສີມ ແລະ ພັດທະນາການບໍລິການການທ່ອງທ່ຽວໃຫ້ຕິດພັນກັບເຄືອຂ່າຍການທ່ອງທ່ຽວກັບພາຍໃນ ແລະ ພາກພື້ນ.

## 4. ຄາດໝາຍຕົ້ນຕໍ/ຄາດໝາຍສູ້ຊົນ

- ດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດໃນການພັດທະນາແຫຼ່ງທ່ອງທ່ຽວທີ່ໂດດເດັ່ນຂອງເມືອງເຟືອງໃຫ້ໄດ້ 05 ແຫ່ງ;
- ຮອດປີ 2033 ສູ້ຊົນໃຫ້ມີນັກທ່ອງທ່ຽວເຂົ້າມາຢ້ຽມຢາມເມືອງເຟືອງໃຫ້ໄດ້ 500,000 ຄົນຕໍ່ປີ, ສະເລ່ຍໄລຍະການພັກເຊົາຂອງນັກທ່ອງທ່ຽວບໍ່ຕໍ່າກວ່າ 2-3 ວັນ/ຄືນ, ສ້າງລາຍຮັບຈາກການທ່ອງທ່ຽວໃຫ້ໄດ້ບໍ່ຕໍ່າກວ່າ 40-50 ໂດລາສະຫະລັດຕໍ່ຄົນຕໍ່ມື້;
- ສູ້ຊົນປັບປຸງລະບົບໂຄງລ່າງພື້ນຖານສິ່ງອໍານວຍຄວາມສະດວກ, ເສັ້ນທາງເຊື່ອມຕໍ່ ແລະ ເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວ ສິ່ງຮອງຮັບດ້ານການທ່ອງທ່ຽວໃຫ້ສະດວກ ແລະ ດີກວ່າເກົ່າ;
- ສົ່ງເສີມການລົງທຶນດ້ານສະຖານທີ່ພັກເຊົາ, ໂຮງແຮມ ຫຼື ລີສອດໃນລະດັບ 3-4 ດາວທີ່ມີຫ້ອງປະຊຸມພ້ອມຢ່າງໜ້ອຍ 3 ແຫ່ງ, ຮ້ານອາຫານທີ່ໄດ້ມາດຕະຖານໃຫ້ໄດ້ຫຼາຍກ່ວາ 5 ແຫ່ງ, ສູນຈໍາໜ່າຍຜະລິດຕະພັນ ແລະ ເຄື່ອງທີ່ລະນຶກຂອງທ້ອງຖິ່ນໃນຕົວເມືອງໃຫ້ໄດ້ 1 ແຫ່ງ;
- ສ້າງສູນຂໍ້ມູນຂ່າວສານການທ່ອງທ່ຽວຂອງເມືອງໃຫ້ໄດ້ 1 ແຫ່ງ ພ້ອມທັງສະໜອງສິ່ງພິມໂຄສະນາກ່ຽວກັບການທ່ອງທ່ຽວແບບອອນໄລ ແລະ ອໍອບໄລໃຫ້ຄົບຖ້ວນພຽງພໍກັບຄວາມຕ້ອງການຂອງຜູ້ຊົມໃຊ້;
- ສູ້ຊົນສໍາຫລວດ, ຈັດສັນກໍານົດຂອບເຂດ, ປັກຫຼັກໝາຍ ແລະ ອອກໃບຢັ້ງຢືນ ໃຫ້ໄດ້ 5 ແຫ່ງ; ສ້າງແຜນພັດທະນາແຫຼ່ງທ່ອງທ່ຽວໃຫ້ໄດ້ 5 ແຫ່ງ;

- ສູ້ຊົນສ້າງເມືອງເຟືອງໃຫ້ເປັນເມືອງທ່ອງທ່ຽວສະອາດ ສປປ ລາວ ແລະ ພັດທະນາສະຖານທີ່ທ່ອງທ່ຽວໃຫ້ໄດ້ຕາມມາດຕະຖານການຈັດລະດັບສະຖານທີ່ທ່ອງທ່ຽວໃຫ້ໄດ້ 3 ຂຶ້ນໄປຈຳນວນ 3 ແຫ່ງ;
- ສູ້ຊົນພັດທະນາຜະລິດຕະພັນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໃຫ້ໄດ້ 3-5 ຜະລິດຕະພັນ.
- ສຸມໃສ່ປັບປຸງ ແລະ ສ້າງນິຕິກຳການທ່ອງທ່ຽວໃຫ້ສອດຄ່ອງກັບຄວາມຕ້ອງການໃນການພັດທະນາ ແລະ ຄຸ້ມຄອງການທ່ອງທ່ຽວໃນແຕ່ລະໄລຍະ;
- ຍົກລະດັບການບໍລິຫານ ແລະ ຄຸ້ມຄອງໃຫ້ແກ່ພາກລັດ ແລະ ພາກທຸລະກິດດ້ານການບໍລິການໂຮງແຮມ, ຮ້ານອາຫານ ແລະ ການບໍລິການນຳທ່ຽວ ໃຫ້ໄດ້ຫຼາຍກວ່າ 100 ຄົນ;
- ສັງລວມ, ຮຽບຮຽງປະຫວັດຄວາມເປັນມາຂອງນິທານພື້ນບ້ານກ່ຽວກັບສັງສິນໄຊ ແລະ ຜາທໍ່ໜໍ່ຄຳລວມ ທັງການສ້າງປະຕິມາກຳໃຫ້ເປັນສັນຍາລັກຂອງເມືອງເຟືອງ.

## 5. ການກຳນົດເຂດ ແລະ ແນວຄວາມຄິດການພັດທະນາ

### 5.1 ການກຳນົດເຂດພັດທະນາການທ່ອງທ່ຽວ

ອີງໃສ່ກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 32/ສພຊ, ລົງວັນທີ 24/7/1013 ໃນໝວດທີ 2 ມາດຕາ 66 ໄດ້ກຳນົດການແບ່ງເຂດພັດທະນາແຫຼ່ງທ່ອງທ່ຽວ ແບ່ງເປັນ 3 ເຂດ ດັ່ງນີ້:

- ເຂດອະນຸລັກ: ແມ່ນເຂດທີ່ບໍ່ອະນຸຍາດໃຫ້ມີການທຳລາຍ, ປຸກສ້າງ, ດັດແປງຕໍ່ເຕີມ, ບຸກເບີກ ແລະ ອື່ນໆທີ່ຜິດພ້ຽນໄປຈາກເດີມ ມີພຽງແຕ່ບູລະນະ ຫຼື ປະຕິສັງຂອນໃຫ້ຢູ່ໃນສະພາບເດີມ. ເຂດອະນຸລັກຂອງເມືອງເຟືອງແມ່ນກຳນົດເອົາພື້ນທີ່ທີ່ມີຮອງຮອຍປະຫວັດສາດ, ບູຮານສະຖານ ແລະ ເຂດທີ່ມີຄວາມອ່ອນໄຫວທາງດ້ານທຳມະຊາດ.
- ເຂດສະຫງວນ: ແມ່ນເຂດທີ່ຕ້ອງຮັກສາໄວ້ສຳລັບການພັດທະນາເພື່ອສະໜັບສະໜູນກິດຈະກຳສາທາລະນະ ແລະ ຜົນປະໂຫຍດລວມ ໃຫ້ແກ່ການທ່ອງທ່ຽວ ເປັນຕົ້ນແມ່ນພື້ນທີ່ທີ່ເໝາະສຳລັບສ້າງເປັນຈຸດຊົມວິວ, ບ່ອນຕັ້ງຄ້າຍພັກແຮມ, ຈຸດແວ່ພັກເຊົາຂອງນັກທອງທ່ຽວ, ເສັ້ນທາງຍ່າງ, ເຂດແຄມນ້ຳ, ເຂດຕີນຜາ ແລະ ອື່ນໆ
- ເຂດບໍລິການຮັບໃຊ້ນັກທ່ອງທ່ຽວ: ແມ່ນເຂດສົ່ງເສີມໃຫ້ມີການພັດທະນາສິ່ງອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວຢ່າງເປັນລະບົບເຊັ່ນ: ກິດຈະການທ່ອງທ່ຽວ, ກິດຈະການພັກແຮມ, ກິດຈະການອາຫານ, ການຄ້າ ແລະ ການບໍລິການອື່ນໆ

ອີງໃສ່ສະພາບເງື່ອນໄຂແວດລ້ອມ ແລະ ຈຸດພິເສດຂອງເມືອງເຟືອງເຫັນໄດ້ວ່າ ທາງດ້ານທິດເໜືອມີຈຸດເດັ່ນທາງດ້ານທຳມະຊາດທີ່ຕິດພັນກັບແຫຼ່ງນ້ຳ ໂດຍມີອ່າງນ້ຳລີກ ແລະ ສາຍນ້ຳລີກເປັນທ່າແຮງຫຼັກ, ສ່ວນທາງໃຕ້ມີຈຸດເດັ່ນທາງທຳມະຊາດທີ່ຕິດພັນກັບວັດທະນະທຳ ໂດຍມີວັດວາອາຮາມທີ່ມີຊື່ສຽງ ແລະ ມີແຮງສັດທາຈຳນວນຫຼາຍ ນອກຈາກນັ້ນຍັງມີຄວາມເຊື່ອທີ່ຕິດພັນກັບວັນນະກຳສັງສິນໄຊ ຊຶ່ງຖືກນຳມາອະທິບາຍ ແລະໃຫ້ຄວາມໝາຍແກ່ສະຖານທີ່ຕ່າງໆ, ສຳລັບເຂດກາງແມ່ນເປັນຕົວເມືອງເທດສະບານມີຈຸດເດັ່ນທີ່ທິວທັດສວຍງາມ ຄຽງຄູ່ກັບປະຫວັດສາດການຕໍ່ສູ້ກູ້ຊາດ ແລະ ການກຳເນີດເກີດຂອງເມືອງເຟືອງ; ສະນັ້ນ ການວາງແຜນຜັງ

ພັດທະນາການທ່ອງທ່ຽວເມືອງເຟືອງ ຈຶ່ງແບ່ງພື້ນທີ່ອອກເປັນ 3 ເຂດທີ່ມີພາລະບົດບາດ ແລະ ຈຸດພິເສດແຕກຕ່າງກັນຕາມຄຸນລັກສະນະຄວາມໂດດເດັ່ນຂອງແຕ່ລະພື້ນທີ່ ເຊັ່ນ: ເຂດລ່ອງນໍ້າລີກ, ເຂດຜາທໍ່ໜໍ່ຄໍາ ແລະ ເຂດສັງສິນໄຊ (ເບິ່ງຮູບທີ 18).

- **ເຂດລ່ອງນໍ້າລີກ**

  ເນັ້ນໃສ່ການທ່ອງທ່ຽວທາງນໍ້າ ໂດຍສະເພາະການທ່ອງທ່ຽວອ່າງນໍ້າລີກ ແລະ ສາຍນໍ້າລີກ ຕິດພັນກັບການທ່ອງທ່ຽວຊຸມຊົນ, ກະສິກໍາອິນຊີ ແລະ ນິເວດວິທະຍາຕາມພູຜາ ແລະ ປ່າສະຫງວນຕ່າງໆ.

- **ເຂດຜາທໍ່ໜໍ່ຄໍາ (ເຂດເທດສະບານ)**

  ສ້າງເປັນສູນກາງບໍລິການນັກທ່ອງທ່ຽວ ຊຶ່ງເປັນທັງບ່ອນຕ້ອນຮັບ ແລະ ເຕົ້າໂຮມນັກທ່ອງທ່ຽວ ໂດຍມີກິດຈະກໍາການທ່ອງທ່ຽວທີ່ຕິດພັນກັບຕົວເມືອງ, ເທດສະການ, ສະຖານທີ່ຊົມວິວ, ພິພິດທະພັນ ແລະ ສວນອຸດທະຍານ.

- **ເຂດສັງສິນໄຊ**

  ເນັ້ນໃສ່ການທ່ອງທ່ຽວທາງດ້ານວັດທະນະທໍາຕິດພັນກັບທໍາມະຊາດ ໂດຍສະເພາະການທ່ອງທ່ຽວຕາມຮອຍສັງສິນໄຊໄປຕາມສະຖານທີ່ຕ່າງໆ ຄຽງຄູ່ກັນກັບທ່ຽວຊົມວັດວາອາຮາມ.




ຮູບທີ 18: ແຜນທີ່ແບ່ງເຂດການທ່ອງທ່ຽວໃນເມືອງເຟືອງ

### 5.1.1 ການແບ່ງເຂດພັດທະນາການທ່ອງທ່ຽວໃນເຂດລ່ອງນໍ້າລີກ

ເຂດລ່ອງນໍ້າລີກ ໄດ້ແບ່ງເຂດນໍາໃຊ້ທີ່ດິນທີ່ຕິດພັນກັບການທ່ອງທ່ຽວ ດັ່ງນີ້:

1) ບໍ່ໄດ້ກໍານົດເຂດໃດໃຫ້ເປັນເຂດອະນຸລັກ.

2) ເຂດສະຫງວນສໍາລັບພັດທະນາແຫຼ່ງທ່ອງທ່ຽວໂດຍກໍານົດເອົາ 5 ເຂດທີ່ມີທ່າແຮງພັດທະນາເປັນແຫຼ່ງທ່ອງທ່ຽວທາງທໍາມະຊາດ ຄື: ຜາຕິ້ງ, ຜາເລືອງ, ຜາຫີນກັບໄຟ, ອ່າງເກັບນໍ້າບ້ານງວ້າ ແລະ ແກ້ງປືນ; ເຂດສະຫງວນດິນຜາແມ່ນນັບກວມເອົາດິນບໍລິເວນອ້ອມຮອບໃນລັດສະໝີ 50 ແມັດເຂົ້ານໍາ, ສ່ວນອ່າງເກັບນໍ້າແມ່ນສະຫງວນດິນບໍລິເວນນໍ້າທັງໝົດຕາມກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າກໍານົດໄວ້, ສໍາລັບແກ້ງປືນແມ່ນສະຫງວນດິນບໍລິເວນອ້ອມຮອບໃນລັດສະໝີ 500 ແມັດ.

3) ເຂດສະຫງວນສໍາລັບກິດຈະກໍາສາທາລະນະ ແລະ ເຊື່ອມໂຍງການທ່ອງທ່ຽວ ແມ່ນກໍານົດເອົາສອງຝັ່ງແມ່ນໍ້າລີກເບື້ອງລະ 15 ແມັດ ລວມເຖິງເກາະດອນຕ່າງໆ ທີ່ນອນໃນປະເພດເຂດດິນບໍລິເວນນໍ້າຕາມກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າກໍານົດ, ເຂດດັ່ງກ່າວສະຫງວນໄວ້ສໍາລັບຮັບໃຊ້ໃຫ້ແກ່ປະໂຫຍດສາທາລະນະ, ກໍ່ສ້າງເສັ້ນທາງລຽບແຄມນໍ້າ, ການກໍ່ສ້າງຄູກັນນໍ້າ, ການກໍ່ສ້າງກັນເຈື່ອນ ແລະ ການປົກປັກຮັກສາແຫຼ່ງນໍ້າ. ຫ້າມມອບໂອນ ຫຼື ແລກປ່ຽນກໍາມະສິດ.

4) ເຂດສະຫງວນສໍາລັບຮັກສາທິວທັດ ແລະ ທໍາມະຊາດ ເປັນເຂດທີ່ຕ້ອງການຮັກສາພື້ນທີ່ເປີດໂລ່ງເພື່ອການແນມເຫັນທິວທັດທໍາມະຊາດ, ທົ່ງນາ ແລະ ພູມິທັດວັດທະນະທໍາ ໂດຍຫ້າມບໍ່ໃຫ້ມີການປຸກສ້າງອາຄານບ້ານເຮືອນທີ່ມີລັກສະນະບົດບັງ ຫຼື ສ້າງຄວາມເສຍຫາຍໃຫ້ແກ່ພູມິທັດ, ທີ່ດິນປະເພດດັ່ງກ່າວກໍານົດໄວ້ຢູ່ 5 ເຂດໄດ້ແກ່: ທົ່ງນາບ້ານນາແຊງ, ທົ່ງນາບ້ານນາໃໝ່-ປາກງວ້າ, ທົ່ງນາບ້ານສີສະອາດ, ທົ່ງນາບ້ານແກ້ງຊຽງ ແລະ ທົ່ງນາບ້ານປາກງວ້າ-ຕີຜາຕິ້ງ.

5) ເຂດໃຈກາງການບໍລິການນັກທ່ອງທ່ຽວ ເປັນເຂດສົ່ງເສີມການພັດທະນາສິ່ງອໍານວຍຄວາມສະດວກ ແລະ ການບໍລິການນັກທ່ອງທ່ຽວ ຊຶ່ງກໍານົດໄວ້ 2 ຈຸດຄື: ເຂດບ້ານເມືອງເຟືອງ ແລະ ເຂດໜ້າເຂື່ອນນໍ້າລີກ.

6) ເຂດຊຸມຊົນ ເປັນເຂດສົ່ງເສີມການບໍລິການທີ່ພັກ Home Stay ແລະ ການທ່ອງທ່ຽວທາງດ້ານວິຖີຊີວິດ, ວັດທະນະທໍາ ແລະ ຫັດຖະກໍາຊຸມຊົນ; ໂດຍມີທັງໝົດ 9 ບ້ານເປົ້າໝາຍ ຄື: ບ້ານສາມໝື່ນ, ບ້ານຄອນເລືອງ, ບ້ານນາແຊງ, ບ້ານໜອງເປັດ, ບ້ານນາໃໝ່, ບ້ານນາບອນ, ບ້ານງວ້າ, ບ້ານສີສະອາດແລະ ບ້ານແກ້ງຊຽງ.

7) ເຂດເຮືອນແພ ແລະ ທ່ອງທ່ຽວທາງນໍ້າ ເປັນເຂດທີ່ອະນຸຍາດໃຫ້ມີການກໍ່ສ້າງເຮືອນແພລອຍນໍ້າ ເພື່ອນໍາໃຊ້ເປັນຮ້ານອາຫານ ຫຼື ທີ່ພັກ ລວມເຖິງການຫຼິ້ນນໍ້າ-ລ່ອງເຮືອຮູບແບບຕ່າງໆຕາມລໍາແມ່ນໍ້າລີກ ໂດຍແບ່ງອອກເປັນ 4 ເຂດຍ່ອຍທີ່ມີຂໍ້ກໍານົດແຕກຕ່າງກັນດັ່ງນີ້:

- ເຂດເຮືອນແພ ແລະ ການທ່ອງທ່ຽວທາງນໍ້າແບບຄຶກຄື້ນ ເລີ່ມຕັ້ງແຕ່ຊາຍແດນບ້ານເມືອງເຟືອງແລະບ້ານສາມໝື່ນຈົນຮອດປ່າຊ້າບ້ານເມືອງເຟືອງ; ເຂດນີ້ອະນຸຍາດໃຫ້ມີກິດຈະກໍາມ່ວນຊື່ນ, ເປີດເພງ ແລະ ບັນເທີງຕາມເຮືອນແພ, ຮ້ານອາຫານ, ຫາດ, ດອນ ແລະ ເຂດແຄມນໍ້າ; ກິດຈະກໍາທາງນໍ້າທີ່ອະນຸຍາດ ປະກອບມີ: ຫຼິ້ນນໍ້າຫາດ, ລ່ອງເຮືອແພສໍາລານ, ລ່ອງເຮືອຫາງຍາວ, ລ່ອງເຮືອກາຍັກ, ລ່ອງເຮືອຄະນູ ແລະ ອື່ນໆ, ສ່ວນກິດຈະກໍາທີ່ຫ້າມ ປະກອບມີ: ຂີ່ເຈັດສະກີ, ຂີ່ເຮືອລາກ, ລ່ອງກົງເບັງ ເປັນຕົ້ນ;

- ເຂດເຮືອນແພ ແລະ ການທ່ອງທ່ຽວທາງນ້ຳແບບທຳມະຊາດປະສົມປະສານກັບວັດທະນະທຳ ມີຂອບເຂດເລີ່ມແຕ່ກ້ອງເຂື່ອນນ້ຳລີກ ຮອດຊາຍແດນບ້ານສາມໝື່ນ ແລະ ບ້ານເມືອງເຟືອງ; ເປັນເຂດສົ່ງເສີມການພັດທະນາແຫຼ່ງທ່ອງທ່ຽວ ຫຼື ເຮືອນແພແບບອະນຸລັກ ທີ່ເນັ້ນການປົກປັກຮັກສາທຳມະຊາດ ແລະ ອະນຸລັກວັດທະນະທຳ ເຊື່ອມປະສານເຂົ້າກັບການທ່ອງທ່ຽວຊຸມຊົນ ແລະ ກະສິກຳຕາມແຄມແມ່ນ້ຳ; ຫຼີກລ້ຽງການເປີດເຄື່ອງສຽງດັງລົບກວນການພັກຜ່ອນ ແລະ ຊຸມຊົນ; ກິດຈະກຳທາງນ້ຳທີ່ອະນຸຍາດ ປະກອບມີ: ຫຼິ້ນນ້ຳຫາດ, ລ່ອງເຮືອຫາງຍາວ, ລ່ອງເຮືອກາຍັກ, ລ່ອງເຮືອຄະນູ, ລ່ອງກົງເບັ້ງ, ລ່ອງແພໄມ້ໄຜ່ ແລະ ອື່ນໆ, ສ່ວນກິດຈະກຳທາງນ້ຳທີ່ຫ້າມ ປະກອບມີ: ລ່ອງເຮືອແພສຳລານທີ່ມີສຽງດັງ, ຂີ່ເຈັດສະກີ, ຂີ່ເຮືອລາກ ເປັນຕົ້ນ;

- ເຂດເຮືອນແພ ແລະ ການທ່ອງທ່ຽວທາງນ້ຳແບບທຳມະຊາດທີ່ງຽບສະຫງົບ ມີຂອບເຂດເລີ່ມຕັ້ງແຕ່ກ້ອງປ່າຊ້າບ້ານເມືອງເຟືອງ ຈົນຮອດແກ້ງປຶນ; ເປັນເຂດທີ່ສົ່ງເສີມການທ່ອງທ່ຽວແບບສະຫງົບງຽບ ເນັ້ນການພັກຜ່ອນໃກ້ຊິດກັບທຳມະຊາດ; ກິດຈະກຳທາງນ້ຳທີ່ອະນຸຍາດ ປະກອບມີ: ລ່ອງເຮືອຫາງຍາວ, ລ່ອງເຮືອກາຍັກ, ລ່ອງເຮືອຄະນູ, ລ່ອງແພໄມ້ໄຜ່, ລ່ອງເຮືອລົມລ່ອງແກ້ງ ແລະ ອື່ນໆ, ສ່ວນກິດຈະກຳທາງນ້ຳທີ່ຫ້າມປະກອບມີ: ລ່ອງເຮືອແພສຳລານທີ່ມີສຽງເຄື່ອງຈັກ ແລະ ສຽງເພັງດັງ, ຂີ່ເຈັດສະກີ, ຂີ່ເຮືອໄວທີ່ມີສຽງເຄື່ອງຈັກດັງຮຸນແຮງເກີນ 80 dB;

- ເຂດເຮືອນແພ ແລະ ການທ່ອງທ່ຽວທາງນ້ຳໜ້າອ່າງນ້ຳລີກ ເປັນເຂດສົ່ງເສີມກິດຈະກຳການຫຼິ້ນນ້ຳທີ່ຫຼາກຫຼາຍທັງຮູບແບບສອນສະໜຸກລອຍນ້ຳ ລວມໄປເຖິງການຂີ່ເຮືອທ່ອງທ່ຽວ ແລະ ກິລາທາງນ້ຳປະເພດຕ່າງໆ.




ຮູບທີ 19: ແຜນທີ່ແບ່ງເຂດພັດທະນາການທ່ອງທ່ຽວ ເຂດລ່ອງນ້ຳລິກ

| ສັນຍາລັກ | ປະເພດການໃຊ້ທີ່ດິນ | ລາຍລະອຽດ |
|---|---|---|
| | C: ເຂດອະນຸລັກ | ບໍ່ມີ |
| | Ra: ເຂດສະຫງວນ ສໍາລັບພັດທະນາແຫຼ່ງ ທ່ອງທ່ຽວ | Ra1: ເຂດສະຫງວນສາລັບພັດທະນາອຸດທະຍານຜາຕັ້ງ |
| | | Ra2: ເຂດສະຫງວນສາລັບພັດທະນາອຸດທະຍານຜາເລືອງ |
| | | Ra3: ເຂດສະຫງວນສາລັບພັດທະນາອຸດທະຍານຜາກັບໄຟ |
| | | Ra4: ເຂດສະຫງວນສາລັບການພັດທະນາແກ້ງປີນ |
| | | Ra5: ເຂດສະຫງວນສາລັບການພັດທະນາອ່າງເກັບນ້ຳບ້ານ ປາກງວ້າ |
| | Rb: ເຂດສະຫງວນ ສໍາລັບກິດຈະກໍາ ສາທາລະນະແລະເຊື່ອມ ໂຍງການທ່ອງທ່ຽວ | Rb1: ເຂດສະຫງວນແຄມນ້ຳລີກເພື່ອກິດຈະກາສາທາລະນະ ແລະ ເຊື່ອມໂຍງການທ່ອງທ່ຽວ |
| | Rc: ເຂດສະຫງວນ ສໍາລັບຮັກສາທິວທັດແລະ ທໍາມະຊາດ | Rc1: ເຂດສະຫງວນຮັກສາທິວທັດທົ່ງນາເຂດບ້ານນາແຊງ |
| | | Rc2: ເຂດສະຫງວນຮັກສາທິວທັດທົ່ງນາເຂດບ້ານນາໃໝ່ຫາບ້ານ ປາກງວ້າ |
| | | Rc3: ເຂດສະຫງວນຮັກສາທິວທັດທົ່ງນາເຂດບ້ານແກ້ງຊຽງ |
| | | Rc4: ເຂດສະຫງວນຮັກສາທິວທັດທົ່ງນາເຂດບ້ານສີສະອາດ |
| | | Rc5: ເຂດສະຫງວນຮັກສາທິວທັດທົ່ງນາເຂດບ້ານປາກງວ້າ ຫາ ຕີນຜາຕັ້ງ |
| | Sa: ເຂດໃຈກາງການ ບໍລິການນັກທ່ອງທ່ຽວ | Sa1: ເຂດໃຈກາງບໍລິການນັກທ່ອງທ່ຽວບ້ານເມືອງເຟືອງ |
| | | Sa2: ເຂດບໍລິການນັກທ່ອງທ່ຽວເຂດໜ້າອ່າງນ້ຳລີກ |
| | Sb: ເຂດຊຸມຊົນ | Sb1: ເຂດທ່ອງທ່ຽວຊຸມຊົນແລະ home stay ບ້ານນາແຊງ |
| | | Sb2: ເຂດທ່ອງທ່ຽວຊຸມຊົນແລະ home stay ບ້ານໜອງເປັດ ແລະ ບ້ານນາໃໝ່ |
| | | Sb3: ເຂດທ່ອງທ່ຽວຊຸມຊົນແລະ home stay ບ້ານປາກງ່ວງ ແລະ ບ້ານສີສະອາດ |
| | | Sb4: ເຂດທ່ອງທ່ຽວຊຸມຊົນ ແລະ home stay ບ້ານແກ້ງຊຽງ |
| | | Sb5: ເຂດທ່ອງທ່ຽວຊຸມຊົນ ແລະ home stay ບ້ານສາມໝື່ນ |
| | | Sb6: ເຂດທ່ອງທ່ຽວຊຸມຊົນແລະ home stay ບ້ານຄອນເລືອງ |
| | | Sb7: ເຂດທ່ອງທ່ຽວຊຸມຊົນແລະ home stay ບ້ານນາຂອນ |

| ສັນຍາລັກ | ປະເພດການໃຊ້ທີ່ດິນ | ລາຍລະອຽດ |
|---|---|---|
|  | Sc: ເຂດເຮືອນແພ ແລະ ທ່ອງທ່ຽວທາງນ້ຳ | Sc1: ເຮືອນແພແລະການທ່ອງທ່ຽວທາງນ້ຳແບບຄຶກຄື້ນ |
|  |  | Sc2: ເຮືອນແພແລະການທ່ອງທ່ຽວທາງນ້ຳແບບທຳມະຊາດປະສົມປະສານ ກັບວັດທະນະທຳ |
|  |  | Sc3: ເຮືອນແພແລະການທ່ອງທ່ຽວທາງນ້ຳແບບທຳມະຊາດທີ່ງຽບສະຫງົບ |
|  |  | Sc4: ເຮືອນແພແລະການທ່ອງທ່ຽວທາງນ້ຳໜ້າອ່າງນ້ຳລີກ |

### 5.1.2 ການແບ່ງເຂດພັດທະນາການທ່ອງທ່ຽວໃນເຂດຜາທໍ່ໜໍ່ຄຳ (ເຂດເທດສະບານ)

ເຂດຜາທໍ່ໜໍ່ຄຳ ໄດ້ແບ່ງເຂດຍ່ອຍສຳລັບການພັດທະນາການທ່ອງທ່ຽວ ລະອຽດດັ່ງນີ້:

1) ເຂດອະນຸລັກ ປະກອບມີ 2 ຈຸດ ໄດ້ແກ່:

- ຜາທໍ່ ກຳນົດເປັນເຂດອະນຸລັກ ເພື່ອປົກປັກຮັກສາສັນຍາລັກ ຜາທໍ່-ໜໍ່ຄຳ ໃຫ້ຢູ່ຄຽງຄູ່ກັບເມືອງເຟືອງສືບໄປ, ໂດຍຫ້າມບໍ່ໃຫ້ມີການກໍ່ສ້າງ, ຂຸດເຈາະ, ຂຸດຄົ້ນຫີນ-ແຮ່ທາດ ແລະ ພັດທະນາໃດໆທີ່ມີຄວາມສ່ຽງກະທົບຕໍ່ໂຄງສ້າງທໍລະນີ, ທິວທັດ, ລະບົບນິເວດ, ຮ່ອງຮອຍປະຫວັດສາດ-ວັດທະນະທຳ ແລະ ຄວາມອ່ອນໄຫວທາງດ້ານທຳມະຊາດຕ່າງໆ.

- ກົກແຕ້ ວັດບ້ານນາທົ່ວ ອະນຸລັກໄວ້ເປັນແຫຼ່ງທ່ອງທ່ຽວທາງປະຫວັດສາດ ທີ່ສະທ້ອນເຖິງຄວາມພິລາອາດຫານຂອງປະຊາຊົນຊາວເມືອງເຟືອງ ພ້ອມທັງເປັນບ່ອນລະລຶກເຖິງຄຸນງາມຄວາມດີຂອງບັນພະບູລຸດທີ່ໄດ້ເສຍສະຫຼະຊີວິດເພື່ອພາລະກິດປົດປ່ອຍປະເທດຊາດ.

2) ເຂດສະຫງວນສຳລັບພັດທະນາແຫຼ່ງທ່ອງທ່ຽວ ປະກອບມີ:

- ເຂດອ້ອມຮອບຜາທໍ່ ຫ່າງຈາກຕີນຜາໃນໄລຍະ 50 ແມັດ ສະຫງວນໄວ້ສຳລັບພັດທະນາເປັນອຸດທະຍານເຈົ້າຜາທໍ່.

- ເຂດພູຂຽວດ້ານຫຼັງຕົວເມືອງສະຫງວນໄວ້ສຳລັບພັດທະນາເປັນອຸດທະຍານ ແລະ ຈຸດຊົມວິວທິວທັດ.

- ເຂດເປີ້ນພູນ້ອຍໃຫຍ່ຢູ່ດ້ານຫຼັງຕົວເມືອງສະຫງວນໄວ້ສຳລັບການລົງທຶນພັດທະນາເປັນໂຮງແຮມປະເພດ Boutique Resort.

3) ເຂດສະຫງວນສຳລັບກິດຈະກຳສາທາລະນະແລະເຊື່ອມໂຍງການທ່ອງທ່ຽວ ສຳລັບເຂດທີ່ນອນໃນຂອບເຂດແຜນຜັງເມືອງລວມແມ່ນຖືເອົາຕາມຂອບເຂດທີ່ກຳນົດເປັນທີ່ດິນປະເພດທຳມະຊາດ (NE) ໂດຍສະເພາະບໍລິເວນແຄມນ້ຳຕຶງ ແລະ ຫ້ວຍຫຼ້າ, ສ່ວນເຂດທີ່ຢູ່ນອກແຜນຜັງເມືອງລວມ ແມ່ນກຳນົດເອົາແຄມແມ່ນ້ຳເບື້ອງລະ 15 ແມັດ.

4) ເຂດສະຫງວນສຳລັບຮັກສາທິວທັດແລະທຳມະຊາດ ເປັນເຂດທີ່ຕ້ອງການຮັກສາພື້ນທີ່ເປີດໂລ່ງ ເພື່ອການແນບເຫັນທິວທັດທຳມະຊາດ ໂດຍສະເພາະການແນບເຫັນຜາທໍ່ ທີ່ເປັນສັນຍາລັກຂອງເມືອງເຟືອງ ດັ່ງນັ້ນຈຶ່ງໄດ້ກຳນົດເຂດສະຫງວນທີ່ເປັນທົ່ງນາຢູ່ 2 ຈຸດ ຊຶ່ງສອດຄ່ອງກັບການຈັດແບ່ງທີ່ດິນປະເພດກະສິກຳຢູ່ໃນແຜນຜັງເມືອງລວມ ໄດ້ແກ່:

- ເຂດທົ່ງນາອ້ອມຮອບຜາທົ່.

- ເຂດທົ່ງນາລະຫວ່າງຕົວເມືອງຫາບ້ານທ່າ-ບ້ານດອນ ທັງສອງຝາກຖະໜົນ.

ທັງສອງເຂດນີ້ ຫ້າມບໍ່ໃຫ້ມີການປຸກສ້າງອາຄານ-ບ້ານເຮືອນທີ່ມີລັກສະນະບົດບັງ ຫຼື ສ້າງຄວາມເສຍຫາຍໃຫ້ແກ່ພູມີທັດ.

5) ເຂດໃຈກາງການບໍລິການນັກທ່ອງທ່ຽວ ປະກອບມີ 2 ຈຸດ ໄດ້ແກ່:

- ເຂດໃຈກາງບໍລິການນັກທ່ອງທ່ຽວໃນຕົວເມືອງ ເປັນເຂດສົ່ງເສີມການພັດທະນາສິ່ງອຳນວຍຄວາມສະດວກ ແລະ ການບໍລິການນັກທ່ອງທ່ຽວຢ່າງຮອບດ້ານ , ສົ່ງເສີມການລົງທຶນພັດທະນາໂຮງແຮມ, ຮ້ານອາຫານ, ຫ້ອງປະຊຸມ-ສຳມະນາຂະໜາດໃຫຍ່ ສາມາດຮອງຮັບນັກທ່ອງທ່ຽວໄດ້ຈຳນວນຫຼາຍ, ສ້າງສະພາບແວດລ້ອມພາຍໃນຕົວເມືອງໃຫ້ໜ້າຢູ່-ໜ້າທ່ຽວຊົມ ພ້ອມທັງສ້າງເງື່ອນໄຂໃຫ້ເກີດກິດຈະກຳການທ່ອງທ່ຽວທີ່ຫຼາກຫຼາຍທັງການເວັນ ແລະ ກາງຄືນ.

- ເຂດຕ້ອນຮັບນັກທ່ອງທ່ຽວບ້ານທ່າ ແລະ ບ້ານດອນ ເປັນດັ່ງປະຕູເຂົ້າ-ອອກເມືອງ ສະນັ້ນກິດຈະກຳທີ່ສົ່ງເສີມໃນເຂດນີ້ຄືການບໍລິການອາຫານ, ຂາຍເຄື່ອງຕ້ອນ-ເຄື່ອງຝາກ, ການແລກປ່ຽນເງິນຕາ, ການປ່ຽນຖ່າຍການຄົມມະນາຄົມສາທາລະນະ, ການເຊົ່າລົດ ແລະ ການບໍລິການອື່ນໆທີ່ຕິດພັນກັບການເດີນທາງ.

6) ເຂດຕົວເມືອງ ແລະ ຊຸມຊົນທົ່ວໄປ: ສາມາດສ້າງທີ່ພັກ-ຮ້ານອາຫານ ແລະ ການບໍລິການອື່ນໆແກ່ນັກທ່ອງທ່ຽວ ຕາມທ່າແຮງບົ່ມຊ້ອນຂອງແຕ່ລະເຂດ.




ຮູບທີ 20: ແຜນທີ່ແບ່ງເຂດພັດທະນາການທ່ອງທ່ຽວ ເຂດຜາທົ່ໜໍ່ຄໍາ

| ສັນຍາລັກ | ປະເພດການໃຊ້ທີ່ດິນ | ລາຍລະອຽດ |
|---|---|---|
|  | C: ເຂດອະນຸລັກ | C1:ເຂດອະນຸລັກຜາທີ່ໜໍ່ຄຳ |
|  |  | C2:ເຂດອະນຸລັກກົກແຕ້ ແລະ ພິພິທະພັນມູນເຊື້ອປະຫວັດສາດ |
|  | Ra: ເຂດສະຫງວນສຳລັບພັດທະນາແຫຼ່ງທ່ອງທ່ຽວ | Ra1:ເຂດສະຫງວນສຳລັບພັດທະນາສວນອຸດທະຍານເຈົ້າຜາທໍ່ |
|  |  | Ra2:ເຂດສະຫງວນສຳລັບພັດທະນາແຫຼ່ງທ່ອງທ່ຽວພູຊຽວ |
|  |  | Ra3:ເຂດສະຫງວນສຳລັບພັດທະນາໂຮງແຮມ Boutique Resort |
|  | Rb: ເຂດສະຫງວນສຳລັບກິດຈະກຳສາທາລະນະເຊື່ອມໂຍງການທ່ອງທ່ຽວ | Rb1:ເຂດສະຫງວນແຄມນ້ຳຕົງ ແລະ ຫ້ວຍຫຼົ້າ |
|  | Rc: ເຂດສະຫງວນສຳລັບຮັກສາທິວທັດແລະທຳມະຊາດ | Rc1:ເຂດສະຫງວນທົ່ງນາອ້ອມຮອບຜາທໍ່ |
|  |  | Rc2:ເຂດສະຫງວນທົ່ງນາລະຫວ່າງຕົວເມືອງຫາບ້ານທ່າ-ບ້ານດອນ ເບື້ອງທິດຕາເວັນອອກ |
|  |  | Rc3:ເຂດສະຫງວນທົ່ງນາລະຫວ່າງຕົວເມືອງຫາບ້ານທ່າ-ບ້ານດອນ ເບື້ອງທິດຕາເວັນຕົກ |
|  | Sa: ເຂດໃຈກາງການບໍລິການນັກທ່ອງທ່ຽວ | Sa1:ເຂດໃຈກາງບໍລິການນັກທ່ອງທ່ຽວໃນຕົວເມືອງ |
|  |  | Sa2:ເຂດຕ້ອນຮັບນັກທ່ອງທ່ຽວບ້ານທ່າ ແລະ ບ້ານດອນ |
|  | Sb: ເຂດຕົວເມືອງ ແລະ ຊຸມຊົນ | Sb1: ເຂດຕົວເມືອງ ແລະ ຊຸມຊົນທົ່ວໄປ |

### 5.1.3 ການແບ່ງເຂດພັດທະນາການທ່ອງທ່ຽວໃນເຂດສັງສິນໄຊ

ເຂດສັງສິນໄຊ ໄດ້ແບ່ງເຂດຍ່ອຍສຳລັບການພັດທະນາການທ່ອງທ່ຽວ ລະອຽດດັ່ງນີ້:

1) ເຂດອະນຸລັກ ປະກອບມີບັນດາຜາທີ່ມີຈຸດພິເສດທາງດ້ານຮູບຮ່າງອັນໂດດເດັ່ນເປັນເອກະລັກ, ຜາທີ່ຕິດພັນກັບສາສະນະສະຖານ ແລະ ຄວາມເຊື່ອຖື ລວມເຖິງຜາທີ່ມີຄວາມອ່ອນໄຫວທາງດ້ານໂຄງສ້າງທີ່ອາດຫັກພັງໄດ້ງ່າຍ ຊຶ່ງໄດ້ກຳນົດໄວ້ 5 ຈຸດ ຄື: ຜາລັງ, ຜາດິນຈີ່-ຜາຂາດ, ຜາແຊນ, ຜາທອງ ແລະ ຜາຫອຍ.

2) ເຂດສະຫງວນສຳລັບພັດທະນາແຫຼ່ງທ່ອງທ່ຽວ ປະກອບມີ:

- ເຂດອ້ອມຮອບຜາດິນຈີ່-ຜາຂາດ-ຜາທອງ ມີຂອບເຂດຫ່າງຈາກຕີນຜາ 50 ແມັດ.
- ຜາຕອງ ແລະ ເຂດອ້ອມຮອບຕີນຜາ 50 ແມັດ.
- ຜາຫຼວງ ແລະ ເຂດອ້ອມຮອບຕີນຜາ 50 ແມັດ.
- ຜາຊ້າງສີໂຫ ແລະ ເຂດອ້ອມຮອບຕີນຜາ 50 ແມັດ.
- ຜາແຖ ແລະ ເຂດອ້ອມຮອບຕີນຜາ 50 ແມັດ.

3) ເຂດສະຫງວນສຳລັບຮັກສາທິວທັດແລະທຳມະຊາດ ປະກອບມີ:

- ທົ່ງນາອ້ອມຮອບຜາລັງ ນັບຈາກເສັ້ນທາງ 4501 ເບື້ອງທິດໃຕ້ບ້ານນາລັງ ຍາວໄປຈົນຮອດເສັ້ນທາງເຂົ້າຫາບ້ານນາເມືອງ ເພື່ອຮັກສາທິວທັດທີ່ສວຍງາມບໍລິເວນຜາລັງ.
- ທົ່ງນາລຽບຕາມເສັ້ນທາງຈາກບ້ານບ້ານນາອ່າງ ຈົນຮອດບ້ານໂນນຫີນແຮ່.
- ທົ່ງນາຈາກບ້ານນາຫຼວງ ຫາຜາຫຼວງ-ຜາທອງ.
- ທົ່ງນາລຽບຕາມເສັ້ນທາງບ້ານນາເມືອງ ຫາຜາແຖ.

ເຂດນີ້ ຫ້າມບໍ່ໃຫ້ມີການປຸກສ້າງອາຄານ-ບ້ານເຮືອນທີ່ມີລັກສະນະບົດບັງ ຫຼື ສ້າງຄວາມເສຍຫາຍໃຫ້ແກ່ພູມິທັດ.

4) ເຂດໃຈກາງການບໍລິການນັກທ່ອງທ່ຽວ ປະກອບມີ 2 ຈຸດ ຄື:

- ເຂດຈຸດສຸມຜາສັງສົ່ງເສີມການພັດທະນາທີ່ພັກ, ຮ້ານອາຫານ ແລະ ກິດຈະກຳບໍລິການອື່ນໆທີ່ຈຳເປັນສຳລັບນັກທ່ອງທ່ຽວທີ່ເດີນທາງມາທ່ຽວໃນເຂດສັງສິນໄຊ.
- ເຂດສາມແຍກບ້ານນາລັງ ສົ່ງເສີມໃຫ້ເປັນຈຸດແວະພັກ ແລະ ທ່ຽວຊົມສູນສິລະປະວັດທະນະທຳສັງສິນໄຊ.

5) ເຂດຊຸມຊົນ ເປັນເຂດສົ່ງເສີມການບໍລິການທາງດ້ານທີ່ພັກແບບ Home Stay ແລະ ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຕາມທ່າແຮງບົ່ມຊ້ອນຂອງແຕ່ລະບ້ານ.

6) ເຂດທ່ອງທ່ຽວທາງນໍ້າ ແລະ ເຮືອນແພອ່າງນໍ້າຕົງ ເປັນເຂດບໍລິການທາງດ້ານທີ່ພັກ, ຮ້ານອາຫານ ແລະ ກິດຈະກຳການທ່ອງທ່ຽວທີ່ເທິງໜ້ານໍ້າ ແລະ ເທິງບົກ.




ຮູບທີ 21: ແຜນທີ່ແບ່ງເຂດພັດທະນາການທ່ອງທ່ຽວ ເຂດສັງສິນໄຊ

| ສັນຍາລັກ | ປະເພດການໃຊ້ທີ່ດິນ | ລາຍລະອຽດ |
|---|---|---|
| | C: ເຂດອະນຸລັກ | C1:ເຂດອະນຸລັກຜາລັງ |
| | | C2:ເຂດອະນຸລັກຜາດິນຈີ່-ຜາຂາດ |
| | | C3:ເຂດອະນຸລັກຜາແຂນ |
| | | C4:ເຂດອະນຸລັກຜາທອງ |
| | | C5:ເຂດອະນຸລັກຜາສັງ |
| | Ra: ເຂດສະຫງວນສໍາລັບພັດທະນາແຫຼ່ງທ່ອງທ່ຽວ | Ra1:ເຂດສະຫງວນພັດທະນາແຫຼ່ງທ່ອງ ທ່ຽວອ້ອມຮອບຜາດິນຈີ່-ຜາຂາດ-ຜາທອງ |
| | | Ra2:ເຂດສະຫງວນພັດທະນາ ແຫຼ່ງທ່ອງທ່ຽວຜາຕອງ |
| | | Ra3:ເຂດສະຫງວນພັດທະນາ ແຫຼ່ງທ່ອງທ່ຽວ ຜາຫຼວງ |
| | | Ra4:ເຂດສະຫງວນພັດທະນາ ແຫຼ່ງທ່ອງທ່ຽວຜາຊ້າງສີໂຫ |
| | | Ra5:ເຂດສະຫງວນພັດທະນາ ແຫຼ່ງທ່ອງທ່ຽວ ຜາແຖ |
| | Rc: ເຂດສະຫງວນສໍາລັບຮັກສາທິວທັດແລະທໍາມະຊາດ | Rc1:ເຂດສະຫງວນຮັກສາທິວທັດທົ່ງນາເຂດຜາລັງ |
| | | Rc2:ເຂດສະຫງວນຮັກສາທິວທັດທົ່ງນາ ເຂດບ້ານນາອ່າງ-ໂນນຫີນແຮ່ |
| | | Rc3:ເຂດສະຫງວນຮັກສາທິວທັດ ທົ່ງນາບ້ານນາຫຼວງ-ຜາຫຼວງ-ຜາທອງ |
| | | Rc4:ເຂດສະຫງວນຮັກສາທິວທັດທົ່ງນາເຂດບ້ານນາເມືອງ-ຜາແຖ |
| | Sa: ເຂດໃຈກາງການບໍລິການນັກທ່ອງທ່ຽວ | Sa1:ເຂດໃຈກາງບໍລິການນັກທ່ອງທ່ຽວຈຸດສຸມຜາສັງ |
| | | Sa2:ເຂດໃຈກາງບໍລິການນັກທ່ອງທ່ຽວສາມແຍກນາລັງ |
| | Sb: ເຂດຊຸມຊົນ | Sb1:ເຂດທ່ອງທ່ຽວຊຸມຊົນ ແລະ home stay |
| | Sc: ເຂດເຮືອນແພ ແລະທ່ອງທ່ຽວທາງນໍ້າ | Sc1:ເຂດແຫຼ່ງທ່ອງທ່ຽວທາງນໍ້າ ແລະ ເຮືອນແພ ອ່າງນໍ້າຕົງ |

**5.2 ແນວຄວາມຄິດພັດທະນາແຫຼ່ງທ່ອງທີ່ສໍາຄັນ ແລະ ໂດ່ດເດັ່ນ**

**1) ໜ້າເຂື່ອນນໍ້າລີກ**

ສໍາລັບໜ້າເຂື່ອນນໍ້າລີກ ເປັນອີກຈຸດໜຶ່ງທີ່ຕ້ອງໄດ້ສົ່ງເສີມໃຫ້ເກີດການພັດທະນາເປັນແຫຼ່ງທ່ອງທ່ຽວ ໂດຍ ເນັ້ນການພັກຜ່ອນ, ການຊົມວິວ, ກິລາທາງນໍ້າ, ການປະມົງ ແລະ ການຍ່າງປ່າເປັນຫຼັກ, ແຕ່ແນວໃດກໍ່ຕາມ ເພື່ອເຮັດໃຫ້ພື້ນທີ່ມີຄວາມໜ້າສົນໃຈຫຼາຍນັ້ນຕ້ອງໄດ້ສ້າງຄວາມໂດດເດັ່ນເປັນເອກະລັກໃຫ້ກັບພື້ນທີ່ຫຼາຍຕື່ມ ໂດຍການອອກແບບສະຖານທີ່ໃຫ້ມີຄວາມສວຍງາມ, ມີຈຸດໝາຍຕາ (Landmark) ທີ່ເປັນເອກະລັກ ແລະ ມີສະຖາປັດຕະຍະກໍາທີ່ຫຼົງໄຫຼ ເປັນຕົ້ນ.

ເຂດພັດທະນາໜ້າເຂື່ອນນ້ຳລີກ ຈັດສັນພື້ນທີ່ດິນ ແລະ ນ້ຳອອກເປັນ 9 ເຂດດັ່ງນີ້:

1. ເຂດກໍ່ສ້າງຣີສອດ-ໂຮງແຮມ ຊຶ່ງເປັນທີ່ພັກແບບພັກຜ່ອນຕາກອາກາດ ຕ້ອງການຄວາມສະຫງົບທາງງຽບ ແລະ ທິວທັດທຳມະຊາດທີ່ສວຍງາມ, ສາມາດສ້າງອາຄານເປັນຫຼັງຢູ່ຕາມເນີນພູ ຫຼື ກໍ່ສ້າງເຮືອນແພໃນນ້ຳກໍ່ໄດ້ເຊັ່ນກັນ;
2. ເຂດສວນແຄມນ້ຳ ເປັນສວນສາທາລະນະໃຊ້ສຳລັບການພັກຜ່ອນ, ອອກກຳລັງກາຍ, ຈອດລົດ ແລະ ຕົກແຕ່ງປະດັບປະດາສ້າງບັນຍາກາດສວຍງາມ;
3. ຂົວຂ້າມໄປຫາສວນສະໜຸກ ເປັນຂົວສຳລັບຄົນຍ່າງ ຊຶ່ງຕ້ອງອອກແບບໃຫ້ໂດດເດັ່ນເປັນເອກະລັກ ໃຫ້ກາຍເປັນໜຶ່ງໃນຈຸດໝາຍປາຍທາງຂອງນັກທ່ອງທ່ຽວໃນການມາຍ່າງຊົມ ແລະ ຖ່າຍຮູບ;
4. ເຂດສວນສະໜຸກ ເປັນສູນລວມກິດຈະກຳການຫຼິ້ນນ້ຳ, ກິລາທາງນ້ຳ, ການທ່ຽວຊົມປະຕິມະກຳ ແລະ ຮູບປັ້ນຕ່າງໆ;
5. ຫໍຄອຍຊົມວິວ ຕັ້ງຢູ່ໃນສວນສະໜຸກ ເປັນຈຸດໄປຊົມວິວທິວທັດອັນກວ້າງໄກ;
6. ເຂດຮ້ານອາຫານເຮືອນແພ ແລະ ທ່າເຮືອນຳທ່ຽວ ເປັນເຂດບໍລິການອາຫານ ແລະ ນຳທ່ຽວທາງນ້ຳ;
7. ເຂດຮ້ານຄ້າ-ຮ້ານບໍລິການທົ່ວໄປສຳລັບນັກທ່ອງທ່ຽວ ແລະ ຊາວປະມົງ, ເຂດນີ້ລວມມີທີ່ຢູ່ອາໄສຂອງຊາວປະມົງນຳອີກ;
8. ເຂດທ່າເຮືອປະມົງ ຈັດໄວ້ສຳລັບເປັນບ່ອນຈອດເຮືອ ແລະ ທ່າເຮືອສຳລັບຊາວປະມົງ;
9. ເຂດໜ້ານ້ຳທີ່ໃຊ້ສຳລັບຈັດກິລາທາງນ້ຳ ເຊັ່ນ: ຫຼິ້ນເຈັດສະກີ, ແຂ່ງເຮືອ ແລະ ອື່ນໆ.




ຮູບທີ 22: ແຜນຜັງແບ່ງເຂດ ແຫຼ່ງທ່ອງທ່ຽວໜ້າເຂື່ອນນ້ຳລີກ




ຮູບທີ 23: ຮູບຈຳລອງການປັບປຸງແຫຼ່ງທ່ອງທ່ຽວໜ້າເຂື່ອນນ້ຳລີກ

### 2) ບ້ານເມືອງເຟືອງ , ຫາດດອນກາງ ແລະ ເຂດແຄມນ້ຳ

ບ້ານເມືອງເຟືອງຄວນພັດທະນາໃຫ້ກາຍເປັນຈຸດສູນກາງຂອງການທ່ອງທ່ຽວເຂດລ່ອງລິກ ເປັນສູນລວມຂອງສິ່ງອຳນວຍຄວາມສະດວກ ແລະ ກິດຈະກຳການທ່ອງທ່ຽວທັງກາງເວັນ ແລະ ກາງຄືນ, ຫາດດອນກາງພັດທະນາເປັນພື້ນທີ່ເປີດໂລ່ງສາທາລະນະທີ່ມີບ່ອນຫຼິ້ນນ້ຳ, ບ່ອນຈອດລົດ, ເຂດຂຽວ ແລະ ລານກິດຈະກຳອະເນກປະສົງ ທີ່ສາມາດໃຊ້ເປັນບ່ອນຈັດງານເທດສະການ, ຕະຫຼາດຂາຍອາຫານ ແລະ ຕະຫຼາດສິນຄ້າໃນຍາມກາງຄືນ.

ໃນບໍລິເວນຫາດດອນກາງ ແລະ ເຂດໃກ້ຄຽງ ສະເໜີໃຫ້ມີການຈັດສັນເຂດປຸກສ້າງ, ເຂດສະຫງວນ ແລະ ເສັ້ນທາງໃຫ້ຊັດເຈນ ໂດຍພະຍາຍາມຮັກສາພື້ນທີ່ແຄມນ້ຳໃຫ້ເປັນເຂດຂຽວສາທາລະນະ ແລະ ເປັນທາງຍ່າງເຊື່ອມຕໍ່ກັນຕະຫຼອດແນວເໜືອໃຕ້, ຄວາມກວ້າງຄວນຮັກສາໄວ້ຢ່າງໜ້ອຍ 15 ແມັດ, ພື້ນທີ່ດອນກາງດ້ານໃຕ້ສະເໜີໃຫ້ຮັກສາເປັນບ່ອນຫຼິ້ນຫາດຄືເກົ່າ ໂດຍຫຼີກລ້ຽງການກໍ່ສ້າງອາຄານທີ່ມີຄວາມໝັ້ນຄົງຖາວອນ, ພື້ນທີ່ຕໍ່ເນື່ອງຈາກຫາດແມ່ນພັດທະນາເປັນລານອະເນກປະສົງສຳລັບຈັດງານ ແລະ ຕະຫຼາດອາຫານ, ເຂດແຄມນ້ຳບ້ານເມືອງເຟືອງ ພັດທະນາເປັນຖະໜົນກາງຄົນຍ່າງ ໂດຍເບື້ອງແຄມນ້ຳເປັນສວນສາທາລະນະ ສ່ວນເບື້ອງຊຸມຊົນເປັນທີ່ພັກ, ຮ້ານຄ້າ, ຮ້ານອາຫານ-ຮ້ານບັນເທີງ ແລະ ຮ້ານບໍລິການຕ່າງໆ ທີ່ມີບັນຍາກາດຄຶກຄື້ນໃນເວລາກາງວັນ ແລະ ກາງຄືນ, ສຳລັບແຄມນ້ຳຟາກກົງກັນຂ້າມ ສາມາດພັດທະນາເປັນທີ່ພັກ-ຮ້ານອາຫານ ແຕ່ຍັງຕ້ອງສະຫງວນພື້ນທີ່ແຄມນ້ຳ 15 ແມັດ ສຳລັບພັດທະນາເປັນພື້ນທີ່ສາທາລະນະ ແລະ ເສັ້ນທາງ, ພ້ອມກັນນັ້ນສະເໜີໃຫ້ກໍ່ສ້າງຂົວສຳລັບຄົນຍ່າງຂ້າມໄປມາໃຫ້ສະດວກສະບາຍ.




ແຜນທີ່ທີ 24: ແຜນຜັງແນວຄວາມຄິດພັດທະນາເຂດດອນກາງ ແລະ ພື້ນທີ່ໃກ້ຄຽງ




ຮູບທີ 25: ຮູບຈຳລອງການພັດທະນາເຂດສະຫງວນແຄມນ້ຳລີກ

**3) ແຫຼ່ງທ່ອງທ່ຽວຊຸມຊົນ**

ຊຸກຍູ້ບ້ານທີ່ມີເງື່ອນໄຂດີພັດທະນາເປັນແຫຼ່ງທ່ອງທ່ຽວຊຸມຊົນ ໂດຍເລີ່ມຈາກການປັບປຸງເສັ້ນທາງ ແລະ ສະພາບແວດລ້ອມພາຍໃນຊຸມຊົນໃຫ້ສະອາດສວຍງາມ, ປະຕິສັງຂອນອາຄານເກົ່າໃຫ້ເປັນ Home stay, ສົ່ງເສີມຫັດຖະກຳຕໍ່າຫູກ ແລະ ຜະລິດຕະພັນອາຫານ-ເຄື່ອງດື່ມໃນຊຸມຊົນ, ຟື້ນຟູກິດຈະກຳທາງສິລະປະ-ວັດທະນະທີ່ເປັນມູນເຊື້ອ ປະສົມປະສານກັບຄວາມຄິດສ້າງສັນແບບຮ່ວມສະໄໝເພື່ອເພີ່ມສີສັນ ແລະ ມົນສະເໜ່ໃຫ້ກັບການທ່ອງທ່ຽວ.




ຮູບທີ 26: ຮູບຈຳລອງການປັບປຸງສະພາບແວດລ້ອມຊຸມຊົນ

**4) ໃຈກາງຕົວເມືອງ**

ພັດທະນາຕົວເມືອງໃຫ້ກາຍເປັນເມືອງທ່ອງທ່ຽວທີ່ມີສີສັນ ແລະ ຊີວິດຊີວາ ໂດຍເອົາໃຈໃສ່ຊຸກຍູ້ສົ່ງເສີມການລົງທຶນໃນກິດຈະກຳການຄ້າການບໍລິການທີ່ຕິດພັນກັບການທ່ອງທ່ຽວ, ປັບປຸງພູມິ ທັດຕົວເມືອງໃຫ້ມີຄວາມເປັນລະບຽບສວຍງາມ, ສ້າງສະຖາປັດຕະຍະກຳທີ່ມີເອກະລັກສະເພາະ, ປັບປຸງຖະໜົນຫົນທາງໃຫ້ມີທາງຍ່າງ ແລະ ຊ່ອງທາງຂີ່ລົດຖີບ ເພື່ອສ້າງບັນຍາກາດອັນຄຶກຄັກໃນແບບຂອງເມືອງທ່ອງທ່ຽວສະອາດ ພ້ອມທັງສົ່ງເສີມການອະນຸລັກຮັກສາທຳມະຊາດ ແລະ ສິ່ງແວດລ້ອມ.




ຮູບທີ 27: ຮູບຈຳລອງການປັບປຸງຖະໜົນສາຍຫຼັກໃນຕົວເມືອງເຟືອງ

**5) ປະຕູໂຂງເຂົ້າເມືອງ**

ສ້າງປະຕູເມືອງຢູ່ບໍລິເວນໃກ້ກັບສະຖານີໄຟຟ້າເສັ້ນທາງຈາກຫີນເຫີບກຳລັງຈະເຂົ້າເຖິງສາມແຍກບ້ານທ່າ, ເປັນຈຸດທາອິດທີ່ນັກທ່ອງທ່ຽວຈະແວະຖ່າຍຮູບໂດຍມີການອອກແບບໃຫ້ມີຈຸດເດັ່ນ ຄື: ກອງເຂົ້າໃຫຍ່ພ້ອມທັງມີປ້າຍຕ້ອນຮັບ ແລະ ສວນດອກໄມ້ປະດັບ, ຢູ່ບໍລິເວນໃກ້ຄຽງມີບ່ອນຈອດລົດ, ຫ້ອງນ້ຳ, ຮ້ານອາຫານ, ຮ້ານກາເຟ ໄວ້ໃຫ້ບໍລິການແກ່ນັກທ່ອງທ່ຽວນຳອີກ.




ຮູບທີ 28: ແຜນຜັງທີ່ຕັ້ງ ແລະ ຮູບຈຳລອງສວນປະຕູເມືອງ

**6) ສາມແຍກບ້ານທ່າ**

ຈັດສັນພູມິທັດໃຫ້ມີຄວາມເປັນລະບຽບ-ສວຍງາມ ໂດຍສະເພາະຈັດສັນບ່ອນຈອດລົດບໍ່ໃຫ້ກີດຂວາງການສັນຈອນ, ປັບປຸງທາງຍ່າງ, ຄຸ້ມຄອງການຕິດຕັ້ງປ້າຍໃຫ້ເປັນລະບຽບ, ປັບປຸງດ້ານໜ້າອາຄານໃຫ້ມີເອກະລັກເປັນລະບຽບ ແລະ ກົມກຽວກັນ, ຄຸ້ມຄອງການປຸກສ້າງອາຄານບໍ່ໃຫ້ເກີນເສັ້ນແຖວ ແລະ ບໍ່ໃຫ້ສູງບົດບັງວິວທິວທັດ, ເພີ່ມໄຟແສງສະຫວ່າງ ປູກຕົ້ນໄມ້ ແລະ ຕົກແຕ່ງປະດັບປະດາແຄມທາງໃຫ້ມີຄວາມສວຍງາມ.



ຮູບທີ 29: ຮູບຈຳລອງການປັບປຸງພູມິທັດສາມແຍກບ້ານທ່າ

**7) ພື້ນທີ່ແຄມຫ້ວຍນ້ຳຫຼ້າ**

ພັດທະນາໃຫ້ກາຍເປັນສວນສາທາລະນະຂອງຕົວເມືອງ ເພື່ອສ້າງເປັນເມືອງທ່ອງທ່ຽວສະອາດ ສປປ ລາວ ແລະ ອາຊຽນໃນຕໍ່ໜ້າ, ສົ່ງເສີມການທ່ອງທ່ຽວ ແລະ ການພັກຜ່ອນຢ່ອນໃຈ, ອົງປະກອບຫຼັກຂອງສວນປະກອບມີສູນຂໍ້ມູນຂ່າວສານ ແລະ ບໍລິການນັກທ່ອງທ່ຽວ, ລານກິດຈະກຳອະເນກປະສົງນຳໃຊ້ສຳລັບງານຕະຫຼາດນັດ, ຕະຫຼາດກາງຄືນ ແລະ ງານເທດສະການຕ່າງໆ, ບ່ອນຈອດລົດ, ເຂດຂຽວ, ບ່ອນອອກກຳລັງກາຍ, ບ່ອນບຳບັດນ້ຳເປື້ອນ ເປັນຕົ້ນ. ທົ່ງນາທີ່ຢູ່ກົງກັນຂ້າມນຳໃຊ້ສຳລັບເປັນບ່ອນຈັດເທດສະການບຸນກອງເຂົ້າສາມໝື່ນຕູບເຟືອງ ຊຶ່ງເປັນງານບຸນເປີດຕ້ອນຮັບລະດູການທ່ອງທ່ຽວ ແລະ ເປັນງານບຸນທີ່ໃຫຍ່ທີ່ສຸດຂອງເມືອງເຟືອງ, ສະຖານທີ່ດັ່ງກ່າວຍັງໃຊ້ເປັນບ່ອນປ່ອຍບໍລູນທ່ອງທ່ຽວທາງອາກາດ ເພື່ອເພີ່ມກິດຈະກຳການທ່ອງທ່ຽວທີ່ຫຼາກຫຼາຍຕື່ມອີກ.

ພື້ນທີ່ພັດທະນາສວນແມ່ນກຳນົດເອົາລຽບຕາມແຄມຫ້ວຍທັງສອງຟາກ ເລີ່ມແຕ່ບໍລິເວນທາງໃຫຍ່ (ທາງເລກ ທີ 4501) ຍາວໄປຈົນຮອດປາກຫ້ວຍທີ່ປ່ອງໃສ່ແມ່ນ້ຳຕິງ, ພື້ນທີ່ເບື້ອງໃຈກາງເມືອງກວມຮອດເສັ້ນທາງຍົກເວັ້ນບໍລິເວນໃກ້ທາງໃຫຍ່ທີ່ມີເຮືອນປະຊາຊົນຫຼາຍ ແມ່ນກຳນົດເອົາແຕ່ແຄມນ້ຳກວ້າງພໍສ້າງເສັ້ນທາງຍ່າງ ແລະ ຕາຝັ່ງກັນເຈື່ອນໄດ້, ດ້ານໃກ້ກັບແມ່ນ້ຳຕິງກໍເຊັ່ນດຽວກັນເວັ້ນເຮືອນປະຊາຊົນ ໂດຍສ້າງເສັ້ນທາງອ້ອມດ້ານ ຫຼັງ ເພື່ອຫຼຸດຜ່ອນຜົນກະທົບ, ສຳລັບຝາກນ້ຳເບື້ອງທົ່ງນາ ແມ່ນກວມເອົາແຄມຫ້ວຍກວ້າງ 15-20 ແມັດ.

ການອອກແບບແມ່ນເນັ້ນສ້າງພື້ນທີ່ໃຫ້ເປັນບ່ອນເຕົ້າໂຮມຂອງຜູ້ຄົນ, ພື້ນທີ່ແຄມນ້ຳສ້າງເປັນບ່ອນພັກຜ່ອນມີທາງຍ່າງ ແລະ ທາງລົດຖີບຍາວຄູ່ຂະໜານຕະຫຼອດແນວ, ມີຂົວຂ້າມເປັນບາງຈຸດ ເພື່ອເຊື່ອມໂຍງສອງຝັ່ງເຂົ້າ ຫາກັນ, ບໍລິເວນປາກຫ້ວຍສ້າງເປັນໜອງຂະໜາດໃຫຍ່ ເພື່ອເກັບກັກນ້ຳໄວ້ໃຊ້ໃນຊ່ວງລະດູແລ້ງ, ອອກແບບລານ ແລະ ທາງຄົນຍ່າງເຊື່ອມຈອດກັນທັງໝົດ ແລະ ສາມາດຍ່າງເຊື່ອມໂຍງກັບເຂດໃຈກາງຕົວ

ເມືອງ ໄດ້ຢ່າງສະດວກສະບາຍ, ຕົ້ນໄມ້ທີ່ຈະນຳມາປູກຄວນເນັ້ນໃສ່ຕົ້ນໄມ້ທີ່ບໍ່ວລະບັດໄດ້ງ່າຍອາດພິຈາລະນາ ຕົ້ນ ໄມ້ທ້ອງຖິ່ນທີ່ມີຄວາມແຂງແຮງທົນທານຕໍ່ສະພາບດິນຟ້າອາກາດ ແລະ ມີເອກະລັກສະເພາະຕົວ.




ຮູບທີ 30: ແຜນຜັງແນວຄິດອອກແບບສວນສາທາລະນະຫ້ວຍຫຼ້າ



ຮູບທີ 31: ຮູບຕົວຢ່າງການພັດທະນາພື້ນທີ່ແຄມຫ້ວຍຫຼ້າ



ຮູບທີ 32: ຮູບຈຳລອງການຈັດງານບຸນກອງເຂົ້າສາມໝື່ນຕູບເຟືອງ

### 8) ພູຂຽວ

ພັດທະນາໃຫ້ກາຍເປັນສວນອຸທະຍານທຳມະຊາດ ແລະ ສະຖານທີ່ຊົມວິວ ໂດຍອະນຸລັກ ແລະ ຟື້ນຟູປ່າໄມ້ທີ່ມີຢູ່ໃຫ້ກາຍເປັນປ່ານິເວດ, ສ້າງທາງຍ່າງສຶກສາທຳມະຊາດ ແລະ ອອກກຳລັງກາຍ, ຢູ່ເທິງຈອມພູສ້າງພະພຸດທະຮູບໃຫຍ່ ແລະ ຈຸດຊົມວິວ, ມີເສັ້ນທາງລົດຮອດຈອມພູ ແລະ ມີສິ່ງອຳນວຍຄວາມສະດວກແກ່ນັກທ່ອງທ່ຽວຄົບຊຸດ ເຊັ່ນ: ຮ້ານອາຫານ, ຄ້າຂາຍເຄື່ອງທີ່ລະນຶກ, ທີ່ພັກ ແລະ ອື່ນໆ.



ຮູບທີ 33: ຮູບຈຳລອງພະພຸດທະຮູບໃຫຍ່ ແລະ ຈຸດຊົມວິວພູຂຽວ

### 9) ພິພິທະພັນກົກແຕ້ຈາລຶກຄວາມແຄ້ນ

ພັດທະນາໃຫ້ກາຍເປັນໜຶ່ງໃນຈຸດໝາຍປາຍທາງທີ່ນັກທ່ອງທ່ຽວຕ້ອງການໄປຢ້ຽມຢາມ ໂດຍຍົກລະດັບການພັດທະນາສະພາບແວດລ້ອມໃຫ້ມີຄວາມໂດດເດັ່ນ ແລະ ສວຍງາມ, ເນັ້ນໃສ່ການກໍ່ສ້າງພິພິດທະພັນຫຼັງໃໝ່, ກໍ່ສ້າງທາດຈາລຶກບຸນຄຸນວິລະຊົນ, ກໍ່ສ້າງຫໍຄອຍຊົມໝໍ່ຄຳ, ກໍ່ສ້າງສິມຫຼັງໃໝ່, ຕົກແຕ່ງປະດັບປະດາສະຖານທີ່ດ້ວຍພືດພັນດອກໄມ້ນາໆຊະນິດ, ກໍ່ສ້າງລານອະເນກປະສົງ ແລະ ບ່ອນຈອດລົດ ລວມເຖິງກໍ່ສ້າງອາຄານບໍລິການແກ່ນັກທ່ອງທ່ຽວ.




ຮູບທີ 34: ແຜນຜັງຈັດສັນພິພິທະພັນຈາລຶກຄວາມແຄ້ນ ແລະ ຮູບຈຳລອງບັນຍາກາດພາຍຫຼັງການປັບປຸງ

### 10) ຜາທໍ່

ພັດທະນາຜາທໍ່ໜໍ່ຄໍາ ໃຫ້ເປັນອຸທະຍານທໍາມະຊາດ ເພື່ອສົ່ງເສີມການພັດທະນາແບບອະນຸລັກທໍາມະຊາດ ແລະ ວັດທະນະທໍາ ໂດຍມີການກໍ່ສ້າງສວນເຈົ້າຜາທໍ່ບໍລິເວນທາງຂຶ້ນຖໍ້າປະກອບມີ ຮູບປັ້ນເຈົ້າຜາທໍ່ ຫຼື ຫໍເຈົ້າຜາທໍ່, ສວນດອກໄມ້, ຮ້ານອາຫານ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ພ້ອມທັງຕົກແຕ່ງຢ່າງສວຍງາມ ເພື່ອຍົກລະດັບສະຖານທີ່ດັ່ງກ່າວໃຫ້ກາຍເປັນໜຶ່ງໃນຈຸດໝາຍປາຍທາງການທ່ອງທ່ຽວ ລວມເຖິງໃຫ້ກາຍເປັນບ່ອນກາບໄຫວ້ຂໍພອນສໍາລັບປະຊາຊົນທົ່ວໄປ, ສວນອຸດທະຍານຜາທໍ່ ຄວນໄດ້ຮັບການອະນຸລັກ ແລະ ຍົກລະດັບຄວາມສໍາຄັນຂຶ້ນໃນຖານະເປັນສັນຍາລັກຂອງເມືອງເຟືອງ ເຊື່ອມໂຍງກັບປະຫວັດ ແລະ ຕໍານານຂອງເມືອງເຟືອງ; ແຕ່ລະປີສົ່ງເສີມໃຫ້ມີການຈັດງານບຸນລ້ຽງເຈົ້າຜາທໍ່ ຊຶ່ງເປັນປະເພນີເຮັດສືບຕໍ່ກັນມາແຕ່ດົນນານ.




ຮູບທີ 35: ແຜນຜັງລວມ ເຂດຜາທໍ່ໜໍ່ຄໍາ




ຮູບທີ 36: ແຜນຜັງລວມ ເຂດບໍລິການນັກທ່ອງທ່ຽວ





ຮູບທີ 37: ຮູບທັດສະນີຍະພາບ ເຂດບໍລິການນັກທ່ອງທ່ຽວ



ຮູບທີ 38: ບ່ອນຈອດລົດ



ຮູບທີ 39: ຈຸດເຊົ່າລົດຖີບ



ຮູບທີ 40: ຫ້ອງນ້ຳສາທາລະນະ



ຮູບທີ 41: ສູນຕ້ອນຮັບນັກທ່ອງທ່ຽວ ແລະ ສູນຂໍ້ມູນ



ຮູບທີ 42: ສາລານັ່ງພັກຜ່ອນ



ຮູບທີ 43: ເສັ້ນທາງຍ່າງ ແລະ ເສັ້ນທາງລົດຖີບ



ຮູບທີ 44: ເສັ້ນທາງເຂົ້າເຖິ່ງແຫຼ່ງທ່ອງທ່ຽວຜາທໍ່ໜໍຄໍາ




ຮູບທີ 45: ປ້າຍຊີ້ບອກ



ຮູບທີ 46: ຖັງຂີ້ເຫຍື້ອ

**11) ສາມແຍກນາລັງ**

ພັດທະນາສາມແຍກນາລັງໃຫ້ເປັນສູນວັດທະນະທຳສັງສິນໄຊ ເພື່ອສົ່ງເສີມສິລະປະວັດທະນະທຳທ້ອງຖິ່ນ ໂດຍສະເພາະສົ່ງເສີມການອະນຸລັກຮັກສາວັນນະຄະດີສັງສິນໄຊ ທີ່ຜູກພັນກັບມະໂນຄະຕິຂອງຊຸມຊົນມາຢ່າງຍາວນານພ້ອມທັງສົ່ງເສີມການຜະລິດ ແລະ ການຂາຍຜະລິດຕະພັນພື້ນບ້ານໃຫ້ແກ່ນັກທ່ອງທ່ຽວ; ພາຍໃນສູນປະກອບມີສວນ ແລະ ຮູບປັ້ນຂະໜາດໃຫຍ່ຂອງສັງສິນໄຊທ່າຍິງທະນູ, ອາຄານພິພິດທະພັນສັງສິນໄຊ, ໂຮງລະຄອນກາງແຈ້ງ, ຕະຫຼາດຍ້ອນຍຸກ, ຮ້ານອາຫານແບບພື້ນເມືອງ, ຮ້ານຄ້າຂາຍເຄື່ອງທີ່ລະນຶກ, ຮ້ານກາເຟ ແລະ ການອອກແບບໂຄງການຕ້ອງເນັ້ນສ້າງບັນຍາກາດແບບພື້ນເມືອງ, ອາຄານຕ້ອງເປັນເອກະລັກທ້ອງຖິ່ນ ແລະ ດຶງເອົາທິວທັດຜາລັງໃຫ້ພົ້ນເດັ່ນ.




ຮູບທີ 47: ແຜນທີ່ຈັດສັນເຂດສາມແຍກນາລັງ



ຮູບທີ 48: ຮູບຕົວຢ່າງເວທີສະແດງສິນລະປະກາງແຈ້ງ



ຮູບທີ 49: ຮູບຈຳລອງສວນສາທາລະນະສັງສິນໄຊ

**12) ຜາຫຼວງ ແລະ ຖ້ຳຜາຫຼວງ (ຖ້ຳເຈຍ)**

ຖ້ຳຜາຫຼວງ (ຖ້ຳເຈຍ) ເປັນຖ້ຳທີ່ມີຄວາມໂດດເດັ່ນ, ພາຍໃນຖ້ຳມີທາດພະລຶກແຄນຊຽມ ເປັນຫີນແກ້ວສີຂາວປົນເຫຼືອງ ມີລັກສະນະເປັນໜໍ່ໃຫຍ່ນ້ອຍສະຫຼັບຊັບຊ້ອນ, ຄ້າຍຄືນ້ຳກ້ອນ ແລະ ເມັດຫິມະ, ເປັນຫີນຍ້ອຍຢັ່ງຢາຍເປັນຢູ່ຈຸດໆ ຢູ່ພາຍໃນຖ້ຳ ມີຄວາມເຢັນ ແລະ ຊຸ່ມຊື່ນດີ. ໃນຕໍ່ໜ້າພັດທະນາແຫຼ່ງທ່ອງທ່ຽວຜາຫຼວງ (ຖ້ຳເຈຍ) ໃຫ້ກາຍເປັນຈຸດໝາຍປາຍທາງຂອງນັກທ່ອງທ່ຽວ ໂດຍກິດຈະກຳຫຼັກຂອງສະຖານທີ່ນີ້ແມ່ນເຂົ້າຊົມຖ້ຳຜາຫຼວງ ຫຼື ຖ້ຳສ້ວມນາງສຸມຸນທາ ແລະ ຊົມເຈຍເຂົ້າ-ອອກຖ້ຳ; ຖ້ຳແຫ່ງນີ້ປະກອບມີ 4 ເຂດຫຼັກ: 1) ສູນຕ້ອນຮັບນັກທ່ອງທ່ຽວຕັ້ງຢູ່ຫ່າງອອກຈາກປາກຖ້ຳມາປະມານ 1 ກິໂລແມັດ ພາຍໃນສູນມີບ່ອນຈອດລົດ, ບ່ອນຂາຍປີ້, ຫ້ອງວາງສະແດງກ່ຽວກັບຫີນແກ້ວ ແລະ ເຈຍ, ຮ້ານຂາຍເຄື່ອງທີ່ລະນຶກ, ຮ້ານອາຫານ, ສວນດອກໄມ້, ບັງກະໂລ ແລະ ຫ້ອງນ້ຳ; 2) ເສັ້ນທາງຍ່າງຖ້ຳຄຽງຄູ່ກັບການສຶກສາທຳມະຊາດ ແລະຊົມທິວທັດເສັ້ນທາງນີ້ອອກແບບໃຫ້ມີຄວາມຫຼາກຫຼາຍທັງເປັນເສັ້ນທາງຍ່າງເທິງໜ້າດິນ, ຂົວອູ່ຕົ້ນໄມ້, ຂົວໜ້າຜາ, ສະລິງ, ບ່ອນຊົມວິວ ແລະ ຂັ້ນໃດຕົ້ນໄມ້; 3) ຈຸດບໍລິການຍ່ອຍປາກຖ້ຳຈຸດນີ້ຕັ້ງຢູ່ດ້ານລຸ່ມຂອງປາກຖ້ຳບໍລິເວັນຫໍເຈົ້ານາງສຸມຸນທາເປັນບ່ອນພັກຜ່ອນ ແລະ ໃຫ້ບໍລິການສຸກເສີນແກ່ນັກທ່ອງທ່ຽວ, ໃນຈຸດນີ້ມີຫໍຄອຍ

ຊົມເຈຍໃນຕອນເຊົ້າ ແລະ ຄ້າຍຄ່ຳອີກດ້ວຍ ແລະ 4) ຖ້ຳເຈຍ (ຖ້ຳສ້ອມນາງ ສຸມຸນທາ) ບໍລິເວນປາກຖ້ຳ ແລະ ທາງເຂົ້າຕ້ອງໄດ້ມີການອອກແບບໃຫ້ເໝາະສົມ ເພື່ອປ້ອງກັນບໍ່ໃຫ້ລົບກວນເຈຍທີ່ອາໄສຢູ່ໃນຖ້ຳທຳອິດອາດສ້າງເປັນອຸມົງເຊື່ອມຕໍ່ກັບຂົວອູ່ຕົ້ນໄມ້ທີ່ຢູ່ດ້ານນອກ, ອຸມົງນີ້ສ້າງເປັນຂົວຍົກສູງຈາກພື້ນຖ້ຳເພື່ອໃຫ້ການເດີນທາງສະດວກ ຮູບຊົງຂອງອຸມົງຕ້ອງເປັນແບບກົ່ງເພື່ອບໍ່ໃຫ້ຂີ້ເຈຍຄ້າງຢູ່ຫຼັງຄາພາຍໃນອຸມົງຕ້ອງປິດສະໜິດເພື່ອບໍ່ໃຫ້ໄດ້ຮັບກິ່ນເໝັນຂອງຂີ້ເຈຍ ແຕ່ຕ້ອງມີການອອກແບບລະບົບລະບາຍອາກາດໃຫ້ເໝາະສົມ ພ້ອມທັງແສງສະຫວ່າງຕ້ອງຮັບປະກັນໃຫ້ພຽງພໍ, ພາຍໃນຖ້ຳເຈຍ (ຖ້ຳສ້ອມນາງສຸມຸນທາ) ຕ້ອງໄດ້ສ້າງຂົວສໍາລັບນັກທ່ອງທ່ຽວຢ່າງຊົມເພື່ອຫຼີກລ້ຽງບໍ່ໃຫ້ຢຽບພື້ນຖ້ຳໂດຍກິງການອອກ ແບບຂົວ ແລະ ການປະດັບໄຟພາຍໃນຖ້ຳຕ້ອງໄດ້ພິຈາລະນາຂໍ້ມູນທາງດ້ານທໍລະນີ ແລະ ລະບົບນິເວດຢ່າງຈິງຈັງ ເພື່ອຫຼຸດຜ່ອນຜົນກະທົບຕໍ່ທຳມະຊາດໃຫ້ໜ້ອຍທີ່ສຸດ, ແຕ່ລະຈຸດຈະຕ້ອງຕິດຕັ້ງປ້າຍຊີ້ບອກ, ປ້າຍເຕືອນ, ປ້າຍແນະນຳ, ພ້ອມດຽວກັນນັ້ນ ການຈຳກັດປະລິມານຜູ້ຄົນເຂົ້າທ່ຽວຖ້ຳໃນແຕ່ລະວັນກໍ່ຕ້ອງໄດ້ນຳມາພິຈາລະນາລະອຽດ ເພື່ອໃຫ້ສາມາດຮັບປະກັນໄດ້ວ່າສະພາບແວດລ້ອມພາຍໃນຖ້ຳຈະບໍ່ຖືກທຳລາຍ ແລະ ຈະຍັງຄົງຍືນຍົງຕະຫຼອດໄປ.



ຮູບທີ 50: ຮູບຈຳລອງອຸມົງເຂົ້າຖ້ຳ (ຊ້າຍ) ແລະ ຂົວຊົມຖ້ຳຜາຫຼວງ ຫຼື ຖ້ຳນາງສຸມຸນທາ (ຂວາ)

ຢ່າງໃດກໍຕາມ ຄຳອະທິບາຍຂ້າງເທິງເປັນພຽງແນວຄວາມຄິດເບື້ອງຕົ້ນເທົ່ານັ້ນ, ກ່ອນຈະອະນຸມັດໃຫ້ມີການລົງມືພັດທະນາຕົວຈິງຕ້ອງໄດ້ຮັບການສຶກສາ-ສຳຫຼວດ ແລະ ອອກແບບຕາມຫຼັກວິຊາການຢ່າງລະອຽດເພື່ອຮັບປະກັນບໍ່ໃຫ້ສ້າງຜົນກະທົບຕໍ່ທຳມະຊາດ ຫຼື ລະບົບນິເວດພາຍໃນຖ້ຳ ແລະ ບໍລິເວນອ້ອມຂ້າງ ໂດຍສະເພາະການສຳຫຼວດຊອກຫາທາງເຂົ້າ-ອອກທີ່ເປັນທາງເລືອກອື່ນ, ການສຳຫຼວດທໍລະນີພາຍໃນຖ້ຳ (ຫີນແກ້ວ), ການສຶກສານິເວດການຢູ່ອາໄສຂອງເຈຍ, ການສຶກສາສັດ ແລະ ຊີວະນາໆພັນຕາມໜ້າຜາ ແລະ ອື່ນໆ.

**13) ຜາທອງ-ຜາດິນຈີ່-ຜາຂາດ**

ສົ່ງເສີມໃຫ້ພັດທະນາບໍລິເວນອ້ອມຮອບຜາທອງ-ຜາດິນຈີ່-ຜາຂາດ ໃຫ້ກາຍເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ ໂດຍມີກິດຈະກຳຕັ້ງແຄ້ມຊົມດາວ, ລ່ອງເຮືອແຄມຜາ, ຂີ່ສະລິງ, ປີນຜາ ແລະ ຊົມສວນດອກໄມ້.




ຮູບທີ 51: ຮູບຈໍາລອງການປັບປຸງພູມິທັດຈຸດຊົມວິວຜາທອງ

**14) ຜາແຖ ແລະ ຖໍ້າທ່ານສຸພານຸວົງ**

ພັດທະນາເຂດຜາແຖ ແລະ ຖໍ້າທ່ານສຸພານຸວົງໃຫ້ກາຍເປັນສວນອຸທິຍານສິນໄຊແຫ່ງຍຸກສະໄໝຂອງຮັບການຕັ້ງຄ້າຍຂອງຊາວໜຸ່ມເຍົາວະຊົນ ຊຶ່ງເປັນສະຖານທີ່ບົ່ມເພາະຈິດວິນຍານຂອງຊາວໜຸ່ມເຍົາວະຊົນຕາມຄໍາຂວັນຂອງທ່ານປະທານໄກສອນ ພົມວິຫານ ທີ່ໄດ້ຍົກຍ່ອງ ແລະ ຕັກເຕືອນຊາວໜຸ່ມເຍົາວະຊົນທີ່ວ່າ ຈົ່ງເປັນດັ່ງສິນໄຊແຫ່ງຍຸກສະໄໝທີ່ບໍ່ຢ້ານກົວຕໍ່ພາຍຸລົມແດງ, ການອອກແບບພາຍໃນສວນເປັນການພະຍາຍາມເຊື່ອມສານວິລະກໍາ ແລະ ຄຸນສົມບັດສີທໍາປະຕິວັດຂອງທ່ານສຸພານຸວົງເຂົ້າກັບຄວາມອົງກາດກ້າຫານ ແລະ ຄວາມກະຕັນຍູຮູ້ບຸນຄຸນຂອງສັງສິນໄຊ  ໂດຍໃຫ້ສະແດງອອກຢູ່ໃນປະຕິມະກໍາເລົ່າເລື່ອງສັງສິນໄຊຕັ້ງ ແຕ່ຕົ້ນຈົນຈົບ, ສອດແຊກເນື້ອໃນການສຶກສາອົບຮົມແນວຄິດຂອງຊາວໜູ່ເຍົາວະຊົນໃຫ້ເປັນຄົນດີ, ມີສິນທໍາປະຕິວັດ, ອົງອາດກ້າຫານ, ກະຕັນຍູຮູ້ບຸນຄຸນ,  ນໍ້າໃຈເສຍສະຫຼະ ແລະ ຮູ້ຮັກປະເທດຊາດບ້ານເມືອງ.



ຮູບທີ 52: ຮູບຈໍາລອງສວນຮູບປັ້ນນິທານສັງສິນໄຊ

## 6. ກິດຈະກຳການທ່ອງທ່ຽວຫຼັກ

### 6.1 ກິດຈະກຳໃນເຂດລ່ອງນ້ຳລີກ

| ລດ | ກິດຈຳກຳ | ລາຍລະອຽດ |
|---|---|---|
| 1 | ລ່ອງເຮືອ-ກົງເບັງ ຕາມສາຍນ້ຳລີກ | ລ່ອງກົງເບັງ ແລະ ເຮືອກ້ວຍ (Banana Boat) ເປີດສະເພາະໃນລະດູແລ້ງລະຫວ່າງເດືອນພະຈິກ ຫາ ພຶດສະພາ, ແບ່ງໄລຍະທາງອອກເປັນ 3 ຊ່ວງ ຄື: ນາແຊງ-ຄອນເລືອງ, ຄອນເລືອງ-ສາມໝື່ນ, ສາມໝື່ນ-ເມືອງເຟືອງ, ນັກທ່ອງທ່ຽວສາມາດເລືອງໄລຍະທາງໄດ້ຕາມໃຈ. ລ່ອງເຮືອກາຍັກ, ເຮືອຍາງລ່ອງແກ້ງ ແລະ ເຮືອຈັກຫາງຍາວ ສາມາດເປີດບໍລິການໄດ້ຕະຫຼອດປີ, ນັກທ່ອງທ່ຽວສາມາດເລືອກໄລຍະທາງໄດ້ຕາມໃຈ ໂດຍມີຈຸດປ່ອຍເຮືອ 5 ຈຸດຄື: ນາແຊງ, ຄອນເລືອງ, ສາມໝື່ນ, ເມືອງເຟືອງ ແລະ ແກ້ງປິນ. |
| 2 | ຫຼິ້ນຫາດຕາມສາຍນ້ຳລີກ | ຄືການຫຼິ້ນນ້ຳ ແລະ ພັກຜ່ອນຕາມຕູບແຄມນ້ຳ, ຕູບກາງນ້ຳ, ມີທັງໝົດ 4 ຈຸດຄື: ຫາດຜາຕັ້ງ, ຫາດຄອນເລືອງ, ຫາດສາມໝື່ນ ແລະ ຫາດດອນກາງ; ກິດຈະກຳນີ້ຈັດໄດ້ສະເພາະລະດູແລ້ງ ລະຫວ່າງເດືອນພະຈິກ ຫາ ພຶດສະພາ. |
| 3 | ທ່ຽວແກ້ງປິນ | ທ່ອງທ່ຽວຊົມແກ້ງທີ່ໃຫຍ່ທີ່ສຸດຂອງນ້ຳລີກ, ກິນເຂົ້າປ່າ (Picnic), ພາຍເຮືອລ່ອງແກ້ງ, ກະໂດດນ້ຳ, ຂີ່ສະລິງ ແລະ ນອນເຕັ້ນຊົມດາວ; ກິດຈະກຳນີ້ເປີດບໍລິການໄດ້ຕະຫຼອດປີ. |
| 4 | ທ່ຽວສວນອຸທະຍານຜາຕັ້ງ-ຜາເລືອງ | ເປັນການທ່ອງທ່ຽວສຶກສາທຳມະຊາດ ໂດຍການຍ່າງປ່າ, ປີນຜາ, ລອດຖ້ຳ, ຂີ່ສະລິງ, ຊົມສັດປ່າ ແລະ ຊົມວິວ, ເໝາະສຳລັບນັກທ່ອງທ່ຽວປະຈົນໄພ, ສາມາດທ່ຽວໄດ້ຕະຫຼອດປີ. |
| 5 | ທ່ຽວຊົມສວນໝາກໄມ້ ແລະ ກະສິກຳປອດສານ ພິດຕາມສາຍນ້ຳລີກ | ເປັນການຢ້ຽມຊົມການຜະລິດກະສິກຳ, ຊື້ຜົນຜະລິດກະສິກຳ, ຜະລິດຕະພັນແປ ຮູບ, ເມັດພັນ ແລະ ເບ້ຍຕົ້ນໄມ້. |
| 6 | ທ່ຽວໜ້າເຂື່ອນນ້ຳລີກ | ປະກອບມີກິດຈະກຳຫຼາຍຢ່າງ ເຊັ່ນ: ທ່ຽວສວນນ້ຳ, ສວນສະໜຸກ, ຫຼິ້ນ Jetsky, ຫຼິ້ນ Flyboard, ຫຼິ້ນ Wakeboard, ຊົມການແຂ່ງເຮືອ, ລ່ອງເຮືອນຳທ່ຽວ, ກິນອາຫານ ແລະ ທ່ຽວຕະຫຼາດຜະລິດຕະພັນປາ; ເປີດໄດ້ຕະຫຼອດປີ. |
| 7 | ຕຶກເບັດ ແລະ ຕັ້ງແຄ້ມອ່າງນ້ຳລີກ | ເປັນການທ່ອງທ່ຽວແບບພະຈົນໄພ ຂີ່ເຮືອອອກໄປຕຶກເບັດຢູ່ຕາມຍອດຫ້ວຍ, ສາມາດພັກຄ້າງຄືນດ້ວຍການນອນເຕັ້ນຕາມເກາະດອນ ຫຼື ແຄມຕາຝັ່ງ. |
| 8 | ຢ້ຽມຊົມບ້ານວັດທະນະທຳ | ເປັນການທ່ອງທ່ຽວຊຸມຊົນທີ່ມີການຜະລິດຫັດຖະກຳ ໂດຍສະເພາະການຕຳຫູກ, ຈັກສານ, ຕົ້ມເຫຼົ້າ ແລະ ມີການບໍລິການໂຮມສະເຕ, ຊຶ່ງປະກອບມີບ້ານ |

| | | |
|---|---|---|
| | | ສາມໝື່ນ, ບ້ານນາແຊງ, ບ້ານນາໃໝ່ ແລະ ບ້ານຄອນເລືອງ. |
| 9 | ທ່ຽວຕະຫຼາດອາຫານດອນກາງ ບ້ານເມືອງເຟືອງ | ເປັນການທ່ຽວຊົມ ແລະ ກິນອາຫານທີ່ປະຊາຊົນນຳມາຂາຍແບບຕະຫຼາດນັດມີທັງອາຫານພື້ນເມືອງ ແລະ ອາຫານທົ່ວໄປ ລວມເຖິງບາ ແລະ ຮ້ານກິນດື່ມແບບສະບາຍໆ, ເປັນການນັດພົບ ແລະ ກິນອາຫານຮ່ວມກັນຂອງນັກທ່ອງທ່ຽວໃນຕອນແລງຫາຄ່ຳ. |
| 10 | ຕັກບາດເຮືອນແພ | ເປັນກິດຈະກຳຍາມເຊົ້າທີ່ນັກທ່ອງທ່ຽວຈະໄດ້ສຳພັດກັບບັນຍາກາດການເຮັດບຸນຢ່າງເປັນຂະບວນຟົດຟື້ນທ່າມກາງສາຍໝອກ ແລະ ອາຍນ້ຳ ຊຶ່ງຈະສ້າງຄວາມປະທັບໃຈແກ່ນັກທ່ອງທ່ຽວເປັນຢ່າງດີ. |

### 6.2 ກິດຈະກຳໃນເຂດຜາທໍ່ໝໍ່ຄຳ (ເຂດເທດສະບານເມືອງ)

| ລດ | ກິດຈຳກຳ | ລາຍລະອຽດ |
|---|---|---|
| 1 | ຍ່າງສວນອຸທະຍານ ແລະ ຊົມວິວຈອມພູຊຽວ | ພູຊຽວດ້ານຫຼັງຂອງຕົວເມືອງຈະຖືກອະນຸລັກ ແລະ ຟື້ນຟູລະບົບນິເວດໃໝ່ເພື່ອໃຫ້ກາຍເປັນສວນອຸທະຍານພຶກສາສາດ, ພາຍໃນສວນຈະມີກິດຈະກຳຍ່າງຊົມທຳມະຊາດ ແລະ ພຶດພັນຕ່າງໆ, ຊົມວິວຢູ່ທຳຄອຍແກ້ວຍອດພູຊຽວ, ນະມັດສະການພະໃຫຍ່ພູຊຽວ, ກິນອາຫານ-ກາເຟຊົມວິວ, ຊື້ຂອງທີ່ລະນຶກ. |
| 2 | ທ່ຽວອຸທະຍານຜາທໍ່ | ເປັນການທ່ອງທ່ຽວສຶກສາທຳມະຊາດອີກຈຸດໜຶ່ງ ໂດຍປະກອບມີການຍ່າງປ່າ, ຂີ່ລົດຖີບພູເຂົາ, ປີນຜາ, ຊົມວິວ ແລະ ລອດຖ້ຳ. ສາມາດທ່ຽວໄດ້ຕະຫຼອດປີ. |
| 3 | ຢ້ຽມຊົມລັງທາດ | ເປັນການທ່ອງທ່ຽວທາງວັດທະນະທຳ ເພື່ອຢ້ຽມຊົມພະທາດເກົ່າສະໄໝບູຮານ, ສະຖານທີ່ນີ້ສິ່ງເສີມໃຫ້ບູລະນະເປັນວັດແຫ່ງໃໝ່. |
| 4 | ຢ້ຽມຊົມພິພິດທະພັນກົກແຕ້ຈາລຶກຄວາມແຄ້ນ | ເປັນການທ່ອງທ່ຽວທາງປະຫວັດສາດໂດຍມີການຈູດທູບເຄົາລົບວິລະຊົນທັງ 17 ຢູ່ໜ້າກົກແຕ້, ເຂົ້າຊົມພິພິດທະພັນເລົ່າມີເຊື້ອ, ນະມັດສະການພະພຸດທະຮູບໃນສິມໃໝ່, ສ່ອງກ້ອງຊົມຜາທໍ່ໝໍ່ຄຳຢູ່ທຳຄອຍ, ຖ່າຍຮູບຢູ່ສວນດອກໄມ້, ຊື້ເຄື່ອງທີ່ລະນຶກ ແລະ ກິນກາເຟຢູ່ອາຄານບໍລິການນັກທ່ອງທ່ຽວ. |
| 5 | ທ່ຽວສວນສາທາລະນະ ແລະ ຖະໜົນຄົນຍ່າງ | ຢ້ຽມຊົມສູນຂໍ້ມູນຂ່າວສານການທ່ອງທ່ຽວ, ທ່ຽວສວນສາທາລະນະແຄມນ້ຳ, ຊື້ຂອງຕ້ອນຢູ່ສູນຫັດຖະກຳ, ຍ່າງຊົມບັນຍາກາດຖະໜົນຄົນຍ່າງ, ກິນອາຫານ ແລະ ຊື້ເຄື່ອງ ທີ່ລະນຶກຢູ່ຕະຫຼາດກາງຄືນ. |
| 6 | ຂີ່ບໍລູນຊົມວິວ ແລະ ພາຣາມໍເຕີ | ນັກທ່ອງທ່ຽວສາມາດຂີ່ບໍລູນ (Bolloon) ແລະ ພາຣາມໍເຕີ (Paramotor) ໄດ້ທີ່ທົ່ງນາໃກ້ກັບສວນສາທາລະນະຂອງຕົວເມືອງ. |
| 7 | ທ່ຽວບຸນກອງເຂົ້າໃຫຍ່ສາມ ໝື່ນຕູບເຟືອງ | ເປັນງານບຸນກອງເຂົ້າທີ່ໃຫຍ່ທີ່ສຸດຂອງເມືອງຈັດໃນວັນເພັງ 15 ຄ່ຳເດືອນ 12 ຫຼືກົງກັບເດືອນພະຈິກຂອງປະຕິທິນສາກົນ ແຕ່ຄົບງັນທັງໝົດ 7 ມື້ 7 ຄືນ, ພາຍໃນງານຈະມີການກໍ່ສ້າງປະສາດເຂົ້າທີ່ວິຈິດສວຍງາມ, ມີປະຕິມະກາສັດຕ່າງໆ |

| | | |
|---|---|---|
| | | ເຮັດຄ້ອຍເຟືອງ ເຊັ່ນ ພະຍານາກ, ຊ້າງ, ມ້າ, ງົວ, ຄວາຍ ລວມເຖິງປະຕິມະກຳ ຕົວລະຄອນໃນເທບນິຍາຍສັງສິນໄຊ, ຕອນກາງຄືນຕົກແຕ່ງໄຟແສງສີ, ມີການຫຼິ້ນ ແລະ ແຕ່ງກາຍແບບພື້ນເມືອງ, ມີການສະແດງໝໍລຳເລື່ອງ ແລະ ຂັບລຳພື້ນເມືອງ, ຕອນເຊົ້າມີຕັກບາດ ແລະ ກິນເຂົ້າກົ້ນບາດສາມັກຄີ; ບ່ອນຈັດງານກຳນົດເອົາທີ່ງນາຕິດກັບສວນສາທາລະນະຂອງຕົວເມືອງ ເພື່ອຄວາມສະດວກດ້ານໄຟຟ້າ, ນ້ຳປະປາ, ຫ້ອງນ້ຳ ແລະ ບ່ອນຈອດລົດ. |

## 6.3 ກິດຈະກຳໃນເຂດສັງສິນໄຊ

| ລດ | ກິດຈຳກຳ | ລາຍລະອຽດ |
|---|---|---|
| 1 | ຢ້ຽມຊົມສູນວັດທະນະທຳສັງສິນໄຊ ແລະ ການສະແດງລະຄອນກາງແຈ້ງ | ຖ່າຍຮູບຢູ່ສວນສັງສິນໄຊ, ຢ້ຽມຊົມຫ້ອງວາງສະແດງເທບນິຍາຍ ແລະ ນິທານພື້ນບ້ານ, ຊົມລະຄອນເວທີວັນນະຄະດີພື້ນເມືອງລາວ ແລະ ທ່ຽວຕະຫຼາດຍ້ອນຍຸກ. |
| 2 | ທ່ຽວສວນອຸທະຍານຜາຫຼວງ ແລະ ຖ້ຳນາງສຸມູນທາ | ຍ່າງສຶກສາທຳມະຊາດຕາມໜ້າຜາ ແລະ ຍອດໄມ້, ຊົມປະສານຫີນແກ້ວ ນາງສຸມຸນທາ ຫຼື ຖ້ຳນາງສຸມຸນທາ, ຊົມເຈຍບິ້ຫ້ອຍຫົວໃນຖ້ຳ ແລະ ຝູງ ເຈຍບິນອອກຖ້ຳເວລາຄ້ອຍຄ່ຳ, ຂີ່ສ້າງສີໄຫຊົມທຳມະຊາດ. |
| 3 | ຢ້ຽມຊົມ ແລະ ເຮັດບຸນຄ້ຳຊູສາສະໜາ | ປະກອບມີ 3 ວັດສຳຄັນຄື: ວັດສິນໄຊຍະຣາມ ໂນນຫີນແຮ່, ວັດບຸນຍາລິດສັດຕະທຳມາຍະຣາມ ບ້ານນາເມືອງ ແລະ ວັດສັງສິນໄຊໂພຄະຣາມ ບ້ານຜາສັງ. |
| 4 | ທ່ຽວສວນອຸທະຍານຜາແດ ແລະ ຖ້ຳທ່ານສຸພານຸວົງສວນອຸທະຍານສິນໄຊແຫ່ງຍຸກສະໄໝ | ທ່ຽວຊົມສວນຮູບປັ້ນໃນເທບນິຍາມສັງສິນໄຊ, ທ່ຽວຖ້ຳທ່ານສຸພານຸວົງ, ປີນຜາຍ່າງປ່າ, ຕັ້ງຄ້າຍເຍົາວະຊົນ, ຫຼິ້ນກິລາ BB gun, ກິລາຍິງທະນູ ແລະ ກິລາແຂ່ງລົດ. |
| 5 | ຫຼິ້ນນ້ຳ ແລະ ກິນອາຫານອ່າງນ້ຳຕົງ | ຫຼິ້ນນ້ຳ ແລະ ພັກຜ່ອນຕາມຕູບ, ຫຼິ້ນກິລາທາງນ້ຳ, ທ່ຽວສວນດອກໄມ້, ຕຶກເບັດ. |
| 6 | ທ່ຽວສວນກະສິກຳອິນຊີຜາທອງ- ຜາຂາດ-ຜາດິນຈີ່ | ທ່ຽວສວນໝາກໄມ້, ສວນດອກໄມ້, Picnic, ຕັ້ງແຄ້ມຊົມດາວ, ຂີ່ຊ້າງ, ຂີ່ມ້າ |
| 7 | ທ່ຽວປ່າສຶກສາທຳມະຊາດຜາແດ-ຜາຕອງ | ປະກອບມີກິດຈະກຳ ຍ່າງປ່າ, ຂີ່ລົດຖີບພູເຂົາ, ປີນຜາ, ຊົມວິວ |

## 7. ວົງຈອນການທ່ອງທ່ຽວ

### 7.1 ລະດູການທ່ອງທ່ຽວ

ການທ່ອງທ່ຽວໃນເມືອງເຟືອງສາມາດທ່ຽວໄດ້ທຸກລະດູ ແຕ່ກິດຈະກໍາທີ່ພົ້ນເດັ່ນໃນແຕ່ລະລະດູມີດັ່ງນີ້:

- ການທ່ອງທ່ຽວລະດູແລ້ງ ເລີ່ມຈາກເດືອນພະຈິກ ຫາ ເດືອນພຶດສະພາ ລວມ 7 ເດືອນ, ເປັນຊ່ວງທີ່ດີທີ່ສຸດສໍາລັບການທ່ອງທ່ຽວ ມີກິດຈະກໍາການທ່ອງທ່ຽວທີ່ຫຼາກຫຼາຍ ໂດຍສະເພາະການທ່ອງທ່ຽວທາງນໍ້າ, ບຸນປະເພນີ, ວັດທະນະທໍາ-ຊຸມຊົນ ແລະ ການຊົມທິວທັດທໍາມະຊາດ-ເມກໝອກທີ່ສວຍງາມ; ກິດຈະກໍາທີ່ພົ້ນເດັ່ນໃນລະດູນີ້ມີຄື:

<table>
<tr><th>ເດືອນ</th><th colspan="3">ກິດຈະກໍາທີ່ພົ້ນເດັ່ນ</th></tr>
<tr><td>11</td><td>ບຸນອອກພັນສາ, ບຸນຊ່ວງເຮືອ</td><td rowspan="4">ຕັ້ງແຄ້ມທ້າລົມໜາວ, ຊົມທະເລໝອກ, ທ່ຽວສວນດອກໄມ້</td><td rowspan="7">ທ່ຽວຊຸມຊົນ, ທ່ຽວວັດ, ທ່ຽວຖໍ້າ, ທ່ຽວຕົວເມືອງ</td></tr>
<tr><td>12</td><td>ບຸນກອງເຂົ້າສາມໝື່ຕູບເຟືອງ</td></tr>
<tr><td>1</td><td>ບຸນກິນຄຸ້ມຊົນເຜົ່າໄທແດງບ້ານໂພນທອນ</td></tr>
<tr><td>2</td><td>ບຸນມະໂຫລານການສະແດງພື້ນບ້ານ ຢູ່ສູນວັດທະນະທໍາສັງສິນໄຊ</td></tr>
<tr><td>3</td><td>ບຸນເທດສະການອາຫານ ແລະ ດົນຕີ</td><td rowspan="3">ຫຼິ້ນນໍ້າຫາດ, ລ່ອງແກ້ງ, ກິລາທາງນໍ້າ</td></tr>
<tr><td>4</td><td>ບຸນປີໃໝ່ລາວຫາດດອນກາງ</td></tr>
<tr><td>5</td><td>ບຸນບັ້ງໄຟໃຫຍ່ບ້ານໂນນຫີນແຫ່</td></tr>
</table>

- ການທ່ອງທ່ຽວລະດູຝົນ ເລີ່ມຈາກເດືອນມິຖຸນາ ຫາ ເດືອນຕຸລາ ລວມ 5 ເດືອນ, ເປັນຊ່ວງທີ່ມີນໍ້ານອງ ແລະ ປະຊາຊົນສຸມໃສ່ການຜະລິດກະສິກໍາ. ສະນັ້ນ, ກິດຈະກໍາການທ່ອງທ່ຽວທີ່ພົ້ນເດັ່ນຈຶ່ງຕິດພັນກັບທໍາມະຊາດສີຂຽວ, ການຜະລິດກະສິກໍາ ແລະ ວິຖີຊີວິດຊຸມຊົນ.

<table>
<tr><th>ເດືອນ</th><th colspan="3">ກິດຈະກໍາພົ້ນເດັ່ນ</th></tr>
<tr><td>6</td><td>ບຸນລ້ຽງເຈົ້າຜາທໍ່</td><td></td><td rowspan="5">ໂຮມສະເຕ ຮຽນຮູ້ວິຖີຊີວິດຊຸມຊົນ, ຕັ້ງແຄ້ມເຍົາວະຊົນ, ທ່ຽວອຸດທະຍານ ຊົມທໍາມະຊາດ ແລະ ນໍ້າຕົກ, ທ່ຽວກະສິກໍາ</td></tr>
<tr><td>7</td><td></td><td></td></tr>
<tr><td>8</td><td>ບຸນແຫ່ທຽນເຂົ້າພັນສາ</td><td></td></tr>
<tr><td>9</td><td></td><td rowspan="2">ຕຶກເບັດ</td></tr>
<tr><td>10</td><td></td></tr>
</table>

## 7.2 ເສັ້ນທາງການທ່ອງທ່ຽວ

- **ເຂດລ່ອງນ້ຳລີກ**

| ເສັ້ນທາງ | ຈຸດປະສົງ | ກຸ່ມນັກທ່ອງທ່ຽວເປົ້າໝາຍ | ສະຖານທີ່ເປົ້າໝາຍ | ພາຫະນະ | ໄລຍະເວລາ |
|---|---|---|---|---|---|
| 1 | ທ່ອງທ່ຽວວັດທະນະທຳ ແລະ ວິຖີຊີວິດຊຸມຊົນ, ຊົມທຳມະຊາດ, ຊົມສວນສະໜຸກ ແລະ ຂີ່ເຮືອພັກຜ່ອນ | ນັກທ່ອງທ່ຽວທົ່ວໄປ | ຫາດດອນກາງ - ວັດສີສຸກ - ບ້ານຄອນເລືອງ - ບ້ານນາແຊງ - ໜ້າເຂື່ອນນ້ຳລີກ | ລົດທຸກປະເພດ | 1 ວັນ |
| 2 | ທ່ອງທ່ຽວວັດທະນະທຳ ແລະ ວິຖີຊີວິດຊຸມຊົນ, ຊົມທຳມະຊາດ, ທ່ຽວສວນສະໜຸກ ແລະ ຂີ່ເຮືອພັກຜ່ອນ | ນັກທ່ອງທ່ຽວທົ່ວໄປ | ຫາດດອນກາງ - ບ້ານນາໃໝ່ - ບ້ານນາແຊງ - ໜ້າເຂື່ອນນ້ຳລີກ | ລົດທຸກປະເພດ | 1 ວັນ |
| 3 | ທ່ອງທ່ຽວທຳມະຊາດ, ຊົມນ້ຳຕົກຕາດ, ຕຶກເບັດ ແລະ ກິນເຂົ້າປ່າ | ນັກທ່ອງທ່ຽວພະຈົນໄພ | ໜ້າເຂື່ອນນ້ຳລີກ, ແກ້ງຫ້ວຍຂະມີ, ແກ້ງຫ້ວຍຕົ້ນ (ຕ້ອງລົງສຳຫຼວດຕື່ມ) | ເຮືອນຳທ່ຽວ, ເຮືອກາຍັກ ແລະ ຍ່າງ | 1 ວັນ |
| 4 | ລ່ອງເຮືອຊົມທຳມະຊາດ,ທ່ຽວສວນໝາກໄມ້, ຫຼິ້ນນ້ຳ ແລະ ພັກຜ່ອນຕາມຕູບແຄມນ້ຳ | ນັກທ່ອງທ່ຽວທົ່ວໄປ | ຫາດນາແຊງ - ຫາດຜາຕັ້ງ - ຫາດຄອນເລືອງ - ຫາດສາມໝື່ນ - ຫາດດອນກາງ | ເຮືອກາຍັກ, ເຮືອກ້ອຍ, ກົງເບັງ, ເຮືອຫາງຍາວ | 1 ວັນ |
| 5 | ລ່ອງເຮືອຊົມທຳມະຊາດ, ທ່ຽວສວນໝາກໄມ້, ຫຼິ້ນແກ້ງປີນ, ກະໂດດນ້ຳ, ຂີ່ລົດວິບາກ | ນັກທ່ອງທ່ຽວພະຈົນໄພ | ຫາດດອນກາງ - ສວນໝາກໄມ້ - ແກ້ງປີນ - ບ້ານປາກຫ້ວຍ | ເຮືອຫາງຍາວ, ເຮືອກາຍັກ, ເຮືອຍາງລ່ອງແກ້ງ, ລົດ ATV | 1 ວັນ |
| 6 | ຍ່າງປ່າ, ເຂົ້າຖ້ຳ, ປີນຜາ, ຊົມວິວ, ຂີ່ສະລິງ ແລະ ຂີ່ລົດວິບາກ | ນັກທ່ອງທ່ຽວພະຈົນໄພ | ຜາເລືອງ - ໜ້າເຂື່ອນນ້ຳລີກ - ຫາດດອນກາງ | ລົດຖີບພູເຂົາ, ລົດ ATV, ລົດຈັກສະເກມ, ຍ່າງ | 1 ວັນ |
| 7 | ຍ່າງປ່າ, ເຂົ້າຖ້ຳ, ປີນຜາ, ຊົມ | ນັກທ່ອງ | ຜາຕັ້ງ - ໜ້າເຂື່ອນນ້ຳ | ລົດຖີບພູເຂົາ, | 1 ວັນ |

| | | | | | |
|---|---|---|---|---|---|
| | ວິວ, ຂີ່ສະລິງ ແລະ ຂີ່ລົດວິບາກ | ທ່ຽວພະຈົນໄພ | ລົກ -ຫາດດອນກາງ | ລົດ ATV, ລົດຈັກສະເກມ, ຍ່າງ | |




ຮູບທີ 53: ແຜນທີ່ເສັ້ນທາງການທ່ອງທ່ຽວໃນເຂດລ່ອງນ້ຳລຶກ

- **ເຂດຜາທໍ່ໜໍ່ຄຳ**

| ເສັ້ນທາງ | ຈຸດປະສົງ | ກຸ່ມນັກທ່ອງທ່ຽວເປົ້າໝາຍ | ສະຖານທີ່ເປົ້າໝາຍ | ພາຫະນະ | ໄລຍະເວລາ |
|---|---|---|---|---|---|
| 1 | ນະມັດສະການພະພຸດທະຮູບໃຫຍ່, ຊົມວິວທະເລໝອກ, ຮຽນຮູ້ປະຫວັດສາດ, ຊົມໜໍ່ຄຳ, ຂີ່ບໍລູນ ແລະ ຊື້ເຄື່ອງຕ້ອນ | ນັກທ່ອງທ່ຽວທົ່ວໄປ | ອຸທະຍານພູຊຽວ - ພິພິດທະພັນກົກແຕ້ - ສວນສາທາລະນະຕົວເມືອງ | ລົດທຸກປະເພດ | ເຄິ່ງວັນ |
| 2 | ຊົມທິວທັດຕົວເມືອງ, ຊົມສະຖານທີ່ທາງປະຫວັດສາດ, ທ່ຽວຊົມທຳມະຊາດ, ຊົມຖ້ຳ, ຊົມແຫຼ່ງບູຮານຄະດີ, ນະມັດສະການພະພຸດທະຮູບໃຫຍ່, ຊົວວິວ, ຂີ່ບໍລູນ ແລະ ທ່ຽມຊົມຊີວິດກາງຄືນ | ນັກທ່ອງທ່ຽວທົ່ວໄປ | ພິພິດທະພັນກົກແຕ້ - ອຸທະຍານຜາທໍ່ - ຊົມປາວັງສະຫງວນນ້ຳຕຶ້ງ - ຊົມວັດເທບນິມິດຜາທໍ່ໜໍ່ຄຳ - ລັງຫາດອຸທະຍານພູຊຽວ - ສວນສາທາລະນະ ແລະ ຖະໜົນຄົນຍ່າງ | ລົດຖີບ ແລະ ລົດທຸກປະເພດ | 1 ວັນ |




ຮູບທີ 54: ແຜນທີ່ເສັ້ນທາງການທ່ອງທ່ຽວໃນເຂດເທດສະບານ

- **ເຂດສັງສິນໄຊ**

| ເສັ້ນທາງ | ຈຸດປະສົງ | ກຸ່ມນັກທ່ອງທ່ຽວເປົ້າໝາຍ | ສະຖານທີ່ເປົ້າໝາຍ | ພາຫະນະ | ໄລຍະເວລາ |
|---|---|---|---|---|---|
| 1 | ທ່ຽວວັດ ແລະ ຮຽນຮູ້ວັດທະນະທຳ | ນັກທ່ອງທ່ຽວທົ່ວໄປ | ວັດສິນໄຊ - ວັດສັງສິນໄຊ - ວັດນາເມືອງ - ສູນວັດທະນະທຳສັງສິນໄຊ | ລົດທຸກປະເພດ | 1 ວັນ |
| 2 | ທ່ຽວຊົມວິວທຳມະຊາດ, ສວນກະສິກຳ, ການດຳລົງຊີວິດປະຊາຊົນ | ນັກທ່ອງທ່ຽວພະຈົນໄພ | ສູນວັດທະນະທຳສັງສິນໄຊ - ອ່າງນໍ້າຕົງ - ຜາດິນຈີ່ - ຜາຂາດ - ຜາຕອງ - ຜາຫຼວງ - ຜາສັງ - ຜາແຖ - ສູນວັດທະນະທຳສັງສິນໄຊ | ລົດທຸກປະເພດ | 1 ວັນ |
| 3 | ສຶກສາຮຽນຮູ້ມູນເຊື້ອປະຫວັດສາດ, ຮຽນຮູ້ການຍ່າງປ່າ, ປີນຜາ, ເຂົ້າຖໍ້າ, ສຶກສາທຳມະຊາດ ແລະ ສຳພັດກັບການເຮັດກະສິກຳຂອງ | ຊາວໜຸ່ມເຍົາວະຊົນ ແລະ ນັກທ່ອງທ່ຽວແບບພະ | ອຸດທະຍານຜາແຖ - ຜາຕອງ - ຜາຫຼວງ - ຜາທອງ - ຜາຂາດ - ຜາດິນຈີ່ | ຍ່າງ, ລົດຖີບພູເຂົາ, ລົດ ATV, ຊ້າງ, ມ້າ | 1 ວັນ |

| | | | | | |
|---|---|---|---|---|---|
| | ປະຊາຊົນ | ຈີນໄພ | | | |
| 4 | ປັ່ງມຢາມສະຖານທີ່ສຳຄັນກ່ອນມຸ່ງໜ້າເຂົ້າສູ່ຕົວເມືອງ | ນັກທ່ອງທ່ຽວທົ່ວໄປ | ວັດຜາສັງ - ຜາແຖ - ຜາທອງ - ວັດສິນໄຊ - ສູນວັດທະນະທຳສັງສິນໄຊ | ລົດທຸກປະເພດ | 1 ວັນ |




ຮູບທີ 55: ແຜນທີ່ເສັ້ນທາງການທ່ອງທ່ຽວໃນເຂດເທດສະບານ

## 8. ແຜນພັດທະນາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ

### 8.1 ໂຄງລ່າງເສັ້ນທາງ

ເສັ້ນທາງຄືໂຄງລ່າງພື້ນຖານສຳຄັນທີ່ຊ່ວຍໃຫ້ການເດີນທາງເຂົ້າເຖິງແຫຼ່ງທ່ອງທ່ຽວໄດ້ສະດວກຍິ່ງແຕ່ໃນເວລາດຽວກັນນັ້ນ ເສັ້ນທາງກໍຍັງຊ່ວຍສ້າງໂອກາດໃຫ້ແກ່ການພັດທະນາແຫຼ່ງທ່ອງທ່ຽວ ແລະ ກິດຈະກຳການທ່ອງທ່ຽວໃໝ່ໆຕື່ມອີກດ້ວຍ. ສະນັ້ນ ເພື່ອຊຸກຍູ້ສົ່ງເສີມການພັດທະນາການທ່ອງທ່ຽວໃນເມືອງເຟືອງໃຫ້ເປັນໄປຕາມເປົ້າໝາຍທີ່ຕັ້ງໄວ້ ຄວນມີການປັບປຸງ-ກໍ່ສ້າງເສັ້ນທາງດັ່ງຕໍ່ໄປນີ້:

#### 8.1.1. ເສັ້ນທາງເຊື່ອມຕໍ່ກັບເມືອງໃກ້ຄຽງ

ເສັ້ນທາງສາຍຫຼັກທີ່ເຂົ້າສູ່ຕົວເມືອງເຟືອງໃນປັດຈຸບັນໄດ້ແກ່ທາງເລກທີ 4501 ຊຶ່ງສາມາດເຂົ້າໄດ້ຈາກ 2 ທາງ ຄື: ມາທາງເສັ້ນທາງເລກທີ 13 ເໜືອ ຫຼື ທາງດ່ວນວຽງຈັນ-ວັງວຽງ ເຂົ້າຈາກເມືອງຫີນເຫີບ ມີໄລຍະທາງ 28 ກມ, ມາທາງເສັ້ນທາງເລກທີ 11 ເຂົ້າຈາກບ້ານວັງ ເມືອງໝື່ນ ມີໄລຍະທາງ 86 ກມ ທາງເສັ້ນດັ່ງກ່າວກຳລັງຢູ່ໃນໄລຍະການກໍ່ສ້າງດ້ວຍການປູຢາງ 2 ຊັ້ນ ຄາດວ່າຈະສຳເລັດໃນປີ 2025, ຢ່າງໃດກໍຕາມເພື່ອເພີ່ມ

ທາງເລືອກໃນການເດີນທາງຂອງນັກທ່ອງທ່ຽວ ແລະ ເຮັດໃຫ້ການເຊື່ອມຕໍ່ກັບຕົວເມືອງອ້ອມຂ້າງໄດ້ດີຍິ່ງ ຈຶ່ງເຫັນຄວນມີການປັບປຸງ-ກໍ່ສ້າງເສັ້ນທາງ ເພີ່ມເຕີມດັ່ງນີ້:

**1) ຂົວຂ້າມນໍ້າຂອງ ແລະ ດ່ານສາກົນບ້ານວັງເຊື່ອມຕໍ່ປະເທດໄທ:** ສະເໜີທາງແຂວງກໍ່ຄືລັດຖະບານພິຈາລະນາໂຄງການກໍ່ສ້າງຂົວຂ້າມນໍ້າຂອງຢູ່ບ້ານວັງ ເມືອງໝື່ນ ພ້ອມທັງຍົກລະດັບດ່ານປະເພນີເປັນດ່ານສາກົນ, ຂົວດັ່ງກ່າວຈະກາຍເປັນການເຊື່ອມຕໍ່ການທ່ອງທ່ຽວໃນພາກພື້ນ ໂດຍສະເພາະການເຊື່ອມໂຍງກັບພາກເໜືອຂອງໄທ ລວມເຖິງແຫຼ່ງທ່ອງທ່ຽວຊື່ດັງຕ່າງໆ ເຊັ່ນ: ເມືອງຊຽງຄານ, ພູເຮືອ, ພູກະດຶງ, ພູກ້ອນ ແລະ ອື່ນໆ ຊຶ່ງຄາດວ່າຈະຊ່ວຍດຶງດູດນັກທ່ອງທ່ຽວຈາກປະເທດໄທເຂົ້າມາທ່ຽວເມືອງເຟືອງ ແລະ ເມືອງວັງວຽງໃຫ້ຫຼາຍເປັນທະວີຄູນ.

**2) ເສັ້ນທາງເຊື່ອມເມືອງເຟືອງ-ຂົວຂ້າມນໍ້າຂອງບ້ານວັງ:** ເສັ້ນທາງເລກທີ 4501 ຕັ້ງແຕ່ຕົວເມືອງເຟືອງ ຫາ ບ້ານຜາສັງ ແມ່ນເປັນເສັ້ນທາງປູຢາງກວ້າງປະມານ 10 ແມັດ ປັດຈຸບັນລົດສາມາດສັນຈອນສະດວກສະບາຍດີແຕ່ສະເໜີໃຫ້ປັບປຸງເພີ່ມເຕີມຄື: ແຕ້ມເສັ້ນແບ່ງເລັນຖະໜົນໃຫ້ຊັດເຈນ, ແບ່ງລົດຖີບທັງສອງຂ້າງຂ້າງລະ 1,5 ແມັດ, ປູກຕົ້ນໄມ້ດອກສອງຂ້າງທາງ, ກໍ່ສ້າງບ່ອນພັກຈອດລົດເຂດຊຸມຊົນ ແລະ ຈຸດແວະຕ່າງໆ, ເພີ່ມໄຟແສງສະຫວ່າງ ແລະ ທາງມ້າລາຍໃນບໍລິເວນທີ່ມີຜູ້ຄົນຂ້າມທາງໜາແໜ້ນ ເຊັ່ນ: ເຂດໂຮງຮຽນ, ຕະຫຼາດ, ໃຈກາງຊຸມຊົນ ແລະ ອື່ນໆ.

**3) ເສັ້ນທາງເຊື່ອມຕໍ່ເມືອງເຟືອງ-ເມືອງວັງວຽງ ແລວທີ 1:** ເສັ້ນທາງເລກທີ 4707 ເລີ່ມຈາກບ້ານນາໃໝ່ ເມືອງເຟືອງຜ່ານບ້ານນາກາງ ເຂດຜາບອງເມືອງຫີນເຫີບຫາບ້ານໂພນຄໍາ ເມືອງວັງວຽງ ລວມໄລຍະທາງ 48 ກິໂລແມັດ, ສະເໜີໃຫ້ປັບປຸງເປັນເສັ້ນທາງປູຢາງ 2 ຊັ້ນ ຄວາມກວ້າງຢ່າງນ້ອຍ 8 ແມັດ ເພື່ອເປັນເສັ້ນທາງສາຍຫຼັກເຊື່ອມຈອດຫາເມືອງວັງວຽງຖ້າຫາກເສັ້ນທາງນີ້ກໍ່ສ້າງສໍາເລັດຈະເຮັດໃຫ້ການເຊື່ອມໂຍງການທ່ອງຈາກປະເທດໄທເຂົ້າຫາເມືອງເຟືອງ ແລະ ເມືອງວັງວຽງ, ພ້ອມກັນນັ້ນຍັງເປັນການສົ່ງເສີມການພັດທະນາເຂົ້າສູ່ເຂດຜາບອງຕື່ມອີກ.

**4) ເສັ້ນທາງເຊື່ອມຕໍ່ເມືອງເຟືອງ-ເມືອງວັງວຽງ ແລວທີ 2:** ເສັ້ນທາງເລກທີ 4690 ເລີ່ມຈາກບ້ານໜອງເປັດ ເມືອງເຟືອງ ຫາ ບ້ານນໍ້າແປ ເມືອງວັງວຽງ ລວມມີໄລຍະທາງ 46 ກິໂລແມັດ, ປັດຈຸບັນເປັນທາງດິນແດງທຽວໄດ້ລະດູດຽວ, ໃນແຜນພັດທະນາສະເໜີໃຫ້ໃຫ້ປັບປຸງເປັນເສັ້ນທາງດິນແດງທຽວໄດ້ 2 ລະດູໃຊ້ສໍາລັບລົດວິບາກເພື່ອການທ່ອງທ່ຽວ ເນື່ອງຈາກເສັ້ນທາງດັ່ງກ່າວຜ່ານເຂດປ່າສະຫງວນທີ່ມີທໍາມະຊາດອຸດົມສົມບູນ ເໝາະແກ່ການທ່ອງທ່ຽວ ທາງທໍາມະຊາດແບບພະຈົນໄພ.

**5) ເສັ້ນທາງເຊື່ອມຕໍ່ເມືອງເຟືອງ-ເມືອງແມດ:** ເສັ້ນທາງເລກທີ 4503 ເລີ່ມຈາກຈາກນາເລົ່າ ເມືອງເຟືອງ ຫາ ບ້ານນາດີ ເມືອງແມດ ລວມໄລຍະທາງ 36 ກິໂລແມັດ ປັດຈຸບັນກໍາລັງຢູ່ໃນໄລຍະສໍາຫຼວດ-ອອກແບບເພື່ອກໍ່ສ້າງທາງປູຢາງ 2 ຊັ້ນ ຄວາມກວ້າງໜ້າທາງບໍ່ໃຫ້ຫຼຸດ 8 ແມັດ, ຖ້າເສັ້ນທາງນີ້ກໍ່ສ້າງສໍາເລັດຈະຊ່ວຍເຮັດໃຫ້ການເຊື່ອມໂຍງການທ່ອງທ່ຽວໄປຫາເມືອງແມດ-ເມືອງກາສີໄດ້ສະດວກຍິ່ງ ແລະ ຈະເຮັດໃຫ້ເມືອງເຟືອງຈະກາຍເປັນໃຈກາງຂອງການເຊື່ອມໂຍງບັນດາເມືອງຕ່າງໆອ້ອມຂ້າງເຫຼົ່ານີ້ທັນທີ.

**6) ເສັ້ນທາງເຊື່ອມຕໍ່ເມືອງເຟືອງ-ເມືອງສັງທອງ:** ສະເໜີກໍ່ສ້າງທາງດິນແດງທຽວໄດ້ 2 ລະດູ ເຊື່ອມຕໍ່ບ້ານນາເມືອງ ຫາ ບ້ານວັງມ້າ ເມືອງສັງທອງ ລວມໄລຍະທາງ 24 ກິໂລແມັດ ເພື່ອເປັນເສັ້ນທາງເລືອກສຳລັບນັກທ່ອງທ່ຽວກຸ່ມຂີ່ລົດວິບາກ.




ຮູບທີ 56: ແຜນທີ່ປັບປຸງ-ກໍ່ສ້າງເສັ້ນທາງເຊື່ອມຈອດກັບເມືອງໃກ້ຄຽງ



ຮູບທີ 57: ຮູບປັບປຸງເສັ້ນທາງຈາກຕົວເມືອງຟືອງຫາບ້ານຜາສັງ (ຊ້າຍ-ກ່ອນປັບປຸງ, ຂວາ-ຫຼັງປັບປຸງ)

### 8.1.2. ເສັ້ນທາງເຊື່ອມໂຍງແຫຼ່ງທ່ອງທ່ຽວພາຍໃນເມືອງ:

ໂດຍພື້ນຖານແລ້ວ ການເດີນທາງຈາກຕົວເມືອງໄປຫາເຂດທ່ອງທ່ຽວທີ່ຢູ່ທາງທິດເໜືອ (ເຂດທ່ອງທ່ຽວລ່ອງນໍ້າລີກ) ແລະ ທິດໃຕ້ (ເຂດທ່ອງທ່ຽວສັງສິນໄຊ) ແມ່ນມີຄວາມສະດວກສະບາຍ ເນື່ອງຈາກເສັ້ນທາງໄດ້ຮັບການປູຢາງຕໍ່ກັນຕະລອດແນວ ແຕ່ວ່າເສັ້ນທາງບາງຊ່ວງອາດແຄບເກີນໄປຖ້າຫາກວ່າການທ່ອງ ທ່ຽວມີການຂະຫຍາຍ ຊຶ່ງມີຄວາມຈຳເປັນຕ້ອງໄດ້ຮັບການຂະໃຫ້ກວ້າງອອກຕື່ມໃນອະນາຄົດ, ເສັ້ນທາງບາງຊ່ວງອາດຕ້ອງໄດ້ປັບປຸງ ເພື່ອເພີ່ມຄວາມປອດໄພໃຫ້ແກ່ຄົນຍ່າງ ແລະ ຂີ່ລົດຖີບ, ນອກຈາກນັ້ນ ຍັງຈຳເປັນຕ້ອງໄດ້ກໍ່ສ້າງຂະເສັ້ນທາງປູຢາງເພີ່ມເຕີມ ເພື່ອໃຫ້ສາມາດເຊື່ອມຈອດບ້ານຕ່າງໆໃຫ້ຫຼາຍຕື່ມອີກ ລາຍລະອຽດມີດັ່ງນີ້:

1) ເສັ້ນທາງເຊື່ອມຈອດເຂດທ່ອງທ່ຽວລ່ອງນໍ້າລີກ: ປັບປຸງເສັ້ນທາງປູຢາງຈາກບ້ານທ່າ ຫາ ບ້ານນາແຊງໃຫ້ກວ້າງອອກຕື່ມເປັນ 8 ແມັດ ເພື່ອໃຫ້ລົດສາມາດສວນທາງກັນໄດ້ຢ່າງປອດໄພໂດຍໃຫ້ມີ 2 ເລັນ (ໄປ

1 ເລັນ, ກັບ 1 ເລັນ) ກວ້າງ ເລັນລະ 3.5 ແມັດ, ມີຂອບທາງເບື້ອງລະ 0.5 ແມັດ, ສອງຂ້າງທາງຄວນປູກຕົ້ນໄມ້ດອກທີ່ມີສີສັນສວຍງາມ ແລະ ໃຫ້ຮົ່ມ ເພື່ອສົ່ງເສີມພູມິທັດ ແລະ ການຂີ່ລົດຖີບ, ລວມໄລຍະທາງ 15 ກິໂລແມັດ.

2) ເສັ້ນທາງທ່ອງທ່ຽວສັງສິນໄຊເບື້ອງຕາເວັນອອກ: ສະເໜີກໍ່ສ້າງທາງປູຢາງ 2 ຊັ້ນ ມີຄວາມກວ້າງ 8 ແມັດ ຈາກສາມແຍກບ້ານນາລັງຜ່ານບ້ານນາຂອບ, ບ້ານນາເມືອງ, ບ້ານໂພນສະຫວ່າງ ສຸດຢູ່ສາມແຍກບ້ານນາຄໍາ ລວມໄລຍະທາງ 18 ກິໂລແມັດ, ເສັ້ນທາງນີ້ຈະຊ່ວຍໃຫ້ການທ່ອງທ່ຽວເຊື່ອມຈອດຫາວັດນາເມືອງ, ອຸດທະຍານຜາແຖ-ຖ້ໍາ ທ່ານ ສຸພານຸວົງ ແລະ ແຫຼ່ງທ່ອງທ່ຽວອື່ນໆໄດ້ສະດວກ.

3) ເສັ້ນທາງທ່ອງທ່ຽວສັງສິນໄຊເບື້ອງຕາເວັນຕົກ:ສະເໜີກໍ່ສ້າງເສັ້ນທາງສາຍໃໝ່ຈາກບ້ານຫ້ວຍເດື່ອລຽບຜາດິນຈີ່, ຜາຂາດ, ຜາທອງ, ຜາຫຼວງ ເບື້ອງຕາເວັນຕົກອ້ອມໄປເບື້ອງໃຕ້ຂອງຜາສັງ ແລ້ວປ່ອງໃສ່ບ້ານຜາສັງໃຕ້ ລວມໄລຍະທາງ 17 ກິໂລແມັດ, ເສັ້ນທາງນີ້ກໍ່ສ້າງເປັນເສັ້ນທາງດິນແດງທຽວໄດ້ 2 ລະດູ, ເປັນເສັ້ນທາງສົ່ງເສີມການທ່ອງທ່ຽວກະສິກໍາ ແລະ ການຂີ່ລົດວິບາກ.

4) ຂົວຂ້າມນ້ໍາລີກ: ສະເໜີກໍ່ສ້າງເສັ້ນທາງສາຍໃໝ່ຈາກບ້ານຫ້ວຍເດື່ອລຽບຜາດິນຈີ່, ຜາຂາດ, ຜາທອງ, ຜາຫຼວງເບື້ອງຕາເວັນຕົກປ່ອງໃສ່ເສັ້ນທາງເບື້ອງໃຕ້ຂອງຜາສັງ ລວມໄລຍະທາງ 17 ກິໂລແມັດ, ເສັ້ນທາງນີ້ກໍ່ສ້າງເປັນເສັ້ນທາງດິນແດງທຽວໄດ້ 2 ລະດູ, ກວ້າງ 6 ແມັດ, ເປັນເສັ້ນທາງສົ່ງເສີມການທ່ອງທ່ຽວກະສິກໍາ ແລະ ການຂີ່ລົດວິບາກ.

5) ເສັ້ນທາງທ່ອງທ່ຽວລ່ອງນ້ໍາລີກເບື້ອງຕາເວັນອອກ: ສະເໜີກໍ່ສ້າງຂົວຂ້າມນ້ໍາລີກຢູ່ບ້ານເມືອງເຟືອງເພື່ອເຊື່ອມການທ່ອງທ່ຽວໄປສູ່ທິດຕາ ເວັນອອກຂອງນ້ໍາລີກ ພ້ອມທັງເພື່ອອໍານວຍຄວາມສະດວກໃຫ້ແກ່ການສັນຈອນຜ່ານໄປສູ່ເມືອງວັງວຽງໃນອະນາຄົດ, ຂົວແຫ່ງນີ້ຄວນອອກແບບໃຫ້ກົມກືນກັບສະພາບແວດລ້ອມ ແລະ ກິດຈະກໍາທາງນ້ໍາ ໂດຍບໍ່ຄວນໃຫ້ມີເສົາກາງນ້ໍາ ແລະ ຕ້ອງຍົກສູງຈາກລະດັບໜ້ານ້ໍາສູງສຸດຫຼາຍກວ່າ 3.00 ແມັດໄປ, ໜ້າກວ້າງຂອງເລັນການສັນຈອນບໍ່ຄວນຕ່ໍາກວ່າ 6 ແມັດ (ໄປ-ກັບ) ແລະ ຄວນມີທາງຍ່າງ-ທາງລົດຖີບຢູ່ສອງເບື້ອງ ເບື້ອງລະ 1.5 ແມັດ ເປັນຢ່າງນ້ອຍ, ຄວາມຍາວປະມານ 120 ແມັດ.

6) ເສັ້ນທາງລຽບນ້ໍາລີກ: ສະເໜີກໍ່ສ້າງເສັ້ນທາງສາຍໃໝ່ລຽບຕາມສາຍນ້ໍາລີກ ຈາກບ້ານແກ້ງຊຽງໄປຫາແກ້ງປືນປ່ອງໃສ່ບ້ານປາກຫ້ວຍ ເມືອງຫີນເຫີບ ລວມໄລຍະທາງ 32 ກິໂລແມັດ ເປັນທາງປູຢາງມີຄວາມກວ້າງ 6 ແມັດ ແລະ ກໍ່ສ້າງຂົວຂ້າມນ້ໍາລີກຢູ່ບ້ານປາກຫ້ວຍອີກ 1 ແຫ່ງ, ເສັ້ນທາງສາຍນີ້ເປັນເສັ້ນທາງສົ່ງເສີມໃຫ້ເກີດການພັດທະນາດ້ານທີ່ພັກ, ຮ້ານອາຫານ, ແຫຼ່ງທ່ອງທ່ຽວ ແລະ ກິດຈະກໍາການທ່ອງທ່ຽວລຽບຕາມສາຍນ້ໍາລີກ.

7) ເສັ້ນທາງໜ້າເຂື່ອນນ້ໍາລີກ: ສະເໜີກໍ່ສ້າງເສັ້ນທາງຈາກບ້ານນາແຊງຫາໜ້າເຂື່ອນ້ໍາລີກ ລວມໄລຍະທາງ 1,40 ກິໂລແມັດ, ເປັນເສັ້ນທາງປູຢາງ ກວ້າງ 6 ແມັດ.

8) ເສັ້ນທາງເວັ້ນຕົວເມືອງ: ເພື່ອຫຼຸດຜ່ອນຈໍານວນລົດທີ່ຜ່ານຕົວເມືອງ ແລະ ຜົນກະທົບຈາກລົດບັນທຸກ ຈຶ່ງສະເໜີໃຫ້ມີການກໍ່ສ້າງເສັ້ນທາງເວັ້ນເມືອງ ເລີ່ມຈາກສາມແຍກທາງເຂົ້າໂຮງງານຊີມັງບ້ານໂພນໄຊອ້ອມດ້ານຫຼັງພູຂຽວ ປ່ອງໃສ່ທາງໄປຫີນເຫີບ ເຂດບ້ານດອນ ລວມໄລຍະທາງ 10 ກິໂລແມັດ, ເປັນທາງປູຢາງ 2 ຊັ້ນ ມີຄວາມກວ້າງ 8 ແມັດໄປ.




ຮູບທີ 58: ແຜນທີ່ປັບປຸງ-ກໍ່ສ້າງເສັ້ນທາງເຊື່ອມຈອດແຫຼ່ງທ່ອງທ່ຽວພາຍໃນເມືອງເຟືອງ

9) ເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວ: ເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວຍັງມີຄວາມຕ້ອງການພັດທະນາຈຳນວນຫຼວງຫຼາຍ ແຕ່ຈະຕ້ອງຊຸກຍູ້ໃຫ້ພາກເອກະຊົນທີ່ສຳປະທານ ຫຼື ມີຜົນປະໂຫຍດຮ່ວມ ເປັນເຈົ້າການໃນການພັດທະນາ, ເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວທີ່ສຳຄັນປະກອບມີ:

1. ເສັ້ນທາງເຂົ້າຫາຜາທໍ່ ມີໄລຍະທາງ 1,80 ກິໂລແມັດ
2. ເສັ້ນທາງລຽບນໍ້າເຂດຫາດຜາຕັ້ງ ມີໄລຍະທາງ 2,40 ກິໂລແມັດ
3. ເສັ້ນທາງລຽບນໍ້າເຂດບ້ານຄອນເລືອງ ມີໄລຍະທາງ 1,60 ກິໂລແມັດ
4. ເສັ້ນທາງເຂົ້າຫາຫາດສາມໝື່ນ ມີໄລຍະທາງ 0,80 ກິໂລແມັດ
5. ເສັ້ນທາງລຽບນໍ້າເຂດບ້ານງ້ວາ ມີໄລຍະທາງ 3,50 ກິໂລແມັດ
6. ເສັ້ນທາງເຂົ້າຫາຈຸດຊົມວິວພູຂຽວ ມີໄລຍະທາງ 2 ກິໂລແມັດ
7. ເສັ້ນທາງເຂົ້າຫາຜາຫຼວງ ມີໄລຍະທາງ 4 ກິໂລແມັດ
8. ເສັ້ນທາງເຂົ້າຫາຜາແດງ ມີໄລຍະທາງ 2 ກິໂລແມັດ




ຮູບທີ 59: ແຜນທີ່ກໍ່ສ້າງເສັ້ນທາງລຽບນໍ້າລີກ

10) **ເສັ້ນທາງໃນຕົວເມືອງ**: ເສັ້ນທາງພາຍໃນຕົວເມືອງ ປັບປຸງໃຫ້ສົ່ງເສີມການຍ່າງ ແລະ ການຂີ່ລົດຖີບໃຫ້ຫຼາຍ,ຈັດສັນບ່ອນຈອດລົດໃຫ້ເປັນລະບຽບ ຫຼີກຫຼ້ຽງການຈອດລົດຊະຊາຍຂວາງທາງຍ່າງ-ທາງລົດຖີບ, ປັບປຸງພູມີທັດ ແລະ ປູກຕົ້ນໄມ້ໃຫ້ຮົ່ມເງົາສອງຂ້າງທາງ, ຕິດຕັ້ງໄຟເບືອງທາງໃຫ້ທົ່ວເຖິງ, ກໍານົດເສັ້ນທາງປອດລົດ ເພື່ອສົ່ງເສີມກິດຈະກໍາການທ່ອງທ່ຽວ ແລະ ການຄ້າຂາຍພາຍໃນຕົວເມືອງ.



ຮູບທີ 60: ຖະໜົນໃນເມືອງກ່ອນ ແລະ ຫຼັງການປັບປຸງ (ຊ້າຍ-ກ່ອນປັບປຸງ, ຂວາ-ຫຼັງປັບປຸງ)

### 8.2 ການຄົມມະນາຄົມຂົນສົ່ງ

ການເດີນທາງຂອງນັກທ່ອງທ່ຽວມາເມືອງເຟືອງ ສ່ວນຫຼາຍແມ່ນນໍາໃຊ້ລົດສ່ວນຕົວ, ເນື່ອງຈາກວ່າລະບົບການຂົນສົ່ງສາທາລະນະຍັງບໍ່ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການທັງທາງດ້ານຄຸນນະພາບ ແລະ ປະລິມານ ຊຶ່ງປັດຈຸບັນລົດໂດຍສານສາທາລະນະທີ່ໃຫ້ບໍລິການຂົນສົ່ງຜູ້ຄົນເຂົ້າ-ອອກເມືອງເຟືອງ ມີລົດຕູ້ໂດຍສາຍທາງການແລ່ນລົດ ແລະ ຈໍານວນຖ້ຽວມີຢ່າງຈໍາກັດ, ເຫັນໄດ້ຈາກຂໍ້ມູນທີ່ສະແດງຕໍ່ໄປນີ້:

ຕາຕະລາງທີ 7: ຂໍ້ມູນລົດໂດຍສານປັດຈຸບັນ

| ປະເພດ ພາຫະນະ | ເສັ້ນທາງ | ຈຳນວນຖ້ຽວຕໍ່ມື້ | ເວລາລົດອອກ | ຄ່າໂດຍສານ |
|---|---|---|---|---|
| ລົດຕູ້ | ເມືອງເຟືອງ-ນະຄອນຫຼວງວຽງຈັນ | 14 | - | 100.000 ກີບ/ຄົນ |
| ລົດຕູ້ | ເມືອງເຟືອງ-ວັງວຽງ | 1 | - | 100.000 ກີບ/ຄົນ |
| ລົດຕູ້ | ເມືອງເຟືອງ-ຊະນະຄາມ | 1 | - | 80.000 ກີບ/ຄົນ |

ແຫຼ່ງຂໍ້ມູນ: ສະມາຄົມລົດໂດຍສານເມືອງເຟືອງ, ມັງກອນ 2023

ສຳລັບການຂົນສົ່ງສາທາລະນະພາຍໃນເມືອງ ແມ່ນຍັງບໍ່ທັນໄດ້ຮັບການຈັດຕັ້ງ.

ສະນັ້ນ ເພື່ອຊຸກຍູ້ການທ່ອງທ່ຽວເມືອງເຟືອງໃຫ້ຂະຫຍາຍຕົວເປັນວົງກວ້າງຕື່ມ ຈຶ່ງມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງເພີ່ມທາງເລືອກສຳລັບການເດີນທາງໃຫ້ແກ່ນັກທ່ອງທ່ຽວ ດ້ວຍການພັດທະນາລະບົບຂົນສົ່ງສາທາລະນະໃຫ້ເຊື່ອມຕໍ່ເຂົ້າກັບນະຄອນຫຼວງວຽງຈັນ ແລະ ຕົວເມືອງທ່ອງທ່ຽວໃກ້ຄຽງ ພ້ອມກັນນັ້ນການຂົນສົ່ງສາທາລະນະພາຍໃນເມືອງກໍ່ຕ້ອງໄດ້ຮັບການພັດທະນາໃຫ້ເຊື່ອມຈອດກັນເປັນລະບົບເຊັ່ນດຽວກັນ.

- **ການຂົນສົ່ງສາທາລະນະເຊື່ອມກັບເມືອງອື່ນ**

1) ເສັ້ນທາງທຳອິດທີ່ຕ້ອງໄດ້ເອົາໃຈໃສ່ປັບປຸງໃຫ້ດີຄື ລົດໂດຍສານປະຈຳທາງເຊື່ອມຕໍ່ກັບນະຄອນຫຼວງວຽງຈັນ ເນື່ອງຈາກວ່າເປັນປະຕູທີ່ຈະນຳພານັກທ່ອງທ່ຽວເຂົ້າສູ່ເມືອງເຟືອງຫຼາຍທີ່ສຸດ ເພາະເປັນຕົວເມືອງໃຫຍ່ ແລະ ມີຜູ້ຄົນອາໄສຢູ່ຈຳນວນຫຼາຍ ພ້ອມກັນນັ້ນຍັງເປັນສູນກາງຂອງຂົນສົ່ງພາຍໃນ ແລະ ຕ່າງປະເທດ ໂດຍມີສະໜາມບິນສາກົນ, ສະຖານີລົດໄຟລາວ-ຈີນ, ສະຖານີລົດໄຟລາວ-ໄທ, ສະຖານີລົດໂດຍສາຍເໜືອ, ໃຕ້ ແລະ ຂ້າມພົມແດນ, ສະນັ້ນ ການຍົກລະດັບການຂົນສົ່ງໂດຍສານເສັ້ນທາງນີ້ ຈຶ່ງມີຄວາມຈຳເປັນຢ່າງຍິ່ງ ໂດຍສະເພາະການປັບປຸງຄຸນນະພາບລົດ, ການບໍລິການ ແລະ ການເພີ່ມຈຳນວນຖ້ຽວໃຫ້ຫຼາຍ; ພາຫະນະທີ່ຄວນນຳມາໃຫ້ບໍລິການຄວນມີຫຼາຍລະດັບ ເຊັ່ນ: ລົດເມ VIP, ລົດເມທຳມະດາ ແລະ ລົດຕູ້ດ່ວນ ສ່ວນຈຳນວນຖ້ຽວຄວນໃຫ້ພຽງພໍກັບປະລິມານຄວາມຕ້ອງການເດີນທາງ ໂດຍຈັດຕາຕະລາງໃຫ້ມີລົດອອກເດີນທາງທຸກໆ 2 ຊົ່ວໂມງເປັນຢ່າງຕ່ຳ, ຖ້ຽວທຳອິດຄວນເລີ່ມແຕ່ເວລາ 9 ໂມງເຊົ້າເປັນຕົ້ນໄປ, ສ່ວນຖ້ຽວສຸດທ້າຍຄວນໃຫ້ມີຮອດເວລາ 17 ໂມງແລງ.

2) ເສັ້ນທາງທີສອງເປັນທາງເຊື່ອມກັບເມືອງວັງວຽງ ເຊິ່ງມີຄວາມສຳຄັນເຊັ່ນກັນ ເນື່ອງຈາກເມືອງວັງວຽງເປັນຈຸດສຸມຂອງການທ່ອງທ່ຽວໃນຂົງເຂດນີ້ ແລະ ມີສະຖານີລົດໄຟລາວ-ຈີນ, ນັກທ່ອງທ່ຽວທີ່ເດີນທາງມາກັບລົດໄຟສາມາດລົງສະຖານີນີ້ ແລ້ວຕໍ່ລົດໂດຍສານປະຈຳທາງໄປເມືອງເຟືອງໄດ້ຢ່າງສະດວກ ຊຶ່ງມີໄລຍະທາງໃກ້ກວ່າມາແຕ່ນະຄອນຫຼວງວຽງຈັນ, ພາຫະນະທີ່ນຳມາໃຫ້ບໍລິການກໍ່ຄວນມີຫຼາຍລະດັບເຊັ່ນດຽວກັນ ຄື ລົດເມ VIP, ລົດເມທຳມະດາ ແລະ ລົດຕູ້ດ່ວນ, ພ້ອມກັນນີ້ ຄວນຈັດຕາຕະລາງໃຫ້ມີລົດອອກເດີນທາງເປັນປົກກະຕິ.

3) ອີກເສັ້ນທາງໜຶ່ງທີ່ຄວນຈັດໃຫ້ມີການແລ່ນລົດໂດຍສານປະຈຳທາງຄື ເສັ້ນທາງເຊື່ອມຕໍ່ຫາເມືອງຊຽງຄານ ແລະ ເມືອງເລີຍ, ປະເທດໄທ ເພື່ອອຳນວຍຄວາມສະດວກໃຫ້ນັກທ່ອງທ່ຽວຊາວ ໄທສາມາດ

ເດີນທາງເຂົ້າມາເມືອງເຟືອງໄດ້ງ່າຍ, ໃນໄລຍະທີ່ການກໍ່ສ້າງຂົວຂ້າມນໍ້າຂອງຍັງບໍ່ສໍາເລັດ ກໍແລ່ນລົດໄປເມືອງຊະນະຄາມກ່ອນເພື່ອຮັບນັກທ່ອງທ່ຽວທີ່ຂີ່ເຮືອຂ້າມຂອງມາ, ໂດຍພາຫະນະທີ່ນໍາມາໃຫ້ບໍລິການອາດເປັນລົດຕູ້ 10–12 ທີ່ນັ່ງ ເນື່ອງຈາກປະລິມານນັກທ່ອງທ່ຽວອາດບໍ່ຫຼາຍປານໃດ ການນໍາໃຊ້ລົດນ້ອຍຈະເຮັດໃຫ້ອອກລົດໄດ້ໄວ ແລະ ຄຸ້ມຄ່າທາງເສດຖະກິດດີກວ່າ.

- **ການຂົນສົ່ງສາທາລະນະພາຍໃນເມືອງ**

ການຂົນສົ່ງໂດຍສານສາທາລະນະພາຍໃນເມືອງຄວນໄດ້ຮັບການພັດທະນາ ເພື່ອອໍານວຍຄວາມສະດວກໃຫ້ແກ່ການເດີນທາງຂອງນັກທ່ອງທ່ຽວໄປຍັງສະຖານທີ່ຕ່າງໆ ໂດຍໃຫ້ມີລົດໂດຍສານປະຈໍາທາງແລ່ນເຊື່ອມຕົວເມືອງໄປຫາແຫຼ່ງທ່ອງທ່ຽວທາງທິດເໜືອ ຄືເຂດລ່ອງນໍ້າລີກ ແລະ ເຊື່ອມຕົວເມືອງໄປຫາແຫຼ່ງທ່ອງທ່ຽວທາງທິດໃຕ້ ເຊັ່ນ: ເຂດສັງສິນໄຊ, ພາຫະນະທີ່ໃຊ້ຄວນເປັນລົດເມພະລັງງານໄຟຟ້າເປັນມິດກັບສິ່ງແວດລ້ອມຂະໜາດບໍ່ເກີນ 21 ບ່ອນນັ່ງແບບເປີດໂລ່ງ ເພື່ອສົ່ງເສີມການຊົມວິວທິວທັດສອງຂ້າງທາງ ແລະ ລົງໄດ້ຢ່າງສະດວກ, ຕາຕະລາງແລ່ນລົດຄວນໃຫ້ມີເປັນປົກກະຕິທຸກໆ 1 ຊົ່ວໂມງເປັນຢ່າງຕໍ່າ, ໃນໄລຍະທໍາອິດຄວນໃຫ້ມີລົດບໍລິການທັງໝົດປະມານ 8 ຄັນ ຫຼັງຈາກນັ້ນຈຶ່ງພິຈາລະນາເພີ່ມຈໍານວນຕາມປະລິມານຄວາມຕ້ອງການຂອງການເດີນທາງໃນແຕ່ລະໄລຍະ.



ຮູບທີ 61: ຕົວຢ່າງລົດເມໄຟຟ້າປະຈໍາທາງ

ປັບປຸງສະຖານີລົດໂດຍສານຢູ່ໜ້າຕະຫຼາດເມືອງ ໃຫ້ເປັນສະຖານີໃຫຍ່ ເປັນຈຸດເລີ່ມຕົ້ນຂອງລົດປະຈໍາທາງທຸກສາຍ, ເສັ້ນທາງແລ່ນລົດມີທັງໝົດ 4 ສາຍຄື:

ສາຍທີ 1: ເສັ້ນສີແດງ ເຊື່ອມຕົວເມືອງໄປຫາເຂດລ່ອງນໍ້າລີກ ໂດຍຜ່ານບ້ານທ່າ, ບ້ານນາທົ່ວ, ບ້ານໂພນສີ,ບ້ານເມືອງເຟືອງ, ບ້ານສາມໝື່ນ, ບ້ານຄອນເລືອງ, ບ້ານນາແຊງ ແລ້ວໄປສິ້ນສຸດຢູ່ໜ້າເຂື່ອນນໍ້າລີກ; ເສັ້ນທາງນີ້ມີໄລຍະທາງທັງໝົດປະມານ 20 ກມ.

ສາຍທີ 2: ເສັ້ນສີຟ້າ ເຊື່ອມຕົວເມືອງໄປຫາເຂດລ່ອງນໍ້າລີກເຊັ່ນດຽວກັນ ໂດຍຜ່ານບ້ານທ່າ, ບ້ານນາທົ່ວ, ບ້ານໂພນສີ, ບ້ານເມືອງເຟືອງ ແລ້ວຂ້າມນໍ້າລີກໄປຫາບ້ານແກ້ງຊຽງ, ບ້ານສີສະອາດ, ບ້ານນາໃໝ່, ບ້ານໜອງເປັດ, ບ້ານນາແຊງ ແລ້ວສິ້ນສຸດຢູ່ໜ້າເຂື່ອນນໍ້າລີກເຊັ່ນກັນ; ເສັ້ນທາງນີ້ມີໄລຍະທາງທັງໝົດປະມານ 22 ກມ.

ທັງສອງສາຍນີ້ມີບ່ອນລໍຖ້າລົດທັງໝົດ 13 ຈຸດ.

ສາຍທີ 3: ເສັ້ນສີຂຽວ ເຊື່ອມຕົວເມືອງໄປທາງທິດໃຕ້ ເຂດສັງສິນໄຊ ໂດຍຜ່ານບ້ານໂພນໄຊ, ບ້ານໂພນທອນ, ບ້ານນາແຂງ, ບ້ານນາມົນ, ແຍກໄປບ້ານນາລັງ, ບ້ານຫ້ວຍເດື່ອ, ບ້ານນາອ່າງ, ບ້ານໂນນຫີນແຮ່, ບ້ານນາຫຼວງ, ບ້ານນາຄໍາ ແລ້ວສິ້ນສຸດຢູ່ຈຸດສຸມບ້ານຜາສັງ; ເສັ້ນທາງນີ້ມີໄລຍະທາງທັງໝົດປະມານ 33 ກມ.

ສາຍທີ 4: ເສັ້ນສີເຫຼືອງ ເຊື່ອມຕົວເມືອງໄປທາງທິດໃຕ້ ເຂດສັງສິນໄຊ ເຊັ່ນດຽວກັບສາຍທີ 3 ແຕ່ຈະແຍກໄປເບື້ອງຊ້າຍມືຢູ່ສາມແຍກນາລັງຜ່ານບ້ານນາຂອບ, ບ້ານນາເມືອງ, ບ້ານໂພນສະຫວ່າງ, ບ້ານນາຄໍາ ແລ້ວສິ້ນສຸດຢູ່ຈຸດສຸມຜາສັງເຊັ່ນກັນ; ເສັ້ນທາງນີ້ມີໄລຍະທາງທັງໝົດປະມານ 30 ກມ.

ສາຍທີ 3 ແລະ 4 ມີບ່ອນລໍຖ້າລົດທັງໝົດ 16 ຈຸດ.




ຮູບທີ 62: ແຜນທີ່ເສັ້ນທາງແລ່ນລົດເມໂດຍສານໄຟຟ້າສາທາລະນະ

## 8.3 ໂຄງລ່າງນໍ້າປະປາ

ຄວາມສາມາດໃນການສະໜອງນໍ້າປະປາສໍາລັບຊຸມຊົນ ແລະ ການທ່ອງທ່ຽວພາຍໃນເມືອງຍັງຈໍາກັດຫຼາຍ ຊຶ່ງປັດຈຸບັນມີນໍ້າປະປາໃຊ້ສະເພາະໃນເຂດເທດສະບານເມືອງ ແລະ ເຂດບ້ານຈັດສັນໂພນສະຫວາດ ແຕ່ປະລິມານນໍ້າກໍຍັງບໍ່ສາມາດຮອງຮັບການຂະຫຍາຍຕົວຂອງຕົວເມືອງ, ຊຸມຊົນ ແລະ ກິດຈະການທ່ອງທ່ຽວໄດ້ໃນອະນາຄົດ, ເພາະນັ້ນ ເພື່ອຮັບປະກັນໃຫ້ແກ່ການສະໜອງນໍ້າປະປາທີ່ມີປະສິດທິພາບ ແລະ ພຽງພໍກັບຄວາມຮຽກຮ້ອງຕ້ອງການໃນອະນາຄົດ ຈຶ່ງສະເໜີໃຫ້ພັດທະນາລະບົບການຜະລິດ ແລະ ການສະໜອງນໍ້າປະປາດັ່ງນີ້:

**8.3.1 ພັດທະນາລະບົບນໍ້າປະປາສະໜອງໃຫ້ຊຸມຊົນ ແລະ ກິດຈະການທ່ອງທ່ຽວເຂດລ່ອງນໍ້າລີກ** ລວມ ເຖິງເຂດຕົວເມືອງ ໂດຍນໍາໃຊ້ແຫຼ່ງນໍ້າຈາກອ່າງນໍ້າລີກ, ສ້າງໂຮງງານຢູ່ເຂດບ້ານນາແຂງ ແລະ ສ້າງທໍ່ສົ່ງແຍກໄປສອງສາຍຄື: ສາຍທີ 1 ສົ່ງໄປຫາບ້ານໜອງເປັດ, ບ້ານນາບອນ ແລະ ບ້ານນາໃໝ່, ສາຍທີ 2 ສົ່ງໄປຫາບ້ານຄອນເລືອງ, ບ້ານສາມໝື່ນ, ບ້ານເມືອງເຟືອງ ແລະ ສົ່ງຕໍ່ເຂົ້າໄປຫາເທດສະບານເມືອງ ພ້ອມກັນນັ້ນກໍ່ສ້າງ

ທີ່ແຍກສິ່ງຂ້າມນ້ຳລີກໄປຫາ ບ້ານແກ້ງຊຽງ, ບ້ານສີສະອາດ ແລະ ບ້ານງວ້າ; ຄາດວ່າປະລິມານນ້ຳປະປາທີ່ຕ້ອງການໃນປີ 2030, 2040 ແລະ 2050 ຈະເປັນ 8000, 10.000 ແລະ 12.000 ແມັດກ້ອນຕໍ່ມື້ຕາມລຳດັບ.




ຮູບທີ 63: ແຜນທີ່ການຜະລິດ ແລະ ການສະໜອງນ້ຳປະປາໃນເຂດລ່ອງນ້ຳລີກ ແລະ ເທດສະບານເມືອງ

**8.3.2. ພັດທະນາລະບົບນ້ຳປະປາຂະໜາດນ້ອຍສະໜອງໃຫ້ແກ່ຊຸມຊົນ ແລະ ກິດຈະກຳການທ່ອງທ່ຽວບໍລິເວນຈຸດສຸມຜາສັງ** ໃນຈຳນວນ 4 ບ້ານ ໄດ້ແກ່ ບ້ານນ້ຳຮາງ, ບ້ານຜາສັງໃຕ້, ບ້ານຜາສັງເໜືອ ແລະ ບ້ານນາຄຳ ໂດຍນຳໃຊ້ແຫຼ່ງນ້ຳຈາກອ່າງນ້ຳສັງ, ສ້າງໂຮງງານທີ່ສາມາດສະໜອງນ້ຳໄດ້ໃນປະລິມານ 1000, 1200 ແລະ 1500 ແມັດກ້ອນ ຕໍ່ມື້ ໃນປີ 2030, 2040 ແລະ 2050 ຕາມລຳດັບ.

**8.3.3. ບັນດາຊຸມຊົນ ແລະ ແຫຼ່ງທ່ອງທ່ຽວທີ່ຢູ່ນອກ 2 ເຂດ** ທີ່ກ່າວມາ ແມ່ນສິ່ງເສີມໃຫ້ສ້າງລະບົບນ້ຳປະປາຊຸມຊົນ ຫຼື ລະບົບນ້ຳປະປາສະເພາະ ໂດຍນຳໃຊ້ແຫຼ່ງນ້ຳຕາມເງື່ອນໄຂທີ່ມີ ເຊັ່ນ: ນ້ຳບາດານ, ນ້ຳຫ້ວຍ ຫຼື ອ່າງເກັບນ້ຳອື່ນໆ.




ຮູບທີ 64: ແຜນທີ່ການຜະລິດ ແລະ ການສະໜອງນ້ຳປະປາເຂດຈຸດສຸມຜາສັງ

### 8.4 ປ້າຍບອກທາງ

ໜຶ່ງໃນໂຄງລ່າງພື້ນຖານທີ່ຈຳເປັນສຳລັບສິ່ງເສີມການທ່ອງທ່ຽວຄືລະບົບປ້າຍ ຊຶ່ງປະກອບມີ: ປ້າຍສະແດງແຜນທີ່ທ່ອງທ່ຽວ ແລະ ປ້າຍຊີ້ບອກທາງ.

#### 8.4.1 ປ້າຍແຜນທີ່ທ່ອງທ່ຽວ

ເປັນປ້າຍສະແດງທີ່ຕັ້ງ ແລະ ເສັ້ນທາງໄປຫາແຫຼ່ງທ່ອງທ່ຽວ ລວມເຖິງບັນດາສິ່ງອຳນວຍຄວາມສະດວກສຳລັບນັກທ່ອງທ່ຽວ, ປ້າຍນີ້ຄວນໃຫ້ມີຕິດຕັ້ງໄວ້ທຸກຈຸດສຸມກິດຈະກຳການທ່ອງທ່ຽວ ແລະ ແຫຼ່ງທ່ອງທ່ຽວຕ່າງໆ ເຊັ່ນ: ສະຖານີລົດ, ບ່ອນລໍຖ້າປ່ຽນຖ່າຍລົດ, ສວນສາທາລະນະ, ຊຸມຊົນວັດທະນະທຳ ແລະ ແຫຼ່ງທ່ອງທ່ຽວອື່ນໆ; ປ້າຍຄວນໄດ້ຮັບການອອກແບບ ແລະ ກຳນົດຈຸດທີ່ຕັ້ງໃນຕຳແໜ່ງທີ່ເໝາະສົມ ເພື່ອໃຫ້ສາມາດເບິ່ງເຫັນໄດ້ງ່າຍຂະໜາດຂອງປ້າຍຄວນມີຂະໜາດປະມານ 80X200 ຊມ ມີໄຟສ່ອງໃຫ້ຄວາມສະຫວ່າງໃນເວລາກາງຄືນ, ເນື້ອໃນຂອງປ້າຍແຍກອອກເປັນ 3 ປະເພດຕາມລະດັບຂອງແຜນທີ່ ຄື: ປ້າຍແຜນທີ່ການທ່ອງທ່ຽວທົ່ວເມືອງ, ປ້າຍແຜນທີ່ການທ່ອງທ່ຽວເຂດ ແລະ ປ້າຍແຜນຜັງແຫຼ່ງທ່ອງທ່ຽວ/ຊຸມຊົນ; ສະຖານທີ່ເປົ້າໝາຍຕິດຕັ້ງປ້າຍແຕ່ລະປະເພດມີດັ່ງນີ້:

ຕາຕະລາງທີ 8: ຈຸດທີ່ຕັ້ງປ້າຍແຜນທີ່ທ່ອງທ່ຽວ

| ລ/ດ | ຈຸດທີ່ຕັ້ງ | ແຜນທີ່ ລະດັບເມືອງ | ແຜນທີ່ ລະດັບເຂດ | ແຜນທີ່ ລະດັບບ້ານ/ແຫຼ່ງທ່ອງທ່ຽວ |
|---|---|---|---|---|
| 1 | ສວນປະຕູເມືອງ | 1 | | |
| 2 | ສາມແຍກບ້ານດອນ | 1 | | |
| 3 | ຖິວລົດປະຈຳເມືອງ | 1 | | 1 |
| 4 | ສວນສາທາລະນະສາມໝື່ນເມືອງເຟືອງ | 1 | | 1 |
| 5 | ຖະໜົນຄົນຍ່າງໃຈກາງຕົວເມືອງ | 1 | | 1 |
| 6 | ຕະຫຼາດເມືອງເຟືອງ | 1 | | 1 |
| 7 | ໜ້າເຂື່ອນນໍ້າລີກ | 1 | 1 | 1 |
| 8 | ຫາດດອນກາງ/ບ້ານເມືອງເຟືອງ | 1 | 1 | 1 |
| 9 | ບ້ານນາແຊງ | | | 1 |
| 10 | ບ້ານນາໃໝ່ | | | 1 |
| 11 | ບ້ານດອນເລືອງ | | | 1 |
| 12 | ບ້ານສາມໝື່ນ | | | 1 |
| 13 | ສວນວັດທະນະທຳສັງສິນໄຊ | 1 | 1 | 1 |
| 14 | ວັດສິນໄຊ ໂນນຫີນແຮ່ | | 1 | 1 |

| | | | | |
|---|---|---|---|---|
| 15 | ວັດສັງສິນໄຊ ຜາສັງ | | 1 | 1 |
| 16 | ວັດນາເມືອງ | | 1 | 1 |
| 17 | ຖ້ຳຜາຫຼວງ | | 1 | 1 |
| 18 | ຈຸດສຸມຜາສັງ | 1 | 1 | 1 |
| | **ລວມ** | **10** | **8** | **16** |




ຮູບທີ 65: ຮູບຕົວຢ່າງປ້າຍແຜນທີ່ທ່ອງທ່ຽວ

### 8.4.2 ປ້າຍຊີ້ບອກທາງ

ປ້າຍຊີ້ບອກທາງແບ່ງອອກເປັນ 2 ປະເພດ ຄື: ປ້າຍຊີ້ບອກຢູ່ຂ້າງທາງແຍກໃຫຍ່ ແລະ ປ້າຍຊີ້ບອກທາງເຂົ້າຫາແຫຼ່ງທ່ອງທ່ຽວ.

ປ້າຍຊີ້ບອກຢູ່ຂ້າງທາງໃຫຍ່ ເປັນປ້າຍແບບຕັ້ງ ຫຼື ແບບແຂວນ, ຕິດຕັ້ງໄວ້ຢູ່ຈຸດໃກ້ຈະຮອດທາງແຍກ, ຂະໜາດຂອງປ້າຍ, ສີ ແລະ ຕົວໜັງສືໃຫ້ເປັນປະຕິບັດຕາມຄູ່ມືແນະນຳກ່ຽວກັບປ້າຍຊີ້ບອກແຫຼ່ງທ່ອງທ່ຽວ ແລະ ປ້າຍນຳສະເໜີຂໍ້ມູນແຫຼ່ງທ່ອງທ່ຽວໃນ ສປປ ລາວ.





ຮູບທີ 66: ຕາຕະລາງກໍານົດຈຸດທີ່ຕັ້ງປ້າຍຊີ້ບອກທາງຢູ່ຈຸດທາງແຍກ

ຕາຕະລາງທີ 9: ຈຸດທີ່ຕັ້ງປ້າຍຊີ້ບອກທາງ

| ລດ | ຈຸດທີ່ຕັ້ງ | ປ້າຍຊີ້ບອກທາງແຍກ |
|---|---|---|
| 1 | ສາມແຍກທາງເວັ້ນຕົວເມືອງ ເຂດບ້ານດອນ | 3 |
| 2 | ສາມແຍກທາງເວັ້ນຕົວເມືອງ ເຂດບ້ານໂພນໄຊ | 3 |
| 3 | ສາມແຍກບ້ານທ່າ | 3 |
| 4 | ສາມແຍກເຂົ້າບ້ານຈັດສັນ | 2 |
| 5 | ສາມແຍກຂ້າມຂົວນໍ້າລຶກ | 3 |
| 6 | ສາມແຍກບ້ານນາເມືອງ | 3 |
| 7 | ສາມແຍກສູນວັດທະນະທໍາສັງສິນໄຊ ບ້ານນາລັງ | 3 |
| 8 | ສາມແຍກບ້ານນາຄໍາ | 3 |
| 9 | ທາງເຂົ້າເມືອງ ບ້ານນໍ້າຮາງ | 2 |
| | ລວມ | 25 |

ປ້າຍຊີ້ບອກເຂົ້າຫາແຫຼ່ງທ່ອງທ່ຽວ ເປັນປ້າຍຂ້າງທາງບໍລິເວນທາງແຍກເຂົ້າຫາແຫຼ່ງທ່ອງທ່ຽວ, ພື້ນເປັນສີແດງຊໍ້າ, ຕົວໜັງສືສີຂາວ ສາມພາສາ (ລາວ-ອັງກິດ-ຈີນ), ມີລູກສອນບອກທິດທາງ ແລະ ມີຕົວເລກບອກໄລຍະທາງ, ຂະໜາດຕົວໜັງສືໃຫ້ສາມາດອ່ານໄດ້ໃນໄລຍະ 30 ແມັດໄປ.






ຮູບທີ 67: ຮູບຕົວປ້າຍຊີ້ບອກທາງເຂົ້າຫາແຫຼ່ງທ່ອງທ່ຽວ

**8.5 ທີ່ພັກແຮມ**

ໃນປັດຈຸບັນ, ທີ່ພັກແຮມຢູ່ເມືອງເຟືອງຍັງມີໜ້ອຍບໍ່ທັນຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງນັກທ່ອງທ່ຽວທັງຄຸນນະພາບ ແລະ ປະລິມານ, ສະນັ້ນໃນອະນາຄົດຂ້າງໜ້າຈະຕ້ອງເອົາໃຈໃສ່ຊຸກຍູ້ສົ່ງເສີມໃຫ້ມີການລົງທຶນພັດທະນາກິດຈະການປະເພດນີ້ໃຫ້ຫຼາຍ ໂດຍໃຫ້ສາມາດຮອງຮັບນັກທ່ອງທ່ຽວໄດ້ຢ່າງນ້ອຍ 1.000 ຄົນ/ມື້ ໃນ ປີ 2025 ແລະ 2.000 ຄົນ ໃນປີ 2030, ປະເພດຂອງທີ່ພັກຄວນມີຫຼາກຫຼາຍແບບ ເພື່ອໃຫ້ຕອບສະໜອງກັບນັກທ່ອງທ່ຽວຫຼາຍກຸ່ມຫຼາຍລະດັບ ໂດຍແບ່ງອອກເປັນ 5 ປະເພດດັ່ງນີ້:

1) **ໂຮງແຮມຂະໜາດໃຫຍ່** ສາມາດຮອງຮັບນັກທ່ອງທ່ຽວໄດ້ຈຳນວນຫຼາຍ, ຮອງຮັບການປະຊຸມ-ສຳມະນາ, ມີຕັ້ງແຕ່ລະດັບ 3 ດາວ - 4 ດາວຂຶ້ນໄປ, ໂຮງແຮມຂະໜາດໃຫຍ່ນີ້ ສົ່ງເສີມໃຫ້ປຸກສ້າງໃນເຂດຕົວເມືອງເປັນຫຼັກ; ອາຄານຄວນໄດ້ຮັບການອອກແບບ ແລະ ປຸກສ້າງຕາມ Green Hotel Standard ມາດຕະຖານໂຮງແຮມຂຽວອາຊຽນ.
2) **ລີສອດ ແລະ ໂຮງແຮມແບບບູຕິກ (Resort and Boutique Hotel)** ເປັນທີ່ພັກທີ່ເນັ້ນການພັກຜ່ອນ-ຕາກອາກາດ ມີແຕ່ລະດັບ 3 ດາວ - 4 ດາວ, ເປັນອາຄານທີ່ມີຂະໜາດນ້ອຍ ຕິດຕໍ່ກັນຫຼາຍຫຼັງ ສາມາດສ້າງຢູ່ຕາມແຄມນ້ຳ, ໜ້ານ້ຳ, ອ່າງເກັບນ້ຳ, ເນີນພູ, ທົ່ງນາ ແລະ ພື້ນທີ່ອື່ນໆທີ່ມີທິວທັດ-ບັນຍາກາດດີ, ສຽງລົບກວນນ້ອຍ. ອາຄານຄວນໄດ້ຮັບການອອກແບບ ແລະ ປຸກສ້າງຕາມ Green Hotel Standard ມາດຕະຖານໂຮງແຮມຂຽວອາຊຽນ.
3) **ເຮືອນພັກບັງກະໂລ-ເຮືອນແພ** ເປັນທີ່ພັກລາຄາບໍ່ສູງ ເໝາະສຳລັບຄົນທົ່ວໄປທີ່ຕ້ອງການພັກແຮມແບບມີບັນຍາກາດ ແລະ ເປັນສ່ວນຕົວ, ສາມາດປຸກສ້າງຕາມພື້ນທີ່ກະສິກຳ, ແຄມນ້ຳ, ແມ່ນ້ຳ, ອ່າງເກັບນ້ຳ ແລະ ພື້ນ ທີ່ອື່ນໆ.

4) **ເຮືອນພັກທົ່ວໄປ** ເປັນທີ່ພັກລາຄາຖືກ, ມີສິ່ງອໍານວຍຄວາມສະດວກເທົ່າທີ່ຈໍາເປັນສໍາລັບການນອນພັກແຮມ ເທົ່ານັ້ນ, ສາມາດປຸກສ້າງໃນພື້ນທີ່ຕ່າງໆຕາມເງື່ອນໄຂຂອງຜູ້ລົງທຶນ ໂດຍບໍ່ໄດ້ກໍານົດພື້ນທີ່ສະເພາະ.

5) **Home Stay** ເຮືອນພັກແຮມປະຊາຊົນ ຊຶ່ງໃນແຜນໄດ້ກໍານົດບ້ານເປົ້າໝາຍທີ່ສົ່ງເສີມໃຫ້ເປີດບໍລິການ Home Stay ຄື ບ້ານນາແຊງ, ບ້ານນາໃໝ່, ບ້ານຄອນເລືອງ ແລະ ບ້ານສາມໝື່ນ, ແຕ່ທັງ 4 ບ້ານຕ້ອງໄດ້ເລັ່ງປັບປຸງພື້ນຖານໂຄງລ່າງ, ສະພາບແວດລ້ອມ ແລະ ທີ່ພັກພາຍໃນບ້ານໃຫ້ໄດ້ມາດຕະຖານເຮືອນພັກແຮມປະຊາຊົນອາຊຽນເສຍກ່ອນ.

**8.6. ອາຫານ-ຮ້ານບັນເທີງ**

ຮ້ານອາຫານແບ່ງອອກເປັນ 5 ປະເພດ ຄື:

1) **ພັດຕະຄານ** ເປັນຮ້ານອາຫານຂະໜາດໃຫຍ່ ສາມາດຮອງຮັບຜູ້ກິນໄດ້ຈໍານວນຫຼາຍ, ຊຶ່ງອາດເປັນອາຄານພັດຕະຄານສະເພາະ ຫຼື ຢູ່ກັບໂຮງແຮມກໍ່ໄດ້ເຊັ່ນກັນ, ຮ້ານອາຫານປະເພດນີ້ສົ່ງເສີມໃຫ້ສ້າງໃນເຂດຕົວເມືອງເປັນຫຼັກ.

2) **ຮ້ານອາຫານທົ່ວໄປ** ເປັນຮ້ານອາຫານຕາມຕົວເມືອງ, ຊຸມຊົນ ຫຼື ແຫຼ່ງທ່ອງທ່ຽວຕ່າງໆ.

3) **ສວນອາຫານ** ເປັນຮ້ານອາຫານແບບຕູບ ຫຼື ສາລາ ທີ່ກິນອາຫານໄປພ້ອມໆກັບການພັກຜ່ອນ, ຮ້ານອາຫານປະເພດນີ້ສາມາດຕັ້ງຢູ່ຕາມສວນກະສິກໍາ, ທົ່ງນາ, ແຄມນໍ້າ, ອ່າງເກັບນໍ້າ, ໜອງນໍ້າ ຫຼື ບ່ອນອື່ນໆທີ່ມີທິວທັດທໍາມະຊາດສວຍງາມ.

4) **ຮ້ານອາຫານເຮືອແພ** ເປັນຮ້ານອາຫານເທິງເຮືອ ຊຶ່ງຈະບໍລິການອາຫານໃຫ້ແກ່ນັກທ່ອງທ່ຽວພ້ອມໆກັບການຂີ່ເຮືອຊົມວິວ, ຮ້ານອາຫານປະເພດນີ້ອະນຸຍາດໃຫ້ສະເພາະອ່າງນໍ້າລຶກ ແລະ ອ່າງນໍ້າຕົງເທົ່ານັ້ນ.

5) **ຮ້ານບັນເທີງ ມີ 2 ປະເພດຄື**: ຮ້ານບັນເທີງແບບປິດ ສາມາດສ້າງໄດ້ໃນເຂດຕົວເມືອງ, ຊຸມຊົນ ຫຼື ພື້ນທີ່ອື່ນໆ ຍົກເວັ້ນພື້ນທີ່ໃກ້ອາຄານທາງສາສະໜາ, ອາຄານວັດທະນະທໍາ, ຊຸມຊົນວັດທະນະທໍາ ແລະ ເຂດຫວງຫ້າມອື່ນໆ; ປະເພດທີ 2 ແມ່ນຮ້ານບັນເທີງແບບເປີດ ບໍ່ອະນຸຍາດໃຫ້ສ້າງໃນເຂດຕົວເມືອງ, ຊຸມຊົນ, ເຂດໃກ້ສະຖານທີ່ທາງສາສະໜາ, ເຂດອະນຸລັກລະບົບນິເວດ, ເຂດທ່ອງທ່ຽວແບບສະຫງົບ ແລະ ເຂດຫວງຫ້າມອື່ນໆ.

ຮ້ານອາຫານທຸກປະເພດຕ້ອງຮັບປະກັນດ້ານໂພສະນາການ, ຄວາມສະອາດ ແລະ ຄວາມປອດໄພ ໂດຍໃຫ້ເປັນໄປຕາມລະບຽບ-ກົດໝາຍທີ່ກ່ຽວຂ້ອງຂອງລາວ ແລະ ມາດຕະຖານກ່ຽວກັບອາຫານ ແລະ ເຄື່ອງດື່ມຂອງການທ່ອງທ່ຽວອາຊຽນ.

**8.7 ຫ້ອງນໍ້າສາທາລະນະ**

ພື້ນທີ່ສາທາລະນະທີ່ຕ້ອງສ້າງຫ້ອງນໍ້າສາທາລະນະ ປະກອບມີ:

1) ຖົວລົດໃນຕົວເມືອງ

2) ຕະຫຼາດໃນຕົວເມືອງ

3) ສວນສາທາລະນະໃນຕົວເມືອງ

4) ສວນໜ້າເຂື່ອນນ້ຳງື່ມ

5) ຫາດດອນກາງ ບ້ານເມືອງເຟືອງ

6) ສູນວັດທະນະທຳສັງສິນໄຊ

ນອກຈາກພື້ນທີ່ສາທາລະນະແລ້ວ, ຢູ່ຕາມແຫຼ່ງທ່ອງທ່ຽວຕ່າງໆກໍ່ຕ້ອງມີຫ້ອງນ້ຳບໍລິການແກ່ນັກທ່ອງທ່ຽວ ເຊັ່ນດຽວກັນ ຊຶ່ງກຳນົດເປັນຂໍ້ບັງຄັບເອກະພາບກັນທັງໝົດເມືອງ.

ຫ້ອງນ້ຳສາທາລະນະທຸກຫ້ອງຕ້ອງໄດ້ຮັບການອອກແບບຕາມມາດຕະຖານຫ້ອງນ້ຳສາທາລະນະອາຊຽນກຳນົດໄວ້ ເທົ່ານັ້ນ.

ຂອງການທ່ອງທ່ຽວອາຊຽນກຳນົດໄວ້ ເທົ່ານັ້ນ.

### 8.8 ສູນບໍລິການນັກທ່ອງທ່ຽວ

ສູນບໍລິການນັກທ່ອງທ່ຽວສ້າງໄວ້ 3 ຈຸດຄື:

1) ສວນສາທາລະນະໃນຕົວເມືອງ (ສວນສາທາລະນະສາມໝື່ນຕູບເຟືອງ)

2) ຫາດດອນກາງ ບ້ານເມືອງເຟືອງ

3) ສູນວັດທະນະທຳສັງສິນໄຊ

### 8.9 ໂຄງລ່າງດ້ານສາທາລະນະສຸກ

ການກຽມຄວາມພ້ອມທາງດ້ານສາທາລະນະສຸກ ກໍເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ເພື່ອຮັບປະກັນການປິ່ນປົວ ຫຼື ຊ່ວຍຊີວິດນັກທ່ອງທ່ຽວໃນກໍລະນີສຸກເສີນ ຊຶ່ງປັດຈຸບັນທົ່ວເມືອງເຟືອງມີໂຮງໝໍທັງໝົດ 3 ແຫ່ງ ໃນນັ້ນແບ່ງອອກເປັນໂຮງໝໍຊຸມຊົນ 1 ແຫ່ງຕັ້ງຢູ່ເທດສະບານເມືອງ, ອີກ 2 ແຫ່ງແມ່ນໂຮງໝໍນ້ອຍ ຕັ້ງຢູ່ຈຸດສຸມຜາສັງ 1 ແຫ່ງ ແລະ ຕັ້ງຢູ່ບ້ານຈັດສັນໂພນສະຫວາດ 1 ແຫ່ງ, ບັນດາໂຮງໝໍເຫຼົ່ານີ້ຈະຕ້ອງໄດ້ຮັບການປັບປຸງຍົກລະດັບທັງທາງດ້ານຄຸນນະພາບ ແລະ ປະລິມານ ເພື່ອໃຫ້ສາມາດຕອບສະໜອງກັບການຂະຫຍາຍຕົວຂອງນັກທ່ອງທ່ຽວ ແລະ ກິດຈະກຳການທ່ອງທ່ຽວ.

ໂຮງໝໍຊຸມຊົນ ຫຼື ໂຮງໝໍເມືອງ ຕ້ອງມີຄວາມສາມາດຜ່າຕັດທົ່ວໄປ, ສາມາດຟື້ນຟູຊີບກໍລະນີສຸກເສີນ, ຊ່ວຍເກີດລູກ, ປິ່ນປົວພະຍາດທົ່ວໄປ ແລະ ມີການບໍລິການສຸກເສີນ 24 ຊົ່ວໂມງ, ມີບ່ອນນອນຄົນເຈັບຢ່າງນ້ອຍ 30 ຕຽງໄປ ໃນນີ້ຄວນມີຫ້ອງພິເສດສຳລັບຄົນເຈັບທີ່ຕ້ອງການຄວາມສະດວກສະບາຍ ແລະ ມີຄວາມເປັນສ່ວນຕົວ; ສ່ວນໂຮງໝໍນ້ອຍສອງແຫ່ງ ຄວນປັບປຸງອາຄານສະຖານທີ່ໃຫ້ພຽງພໍ, ຍົກລະດັບເຄື່ອງມື-ອຸປະກອນການ. ແພດໃຫ້ທັນສະໄໝ ແລະ ເພີ່ມການບໍລິການທາງການແພດກວ້າງຕື່ມ ໂດຍໃຫ້ສາມາດຜ່າຕັດນ້ອຍເກີດລູກ ແລະ ປິ່ນປົວທົ່ວໄປ ທັງນີ້ແມ່ນອີງໃສ່ມາດຕະຖານຂອງກະຊວງສາທາລະນະສຸກເປັນຕົ້ນຕໍ.

ເພື່ອເພີ່ມປະສິດທິພາບໃນການຊ່ວຍເຫຼືອທາງການແພດໃຫ້ທັນກັບເວລາ ຈຶ່ງຈຳເປັນຈະຕ້ອງໄດ້ຈັດຕັ້ງໜ່ວຍກູ້ໄພ ໂດຍໃຫ້ປະຈຳການຢູ່ 2 ຈຸດ ຄື: ຈຸດທີ 1 ປະຈຳຢູ່ເທດສະບານເມືອງ ຮັບຜິດຊອບເຂດຕົວເມືອງ ແລະ ເຂດລ່ອງນ້ຳ, ຈຸດທີ 2 ປະຈຳຢູ່ຈຸດສຸມຜາສັງ ຮັບຜິດຊອບເຂດສັງສິນໄຊ, ໜ່ວຍກູ້ໄພດັ່ງກ່າວຕ້ອງປະກອບມີພາຫະນະ, ອຸປະກອນປະຖົມພະຍາບານ, ອຸປະກອນກູ້ຊີບ ແລະ ເຄື່ອງມືພື້ນຖານໃນການຊ່ວຍເຫຼືອຜູ້ປະສົບໄພໃນກໍລະນີຕ່າງໆຢ່າງຄົບຊຸດ.

ນອກຈາກນີ້ ຢູ່ຕາມສະຖານທີ່ທ່ອງທ່ຽວທຸກແຫ່ງ ຕ້ອງກຳນົດໃຫ້ມີຊຸດປະຖົມພະຍາບານ ຫຼື ຖົງຢາປະຈຳທີ່ຢູ່ໃນສະພາບພ້ອມໃຊ້ງານຕະຫຼອດເວລາ ເພື່ອກຽມຄວາມພ້ອມຮັບມືໃນກໍລະນີສຸກເສີນຕ່າງໆ.

## 9. ແຜນພັດທະນາຜະລິດຕະພັນການທ່ອງທ່ຽວ

ເມືອງເຟືອງມີທ່າແຮງບົ່ມຊ້ອນຫຼາຍຢ່າງທີ່ສາມາດນຳມາເປັນພື້ນຖານໃຫ້ແກ່ການຜະລິດເຄື່ອງທີ່ລະນຶກ ເຊັ່ນ: ຄວາມຮູ້ຄວາມສຳນານໃນການເຮັດຫັດຖະກຳຕ່ຳຫູກ, ຈັກສານ, ການປຸງແຕ່ງອາຫານ-ເຄື່ອງດື່ມທີ່ເປັນເອກະລັກທ້ອງຖິ່ນ, ມີຜົນຜະລິດກະສິກຳອິນຊີ, ມີມູນເຊື້ອອັນພິລາອາດຫານ, ມີເລື່ອງເລົ່າ, ຕຳນານ, ນິທານພື້ນບ້ານ ແລະ ທຳມະຊາດທີ່ໂດດເດັ່ນ ຊຶ່ງທັງໝົດນີ້ລ້ວນແຕ່ເປັນພື້ນຖານອັນລ້ຳຄ່າທີ່ສາມາດນຳມາພັດທະນາຕໍ່ຍອດໄດ້.

ຂະບວນການຊຸກຍູ້ສົ່ງເສີມການຜະລິດເຄື່ອງຕ້ອນ-ຂອງຝາກ ຫຼື ເຄື່ອງທີ່ລະລຶກ ຈະຕ້ອງດຳເນີນໃນ 5 ບາດກ້າວ ຄື: 1) ການຄົ້ນຄວ້າ-ອອກແບບ, 2) ການຖ່າຍທອດ, 3) ການຜະລິດ, 4) ການຫຸ້ມຫໍ່, 5) ການຈຳໜ່າຍ; ແຕ່ລະບາດກ້າວມີລາຍລະອຽດດັ່ງລຸ່ມນີ້:

### 9.1 ການຄົ້ນຄວ້າ-ອອກແບບຜະລິດຕະພັນ

ເພື່ອເຮັດໃຫ້ຜະລິດຕະພັນທ້ອງຖິ່ນກາຍເປັນສິນຄ້າທີ່ຕ້ອງການຂອງຕະຫຼາດນັກທ່ອງທ່ຽວ, ການຄົ້ນຄວ້າ ແລະ ພັດທະນາຜະລິດຕະພັນ ຈຶ່ງມີຄວາມສຳຄັນ-ຈຳເປັນອັນດັບທຳອິດ ຊຶ່ງຊຸມຊົນ ຫຼື ປະຊາຊົນສາມາດເຮັດດ້ວຍຕົນເອງໂດຍອາໄສພື້ນຖານທີ່ມີຢູ່ແລ້ວນຳມາພັດທະນາຕໍ່ຍອດ, ແຕ່ຖ້າມີຜູ້ຊ່ຽວຊານເຂົ້າມາຊ່ວຍຍິ່ງຈະເຮັດໃຫ້ປະສົບຜົນສຳເລັດໄວຕື່ມ; ສະນັ້ນ ໃນແຜນຄັ້ງນີ້ຈຶ່ງໄດ້ກຳນົດກິດຈະກຳຈຸດສຸມດັ່ງຕໍ່ໄປນີ້:

- ຂົນຂວາຍເອົາການຊ່ວຍເຫຼືອ ແລະ ການຮ່ວມມືກັບສະຖາບັນການສຶກສາ, ຜູ້ຊ່ຽວຊານ ແລະ ອົງການທີ່ກ່ຽວຂ້ອງ ເພື່ອສ້າງໂຄງການຄົ້ນຄວ້າ-ວິໄຈ ແລະ ນຳພາປະຊາຊົນພັດທະນາຜະລິດຕະພັນທ້ອງຖິ່ນໃຫ້ກາຍເປັນຕົ້ນແບບສຳລັບການຜະລິດເປັນສິນຄ້າຕໍ່ໄປ ໂດຍເນັ້ນໃສ່ຫັດຖະກຳຕ່ຳຫູກ, ຫຍິບປັກຖັກແສ່ວ, ຈັກສານ, ແກະສະຫຼັກ, ປັ້ນຫລໍ່, ອາຫານທ້ອງຖິ່ນ, ອາຫານແປຮູບຈາກຜົນຜະລິດກະສິກຳ, ເຫຼົ້າ, ການປູກຝັງ-ລ້ຽງສັດ ແລະ ອື່ນໆ.
- ສົ່ງເສີມການເກັບກຳ, ບັນທຶກ, ຮວບຮວມ ແລະ ທ້ອນໂຮມ ອົງຄວາມຮູ້ກ່ຽວຂ້ອງກັບການຜະລິດ, ສີໄມ້ລາຍມື ແລະ ຕົວຢ່າງຜະລິດຕະພັນ ເພື່ອສະສົມເປັນຂໍ້ມູນພື້ນຖານໃຫ້ແກ່ການຄົ້ນຄວ້າ ແລະ ພັດທະນາຕໍ່ຍອດໃນໄລຍະຍາວ.

### 9.2 ການຖ່າຍທອດ

ປະຊາຊົນມີຄວາມຮູ້ຄວາມສຳນານຫຼາຍຢ່າງໃນການຜະລິດເຄື່ອງໃຊ້ຂອງສອຍ ແລະ ອາຫານການກິນໃນຊີວິດປະຈຳວັນ ແຕ່ສິ່ງທີ່ເຂົາເຈົ້າຍັງຂາດຫາຍໄປຄື ທັກສະການຜະລິດໃຫ້ເປັນສິນຄ້າ ແລະ ການສ້າງມູນຄ່າເພີ່ມ ຊຶ່ງຈະຕ້ອງໄດ້ຮັບການຖ່າຍທອດຢ່າງຕໍ່ເນື່ອງດ້ວຍການຈັດຕັ້ງການຝຶກອົບຮົມແຍກເປັນຫົວຂໍ້ຕ່າງໆດັ່ງນີ້:

- ຝຶກອົບຮົມທັກສະການອອກແບບ ແລະ ຜະລິດຜ້າແພຍ້ອມນິນໃຫ້ກາຍເປັນສິນຄ້າພື້ນເດັ່ນຂອງເມືອງ
- ຝຶກອົບຮົມທັກສະການອອກແບບລາຍຜ້າໃນກຸ່ມຫັດຖະກຳຕ່ຳຫູກ ແລະ ຫຍິບປັກຖັກແສ່ວ ເພື່ອສົ່ງເສີມການສ້າງຜະລິດຕະພັນທີ່ຫຼາກຫຼາຍ ແລະ ມີເອກະລັກສະເພາະ.

- ຝຶກອົບຮົມທັກສະການອອກແບບ ແລະ ແປຮູບຜ້າແພໃຫ້ກາຍເປັນສິນຄ້າທີ່ລະນຶກປະເພດຕ່າງໆ ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນທ້ອງຖິ່ນ.

- ຝຶກອົບຮົມທັກສະການອອກແບບ ແລະ ຜະລິດເຄື່ອງຈັກສານໃຫ້ກາຍເປັນສິນຄ້າທີ່ລະນຶກ, ເຄື່ອງໃຊ້-ເຄື່ອງຕົກແຕ່ງ ແລະ ຜະລິດຕະພັນສໍາລັບການຫຸ້ມຫໍ່ ເຊັ່ນ: ກວຍ, ກະຕ່າ, ກັບ, ຍາງ ແລະ ອື່ນໆ.

- ຝຶກອົບຮົມທັກສະການແປຮູບ ແລະ ຖະໜອມອາຫານ ເພື່ອສົ່ງເສີມຄວາມຫຼາກຫຼາຍຂອງຜະລິດຕະພັນອາຫານ ແລະ ໃຫ້ກາຍເປັນສິນຄ້າທີ່ສາມາດເກັບຮັກສາໄວ້ໄດ້ດົນ.

- ຝຶກອົບຮົມທັກສະການປັ້ນ, ການຫຼໍ່ ແລະ ການແກະສະຫຼັກ ເພື່ອສົ່ງເສີມການຜະລິດສິນຄ້າທີ່ລະນຶກທີ່ກ່ຽວຂ້ອງກັບນິທານ-ເລື່ອງເລົ່າ (ນົກອິນຊີ, ນິທານສັງສິນໄຊ, ຕໍານານສາມໝື່ນຕູບເຟືອງ) ແລະ ເອກະລັກອື່ນໆຂອງເມືອງເຟືອງ.

### 9.3 ການຜະລິດ

ໃນຂະບວນການຜະລິດສິນຄ້າ ຕ້ອງໄດ້ເອົາໃຈໃສ່ບັນຫາດັ່ງນີ້:

- ສົ່ງເສີມການຈັດຕັ້ງກຸ່ມການຜະລິດ ເພື່ອສ້າງຄວາມເຂັ້ມແຂງຮອບດ້ານ ເປັນຕົ້ນແມ່ນການເພີ່ມໂອກາດໃນການແລກປ່ຽນຄວາມຮູ້, ການຊ່ວຍເຫຼືອຊຶ່ງກັນແລະກັນ, ການກໍານົດທິດທາງການຜະລິດຮ່ວມກັນ, ການຕໍ່ລອງກັບຕະຫຼາດ ແລະ ອື່ນໆ.

- ສົ່ງເສີມການອະນຸລັກ ແລະ ບໍລິຫານຈັດການແຫຼ່ງວັດຖຸດິບໃຫ້ມີຄວາມຍືນຍົງ ເພື່ອຮັບປະກັນການສະໜອງວັດຖຸດິບໃຫ້ແກ່ການຜະລິດຫັດຖະກໍາຈັກສານ, ການຍ້ອມຜ້າ ແລະ ການຕໍ່າຫູກໃຫ້ເປັນໄປຢ່າງຕໍ່ເນື່ອງ ເຊັ່ນ: ຈັດສັນເຂດປ່າໄມ້ປ່ອງ, ປ່າຫວາຍ ແລະ ປ່າໄມ້ທີ່ໃຫ້ສີຍ້ອມຜ້າໃຫ້ມີການນໍາໃຊ້ແບບໝູນວຽນ, ເພີ່ມພື້ນທີ່ປູກຝ້າຍ ແລະ ປູກມອນ ເປັນຕົ້ນ.

- ສົ່ງເສີມການສ້າງຕັ້ງກອງທຶນຊຸມຊົນ ຫຼື ກອງທຶນຜະລິດ ເພື່ອເພີ່ມໂອກາດໃນການເຂົ້າເຖິງແຫຼ່ງທຶນສໍາລັບຜູ້ຜະລິດ, ຫຼຸດຜ່ອນການກູ້ຢືມເງິນກູ້ນອກລະບົບ.

- ຈັດຕັ້ງຄະນະຮັບຜິດຊອບຕິດຕາມກວດກາ, ແນະນໍາ ແລະ ປະເມີນຜົນການຜະລິດເພື່ອຊຸກຍູ້ສົ່ງເສີມຂະບວນການຜະລິດໃຫ້ມີປະສິດທິພາບ ແລະ ມາດຕະຖານທີ່ແນ່ນອນ, ສ້າງຄວາມເຊື່ອໝັ້ນແກ່ຜູ້ບໍລິໂພກ.

- ສົ່ງເສີມການປູກຜັກອິນຊີ ແລະ ໝາກໄມ້ປອດສານພິດ ເພື່ອຈໍາໜ່າຍເປັນສິນຄ້າຂອງຕ້ອນຂອງຝາກໃຫ້ແກ່ນັກທ່ອງທ່ຽວ ພ້ອມທັງສະໜອງເປັນວັດຖຸດິບໃຫ້ແກ່ປຸງແຕ່ງອາຫານ ແລະ ການແປຮູບເປັນຜະລິດຕະພັນປະເພດຕ່າງໆ.

- ສົ່ງເສີມຫັດຖະກໍາຕໍ່າຫູກ ແລະ ການຫຍິບປັກຖັກແສ່ວທີ່ເປັນເອກະລັກທ້ອງຖິ່ນສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດນັກທ່ອງທ່ຽວ.

- ສົ່ງເສີມການຜະລິດເຄື່ອງຈັກສານໃຫ້ກາຍເປັນສິນຄ້າທີ່ລະນຶກ, ເຄື່ອງໃຊ້-ຕົກແຕ່ງ ແລະ ຜະລິດຕະພັນສໍາລັບການຫຸ້ມຫໍ່ປະເພດຕ່າງໆ.

- ສົ່ງເສີມການຜະລິດສິນຄ້າປະເພດອາຫານ-ເຄື່ອງດື່ມ ທັງທີ່ເປັນແບບສໍາເລັດຮູບ, ແຫ້ງ, ຜົງ, ດອງ ແລະ ອື່ນໆ.

- ສົ່ງເສີມການຜະລິດສິນຄ້າທີ່ລະນຶກ ຈາກການປັ້ນ, ການຫຼໍ່ ແລະ ການແກະສະຫຼັກ.

**9.4 ການຫຸ້ມຫໍ່**

ການຫຸ້ມຫໍ່ຖືເປັນວຽກໜຶ່ງທີ່ຕ້ອງໄດ້ເອົາໃຈໃສ່ ແລະ ຊ່ວຍເຫຼືອຜູ້ຜະລິດຢ່າງໃກ້ຊິດ ເພື່ອຍົກລະດັບສິນຄ້າໃຫ້ມີຄວາມໜ້າເຊື່ອຖື, ດຶງດູດຄວາມສົນໃຈ ແລະ ສ້າງມູນຄ່າເພີ່ມໃຫ້ກັບຕົວສິນຄ້າ, ຊຶ່ງວຽກທີ່ຕ້ອງສຸມໃສ່ມີດັ່ງນີ້:

- ຈັດຝຶກອົບຮົມການອອກແບບ ແລະ ຜະລິດເຄື່ອງຫຸ້ມຫໍ່ສິນຄ້າປະເພດຕ່າງໆ ຢ່າງຕໍ່ເນື່ອງ.
- ຈັດຝຶກອົບຮົມການອອກແບບກາໝາຍສິນຄ້າ ແລະ ສະຫຼາກສິນຄ້າ.
- ສະໜອງຂໍ້ມູນຂ່າວສານກ່ຽວກັບເຄື່ອງມື ແລະ ເຕັກໂນໂລຊີການຫຸ້ມຫໍ່ ລວມເຖິງຂໍ້ມູນຜູ້ສະໜອງບັນຈຸພັນ.

**9.5 ການຈໍາໜ່າຍ**

ໃນໄລຍະຜ່ານມາ ຕະຫຼາດຈໍາໜ່າຍສິນຄ້າແມ່ນເປັນບັນຫາໃຫຍ່ສໍາລັບຜູ້ຜະລິດ, ແຕ່ເມື່ອການທ່ອງທ່ຽວມີການຂະຫຍາຍຕົວໂອກາດຂາຍສິນຄ້າກໍຈະເປີດກວ້າງຫຼາຍ ໂດຍພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ມີການຊຸກຍູ້ສົ່ງເສີມດັ່ງນີ້:

- ສົ່ງເສີມການກໍ່ສ້າງຕະຫຼາດຊຸມຊົນ ຫຼື ສູນຈໍາໜ່າຍສິນຄ້າຊຸມຊົນ ເພື່ອເປັນສູນລວມໃນການຂາຍສິນຄ້າພາຍໃຫ້ແກ່ນັກທ່ອງທ່ຽວໂດຍກົງ ໂດຍຫຼຸດຜ່ອນການຂາຍຜ່ານແມ່ຄ້າຄົນກາງ ຊຶ່ງຈະຊ່ວຍຫຼີກລ້ຽງການກົດລາຄາທີ່ບໍ່ເປັນທໍາ.
- ສົ່ງເສີມການຈັດຕະຫຼາດນັດ ຫຼື ຕະຫຼາດກາງຄືນ ເພື່ອເພີ່ມໂອກາດໃນການຂາຍສິນຄ້າຊຸມຊົນໃຫ້ແກ່ນັກທ່ອງທ່ຽວຫຼາຍ.
- ປຸກລະດົມປະຊາຊົນ, ຫົວໜ່ວຍທຸລະກິດ ແລະ ການຈັດຕັ້ງທຸກຂະແໜງການ ໃຫ້ມີຄວາມຕື່ນຕົວໃນການຊົມໃຊ້ຜະລິດຕະພັນທ້ອງຖິ່ນ ເພື່ອເປັນກໍາລັງແຮງໃຫ້ແກ່ການຊຸກຍູ້ການຜະລິດພາຍໃນເມືອງ.
- ຝຶກອົບຮົມການນໍາໃຊ້ສື່ອອນລາຍໃນການໂຄສະນາ ແລະ ຂາຍສິນຄ້າທາງອີເລັກໂທນິກ ເພື່ອເພີ່ມໂອກາດໃນການຈໍາໜ່າຍສິນຄ້າຫຼາຍ.

**9.6 ແຜນການແລະຂັ້ນຕອນໃນການພັດທະນາຜະລິດຕະພັນ**

ນໍາໃຊ້ວິຊາການສົມທົບກັບຫນ່ວຍງານທີ່ກ່ຽວຂ້ອງແລະຊາວບ້ານທີ່ຜະລິດສິນຄ້າໃຫ້ແນວທາງຄວາມຮູ້ດ້ວຍການຈັດຝຶກອົບຮົມ ຫລື ການລະດົມຄວາມຄິດໃຫ້ຊາວບ້ານມີສ່ວນຮ່ວມໃນການອອກແບບທີ່ເປັນສິນຄ້າຂອງຕົນເອງ ໂດຍໃຫ້ນັກວິຊາການເລີ່ມຕົ້ນສ້າງແຮງບັນດານໃຈ, ສ້າງຕົວຢ່າງຜະລິດຕະພັນເພື່ອໃຫ້ຊາວບ້ານເຫັນພາບ ແລະ ຕໍ່ຍອດແນວຄວາມຄິດໄດ້ ໂດຍແບ່ງການພັດທະນາອອກເປັນ 3 ໂຄງການຄື

1) ຈັດການຝຶກອົບຮົມກຸ່ມຜະລິດຕະພັນຈາກຜ້າແລະຈັກສານ ເພື່ອສ້າງແນວຄິດ ໃນການແປຮູບຜະລິດຕະພັນ ໃຫ້ຄວາມຮູ້ດ້ານການຕະຫລາດການຂາຍ
2) ສ້າງກຸ່ມອອກແບບບັນຈຸພັນ ໂລໂກ້ສະຫລາກສິນຄ້າ
3) ອອກແບບເຄື່ອງທີ່ລະນຶກ

## 10. ແຜນງານ ແລະ ໂຄງການບູລິມະສິດ

### 10.1 ເປົ້າໝາຍທີ 1: ເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່ໂດດເດັ່ນ ແລະ ມີຄຸນນະພາບ

❖ ແຜນງານຈຸດສຸມທີ 1: ພັດທະນາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວໃຫ້ມີຄຸນນະພາບ

| ລ/ດ | ຊື່ໂຄງການ | ມູນຄ່າລວມ (1000 ລ້ານ) | ແຫຼ່ງທຶນ | | ໄລຍະຈັດຕັ້ງປະຕິບັດ | |
|---|---|---|---|---|---|---|
| | | | ລັດ | ທຸລະກິດ | 2023 ຫາ 2028 | 2029 ຫາ 2033 |
| 1 | ປັບປຸງເສັ້ນທາງເຂົ້າເຖິງ/ເຊື່ອມຕໍ່ບັນດາແຫຼ່ງທ່ອງທ່ຽວພາຍໃນເມືອງວັງວຽງ | 288.5 | 184 | 104.5 | 142.5 | 146 |
| | - ກໍ່ສ້າງສັ້ນທາງປູຢາງ 2 ຊັ້ນ, ກວ້າງ 8 ແມັດ ຈາກສາມແຍກບ້ານທ່າຫາບ້ານນາແຊງ, ລວມໄລຍະທາງ 15 ກິໂລແມັດ | 46 | 0 | 46 | 46 | 0 |
| | - ກໍ່ສ້າງສັ້ນທາງປູຢາງ 2 ຊັ້ນ, ກວ້າງ 8 ແມັດ ຈາກສາມແຍກນາລັງ ໄປຫານາເມືອງ ສຸດຢູ່ສາມແຍກນາຄໍາ, ລວມໄລຍະທາງ 18 ກິໂລແມັດ | 55 | 55 | 0 | 0 | 55 |
| | - ກໍ່ສ້າງສັ້ນທາງທະລຸ, ກວ້າງ 6 ແມັດ ຈາກບ້ານຫ້ວຍເດື່ອ ລຽບຜາດິນຈີ່, ຜາຂາດ, ຜາທອງ, ຜາຫຼວງ ປ່ອງໃສ່ຜາສັງ ລວມໄລຍະທາງ 17 ກິໂລແມັດ | 17 | 17 | 0 | 0 | 17 |
| | - ກໍ່ສ້າງຂົວຂ້າມນໍ້າລີກຢູ່ບ້ານເມືອງເຟືອງ ກວ້າງ 9ມ ຍາວ 120 ແມັດ | 55 | 0 | 55 | 55 | 0 |
| | - ກໍ່ສ້າງສັ້ນທາງປູຢາງ 2 ຊັ້ນ, ກວ້າງ 8 ແມັດ ຈາກບ້ານນາແຊງ ຫາບ້ານແກ້ງຊຽງ, ລວມໄລຍະທາງ 12.5 ກິໂລແມັດ | 38 | 38 | 0 | 38 | 0 |
| | - ກໍ່ສ້າງເສັ້ນທາງທະລຸ ກວ້າງ 6 ແມັດ ລຽບຕາມສາຍນໍ້າລີກຈາກບ້ານແກ້ງຊຽງໄປຫາແກ້ງປິ້ນປ່ອງໃສ່ບ້ານປາກຫ້ວຍ ເມືອງຫີນເຫີບ ລວມໄລຍະທາງ 32 ກິໂລແມັດ | 40 | 40 | 0 | 0 | 40 |

| | | | | | | |
|---|---|---|---|---|---|---|
| | - ກໍ່ສ້າງສັ້ນທາງປູຢາງ 2 ຊັ້ນ, ກວ້າງ 6 ແມັດ ຈາກບ້ານນາແຊງ ຫາໜ້າເຂື່ອນນໍ້າລຶກ, ລວມໄລຍະທາງ 1.4 ກິໂລແມັດ | 3.5 | 0 | 3.5 | 3.5 | 0 |
| | - ກໍ່ສ້າງສັ້ນທາງປູຢາງ 2 ຊັ້ນ, ກວ້າງ 8 ແມັດ ເວັ້ນຕົວເມືອງ ລວມໄລຍະທາງ 10 ກິໂລແມັດ | 34 | 34 | 0 | 0 | 34 |
| 2 | ສ້າງເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວ | 30.4 | 0 | 30.4 | 30.4 | 0 |
| | - ເສັ້ນທາງເຂົ້າຫາຜາຫໍ່ ມີໄລຍະທາງ 1.8 ກິໂລແມັດ | 3 | 0 | 3 | 3 | 0 |
| | - ເສັ້ນທາງລຽບນໍ້າເຂດຫາດຜາຕັ້ງ ມີໄລຍະທາງ 2.4 ກິໂລແມັດ | 4 | 0 | 4 | 4 | 0 |
| | - ເສັ້ນທາງລຽບນໍ້າເຂດບ້ານຄອນເລືອງ ມີໄລຍະທາງ 1.6 ກິໂລແມັດ | 2.7 | 0 | 2.7 | 2.7 | 0 |
| | - ເສັ້ນທາງເຂົ້າຫາຫາດສາມໝື່ນ ມີໄລຍະທາງ 0.8 ກິໂລແມັດ | 1.2 | 0 | 1.2 | 1.2 | 0 |
| | - ເສັ້ນທາງລຽບນໍ້າເຂດບ້ານງວ້າ ມີໄລຍະທາງ 3.5 ກິໂລແມັດ | 5.9 | 0 | 5.9 | 5.9 | 0 |
| | - ເສັ້ນທາງເຂົ້າຫາຈຸດຊົມວິວພູຂຽວ ມີໄລຍະທາງ 2 ແມັດ | 3.4 | 0 | 3.4 | 3.4 | 0 |
| | - ເສັ້ນທາງເຂົ້າຫາຜາຫຼວງ ມີໄລຍະທາງ 4 ກິໂລແມັດ | 6.8 | 0 | 6.8 | 6.8 | 0 |
| | - ເສັ້ນທາງເຂົ້າຫາຜາແຖ ມີໄລຍະທາງ 2 ກິໂລແມັດ | 3.4 | 0 | 3.4 | 3.4 | 0 |
| 3 | ປຸງເສັ້ນທາງໃນຕົວເມືອງເຟືອງ | 20 | 20 | 0 | 10 | 10 |
| 4 | ສ້າງໂຄງລ່າງນໍ້າປະປາ | 70 | 20 | 50 | 35 | 35 |
| 5 | ສ້າງປ້າຍບອກທາງ ແລະ ແຜນທີ່ນໍາທ່ຽວ | 0.5 | 0.5 | 0 | 0.3 | 0.2 |
| 6 | ສ້າງຫ້ອງນໍ້າສາທາລະນະ 5 ຈຸດ | 1.5 | 0 | 1.5 | 0.6 | 0.9 |
| 7 | ສ້າງສູນຂໍ້ມູນຂ່າວສານການທ່ອງທ່ຽວ 3 ຈຸດ | 0.45 | 0.45 | 0 | 0.15 | 0.3 |
| 8 | ສ້າງທາງລົງທ່າລ່ອງເຮືອທັງ 4 ຈຸດ | 0.4 | 0 | 0.4 | 0.4 | 0 |
| 9 | ປຸງສະຖານີລົດໂດຍສານ ແລະ ລະບົບຂົນສົ່ງພາຍໃນເມືອງ | 20 | 20 | 0 | 15 | 5 |

| | | | | | | |
|---|---|---|---|---|---|---|
| 10 | ປຸງໂຮງໝໍເມືອງ ແລະ ໂຮງໝໍນ້ອຍ | 15 | 15 | 0 | 10 | 5 |
| 11 | ປຸງໂຄງລ່າງພື້ນຖານ ແລະ ສະພາບແວດລ້ອມບ້ານເປົ້າໝາຍ ພັດທະນາເປັນບ້ານວັດທະນະທຳຈຳນວນ 4 ບ້ານ ເພື່ອສົ່ງເສີມການທ່ອງທ່ຽວຊຸມຊົນ ແລະ ໂຮມສະເຕ | 10 | 10 | 0 | 5 | 5 |
| 12 | ຍູ້ຫົວໜ່ວຍທຸລະກິດກໍ່ສ້າງ ແລະ ປັບປຸງສະຖານທີ່ພັກແຮມ ແລະ ສະຖານທີ່ທ່ອງທ່ຽວໃຫ້ໄດ້ມາດຕະຖານ | 0.05 | 0.5 | 0 | 0.025 | 0.025 |
| 13 | ກຳນົດຂອບເຂດ ແລະ ປັບປຸງເສັ້ນທາງຍ່າງ ພາຍໃນບ້ານເປົ້າຫມາຍ ໃຫ້ເປັນລະບຽບຈົບງາມປະກອບມີບ້ານເມືອງເຟືອງ, ບ້ານສາມຫມື່ນ, ບ້ານຄອນ ເລືອງ, ບ້ານນາງແຊງ, ບ້ານນາໃຫມ່. ມູນຄ່າ | 1.5 | 1 | 0.5 | 1.5 | 0 |
| | **ລວມ** | **458.25** | **270.95** | **187.3** | **250.85** | **207.4** |

❖ ແຜນງານຈຸດສຸມທີ 2: ພັດທະນາຜະລິດຕະພັນ ແລະ ກິດຈະ ກຳການທ່ອງທ່ຽວໃຫ້ມີຄວາມເປັນເອກະລັກສະເພາະ, ມີຄວາມຫຼາກຫຼາຍ, ດຶງດູດນັກທ່ອງທ່ຽວໃຫ້ຢູ່ຫຼາຍວັນ ແລະ ໃຊ້ຈ່າຍຫຼາຍ

| ລ/ດ | ຊື່ໂຄງການ | ມູນຄ່າລວມ (1000 ລ້ານ) | ແຫຼ່ງທຶນ | | ໄລຍະຈັດຕັ້ງປະຕິບັດ | |
|---|---|---|---|---|---|---|
| | | | ລັດ | ທຸລະກິດ | 2023 ຫາ 2028 | 2029 ຫາ 2033 |
| 1 | ພັດທະນາໜ້າເຂື່ອນນ້ຳລີກ | 200 | 0 | 200 | 100 | 100 |
| 2 | ພັດທະນາແຫຼ່ງທ່ອງທ່ຽວແກ້ງປິ້ນ | 50 | 0 | 50 | 0 | 50 |
| 3 | ພັດທະນາອຸດທະຍານຜາທໍ່ | 20 | 0 | 20 | 0 | 20 |
| 4 | ພັດທະນາອຸດທະຍານພູຊຽວ | 30 | 0 | 50 | 20 | 10 |
| 5 | ກໍ່ສ້າງສວນປະຕູເມືອງ | 10 | 0 | 10 | 10 | 0 |

| | | | | | | |
|---|---|---|---|---|---|---|
| 6 | ປັບປຸງພິພິດທະພັນຈາລຶກຄວາມແຄ້ນກົກແຕ້ | 10 | 10 | 0 | 5 | 5 |
| 7 | ກໍ່ສ້າງສວນສາທາລະນະ ແລະ ຕະຫຼາດກາງຄືນທ້ອຍລ້າ | 20 | 0 | 20 | 10 | 10 |
| 8 | ພັດທະນາສູນວັດທະນະທຳສັງສິນໄຊ (ສາມແຍກນາລັງ) | 50 | 0 | 50 | 25 | 25 |
| 9 | ພັດທະນາສວນອຸທະຍານຜາຫຼວງ | 30 | 0 | 30 | 10 | 20 |
| 10 | ພັດທະນາສວນອຸທະຍານສິນໄຊແຫ່ງຍຸກສະໄໝ (ຜາແຖ) | 30 | 0 | 30 | 10 | 20 |
| 11 | ສົ່ງເສີມການຜະລິດສິນຄ້າທີ່ລະນຶກ ແລະ ເຄື່ອງຕ້ອນຂອງຝາກ 1 ບ້ານ 1 ຜະລິດຕະພັນ | 1 | 1 | 0 | 0.5 | 0.5 |
| 12 | ສົ່ງເສີມການອອກແບບ ແລະ ພັດທະນາບັນຈຸພັນ | 0.2 | 0.2 | 0 | 0.1 | 0.1 |
| 13 | ສົ່ງເສີມການອະນຸລັກ ແລະ ພັດທະນາຜະລິດຕະພັນຈາກນໍ້າຍ້ອມນິນ | 0.1 | 0.1 | 0 | 0.05 | 0.05 |
| 14 | ສົ່ງເສີມການສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຫັດຖະກຳຕໍ່າຫູກ | 0.1 | 0.1 | 0 | 0.05 | 0.05 |
| 15 | ສົ່ງເສີມການພັດທະນາຜະລິດຕະພັນເຫຼົ້າແກບ | 0.1 | 0.1 | 0 | 0.05 | 0.05 |
| 16 | ສົ່ງເສີມການສ້າງຕັ້ງກອງທຶນຊຸກຍູ້ການຜະລິດສິນຄ້າ | 0.5 | 0.5 | 0 | 0.25 | 0.25 |
| 17 | ທົດລອງກໍ່ສ້າງຕະຫຼາດຊຸມຊົນ ຫຼື ສູນຈຳໜ່ານສິນຄ້າຊຸມຊົນ ຈຳນວນ 6 ຫຼັງ ຄື: ຕະຫຼາດກະສິກຳບ້ານດອນ, ສູນຈຳໜ່າຍສິນຄ້າບ້ານເມືອງເຟືອງ, ສູນຈຳໜ່າຍຫັດຖະກຳບ້ານຄອນເລືອງ, ສູນຈຳໜ່າຍຫັດຖະກຳເທດສະບານເມືອງ, ຕະຫຼາດກະສິກຳບ້ານໂພນທອນ, ຕະຫຼາດກະສິກຳບ້ານນາຫຼວງ. | 1.2 | 1.2 | 0 | 0.6 | 0.6 |
| 18 | ສົ່ງເສີມການຕະຫຼາດຜະລິດຕະພັນທ້ອງຖິ່ນດ້ວຍຮູບການຕ່າງໆ ເຊັ່ນ ການວາງສະແດງສິນຄ້າ, ການຈັດຕະຫຼາດນັດ, ການໂຄສະນາ, ການສ້າງເຄືອຂ່າຍຕະຫຼາດ ແລະ ອື່ນໆ | 0.2 | 0.2 | 0 | 0.1 | 0.1 |
| 19 | ຊຸກຍູ້ປະຊາຊົນບ້ານນາໃໝ່ ເພີ້ມທະວີການຜະລິດເຄື່ອງຫັດຖະກຳຈັກສານ ເປັນ | 0.1 | 0.1 | 0 | 0.05 | 0.05 |

| | | | | | | |
|---|---|---|---|---|---|---|
| | ຕົ້ນແມ່ນ: ກະຕິບ ເຂົ້າ…….ໃຫ້ຫຼາຍກວ່າເກົ່າ, ເຮັດໃຫ້ມີຫຼາຍຮູບແບບ, ຫຼາຍຂະໜາດ ເພື່ອເປັນສິນຄ້າສາມາດສົ່ງອອກຈຳໜ່າຍ. | | | | | |
| 20 | ຝຶກອົບຮົມໃຫ້ປະຊາຊົນກ່ຽວກັບທັກສະ ການສາທິດຂັ້ນຕອນຕໍ່າຫູກ ແລະ ຈັກສານ ເພື່ອໃຫ້ນັກທ່ອງທ່ຽວໄດ້ເຂົ້າມາຢ້ຽມຊົມ | 0.05 | 0.5 | 0 | 0.025 | 0.025 |
| 21 | ອອກແບບ ແລະ ຜະລິດເຄື່ອງຫັດຖະກຳຈັກສານ, ແຜ່ນແພ ແລະ ເຄື່ອງທີ່ລະນຶກໃຫ້ມີຮູບຊົງສວຍງາມເປັນເອກະລັກຂອງທ້ອງຖິ່ນ, ເປັນຮູບທີ່ກ່ຽວຂ້ອງກັບນິທານສັງສິນໄຊ (ສັງສິນໄຊ, ຫອຍສັງ, ທະນູ) ໂດຍນຳ ໃຊ້ວັດສະດຸທ້ອງຖິ່ນ ຫຼື ສິ່ງເສດເຫຼືອທີ່ສາມາດນຳມາຜະລິດຄືນໃໝ່ ເຊັ່ນ: ເສດຜ້າໄໝ, ເປືອກໄມ້, ເສດໄມ້, ດອກໄມ້ແຫ້ງ ແລະ ອື່ນໆມາຜະລິດເປັນພວງກະແຈ, ກະເປົານ້ອຍ, ແນວຫ້ອຍເຄື່ອງ | 0.10 | 0.5 | 0.5 | 0.5 | 0.5 |
| 22 | ສົ່ງເສີມການຜະລິດກະສິກຳສະອາດ ເພື່ອສົ່ງເສີມການທ່ອງທ່ຽວ ຢູ່ເຂດບ້ານຕ່າງໆທີ່ມີທ່າແຮງ<br>- ສົ່ງເສີມການປູກໝາກກ້ຽງຢູ່ບ້ານຫາດດອນຄູນ (ບ້ານ ຄອນເລື່ອງ), ບ້ານຜາຫຼວງ ແລະ ບ້ານໜອງປໍ<br>- ຝຶກອົບຮົມການແປຮູບໝາກນາວ ຢູ່ບ້ານສາມໝື່ນ<br>- ຝຶກອົບຮົມການແປຮູບໝາກນັດ ເປັນຜະລິດຕະພັນອາຫານແຫ້ງຢູ່ບ້ານດອນ, ບ້ານນາກາງ, ບ້ານທ່າ | 0.10 | 0.5 | 0.5 | 0.5 | 0.5 |
| 23 | ຜະລິດ ແລະ ອອກແບບການຫຸ້ມທໍ່ນໍ້າ ສະຕິ ຜະລິດຕະພັນໂອດ່ອບຂອງເມືອງເຟືອງໃຫ້ໜ້າສົນໃຈ ແລະ ມີຫຼາຍຂະໜາດໃຫ້ແທດເໝາະກັບຄວາມຕ້ອງການຂອງຕະຫຼາດ. | 0.05 | 0.5 | 0 | 0.025 | 0.025 |

| | | | | | | |
|---|---|---|---|---|---|---|
| 24 | ຝຶກອົບຮົມການອອກແບບການຫຸ້ມຫໍ່ຜະລິດຕະພັນໃຫ້ມີຄວາມສວຍງາມ, ມີກາໝາຍ ແລະ ເນື້ອໃນຄຸນປະໂຫຍດຂອງຜະລິດຕະພັນ | 0.05 | 0.5 | 0 | 0.025 | 0.025 |
| | **ລວມ** | **475.60** | **15.5** | **460.1** | **192.8** | **263.2** |

❖ ແຜນງານຈຸດສຸມ ທີ 3: ໂຄສະນາຜ່ານ ຫຼາຍຊ່ອງທາງໃຫ້ເຂົ້າ ເຖິງກຸ່ມເປົ້າໝາຍຕະຫຼາດ

| ລ/ດ | ຊື່ໂຄງການ | ມູນຄ່າລວມ (1000 ລ້ານ) | ແຫຼ່ງທຶນ | | ໄລຍະຈັດຕັ້ງປະຕິບັດ | |
|---|---|---|---|---|---|---|
| | | | ລັດ | ທຸລະກິດ | 2023 ຫາ 2028 | 2029 ຫາ 2033 |
| 1 | ສຶກສາ-ວິໄຈກຸ່ມຕະຫຼາດທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ເພື່ອກຳນົດຍຸດທະສາດການຕະຫຼາດຂອງເມືອງເຟືອງ | 0.05 | 0.05 | 0 | 0.05 | 0 |
| 2 | ຜະລິດສິ່ງພິມ ແລະ ສ້າງເຄື່ອງມືໂຄສະນາການທ່ອງທ່ຽວຂອງເມືອງເຟືອງໃຫ້ມີຄວາມຫຼາກຫຼາຍສອດຄ່ອງກັບຄວາມຕ້ອງການຂອງກຸ່ມຕະຫຼາດທ່ອງທ່ຽວ ເປັນຕົ້ນ: ແຜ່ນທີ່ທ່ອງທ່ຽວ, ວີດີໂອໂຄສະນາ, ສາລະຄະດີ ແລະ ອື່ນໆ ທັງແບບອອນລາຍ ແລະ ອໍອບໄລ | 0.15 | 0.15 | 0 | 0.1 | 0.05 |
| 3 | ໂຄສະນາການທ່ອງທ່ຽວເມືອງເຟືອງ ຜ່ານເວັບໄຊຂອງສູນກາງ, ແຂວງ, ຜ່ານສື່ມວນຊົນພາຍໃນທາງເຊື່ອມກັບລາຍການວິທະຍຸ, ໂທລະພາບ ແລະ ສື່ສັງຄົມອອນລາຍ | 0.1 | 0 | 0.1 | 0.05 | 0.05 |
| 4 | ສ້າງປະຕິທິນໂຄສະນາການທ່ອງທ່ຽວ ເມືອງເຟືອງ ແລະ ຈັດງານບຸນປະເພນີ, ເທດສະການ ແລະ ນິເທດສະການພາຍໃນເມືອງເຟືອງ | 0.2 | 0 | 0.2 | 0.1 | 0.1 |
| 5 | ຈັດ **Famtrip** ຢ້ຽມຢາມແຫຼ່ງທ່ອງທ່ຽວ ໃຫ້ແກ່ສື່ມວນຊົນພາຍໃນເມືອງ, ບັນ | 0.3 | 0 | 0.3 | 0.15 | 0.15 |

| | | | | | | |
|---|---|---|---|---|---|---|
| | ດາແຂວງ ແລະ ສາກົນ ເພື່ອໂຄສະນາການທ່ອງທ່ຽວຂອງເມືອງເຟືອງໃຫ້ກວ້າງຂວາງ, ສ້າງຄວາມໝັ້ນໃຈໃຫ້ແກ່ນັກທ່ອງທ່ຽວໃນການເດີນທາງທ່ອງທ່ຽວຢ່າງມີຄວາມສຸກ ແລະ ປອດໄພ | | | | | |
| 6 | ຈັດຄາລາວານທ່ອງທ່ຽວຢ້ຽມຢາມສະຖານທີ່ທ່ອງທ່ຽວທີ່ສຳຄັນຂອງເມືອງເຟືອງ | 0.3 | 0 | 0.3 | 0.15 | 0.15 |
| 7 | ຈັດກິດຈະກຳສົ່ງເສີມການທ່ອງທ່ຽວ **(Campaign)** ລາວທ່ຽວລາວ ໂດຍການຮ່ວມມືກັບພາກລັດ ແລະ ພາກເອກະຊົນພາຍໃນປະເທດ | 0.3 | 0 | 0.3 | 0.15 | 0.15 |
| 8 | ເຂົ້າຮ່ວມງານວາງສະແດງການທ່ອງທ່ຽວເນື່ອງໃນໂອກາດງານບຸນປະເພນີ, ເທດສະການ ແລະ ງານບຸນສຳຄັນຕ່າງໆຂອງຊາດທີ່ຈັດຢູ່ບັນດາແຂວງໃນຂອບເຂດທົ່ວປະເທດ | 0.3 | 0 | 0.3 | 0.15 | 0.15 |
| 9 | ຝຶກອົບຮົມທາງດ້ານວິຊາການໃນວຽກງານໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວ | 0.2 | 0.2 | 0 | 0.1 | 0.1 |
| 10 | ລົງຕິດຕາມ, ຊຸກຍູ້ ແລະ ປັບປຸງວຽກງານໂຄສະນາການທ່ອງທ່ຽວແຂວງຢ່າງເປັນປົກກະຕິຕໍ່ເນື່ອງ | 0.2 | 0.2 | 0 | 0.1 | 0.1 |
| 11 | ທັດສະນະສຶກສາ, ສຳມະນາແລກປ່ຽນ ຂໍ້ມູນຂ່າວສານການໂຄສະນາການທ່ອງທ່ຽວແຂວງກັບພາກ ສ່ວນທີ່ກ່ຽວຂ້ອງຕ່າງໆ | 0.1 | 0.1 | 0 | 0.05 | 0.05 |
| 12 | ບຳລຸງ ແລະ ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານການໂຄສະນາການທ່ອງທ່ຽວໄລຍະສັ້ນ-ຍາວທັງຢູ່ພາຍໃນ ແລະ ຕ່າງປະເທດ | 0.2 | 0.2 | 0 | 0.1 | 0.1 |
| 13 | ເກັບກຳ, ລວບລວມຂໍ້ມູນໃນການສ້າງແຜນຍຸດທະສາດການຕະຫຼາດທ່ອງທ່ຽວແຂວງ | 0.05 | 0.05 | 0 | 0.025 | 0.025 |
| 14 | ສຶກສາ-ວິໄຈກຸ່ມຕະຫຼາດທ່ອງທ່ຽວ ເປົ້າໝາຍຂອງການທ່ອງທ່ຽວແຂວງ ເຊັ່ນ: | 0.05 | 0.05 | 0 | 0.025 | 0.025 |

| | | | | | | |
|---|---|---|---|---|---|---|
| | ໄທ, ຈີນ, ຫວຽດ ນາມ, ອາເມລິກາ, ອັງກິດ. | | | | | |
| 15 | ສຶກສາ-ວິໄຈ ການຕະຫຼາດທ່ອງທ່ຽວພາຍ ໃນແນ່ໃສ່ສົ່ງເສີມການທ່ອງທ່ຽວ “ລາວທ່ຽວລາວ”ນັບມື້ ນັບຫຼາຍ | 0.05 | 0.05 | 0 | 0.025 | 0.025 |
| | **ລວມ** | **2.55** | **1.05** | **1.5** | **1.325** | **1.225** |

❖ ແຜນງານຈຸດສຸມທີ 4: ປັບປຸງການບໍລິການ ໃຫ້ມີຄວາມສະອາດ, ປອດໄພ ແລະ ສ້າງ ຄວາມປະທັບໃຈໃຫ້ແກ່ນັກທ່ອງທ່ຽວ

| ລ/ດ | ຊື່ໂຄງການ | ມູນຄ່າລວມ (1000 ລ້ານ) | ແຫຼ່ງທຶນ | | ໄລຍະຈັດຕັ້ງປະຕິບັດ | |
|---|---|---|---|---|---|---|
| | | | ລັດ | ທຸລະກິດ | 2023 ຫາ 2028 | 2029 ຫາ 2033 |
| 1 | ສ້າງນິຕິກຳ ແລະ ກຳນົດນະໂຍບາຍໃນການຫຼຸດຜ່ອນມົນລະພິດທາງອາກາດ, ທາງນ້ຳ ແລະ ຫຼຸດຜ່ອນສິ່ງເສດເຫຼືອໃນຂົງເຂດທຸລະກິດການທ່ອງທ່ຽວ | 0.1 | 0.1 | 0 | 0.05 | 0.05 |
| 2 | ສ້າງນິຕິກຳ ແລະ ກຳນົດນະໂຍບາຍຊຸກຍູ້ທຸລະກິດທ່ອງທ່ຽວນຳໃຊ້ຊັບພະຍາກອນ ແລະ ພະລັງງານແບບປະຢັດ | 0.1 | 0.1 | 0 | 0.05 | 0.05 |
| 3 | ສົ່ງເສີມການຜະລິດກະສິກຳສະອາດ ເພື່ອສະໜອງໃຫ້ກັບບັນດາຫົວໜ່ວຍທຸລະກິດທ່ອງທ່ຽວ | 0.3 | 0.3 | 0 | 0.15 | 0.15 |
| 4 | ຝຶກອົບຮົມຄຸນນະພາບການບໍລິການສຳລັບໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ຮ້ານບັນເທີງ | 0.1 | 0.05 | 0.05 | 0.05 | 0.05 |
| 5 | ຝຶກອົບຮົມໃຫ້ແກ່ປະຊາຊົນທ້ອງຖິ່ນກ່ຽວກັບການດຳເນີນທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ, ເຂົ້າໃຈຄວາມຕ້ອງການຂອງນັກທ່ອງທ່ຽວ, ຮູ້ນຳໃຊ້ຜະລິດຕະພັນໃນທ້ອງຖິ່ນມາບໍລິການ ແລະ ຂາຍໃຫ້ນັກທ່ອງທ່ຽວ ແລະ ສາມາດນຳໄປ | 0.1 | 0.1 | 0 | 0.05 | 0.05 |

| | | | | | | |
|---|---|---|---|---|---|---|
| | ຂາຍຢູ່ເຂດໃກ້ຄຽງ | | | | | |
| 6 | ຝຶກອົບຮົມການບໍລິການທາງນ້ຳ ເຊັ່ນ: ກິງເບັ່ງ, ເຮືອກາຍັກ ແລະ ການບໍລິການເຮືອນແພມູນຄ່າ | 0.1 | 0.05 | 0.05 | 0.05 | 0.05 |
| 7 | ຍົກລະດັບຄວາມຮູ້ດ້ານພາສາຕ່າງປະເທດໃຫ້ພະນັກງານຂັ້ນ ແຂວງ ແລະ ຂັ້ນເມືອງ | 0.1 | 0.1 | 0 | 0.05 | 0.05 |
| 8 | ຝຶກອົບຮົມພະນັກງານນຳທ່ຽວຂັ້ນຕ່າງໆ | 0.1 | 0.05 | 0.05 | 0.05 | 0.05 |
| 9 | ຝຶກອົບຮົມກ່ຽວກັບການປະຖົມພະຍາບານຂັ້ນຕົ້ນໃຫ້ຜູ້ປະກອບການທ່ອງທ່ຽວ | 0.1 | 0.1 | 0 | 0.05 | 0.05 |
| 10 | ຄົ້ນຄວ້າສ້າງ ແລະ ເຜີຍແຜ່ນິຕິກຳ ເພື່ອຄຸ້ມຄອງການທ່ອງທ່ຽວໃນຂອບເຂດເມືອງເຟືອງ | 0.35 | 0.35 | 0 | 0.35 | 0 |
| 11 | ລົງຕິດຕາມ,ກວດກາການເຄື່ອນໄຫວຂອງທຸລະກິດການທ່ອງທ່ຽວໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະຫງົບ, ປອດໄພ,ໄດ້ມາດຕະຖານ ແລະ ຖືກຕ້ອງຕາມລະບຽບກົດໝາຍ | 0.15 | 0.15 | 0 | 0.075 | 0.075 |
| 12 | ຈັດຕັ້ງບັນດາກຸ່ມທຸລະກິດບໍລິການທາງດ້ານການທ່ອງທ່ຽວ | 0.05 | 0 | 0.05 | 0.05 | 0 |
| 13 | ລົງຕິດຕາມ, ຊຸກຍູ້ ແລະ ປັບປຸງວຽກງານຄຸ້ມຄອງການທ່ອງທ່ຽວຂອງເມືອງຢ່າງເປັນປົກກະຕິຕໍ່ເນື່ອງ | 0.1 | 0.1 | 0 | 0.05 | 0.05 |
| 14 | ລົງສຳຫຼວດເກັບກຳຂໍ້ມູນເພື່ອກຳນົດປະເພດການບໍລິການໃນການຄວບຄຸມລາຄາຄ່າບໍລິການໃນຂະແໜງການທ່ອງທ່ຽວເພື່ອກະຕຸ້ນໃຫ້ນັກທ່ອງທ່ຽວເຂົ້າມາທ່ຽວຫຼາຍ. | 0.7 | 0.7 | 0 | 0.035 | 0.035 |
| 15 | ຈັດລະດັບມາດຕະຖານ ແລະ ປະເພດໃຫ້ບັນດາຫົວໜ່ວຍທຸລະກິດການບໍລິການໃນຂະແໜງການທ່ອງທ່ຽວ | 0.1 | 0.1 | 0 | 0.05 | 0.05 |

| | | | | | | |
|---|---|---|---|---|---|---|
| 16 | ເຜີຍແຜ່, ປະເມີນ, ຢັ້ງຢືນມາດຕະຖານການທ່ອງທ່ຽວ ເຊັ່ນ: ມາດຕະຖານເມືອງທ່ອງທ່ຽວ, ມາດຕະຖານສະຖານທີ່ພັກແຮມ, ມາດຕະຖານສະປາ, ມາດຕະຖານສະຖານທີ່ທ່ອງທ່ຽວ | 0.1 | 0.1 | 0 | 0.05 | 0.05 |
| 17 | ຄົ້ນຄວ້າ ແລະ ສ້າງຕັ້ງຄະນະສະເພາະກິດ ແກ້ໄຂປະກົດການຫຍໍ້ທໍ້ທາງດ້ານການທ່ອງທ່ຽວ | 0.1 | 0.1 | 0 | 0.05 | 0.05 |
| 18 | ລົງຕິດຕາມ, ກວດກາ ແລະ ແກ້ໄຂບັນຫາຕ່າງໆ, ຄວາມສ່ຽງທີ່ເກີດໃນແຂງແໜງການທ່ອງທ່ຽວ | 0.15 | 0.15 | 0 | 0.075 | 0.075 |
| 19 | ສໍາຫຼວດ, ກໍານົດຂອບເຂດ ແລະ ປັກຫຼັກ ໝາຍເຂດສະຫງວນບໍລິ ເວນຕີນຜາໃນຂອບເຂດເມືອງເຟືອງ | 0.30 | 0.30 | 0 | 0.15 | 0.15 |
| | **ລວມ** | **2.65** | **2.5** | **0.15** | **1.45** | **1.45** |

### 10.2 ເປົ້າໝາຍທີ 2: ຊຸກຍູ້ການພັດທະນາຕາມທິດສີຂຽວ ແລະ ຍືນຍົງ

❖ ແຜນງານຈຸດສຸມທີ 1: ສົ່ງເສີມການລົງທຶນທີ່ເປັນມິດກັບສິ່ງແວດລ້ອມ ແລະ ການບໍລິຫານຄຸ້ມຄອງໃຫ້ມີປະສິດທິພາບ ເຊັ່ນ: ສ້າງລະບຽບການ, ນິຕິກໍາຄຸ້ມຄອງການທ່ອງທ່ຽວຢູ່ແຕ່ລະເຂດ, ລະບຽບການປຸກສ້າງຢູ່ໜ້ານໍ້າ, ເຂດຫ່າງຈາກໜ້ານໍ້າ

| ລ/ດ | ຊື່ໂຄງການ | ມູນຄ່າລວມ (1000 ລ້ານ) | ແຫຼ່ງທຶນ | | ໄລຍະຈັດຕັ້ງປະຕິບັດ | |
|---|---|---|---|---|---|---|
| | | | ລັດ | ທຸລະກິດ | 2023 ຫາ 2028 | 2029 ຫາ 2033 |
| 1 | ອອກແບບຈັດສັນ ແລະ ສ້າງກົດລະບຽບຄຸ້ມຄອງການປຸກສ້າງເຂດລ່ອງນໍ້າລີກ | 0.3 | 0.3 | 0 | 0.3 | 0 |

| | | | | | | |
|---|---|---|---|---|---|---|
| 2 | ອອກແບບແຜນຜັງຈັດສັນລະອຽດຕົວເມືອງ ເພື່ອຄຸ້ມຄອງການປຸກສ້າງ ແລະ ປັບປຸງພູມີທັດ | 0.5 | 0.5 | 0 | 0.5 | 0 |
| 3 | ວາງແຜນ ແລະ ສ້າງລະບຽບຄຸ້ມຄອງພູມີທັດທົ່ວເມືອງ | 0.5 | 0.5 | 0 | 0 | 0.5 |
| 4 | ຄົ້ນຄວ້າສ້າງ ແລະ ເຜີຍແຜ່ນິຕິກຳ ເພື່ອຄຸ້ມຄອງການທ່ອງທ່ຽວໃນຂອບເຂດເມືອງເຟືອງ | 0.35 | 0.35 | 0 | 0.35 | 0 |
| 5 | ລົງຕິດຕາມ, ກວດກາການເຄື່ອນໄຫວຂອງທຸລະກິດການທ່ອງທ່ຽວໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະຫງົບ, ປອດໄພ,ໄດ້ມາດຕະຖານ ແລະ ຖືກຕ້ອງຕາມລະບຽບກົດໝາຍ | 0.15 | 0.15 | 0 | 0.075 | 0.075 |
| 6 | ຈັດຕັ້ງບັນດາກຸ່ມທຸລະກິດບໍລິການທາງດ້ານການທ່ອງທ່ຽວ | 0.05 | 0 | 0.05 | 0.05 | 0 |
| 7 | ລົງຕິດຕາມ, ຊຸກຍູ້ ແລະ ປັບປຸງວຽກງານ ຄຸ້ມຄອງການ ທ່ອງທ່ຽວຂອງເມືອງຢ່າງເປັນປົກກະຕິຕໍ່ເນື່ອງ | 0.1 | 0.1 | 0 | 0.05 | 0.05 |
| 8 | ລົງສຳຫຼວດເກັບກຳຂໍ້ມູນເພື່ອກຳນົດປະເພດການບໍລິການໃນການຄວບຄຸມລາຄາຄ່າບໍລິການໃນຂະແໜງການທ່ອງທ່ຽວເພື່ອກະຕຸ້ນໃຫ້ນັກທ່ອງທ່ຽວເຂົ້າມາທ່ຽວຫຼາຍ. | 0.7 | 0.7 | 0 | 0.035 | 0.035 |
| 9 | ຈັດລະດັບມາດຕະຖານ ແລະ ປະເພດໃຫ້ ບັນດາຫົວໜ່ວຍທຸລະກິດການບໍລິການໃນຂະແໜງການທ່ອງທ່ຽວ | 0.1 | 0.1 | 0 | 0.05 | 0.05 |
| 10 | ເຜີຍແຜ່, ປະເມີນ, ຍັ້ງຢືນມາດຕະຖານການທ່ອງທ່ຽວ ເຊັ່ນ: ມາດຕະຖານເມືອງທ່ອງທ່ຽວ, ມາດຕະຖານສະຖານທີ່ພັກແຮມ, ມາດຕະຖານສະປາ, ມາດຕະຖານສະຖານທີ່ທ່ອງທ່ຽວ | 0.1 | 0.1 | 0 | 0.05 | 0.05 |

| | | | | | | |
|---|---|---|---|---|---|---|
| 11 | ຄົ້ນຄວ້າ ແລະ ສ້າງຕັ້ງຄະນະສະເພາະກິດ ແກ້ໄຂປະກົດການຫຍໍ້ທໍ້ທາງດ້ານການທ່ອງທ່ຽວ | 0.1 | 0.1 | 0 | 0.05 | 0.05 |
| 12 | ລົງຕິດຕາມ, ກວດກາ ແລະ ແກ້ໄຂບັນຫາຕ່າງໆ, ຄວາມສ່ຽງທີ່ເກີດໃນແຂງແໜງການທ່ອງທ່ຽວ | 0.15 | 0.15 | 0 | 0.075 | 0.075 |
| | **ລວມ** | **3.1** | **3.05** | **0.05** | **1.585** | **0.885** |

❖ ແຜນງານຈຸດສຸມທີ 2: ສົ່ງເສີມການຜະລິດ ແລະ ບໍລິໂພກອາຫານ ສະອາດ ແລະ ປອດໄພ

| ລ/ດ | ຊື່ໂຄງການ | ມູນຄ່າລວມ (1000 ລ້ານ) | ແຫຼ່ງທຶນ | | ໄລຍະຈັດຕັ້ງປະຕິບັດ | |
|---|---|---|---|---|---|---|
| | | | ລັດ | ທຸລະກິດ | 2023 ຫາ 2028 | 2029 ຫາ 2033 |
| 1 | ສົ່ງເສີມການຜະລິດກະສິກໍາສະອາດ ເພື່ອສະໜັບສະໜູນການທ່ອງທ່ຽວສີຂຽວ-ປອດໄພ | 0.2 | 0.2 | 0 | 0.1 | 0.1 |
| 2 | ຝຶກອົບຮົມການບໍລິການດ້ານສຸຂະອະນາໄມອາຫານສະອາດ ແລະ ປອດໄພໃຫ້ແກ່ຜູ້ປະກອບການດ້ານການທ່ອງທ່ຽວ ແລະ ປະຊາຊົນທ້ອງຖິ່ນ | 0.15 | 0.05 | 0.1 | 0.1 | 0.05 |
| 3 | ຕິດຕາມ, ກວດກາ ແລະ ປະເມີນຜົນ ດ້ານສຸຂະອະນາໄມອາຫານສະອາດ ແລະ ປອດໄພ | 0.1 | 0.1 | 0 | 0.05 | 0.05 |
| | **ລວມ** | **0.45** | **0.35** | **0.1** | **0.25** | **0.2** |

❖ ແຜນງານຈຸດສຸມທີ 3: ສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນໃນການປົກປັກຮັກສາຊັບພະຍາກອນການທ່ອງທ່ຽວ, ສິ່ງແວດລ້ອມ ແລະ ຄວາມເປັນເອກະລັກສະເພາະທາງດ້ານວັດທະນະທຳຂອງທ້ອງຖິ່ນ

| ລ/ດ | ຊື່ໂຄງການ | ມູນຄ່າລວມ (1000 ລ້ານ) | ແຫຼ່ງທຶນ | | ໄລຍະຈັດຕັ້ງປະຕິບັດ | |
|---|---|---|---|---|---|---|
| | | | ລັດ | ທຸລະກິດ | 2023 ຫາ 2028 | 2029 ຫາ 2033 |
| 1 | ປູກຈິດສຳນຶກໃຫ້ຜູ້ປະກອບການ, ນັກທ່ອງທ່ຽວ ແລະ ປະຊາຊົນມີຄວາມຕື່ນຕົວປະກອບສ່ວນເຂົ້າໃນການຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມ | 0.1 | 0.1 | 0 | 0.05 | 0.05 |
| 2 | ຝຶກອົບຮົມໃຫ້ທຸລະກິດການທ່ອງທ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງກ່ຽວກັບແນວທາງການພັດທະນາການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມ, ຫຼຸດຜ່ອນການນຳໃຊ້ພລາສຕິກ, ກ່ອງໂຟມທຸກປະເພດ, ຊຸກຍູ້ການ ຜະລິດ ແລະ ນຳໃຊ້ຄືນໃໝ່ | 0.1 | 0.1 | 0 | 0.05 | 0.05 |
| 3 | ກຳນົດນະໂຍບາຍຊຸກຍູ້ທຸລະກິດທ່ອງທ່ຽວ ທີ່ນຳໃຊ້ຊັບພະຍາກອນການທ່ອງທ່ຽວແບບຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ | 0.1 | 0.1 | 0 | 0.05 | 0.05 |
| 4 | ຈັດງານເທດສະການສາມໝື່ນຕູບເຟືອງປີລະຄັ້ງ ເພື່ອສົ່ງເສີມການອະນຸລັກຮີດຄອງປະເພນີ ແລະ ສິລະປະວັດທະນະທຳອັນດີງາມພ້ອມທັງສົ່ງເສີມການທ່ອງທ່ຽວ | 0.5 | 0 | 0.5 | 0.25 | 0.25 |
| 5 | ສົ່ງເສີມການຈັດຕັ້ງກຸ່ມບໍລິການນັກທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ເຊັ່ນ: ກຸ່ມກິ່ງເບັງ, ກຸ່ມເຮືອຄະຍັກ, ກຸ່ມເຮືອຫາງຍາງ, ກຸ່ມຍ່າງປ່າ-ປີນຜາ, ກຸ່ມລົດຮັບຈ້າງ ແລະ ອື່ນໆ | 0.1 | 0 | 0.1 | 0.1 | 0 |
| 6 | ພັດທະນາລະບົບຈັດເກັບ ແລະ ກຳຈັດຂີ້ເຫຍື້ອໃຫ້ໄດ້ມາດຕະຖານ ໂດຍໃຫ້ | 1 | 0 | 1 | 0.5 | 0.5 |

| | | | | | | |
|---|---|---|---|---|---|---|
| | ພາກສ່ວນທຸລະກິດ ແລະ ປະຊາຊົນມີສ່ວນຮ່ວມ | | | | | |
| 7 | ທົດລອງສ້າງຊຸມຊົນວັດທະນະທຳເພື່ອການທ່ອງທ່ຽວ ໂດຍເນັ້ນໃສ່ການອະນຸລັກຮັກສາ ແລະ ສົ່ງເສີມສິລະປະວັດທະນະທຳ, ວິຖີຊີວິດ ແລະ ຮີດຄອງປະເພດນີ, ພັດທະນາທີ່ພັກແບບໂຮມສະເຕ ແລະ ການຈັດຕັ້ງຄຸ້ມຄອງທີ່ເຂັ້ມແຂງ | 0.5 | 0.5 | 0 | 0.25 | 0.25 |
| | **ລວມ** | **2.4** | **0.8** | **1.6** | **1.25** | **1.15** |

❖ ແຜນງານຈຸດສຸມທີ 4: ພັດທະນາການທ່ອງທ່ຽວໃຫ້ເປັນໜຶ່ງໃນທ່າແຮງບູລິມະສິດ ແລະ ເປັນແຫຼ່ງລາຍຮັບທີ່ສຳຄັນຂອງເມືອງ

| ລ/ດ | ຊື່ໂຄງການ | ມູນຄ່າລວມ (1000 ລ້ານ) | ແຫຼ່ງທຶນ | | ໄລຍະຈັດຕັ້ງປະຕິບັດ | |
|---|---|---|---|---|---|---|
| | | | ລັດ | ທຸລະກິດ | 2023 ຫາ 2028 | 2029 ຫາ 2033 |
| 1 | ຈັດກອງປະຊຸມສະຫຼຸບ ແລະ ຖອດຖອນບົດຮຽນການບໍລິຫານການທ່ອງທ່ຽວປະຈຳປີຂອງເມືອງ, ປີລະ 1 ຄັ້ງ | 0.1 | 0.1 | 0 | 0.05 | 0.05 |
| 2 | ຈັດກອງປະຊຸມລະຫວ່າງພາກສ່ວນກ່ຽວຂ້ອງເພື່ອປັບປຸງບັນດານິຕິກຳ ແລະ ຂອດການເກັບລາຍຮັບຈາກຂະແໜງການບໍລິການໃຫ້ສອດຄ່ອງ | 0.05 | 0.05 | 0 | 0.025 | 0.025 |
| 3 | ຈັດກອງປະຊຸມປຶກສາຫາລືລະຫວ່າງພາກລັດ ແລະ ພາກທຸລະກິດໃນຂະແໜງທ່ອງທ່ຽວທັງພາຍໃນ ແລະ ປະເທດອ້ອມຂ້າງ ເພື່ອກຳນົດເສັ້ນທາງ ແລະ ກິດຈະກຳການທ່ອງທ່ຽວຮ່ວມກັນ | 0.25 | 0.25 | 0 | 0.1 | 0.15 |
| 4 | ຝຶກອົບຮົມການພັດທະນາ ແລະ ແປຮູບຜະລິດຕະພັນຂອງທ້ອງຖິ່ນໃຫ້ກາຍເປັນສິນຄ້າທີ່ລະນຶກ ແລະ ມີຄວາມເປັນເອກະລັກສະເພາະ | 0.20 | 0.15 | 0.10 | 0.15 | 0.10 |
| | **ລວມ** | **0.55** | **0.55** | **0** | **0.9** | **0.325** |

❖ ແຜນງານຈຸດສຸມທີ 5: ສ້າງນະໂຍບາຍທີ່ເອື້ອອຳນວຍໃຫ້ແກ່ການລົງທຶນໃນຂະແໜງການທ່ອງທ່ຽວ (ໃຫ້ລະບຸກ່ຽວກັບນະໂຍບາຍການສ້າງໂຮງແຮມ, ຫ້ອງປະຊຸມ, ຣີສອດ)

| ລ/ດ | ຊື່ໂຄງການ | ມູນຄ່າລວມ (1000 ລ້ານ) | ແຫຼ່ງທຶນ | | ໄລຍະຈັດຕັ້ງປະຕິບັດ | |
|---|---|---|---|---|---|---|
| | | | ລັດ | ທຸລະກິດ | 2023 ຫາ 2028 | 2029 ຫາ 2033 |
| 1 | ເກັບກຳຂໍ້ມູນ ແລະ ສ້າງບັນຊີຮຽກການລົງທຶນໃນຂະແໜງການທ່ອງທ່ຽວ ພ້ອມທັງຈັດລຽງບູລິມະສິດໃນການລົງທຶນ | 0.03 | 0.03 | 0 | 0.03 | 0 |
| 2 | ເກັບກຳຄົ້ນຄວ້າເອກະສານສ້າງນະໂຍບາຍ ແລະ ເງື່ອນໄຂອຳນວຍຄວາມສະດວກໃນການສ້າງຕັ້ງ ແລະ ດຳເນີນກິດຈະການທຸລະກິດການທ່ອງທ່ຽວ | 0.03 | 0.03 | 0 | 0.03 | 0 |
| 3 | ກອງປະຊຸມເຜີຍແຜ່ບັນດານິຕິກຳ ແລະ ລະບຽບການໃນກາດຳເນີນທຸລະກິດການທ່ອງທ່ຽວໃຫ້ແກ່ພາກລັດ-ພາກທຸລະກິດ | 0.02 | 0.02 | 0 | 0.02 | 0 |
| 4 | ຈັດກອງປະຊຸມລະຫວ່າງພາກລັດ-ພາກທຸລະກິດເປີດກວ້າງເພື່ອ ລະດົມ ແລະ ສົ່ງເສີມການລົງທຶນເຂົ້າໃນຂະແໜງການບໍລິການທ່ອງທ່ຽວ | 0.04 | 0.04 | 0 | 0.04 | 0 |
| 5 | ສ້າງນະໂຍບາຍ ແລະ ອຳນວຍຄວາມສະດວກໃນການລົງທຶນທຸລະກິດພັກແຮມຄຽງຄູ່ກັບທຸລະກິດພັດຕາຄານ, ຮ້ານອາຫານ ແລະ ຫ້ອງປະຊຸມທີ່ໄດ້ມາດຕະຖານຄວາມສະອາດ, ປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ. ລວມທັງສະຖານບັນເທີງ ແລະ ຮ້ານບໍລິການນວດແຜນບູຮານ. | 0.03 | 0.03 | 0 | 0.03 | 0 |
| 6 | ຊຸກຍູ້ການລົງທຶນທຸລະກິດຕົວແທນບໍລິສັດ ທ່ອງທ່ຽວ, ລາຍການທ່ອງທ່ຽວ, ທຸລະກິດນຳທ່ຽວ ແລະ ທຸລະກິດຂົນສົ່ງນັກທ່ອງທ່ຽວພາຍໃນເມືອງເຟືອງ. | 0.04 | 0.04 | 0 | 0.04 | 0 |
| 7 | ລະດົມການລົງທຶນທຸລະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະແມ່ນການ | 0.04 | 0.04 | 0 | 0.04 | 0 |

| | | | | | | |
|---|---|---|---|---|---|---|
| | ລົງທຶນສ້າງສູນຈຳໜ່າຍຜະລິດຕະພັນທ້ອງຖິ່ນ, ຮ້ານຂາຍເຄື່ອງທີ່ລະນຶກ, ອາຫານທ້ອງຖິ່ນ ແລະ ອື່ນໆພາຍໃນຕົວເມືອງ ແລະ ຕາມແຫຼ່ງທ່ອງທ່ຽວເມືອງເຟືອງ. | | | | | |
| | **ລວມ** | **0.23** | **0.23** | **0** | **0.23** | **0** |

## 10.3 ເປົ້າໝາຍທີ 3: ເຊື່ອມໂຍງການທ່ອງທ່ຽວກັບບັນດາເມືອງທີ່ໃກ້ຄຽງ ແລະ ພາກພື້ນ

- ❖ ແຜນງານຈຸດສຸມທີ 1: ພັດທະນາການທ່ອງທ່ຽວຂອງເມືອງເຟືອງໃຫ້ສາມາດເຊື່ອມໂຍງກັບບັນດາຕົວເມືອງທ່ອງທ່ຽວ ໂດຍສຸມໃສ່ນັກທ່ອງທ່ຽວທີ່ມາຈາກນະຄອນຫຼວງວຽງຈັນ, ວັງວຽງ, ໄຊ ຍະບູລີ, ຫຼວງພະບາງ ແລະ ປະເທດໄທ (ຈັງຫວັດເລີຍ)

| ລ/ດ | ຊື່ໂຄງການ | ມູນຄ່າລວມ (1000 ລ້ານ) | ແຫຼ່ງທຶນ | | ໄລຍະຈັດຕັ້ງ ປະຕິບັດ | |
|---|---|---|---|---|---|---|
| | | | ລັດ | ທຸລະກິດ | 2023 ຫາ 2028 | 2029 ຫາ 2033 |
| 1 | ຊຸກຍູ້ການລົງທຶນທຸລະກິດຕົວແທນບໍລິສັດທ່ອງທ່ຽວ, ລາຍການທ່ອງທ່ຽວ, ທຸລະກິດນຳທ່ຽວ ແລະ ທຸລະກິດຂົນສົ່ງນັກທ່ອງທ່ຽວພາຍໃນເມືອງເຟືອງ | 0.05 | 0.05 | 0 | 0.05 | 0 |
| 2 | ລະດົມການລົງທຶນທຸລະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະແມ່ນການລົງທຶນສ້າງສູນຈຳໜ່າຍຜະລິດຕະພັນທ້ອງຖິ່ນ, ຮ້ານຂາຍເຄື່ອງທີ່ລະນຶກ, ອາຫານທ້ອງຖິ່ນ ແລະ ອື່ນໆ ພາຍໃນຕົວເມືອງ ແລະ ຕາມແຫຼ່ງທ່ອງທ່ຽວເມືອງເຟືອງ | 0.05 | 0.05 | 0 | 0.05 | 0 |
| 3 | ປັບປຸງເສັ້ນທາງເຊື່ອມຕໍ່ຈາກເມືອງເຟືອງ ໄປຫາບັນດາເມືອງໃກ້ຄຽງໃຫ້ສາມາດເດີນທາງໄປມາໄດ້ສະດວກທຸກລະດູການ ໂດຍເລັ່ງໃສ່ປັບປຸງເສັ້ນທາງເຊື່ອມຕໍ່ຫາເມືອງວັງວຽງ | 50 | 50 | 0 | 25 | 25 |

| | | | | | | |
|---|---|---|---|---|---|---|
| 4 | ພັດທະນາລະບົບຂົນສົ່ງໂດຍສານສາທາລະນະເຊື່ອມຕໍ່ນະຄອນຫຼວງວຽງຈັນ, ເມືອງວັງວຽງ ແລະ ເມືອງຊະນະຄາມ | 20 | 0 | 20 | 10 | 10 |
| 5 | ສ້າງລາຍການທ່ອງທ່ຽວເຊື່ອມຈາກເມືອງຕໍ່ເມືອງເຊັ່ນ: ເສັ້ນທາງທ່ອງທ່ຽວແບບພະຈົນໄພ (OffRoad) ເມືອງເຟືອງ-ວັງວຽງ, ວົງຈອນເມືອງເຟືອງ-ເມືອງແມດ-ກາສີ-ວັງວຽງ ແລະ ກັບມາເມືອງເຟືອງ, ວົງຈອນ ເມືອງເຟືອງ-ເມືອງໝື່ນ-ຊະນະຄາມ-ເມືອງແມດ-ກາສີ-ວັງວຽງ ແລະ ກັບມາເມືອງເຟືອງ, ເມືອງ ເຟືອງ-ເມືອງສັງທອງ-ເມືອງຫີນເຫີບ ແລະ ກັບມາເມືອງເຟືອງ | 0.1 | 0 | 0.1 | 0.1 | 0 |
| | **ລວມ** | **70.2** | **50.1** | **20.1** | **35.2** | **35** |

❖ ແຜນງານຈຸດສຸມທີ 2: ຊຸກຍູ້ສົ່ງເສີມ ແລະ ພັດທະນາການບໍລິການການທ່ອງທ່ຽວໃຫ້ຕິດພັນກັບເຄືອຂ່າຍການທ່ອງທ່ຽວກັບພາຍໃນ ແລະ ພາກພື້ນ.

| ລ/ດ | ຊື່ໂຄງການ | ມູນຄ່າລວມ (1000 ລ້ານ) | ແຫຼ່ງທຶນ | | ໄລຍະຈັດຕັ້ງ ປະຕິບັດ | |
|---|---|---|---|---|---|---|
| | | | ລັດ | ທຸລະກິດ | 2023 ຫາ 2028 | 2029 ຫາ 2033 |
| 1 | ເຂົ້າຮ່ວມການໂຄສະນາຂອງເຄືອຂ່າຍ ສີ່ຫຼ່ຽມວັດທະນະທຳລ້ານຊ້າງ (ລາວ-ໄທ) | 0.2 | 0.2 | 0 | 0.1 | 0.1 |
| 2 | ຝຶກອົບຮົມການຍົກລະດັບຄວາມຮູ້ດ້ານວຽກງານການພັດທະນາ ການທ່ອງທ່ຽວ, ວຽກງານໂຄສະນາການທ່ອງທ່ຽວ ແລະ ວຽກຄຸ້ມຄອງການທ່ອງທ່ຽວໃຫ້ພະນັກງານນຳພາ-ຄຸ້ມຄອງຢູ່ຂັ້ນເມືອງ | 0.08 | 0.08 | 0 | 0.04 | 0.04 |
| 3 | ຝຶກອົບຮົມວຽກງານມາດຕະຖານການທ່ອງທ່ຽວ ສປປ ລາວ ແລະ ມາດຕະຖານອາຊຽນໃຫ້ແກ່ພາກລັດ, ພາກເອກະຊົນ ແລະ ປະຊາຊົນ ທ້ອງຖິ່ນ | 0.15 | 0.15 | 0 | 0.1 | 0.05 |

| | | | | | | |
|---|---|---|---|---|---|---|
| 4 | ສ້າງຄູຝຶກດ້ານການບໍລິການທ່ອງທ່ຽວໃຫ້ແກ່ພະນັກງານຂັ້ນເມືອງ ແລະ ຂັ້ນບ້ານ | 0.1 | 0.1 | 0 | 0.05 | 0.05 |
| 5 | ຕິດຕາມ ແລະ ຊຸກຍູ້ການຈັດລະດັບລະດັບມາດຕະຖານ ເຮືອນພັກແຮມ, ຮ້ານອາຫານ ແລະ ສະຖານທີ່ທ່ອງທ່ຽວ | 0.1 | 0.1 | 0 | 0.05 | 0.05 |
| 6 | ລົງຕິດຕາມ, ກວດກາການເຄື່ອນໄຫວຂອງທຸລະກິດການທ່ອງທ່ຽວໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະຫງົບ, ປອດໄພ, ໄດ້ມາດຕະຖານ ແລະ ຖືກຕ້ອງຕາມລະບຽບ | 0.15 | 0.15 | 0 | 0.08 | 0.07 |
| 7 | ລົງສຳຫຼວດເກັບກຳຂໍ້ມູນເພື່ອກຳນົດປະເພດການບໍລິການໃນການຄວບຄຸມລາຄາຄ່າບໍລິການໃນຂະແໜງການທ່ອງທ່ຽວ ເພື່ອກະຕຸ້ນໃຫ້ນັກທ່ອງທ່ຽວເຂົ້າມາທ່ຽວຫຼາຍ | 0.08 | 0.08 | 0 | 0.04 | 0.04 |
| | **ລວມ** | **0.86** | **0.86** | **0** | **0.46** | **0.40** |

### 10.4 ຕາຕະລາງສະຫຼຸບລວມແຜນງານບູລິມະສິດ

| | ເປົ້າໝາຍ ແລະ ແຜນງານຈຸດສຸມ | ໂຄງການ | ມູນຄ່າລົງທຶນທັງໝົດ | ພາກສ່ວນລັດລົງທຶນ | ພາກສ່ວນທຸລະກິດລົງທຶນ |
|---|---|---|---|---|---|
| 1 | ເປົ້າໝາຍທີ 1: ເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່ໂດດເດັ່ນ ແລະ ມີຄຸນນະພາບ | 71 | 939.05 | 290 | 649.05 |
| 1.1 | ແຜນງານຈຸດສຸມທີ 1: ພັດທະນາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວໃຫ້ມີຄຸນນະພາບ | 13 | 458.25 | 270.95 | 187.3 |
| 1.2 | ແຜນງານຈຸດສຸມທີ 2: ພັດທະນາຜະລິດຕະພັນ ແລະ ກິດຈະ ກຳການທ່ອງທ່ຽວໃຫ້ມີຄວາມເປັນເອກະລັກສະເພາະ, ມີຄວາມຫຼາກຫຼາຍ, ດຶງດູດນັກທ່ອງທ່ຽວໃຫ້ຢູ່ຫຼາຍວັນ ແລະ ໃຊ້ຈ່າຍຫຼາຍ | 24 | 475.60 | 15.5 | 460.1 |

| | | | | | |
|---|---|---|---|---|---|
| 1.3 | ແຜນງານຈຸດສຸມທີ 3: ໂຄສະນາຜ່ານ ຫຼາຍຊ່ອງທາງໃຫ້ເຂົ້າ ເຖິງກຸ່ມເປົ້າໝາຍຕະຫຼາດ | 15 | 2.55 | 1.05 | 1.5 |
| 1.4 | ແຜນງານຈຸດສຸມທີ 4: ປັບປຸງການບໍລິການໃຫ້ມີຄວາມສະອາດ, ປອດໄພ ແລະ ສ້າງຄວາມປະທັບໃຈໃຫ້ແກ່ນັກທ່ອງທ່ຽວ | 19 | 2.65 | 2.5 | 0.15 |
| 2 | ເປົ້າໝາຍທີ 2: ຊຸກຍູ້ການພັດທະນາຕາມທິດສີຂຽວ ແລະ ຍືນຍົງ | 33 | 6.73 | 4.98 | 1.75 |
| 2.1 | ແຜນງານຈຸດສຸມທີ 1: ສົ່ງເສີມການລົງທຶນທີ່ເປັນມິດກັບສິ່ງແວດລ້ອມ ແລະ ການບໍລິຫານຄຸ້ມຄອງໃຫ້ມີປະສິດທິພາບ ເຊັ່ນ: ສ້າງລະບຽບການ, ນິຕິກຳຄຸ້ມຄອງການທ່ອງທ່ຽວຢູ່ແຕ່ລະເຂດ, ລະບຽບການປຸກສ້າງຢູ່ໜ້ານໍ້າ, ເຂດຫ່າງຈາກໜ້ານໍ້າ | 12 | 3.10 | 3.05 | 0.05 |
| 2.2 | ແຜນງານຈຸດສຸມທີ 2: ສົ່ງເສີມການຜະລິດ ແລະ ບໍລິໂພກອາຫານ ສະອາດ ແລະ ປອດໄພ | 3 | 0.45 | 0.35 | 0.1 |
| 2.3 | ແຜນງານຈຸດສຸມທີ 3: ສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນໃນການປົກປັກຮັກສາຊັບພະຍາກອນການທ່ອງທ່ຽວ, ສິ່ງແວດລ້ອມ ແລະ ຄວາມເປັນເອກະລັກສະເພາະທາງດ້ານວັດທະນະທຳຂອງທ້ອງຖິ່ນ | 7 | 2.40 | 0.8 | 1.6 |
| 2.4 | ແຜນງານຈຸດສຸມທີ 4: ພັດທະນາການທ່ອງທ່ຽວໃຫ້ເປັນໜຶ່ງໃນທ່າແຮງບູລິມະສິດ ແລະ ເປັນແຫຼ່ງລາຍຮັບທີ່ສຳຄັນຂອງເມືອງ | 4 | 0.55 | 0.55 | 0 |
| 2.5 | ແຜນງານຈຸດສຸມທີ 5: ສ້າງນະໂຍບາຍທີ່ເອື້ອອຳນວຍໃຫ້ແກ່ການລົງທຶນໃນຂະແໜງການທ່ອງທ່ຽວ (ໃຫ້ລະບຸກ່ຽວກັບນະໂຍບາຍການສ້າງໂຮງແຮມ, ຫ້ອງປະຊຸມ,ລີສອດ) | 7 | 0.23 | 0.23 | 0 |
| 3 | ເປົ້າໝາຍທີ 3: ເຊື່ອມໂຍງການ ທ່ອງທ່ຽວກັບບັນດາເມືອງທີ່ໃກ້ຄຽງ ແລະ ພາກພື້ນ | 12 | 71.06 | 50.96 | 20.10 |
| 3.1 | ແຜນງານຈຸດສຸມທີ 1: ພັດທະນາການທ່ອງທ່ຽວຂອງເມືອງເຟືອງ ໃຫ້ສາມາດເຊື່ອມໂຍງກັບບັນດາຕົວເມືອງທ່ອງທ່ຽວ ໂດຍສຸມໃສ່ນັກທ່ອງທ່ຽວທີ່ມາຈາກນະຄອນຫຼວງວຽງຈັນ, ວັງວຽງ, ໄຊຍະບູລີ, ຫຼວງພະບາງ ແລະ ປະເທດໄທ (ຈັງຫວັດເລີຍ) | 5 | 70.20 | 50.1 | 20.1 |

| | | | | | |
|---|---|---|---|---|---|
| 3.2 | ແຜນງານຈຸດສຸມທີ 2: ຊຸກຍູ້ສົ່ງເສີມ ແລະ ພັດທະນາການບໍລິການການທ່ອງທ່ຽວໃຫ້ຕິດພັນກັບເຄືອຂ່າຍການທ່ອງທ່ຽວກັບພາຍໃນ ແລະ ພາກພື້ນ. | 7 | 0.86 | 0.86 | 0 |
| | **ລວມ** | **116** | **1016.84** | **345.94** | **670.9** |

ຫົວໜ່ວຍ: ພັນລ້ານກີບ

# ພາກທີ IV
# ຂໍ້ແນະນຳການປ້ອງກັນ ແລະ ການແກ້ໄຂຜົນກະທົບ

ໃນພາກນີ້ໄດ້ຮວບຮວມເອົາບາງຂໍ້ແນະນຳກ່ຽວກັບແຜນການປ້ອງກັນ ແລະ ແກ້ໄຂຜົນກະທົບທີ່ອາດຈະເກີດ ອັນເນື່ອງມາຈາກການຂະຫຍາຍຕົວຂອງການທ່ອງທ່ຽວ ທັງນີ້ແມ່ນເພື່ອຮັບປະກັນໃຫ້ການພັດທະນາທີ່ມີປະສິດທິພາບ ແລະ ມີຄວາມຍືນຍົງໃນອະນາຄົດຍາວນານ.

## 1. ຂໍ້ແນະນຳການອອກແບບ ແລະ ການຄຸ້ມຄອງສິ່ງປຸກສ້າງ

ສິ່ງປຸກສ້າງແມ່ນສະພາບແວດລ້ອມທີ່ມະນຸດສ້າງໃໝ່ ຊຶ່ງມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງໄດ້ຮັບການອອກແບບ ແລະ ຄຸ້ມຄອງໃຫ້ເປັນລະບົບລະບຽບ, ມີຄວາມເໝາະສົມ-ກົມກືນກັບສະພາບແວດລ້ອມທາງທຳມະຊາດທີ່ມີຢູ່ເດີມ, ມີຄວາມສວຍງາມເປັນເອກະລັກ ແລະ ໝັ້ນຄົງປອດໄພ; ສິ່ງປຸກສ້າງທຸກປະເພດບໍ່ວ່ານ້ອຍຫຼືໃຫຍ່ຄວນຜ່ານຂະບວນການອອກແບບ, ຮັບຮອງ ແລະ ຕິດຕາມກວດກາຕາມລະບຽບ-ຫຼັກການຜັງເມືອງຢ່າງຖືກຕ້ອງ; ຂໍ້ແນະນຳໃນການອອກແບບ ແລະ ຄຸ້ມຄອງສິ່ງປຸກສ້າງນີ້ ແບ່ງອອກເປັນ 5 ເຂດຕາມຈຸດພິເສດທີ່ແຕກຕ່າງກັນ ໂດຍມີລາຍລະອຽດດັ່ງນີ້:

- **ເຂດເທດສະບານເມືອງ**

- ຕ້ອງສ້າງແຜນຜັງອອກແບບລະອຽດໃນພື້ນທີ່ຕົວເມືອງ, ກຳນົດເຂດສະຫງວນທາງ, ອອກແບບພື້ນທີ່ແຄມນ້ຳ, ເສັ້ນທາງ ແລະ ພື້ນທີ່ສາທາລະນະ.
- ຄວບຄຸມສິ່ງປຸກສ້າງບໍ່ໃຫ້ກາຍ 23 ແມັດ ທຽບຈາກໜ້າທາງປົກກະຕິຫາເພດານຊັ້ນສຸດທ້າຍ, ອັດຕາສ່ວນການນຳໃຊ້ທີ່ດິນ ບໍ່ເກີນ 70%, ສຳປະສິດ ບໍ່ເກີນ 2 ເທົ່າ ໂດຍໃຫ້ເປັນໄປຕາມລະບຽບຜັງເມືອງສະບັບປີ 2011 ຫຼື ສະບັບປັບປຸງໃນອະນາຄົດ.
- ການປຸກສ້າງລຽບຕາມຖະໜົນການຄ້າ ຫຼື ຖະໜົນຄົນຍ່າງໃນເຂດໃຈກາງຕົວເມືອງ ຄວນຊຸກຍູ້ໃຫ້ກໍ່ສ້າງເປັນອາຄານຕໍ່ເນື່ອງ, ຈຳກັດການປ່ອຍດິນຫວ່າງ ແລະ ນຳໃຊ້ຜິດເປົ້າໝາຍ.




ຮູບທີ 68: ການກໍ່ສ້າງໃນເທດສະບານເມືອງ

- **ເຂດແຄມນ້ຳ ແລະ ໜ້ານ້ຳ**
  - ຫ້າມບໍ່ໃຫ້ປຸກອາຄານຖາວອນໃນເຂດນ້ຳ ແລະ ພື້ນທີ່ແຄມນ້ຳໃນໄລຍະ 15 ແມັດ.
  - ຮູບຊົງອາຄານຕ້ອງກົມກືນກັບທຳມະຊາດ, ບໍ່ກີດຂວາງທາງນ້ຳ ແລະ ການສັນຈອນທາງນ້ຳ, ການປຸກສ້າງເຮືອນແພເທິງໜ້ານ້ຳ ບໍ່ຄວນເກີນ 8 ແມັດ ນັບຈາກຕາຝັ່ງອອກໄປ.
  - ອາຄານແຄມນ້ຳກຳນົດຄວາມສູງບໍ່ເກີນ 9 ແມັດ ທຽບຈາກລະດັບດິນປົກກະຕິຫາເພດານຊັ້ນສຸດທ້າຍ
  - ຮູບຊົງອາຄານຄວນກົມກືນກັບທຳມະຊາດ ແລະ ສະພາບແວດລ້ອມຊຸມຊົນ, ໂດຍສົ່ງເສີມໃຫ້ນຳໃຊ້ວັດສະດຸທຳມະຊາດ ຫຼື ຮຽນແບບທຳມະຊາດເປັນຫຼັກ, ຫຼີກລ້ຽງການນຳໃຊ້ວັດສະດຸທີ່ສົ່ງຜົນກະທົບຕໍ່ທຳມະຊາດ ແລະ ສະພາບແວດລ້ອມ ເຊັ່ນ ຄອນກິດ ຫຼື ວັດສະດຸເສດເຫຼືອຈາກອຸດສາຫະກຳຕ່າງໆ.
  - ຮູບຊົງອາຄານຕ້ອງກົມກືນກັບທຳມະຊາດ, ບໍ່ກີດຂວາງທາງນ້ຳ ແລະ ການສັນຈອນທາງນ້ຳ.
  - ອາຄານແຄມນ້ຳກຳນົດຄວາມສູງບໍ່ເກີນ 2 ຊັ້ນ.




ຮູບທີ 69: ການກໍ່ສ້າງແຄມນ້າ ແລະ ໜ້ານ້າ

- **ເຂດໂນນສູງ**

- ການຕັດດິນ-ຖົມດິນຕ້ອງຖືກຕ້ອງຕາມມາດຕະຖານເຕັກນິກ ເພື່ອຫຼຸດຜ່ອນຄວາມສ່ຽງດິນເຈື່ອນ-ດິນຖະຫຼົ່ມ.
- ຂະໜາດອາຄານບໍ່ໃຫ້ສູງເກີນ **1** ຊັ້ນ ຫຼື ບໍ່ກາຍລະດັບຕົ້ນໄມ້ ເພື່ອຫຼຸດຜ່ອນຜົນກະທົບທາງພູມິທັດ.
- ວັດສະດຸທີ່ໃຊ້ເຂົ້າໃນການປຸກສ້າງຕ້ອງກົມກືນກັບທຳມະຊາດ, ບໍ່ຄວນມີສີສັນຫຼາຍ ແລະ ບໍ່ສະທ້ອນແສງຫຼາຍເກີນໄປ.




ຮູບທີ 70: ການກໍ່ສ້າງເທິງໂນນພູ

- **ເຂດປ່າໄມ້ ແລະ ທຳມະຊາດທີ່ອຸດົມສົມບູນ**

- ຫຼີກລ້ຽງສິ່ງປຸກສ້າງທີ່ມີໂຄງສ້າງໝັ້ນຄົງຖາວອນ ໂດຍສະເພາະປະເພດເບຕົງເສີມເຫຼັກ, ໃນກໍລະນີຈຳເປັນຈະຕ້ອງໄດ້ຮັບການສຶກສາຜົນກະທົບທາງດ້ານສິ່ງແວດລ້ອມລະອຽດຕາມຂັ້ນຕອນຂອງກົດໝາຍ.
- ຫ້າມບໍ່ໃຫ້ມີການກໍ່ສ້າງໃດທີ່ເປັນການລົບກວນ ຫຼື ສິ່ງຜົນກະທົບຕໍ່ການຄົງຢູ່ຂອງສັດ, ພືດ, ຕົ້ນໄມ້, ລະບົບນິເວດ ແລະ ຄຸນຄ່າທາງທຳລະນີ.
- ກຳນົດເຂດສະຫງວນຕີນຜາ ເພື່ອເປັນເຂດປ້ອງກັນ ໂດຍແທກຈາກຕີນຜາທີ່ມີຄວາມຊັນ 10% ອອກມາ 50 ແມັດ.




ຮູບທີ 71: ເຂດສະຫງວນຕີນຜາ

- **ເຂດວັດທະນະທຳ ແລະ ຊຸມຊົນ**

- ວັດ ແລະ ຊຸມຊົນຄວນໄດ້ຮັບການອອກແບບ-ວາງແຜນຜັງພັດທະນາທີ່ຊັດເຈນ ເພື່ອຫຼີກລ້ຽງບັນຫາຄວາມບໍ່ເປັນລະບຽບ, ແອອັດ ແລະ ທຳລາຍທຳມະຊາດ ພ້ອມກັນນັ້ນ ຍັງຊ່ວຍສົ່ງເສີມຄວາມສວຍງາມ ແລະ ຄວາມປອດໄພອີກດ້ວຍ.

- ສິ່ງປຸກສ້າງພາຍໃນວັດສຳຄັນ ແລະ ຊຸມຊົນວັດທະນະທຳ ຄວນໄດ້ຮັບການອອກແບບໃຫ້ມີເອກະລັກທ້ອງຖິ່ນ, ນຳໃຊ້ວັດສະດຸ ແລະ ສີທີ່ເປັນມິດກັບທຳມະຊາດ.

## 2. ຂໍ້ແນະນຳການມີສ່ວນຮ່ວມຂອງຊຸມຊົນ ແລະ ແກ້ໄຂຜົນກະທົບທາງດ້ານວັດທະນະທຳ-ສັງ ຄົມ

### 2.1 ການມີສ່ວນຮ່ວມຂອງຊຸມຊົນ

1) ການມີສ່ວນຮ່ວມໃນໂຄງການພັດທະນາ

ເປີດໂອກາດໃຫ້ອົງການປົກຄອງບ້ານ ແລະ ປະຊາຊົນມີສ່ວນຮ່ວມໃນໂຄງການພັດທະນາຕ່າງໆໃຫ້ຫຼາຍທີ່ສຸດ ເປັນຕົ້ນແມ່ນ:

- ອົງການປົກຄອງບ້ານ ແລະ ປະຊາຊົນຮ່ວມກັນພັດທະນາ ແລະ ບໍລິຫານແຫຼ່ງທ່ອງທ່ຽວເອງ ໃນກໍລະນີທີ່ບໍ່ໄດ້ມີການລົງທຶນຫຼາຍ.

- ກໍລະນີມີເອກະຊົນເຊົ່າ ຫຼື ສຳປະທານທີ່ດິນໃນຂອບເຂດບ້ານໃດໜຶ່ງ, ບ້ານດັ່ງກ່າວຄວນໄດ້ຮັບເງິນອຸດໜູນໃນອັດຕາທີ່ເໝາະສົມ.

- ໂຄງການພັດທະນາຕ່າງໆຄວນພິຈາລະນາຮັບເອົາແຮງງານທ້ອງຖິ່ນເປັນບູລິມະສິດທຳອິດ.

2) ການມີສ່ວນຮ່ວມໃນການຄຸ້ມຄອງ

- ອົງການປົກຄອງບ້ານ ແລະ ປະຊາຊົນຄວນເປັນເຈົ້າການຮ່ວມກັນໃນການສອດສ່ອງ-ຕິດຕາມ-ກວດກາການພັດທະນາແຫຼ່ງທ່ອງທ່ຽວ ແລະ ການກໍ່ສ້າງໃຫ້ເປັນໄປຕາມຂໍ້ກຳນົດ-ກົດລະບຽບເພື່ອຮັບປະກັນຄວາມຖືກຕ້ອງ, ເໝາະສົມ ແລະ ຍືນຍົງ.

- ອົງການປົກຄອງບ້ານ ແລະ ປະຊາຊົນຄວນເປັນເຈົ້າການຮ່ວມກັນໃນການປົກປັກຮັກສາຊັບພະຍາກອນການທ່ອງທ່ຽວ ແລະ ໂຄງລ່າງພື້ນຖານສຳລັບການທ່ອງທ່ຽວ.

3) ການມີສ່ວນຮ່ວມໃນການບໍລິການ

- ແຫຼ່ງທ່ອງທ່ຽວຕ່າງໆຄວນຈັດສັນພື້ນທີ່ສ່ວນໃດໜຶ່ງໃຫ້ປະຊາຊົນຂາຍເຄື່ອງ ທີ່ເປັນຜົນຜະລິດກະສິກຳ, ຫັດຖະກຳ ແລະ ເຄື່ອງປ່າຂອງດົງ ໂດຍຍົກເວັ້ນ ຫຼື ຫຼຸດຜ່ອນການເກັບຄ່າເຊົ່າພື້ນທີ່ໃຫ້ນ້ອຍທີ່ສຸດ.

- ກິດຈະການຂະໜາດນ້ອຍທີ່ບໍ່ນຳໃຊ້ຕົ້ນທຶນຫຼາຍ ແລະ/ຫຼື ບໍ່ນຳໃຊ້ເຕັກໂນໂລຊີຂັ້ນສູງຄວນຊຸກຍູ້ສົ່ງເສີມໃຫ້ຄົນໃນທ້ອງຖິ່ນເປັນຜູ້ປະກອບການ ເຊັ່ນ: ການບໍລິການກົງເບັງ, ເຮືອກາຍັກ, ເຮືອນຳທ່ຽວ, ເຮືອແພລ່ອງແກ່ງ, ເຮືອລົມລ່ອງແກ່ງ, ເຮືອແພຫາປາ, ການປີນຜາ, ການຂັບລົດຂົນສົ່ງນັກທ່ອງທ່ຽວ, ການຂາຍອາຫານ, ການຂາຍເຄື່ອງຕ້ອນເຄື່ອງຝາກ ແລະ ອື່ນໆ.

### 2.2 ການປ້ອງກັນ ແລະ ແກ້ໄຂຜົນກະທົບທາງດ້ານວັດທະນະທຳ-ສັງຄົມ

1) ການແຕ່ງກາຍ

- ສຸພາບສະຕີຄວນແຕ່ງກາຍໃຫ້ຖືກຕ້ອງຕາມຮີດຄອງປະເພນີລາວໃນເວລາເຂົ້າວັດ ໂດຍໃຫ້ນຸ່ງສິ້ນຍາວປົກຫົວເຂົ່າ, ຫ້າມແຕ່ງກາຍໂປ້ ຫຼື ນຸ່ງສັ້ນຮັ່ມສັ້ນທີ່ບໍ່ເໝາະສົມ.

- ຫ້າມບໍ່ໃຫ້ນັກທ່ອງທ່ຽວແຕ່ງກາຍໂປ້ໃນພື້ນທີ່ສາທາລະນະ ຍົກເວັ້ນເຂດທີ່ໄດ້ຈັດສັນໄວ້ສຳລັບຫຼິ້ນນໍ້າ

2) ການປ້ອງກັນສຽງດັງ

- ແຫຼ່ງທ່ອງທ່ຽວຕ່າງໆຄວນກຳນົດຄ່າລະດັບສຽງດັງສູງສຸດເພື່ອຄວບຄຸມສຽງລົບກວນ ໂດຍຕິດຕັ້ງປ້າຍແຈ້ງເຕືອນ ແລະ ຂຽນໄວ້ໃນລະບຽບຂອງແຫຼ່ງທ່ອງທ່ຽວ.

- ຮ້ານບັນເທີງ (ແບບເປີດ) ຄວນປຸກສ້າງຫ່າງຈາກວັດ ໃນລັດສະໝີຫຼາຍກວ່າ 500 ແມັດໄປ ຫ່າງຈາກຊຸມຊົນໃນລັດສະໝີຫຼາຍກວ່າ 200 ແມັດໄປ. ຍົກເວັ້ນກໍລະນີທີ່ມີການຈັດສັນສະເພາະ.

3) ການແກ້ໄຂຜົນກະທົບທີ່ດິນ ແລະ ສິ່ງປຸກສ້າງ

- ທຸກການກໍ່ສ້າງ ແລະ ການສຳປະທານຂອງລັດ ຫຼື ເອກະຊົນຈະຕ້ອງໄດ້ປະຕິບັດການຊົດເຊີຍຜົນກະທົບຕາມລະບຽບການ ແລະ ກົດໝາຍຂອງລັດ; ກໍລະນີມີການຈັດສັນຍົກຍ້າຍພະຍາຍາມບໍ່ໃຫ້ໄກຈາກຈຸດເດີມຫຼາຍເກີນໄປ ເພື່ອຮັບປະກັນໃຫ້ຜູ້ທີ່ໄດ້ຮັບຜົນກະທົບສາມາດດຳລົງຊີວິດໄດ້ປົກກະຕິຫຼາຍທີ່ສຸດ.

## 3. ຂໍ້ແນະນຳການປ້ອງກັນ ແລະ ແກ້ໄຂຜົນກະທົບທາງດ້ານທຳມະຊາດ ແລະ ສິ່ງແວດລ້ອມ

1) ການກຳນົດເຂດອຸດສາຫະກຳ ແລະ ເຂດຂຸດຄົ້ນຫີນຜາ

- ສະເໜີໃຫ້ການຈັດຕັ້ງເມືອງ ແລະ ແຂວງຄົ້ນຄວ້າຄືນກ່ຽວກັບແຜນການລົງທຶນເຂົ້າໃນອຸດສາຫະກຳທີ່ມີຄວາມສ່ຽງສູງທີ່ຈະສົ່ງຜົນກະທົບຕໍ່ສະພາບແວດລ້ອມ ແລະ ການທ່ອງທ່ຽວ ໂດຍສະເພາະແຜນການກໍ່ສ້າງໂຮງງານຊີມັງ ແລະ ແຜນການຂຸດຄົ້ນແຮ່ຕ່າງໆ, ຖ້າໂຄງການໃດທີ່ມີສັນຍາບໍ່ສາມາດຍົກເລີກໄດ້ ກໍຄວນໃຫ້ມີການທົບທວນຄືນຢ່າງຈິງຈັງກ່ຽວກັບແຜນການລົງທຶນ ແລະ ມາດຕະການແກ້ໄຂຜົນກະທົບຕ່າງໆ ໂດຍໃຫ້ມີການລະດົມຄວາມເຫັນແບບເປີດກວ້າງ.

- ພື້ນທີ່ຜາທຸກແຫ່ງຄວນໄດ້ຮັບການປົກປ້ອງ-ຄຸ້ມຄອງບໍ່ໃຫ້ມີການຂຸດຄົ້ນ, ແຕ່ຖ້າຫາກມີຄວາມຈຳເປັນເພື່ອສະໜອງວັດສະດຸໃຫ້ແກ່ການກໍ່ສ້າງພັດທະນາ ແມ່ນອະນຸຍາດໃຫ້ຂຸດຄົ້ນສະເພາະຜາທີ່ບໍ່ມີຄວາມສ່ຽງຕໍ່ການເຊາະເຈື່ອນຢ່າງຮຸນແຮງ ຫຼື ເປັນຜາບໍ່ທີ່ມີແຫຼ່ງທ່ອງທ່ຽວ ແລະ ບໍ່ສົ່ງຜົນກະທົບຕໍ່ພູມີທັດອັນສວຍງາມ, ອີງຕາມການສຳຫຼວດເຫັນວ່າ ພື້ນທີ່ທີ່ມີຜົນກະທົບໜ້ອຍກວ່າໝູ່ແມ່ນຜາຫອຍເບື້ອງຕາເວັນຕົກ ຊຶ່ງສາມາດອະນຸຍາດໃຫ້ມີການຂຸດຄົ້ນຫີນຜາໄດ້ ແຕ່ຕ້ອງສ້າງແຜນການຂຸດຄົ້ນທີ່ຊັດເຈນ ແລະ ມີມາດຕະການປ້ອງກັນຜົນກະທົບທີ່ເໝາະສົມ.

2) ການປ່ອຍ ແລະ ບຳບັດນໍ້າເປື້ອນ

- ພາຍໃນຕົວເມືອງຕ້ອງໄດ້ປັບປຸງລະບົບລະບາຍນໍ້າທັງໝົດ ເພື່ອໃຫ້ສາມາດທ້ອນໂຮມນໍ້າເປື້ອນລົງສູ່ອ່າງບຳບັດລວມ, ພ້ອມກັນນີ້ ອ່າງບຳບັດນໍ້າເປື້ອນລວມຂອງຕົວເມືອງກຕ້ອງໄດ້ຮັບການພັດທະນາໃໝ່ໃຫ້ໄດ້ມາດຕະຖານ ແລະ ສາມາດຮອງຮັບປະລິມານໍ້າເປື້ອນຂອງຕົວເມືອງທັງໝົດ.

- ບັນດາໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ແຫຼ່ງທ່ອງທ່ຽວທີ່ບໍ່ຢູ່ໃນເຂດຕົວເມືອງ ຄວນມີລະບົບບຳບັດນ້ຳຂອງຕົວເມືອງ, ຖ້າເປັນກິດຈະກຳທີ່ມີນ້ຳເປື້ອນເກີນ 100 ແມັດກ້ອນຕໍ່ມື້ຂຶ້ນໄປ ຄວນສ້າງບ່ອນບຳບັດແບບເຕີມອົກຊີປະສົມກັບພືດ ຫຼື ແບບຖັງບຳບັດທາງເຄມີ ແຕ່ຖ້າຫາກຕ່ຳກວ່ານັ້ນສາມາດສ້າງລະບົບຊຶມກໍໄດ້, ນ້ຳເປື້ອນທີ່ຈະປ່ອຍລົງແມ່ນ້ຳທຳມະຊາດ **ຈະຕ້ອງມີຄ່າມາດຕະຖານຄວາມສະອາດຕາມລະບຽບກົດໝາຍ ສປປ ລາວ ເທົ່ານັ້ນ.**

- ຫ້ອງນ້ຳເຮືອນແພ ສາມາດສ້າງໄດ້ແຕ່ຕ້ອງຜ່ານການອອກແບບຈາກຜູ້ຊ່ຽວຊານເທົ່ານັ້ນ ໂດຍນຳໃຊ້ລະບົບທີ່ເໝາະສົມ ເຊັ່ນ: ລະບົບຖັງເກັບທີ່ມີລະບົບດູດຂອງເສຍໄປກຳຈັດຢູ່ເທິງບົກ ຫຼື ລະບົບຫ້ອງນ້ຳແບບປັ້ນ (Maceration toilet) ທີ່ສິ່ງຂອງເສຍໄປລົງຖັງເກັບຢູ່ເທິງບົກແບບອັດຕະໂນມັດ, ການກໍ່ສ້າງຕ້ອງຮັບປະກັນບໍ່ໃຫ້ເກີດຮອຍຮົ່ວ ຫຼື ມີຄວາມສ່ຽງຕໍ່ການຮົ່ວຊຶມໃຫ້ນ້ອຍທີ່ສຸດ ໂດຍຕ້ອງມີການຕິດຕາມກວດກາຢ່າງເຂັ້ມງວດໃນລະຫວ່າງການກໍ່ສ້າງ ແລະ ລົງກວດກາເປັນປະຈຳໃນໄລຍະການໃຊ້ງານ; ຢ່າງໃດກໍ່ຕາມ ຄວນມີການສ້າງຄູ່ມືແນະນຳກ່ຽວກັບມາດຕະຖານ ເພື່ອເປັນບ່ອນອີງໃຫ້ແກ່ການອອກແບບ, ການກໍ່ສ້າງ ແລະ ການຕິດຕາມກວດກາ ທີ່ເປັນເອກະພາບກັນ.




ຮູບທີ 72: ຕົວຢ່າງຫ້ອງນ້ຳລະບົບປັ້ນອັດຕະໂນມັດ

- ຫ້ອງນ້ຳເຮືອນຳທ່ຽວ ຕ້ອງນຳໃຊ້ລະບົບຖັງເກັບທີ່ຖືກຕ້ອງຕາມມາດຕະຖານເຕັກນິກ, ພາຍຫຼັງເຕັມຕ້ອງມີລະບົບດູດອອກ.

3) ການກຳຈັດຂີ້ເຫຍື້ອ

- ຂີ້ເຫຍື້ອທຸກປະເພດ, ທຸກແຫຼ່ງທ່ອງທ່ຽວຄວນໄດ້ຮັບການຈັດເກັບ ແລະ ກຳຈັດໃຫ້ຖືກຕ້ອງຕາມເຕັກນິກວິທີທີ່ເໝາະສົມ; ຫ້າມຖິ້ມ, ຈູດ ຫຼື ເຜົາຊະຊາຍ, ສະຖານທີ່ຖິ້ມຂີ້ເຫຍື້ອຄວນກຳນົດເປັນບ່ອນລວມສູນ, ແຕ່ບໍ່ໃຫ້ໃກ້ກັບແມ່ນ້ຳ ຫຼື ແຫຼ່ງທ່ອງທ່ຽວ.

- ຄວນມີມາດຕະການປ້ອງກັນບໍ່ໃຫ້ຂີ້ເຫຍື້ອຈາກເຮືອນແພ ແລະ ເຮືອນຳທ່ຽວຕົກລົງແມ່ນ້ຳ, ຄວບຄູ່ກັບການບັງຄັບໃຫ້ເຮືອນແພທຸກຫຼັງສ້າງຕາໜ່າງດັກຂີ້ເຫຍື້ອ.

- ບ່ອນທ້ອນຂີ້ເຫຍື້ອຄວນຕັ້ງຢູ່ພື້ນທີ່ຫຼົບສາຍຕາ ແລະ ບໍ່ສົ່ງກິ່ນເໝັນ, ບໍ່ມີນ້ຳເປື້ອນໄຫຼສູ່ເຂດທາງສາທາລະນະ.

- ຫ້າມບໍ່ໃຫ້ນຳຂີ້ເຫຍື້ອມາກອງໄວ້ຂ້າງທາງລໍຖ້າລົດມາເກັບເກີນ 1 ຊົ່ວໂມງ ແລະ ຕ້ອງບໍ່ກີດຂວາງທາງສັນຈອນຂອງຄົນ ຫຼື ລົດ.

4) ການປ້ອງກັນຕາຝັ່ງແມ່ນ້ຳ

- ຫ້າມບໍ່ໄດ້ຂຸມ, ຖົມ ຫຼື ດັດແປງຕາຝັ່ງແມ່ນ້ຳຢ່າງເດັດຂາດ ຖ້າຫາກບໍ່ມີຄວາມຈຳເປັນທາງດ້ານການປ້ອງກັນຕາຝັ່ງເຈື່ອນ, ປ້ອງກັນນ້ຳຖ້ວມ, ການໃຊ້ງານທີ່ເປັນປະໂຫຍດຕໍ່ສາທາລະນະ ແລະ ຕ້ອງໄດ້ຮັບອະນຸມັດຈາກໜ່ວຍງານຮັບຜິດຊອບເທົ່ານັ້ນ.

- ຫ້າມບໍ່ໃຫ້ກໍ່ສ້າງສິ່ງປຸກສ້າງຖາວອນ ແລະ ສິ່ງປຸກສ້າງທີ່ຂວາງທາງນ້ຳ ຫຼື ປ່ຽນແລວທາງນ້ຳ.

- ຫ້າມບໍ່ໃຫ້ມີການດູດຫີນ-ຊາຍຕາມລຳແມ່ນ້ຳ ອັນຈະສົ່ງຜົນກະທົບຕໍ່ກິດຈະກຳການທ່ອງທ່ຽວ ແລະ ການປ່ຽນແປງທຳມະຊາດ ໂດຍສະເພາະຄວາມສ່ຽງຕໍ່ຕາຝັ່ງເຈື່ອນ.

- ການກໍ່ສ້າງຕາຝັ່ງເຈື່ອນ ຫຼື ການດັດແປງຕາຝັ່ງໃນກໍລະນີຈຳເປັນຄວນປະຕິບັດຕາມຄຳແນະນຳລຸ່ມນີ້:

| ຖືກ | ຜິດ |
|---|---|
| <br>ສັ້ງກັນເຈື່ອນຄ່ອຍລາດອຽງ ຫຼື ເປັນແບບຂັ້ນໄດ | <br>[ບໍ່ຄວນສ້າງເປັນກຳແພງສູງຊັນ |
| <br>ອອກແບບໃຫ້ມີສິລະປະ | <br>ບໍ່ຄວນສ້າງແບບແຂງກະດ້າງ |

| | |
|---|---|
|  |  |
| ຮຽນແບບທຳມະຊາດ | ຫຼີກລ້ຽງສ້າງເບຕົງທັງໝົດ |
|  |  |
| ນຳໃຊ້ເປັນພື້ນທີ່ກິດຈະກຳ | ຫຼີກລ້ຽງພື້ນທີ່ອັບ ຫຼື ບໍ່ໄດ້ໄຊ້ງານ |

ຮູບທີ 73: ຮູບຕົວຢ່າງການກໍ່ສ້າງ ຫຼື ດັດແປງຝາຝັ່ງ

5) ຄຸ້ມຄອງພູມີທັດ

- ຫ້າມບໍ່ໃຫ້ມີການປຸກສ້າງກີດຂວາງ ຫຼື ບົດບັງພູມີທັດທຳມະຊາດ.
- ພາຍຫຼັງການດິນຕັດ-ດິນຖົມຕ້ອງມີການປູກຫຍ້າ ຫຼື ພືດຄຸມດິນ ເພື່ອຕົກແຕ່ງພູມີທັດໃຫ້ເປັນທຳມະຊາດຄືເກົ່າ.
- ການຕັດດິນ-ຖົມດິນທຸກຄັ້ງຕ້ອງຂໍອະນຸຍາດຜ່ານໜ່ວຍງານຮັບຜິດຊອບ.
- ການກໍ່ສ້າງຢູ່ພື້ນທີ່ສູງຕ້ອງມີການອອກແບບໃຫ້ເໝາະສົມໂດຍຄຳນຶງເຖິງຄວາມກົມກືນກັບທຳມະຊາດບໍ່ທຳລາຍພູມີທັດ.

6) ການຄຸ້ມຄອງປ້າຍໂຄສະນາ

- ປ້າຍໂຄສະນາກ່ຽວກັບຢາສູບ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ ຄວນພິຈາລະນາຕັ້ງໃນຕຳແໜ່ງທີ່ເໝາະສົມ ບໍ່ຄວນຢູ່ໃນບ່ອນຖ່າຍຮູບ ຫຼື ທິດທາງການຖ່າຍຮູບ.
- ຫ້າມຕິດຕັ້ງປ້າຍໂຄສະນາຂະໜາດໃຫຍ່ຢູ່ຕາມພູ, ໜ້າຜາ ຊຶ່ງເປັນການບົດບັງ ຫຼື ລົບກວນທິວທັດທຳມະຊາດ.
- ປ້າຍໂຄສະນາກ່ຽວກັບຢາສູບ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ ຄວນມີການຄວບຄຸມຈຳນວນໃນປະລິມານທີ່ພໍເໝາະ ບໍ່ໃຫ້ຫຼາຍເກີນໄປ.
- ປ້າຍໂຄສະນາ ຫຼື ປ້າຍອື່ນໆ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍປ້າຍ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

## 4. ຂໍ້ແນະນຳການຄຸ້ມຄອງ ແລະ ຮັກສາຄວາມປອດໄພນັກທ່ອງທ່ຽວ

### 4.1 ການຮັກສາຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ

1) ຕ້ອງມີແຜນຮັກສາຄວາມປອດໄພສຳລັບນັກທ່ອງທ່ຽວ ຊຶ່ງສ້າງຈາກການວິເຄາະຄວາມສ່ຽງຂອງນັກທ່ອງທ່ຽວ, ແຜນດັ່ງກ່າວຈະຕ້ອງກຳນົດບັນດາກິດຈະກຳການທ່ອງທ່ຽວທີ່ມີຄວາມສ່ຽງ ແລະ ກິດຈະກຳປະຈົນໄພພ້ອມກັນກັບກຳນົດລະບຽບໃນການຄຸ້ມຄອງທັງກິດຈະກຳທາງບົກ ແລະ ທາງນ້ຳ. ຕົວຢ່າງກິດຈະກຳເຂົ້າຖ້ຳ, ຍ່າງປ່າ, ປີນພູ, ຂີ່ຖີບລົດ, ພາຍເຮືອກາຢັກ, ຂີ່ສາຍສະລິງ ແລະ ອື່ນໆ. ນອກຈາກນັ້ນ, ຕ້ອງມີຄຳແນະນຳສຳລັບພາກສ່ວນກ່ຽວຂ້ອງ ເພື່ອສື່ສານກັບນັກທ່ອງທ່ຽວໃນກໍລະນີເກີດ: ອຸບັດຕິເຫດ ຫລື ເກີດເຫດການສຸກເສີນຕ່າງໆ. ແຜນຮັກສາຄວາມປອດໄພນີ້, ຈະຕ້ອງຖືກຮ່າງໂດຍການປຶກສາຫາລືລະຫວ່າງພາກລັດ ແລະ ພາກທຸລະກິດ ເພື່ອເຮັດໃຫ້ແຜນມີຄວາມຄົບຖ້ວນ ແລະ ສົມບູນ.

2) ການເຜີຍແຜ່ຂໍ້ມູນກ່ຽວກັບຄວາມປອດໄພ ແລະ ການຮັກສາຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວຂໍ້ມູນຈະຕ້ອງຖືກເຜີຍແຜ່ທັງພາສາລາວ ແລະ ພາສາຕ່າງປະເທດທີ່ແທດເຫມາະກັບນັກທ່ອງທ່ຽວ ໃນຮູບແບບອອນລາຍການຈັດພິມແຜ່ນພັບ, ປ້າຍເຕືອນ, ປ້າຍຫ້າມ, ປ້າຍນຳສະເຫນີຂໍ້ມູນ ແລະ ອື່ນໆ

3) ການເຂົ້າເຖິງແຫຼ່ງທ່ອງທ່ຽວຂອງຜູ້ສູງອາຍຸ ແລະ ຜູ້ເສຍອົງຄະແຫຼ່ງທ່ອງທ່ຽວຈະຕ້ອງມີສິ່ງອຳນວຍຄວາມສະດວກໃນການເຂົ້າເຖິງ ແລະ ມີການບໍລິການພິເສດສຳລັບກຸ່ມຜູ້ສູງອາຍຸ, ເດັກນ້ອຍ ແລະ ຜູ້ເສຍອົງຄະ ເຊັ່ນ: ທາງລາດສຳລັບລໍ້ຍູ້, ຮາວຈັບຂັ້ນໄດ, ຫ້ອງນ້ຳສຳລັບຄົນພິການ, ບ່ອນຈອດລົດພິເສດ ແລະ ອື່ນໆ

4) ຄຸນນະພາບຂອງນ້ຳແມ່ນມີຄວາມຈຳເປັນຕໍ່ການບໍລິການແກ່ນັກທ່ອງທ່ຽວ ເຊັ່ນ: ມີນ້ຳປະປາຊົມໃຊ້ຢ່າງພຽງພໍ ແລະ ມີຄຸນນະພາບ, ກໍລະນີນຳໃຊ້ນ້ຳໂດຍກົງຈາກແມ່ນ້ຳ ຕ້ອງມີລະບົບການກັ່ນຕອງທີ່ຖືກສຸຂະອະນາໄມ ແລະ ແຈ້ງເຕືອນນັກທ່ອງທ່ຽວໃຫ້ຮັບຮູ້ກ່ຽວກັບຄຸນນະພາບຂອງນ້ຳ.

5) ການກວດກາຄວາມສະອາດ ແລະ ຄວາມປອດໄພຂອງຮ້ານອາຫານເປັນປົກກະຕິ.

6) ທຸລະກິດສະຖານທີ່ພັກແຮມ ຕ້ອງມີມາດຕະການຮອງຮັບກັບເຫດສຸກເສີນທີ່ຈະເກີດ, ອັກຄີໄພຕ່າງໆ.

7) ແຜນການຮອງຮັບໄພພິບັດທາງທຳມະຊາດ ເຊັ່ນ: ພະຍາດລະບາດຕ່າງໆ, ນ້ຳຖ້ວມ, ໄຟໄຫມ້ປ່າ, ແຜ່ນດິນໄຫວ ແລະ ອື່ນໆ

8) ການປຶກສາຫາລືລະຫວ່າງພາກລັດ ແລະ ພາກທຸລະກິດເປັນປົກກະຕິກ່ຽວກັບການຮັກສາຄວາມປອດໄພ.

### 4.2 ການປະຊາສຳພັນ ແລະ ການແຈ້ງເຕືອນກ່ຽວກັບວິກິດການ

ການປະຊາສຳພັນ ແລະ ການແຈ້ງເຕືອນກ່ຽວກັບວິກິດການ ແມ່ນບໍ່ພຽງແຕ່ເປັນການປະຊາສຳພັນໄລຍະທີ່ເກີດວິກິດການເທົ່ານັ້ນ, ແຕ່ຍັງລວມເຖິງການ ສະຫນອງຂໍ້ມູນທີ່ຈຳເປັນໃຫ້ແກ່ນັກທ່ອງທ່ຽວ ເພື່ອສາມາດປ້ອງກັນວິ ກິດການທີ່ອາດຈະເກີດ. ໃນກົດຫມາຍທ່ອງທ່ຽວລາວໄດ້ລະບຸວ່າ: ອົງການທີ່ກ່ຽວຂ້ອງຕ້ອງໃຫ້ຂໍ້ມູນ, ຂ່າວສານ, ຊີ້ແຈງກ່ຽວກັບເຫດການສຸກເສີນທີ່ເກີດແລ້ວ ຫລື ອາດຈະເກີດ ຊຶ່ງສ້າງຜົນກະທົບຕໍ່ນັກທ່ອງທ່ຽວ, ພາບພົດການທ່ອງທ່ຽວ ພ້ອມທັງໃຫ້ຄຳແນະນຳກ່ຽວກັບມາດຕະການປ້ອງກັນຄວາມປອດໄພເຊັ່ນ: ກໍລະນີເກີດພະຍຸລົມຝົນ, ດິນເຈື່ອນ, ແຜ່ນດິນໄຫວ, ນ້ຳຖ້ວມ, ໄຟໄຫມ້, ພະຍາດລະບາດ ແລະ ອື່ນ. ການ

ປະຊາສຳພັນ ແລະ ການແຈ້ງເຕືອນທີ່ຖືກຕ້ອງ ແລະ ທັນເວລາ ນອກຈາກຈະເຮັດໃຫ້ນັກທ່ອງທ່ຽວມີຄວາມປອດໄພແລ້ວ, ຍັງເປັນການຮັກສາຊື່ສຽງ ແລະ ຄວາມໜ້າເຊື່ອຖືຂອງຈຸດໝາຍປາຍທາງການທ່ອງທ່ຽວອີກດ້ວຍ.

ຕາຕະລາງ 10: ປະເພດວິກິດການທີ່ສາມາດສົ່ງຜົນກະທົບຕໍ່ຈຸດໝາຍປາຍທາງການທ່ອງທ່ຽວ

| ລ/ດ | ປະເພດ | ວິກິດການ |
|---|---|---|
| 1 | ທຳມະຊາດ | ດິນເຊາະເຈື່ອນ, ແຜ່ນດິນໄຫວ, ນໍ້າຖ້ວມ, ຝົນຕົກໜັກ, ລົມພະຍຸ, ໄຟໄໝ້ປ່າ ແລະ ອື່ນໆ |
| 2 | ສັງຄົມ ແລະ ການເມືອງ | ການກໍ່ອາຊະຍາກຳ, ຈາລະຈົນ, ກໍ່ການຮ້າຍ, ສົງຄາມ ແລະ ອື່ນໆ |
| 3 | ເສດຖະກິດ | ວິກິດການທາງການເງິນ, ວິກິດເສດຖະກິດ, ວິກິດອັດຕາແລກປ່ຽນ ແລະ ອື່ນໆ |
| 4 | ສຸຂະພາບ | ພະຍາດປອດອັກເສບສາຍພັນໃໝ່ (ໂຄວິດ-19), ພະຍາດປາກເປື່ອຍລີ້ນເລັບ, ໂລກຊາ (SARS), ຖອກທ້ອງ, ໄຂ້ເລືອດອອກ, ໄຂ້ຍຸງລາຍ ແລະ ອື່ນໆ |
| 5 | ເຕັກໂນໂລຊີ | ອຸບັດຕິເຫດໃນການເດີນທາງ ຫຼື ໃນເວລາຫຼິ້ນກິດຈະກຳ |

**4.3 ກຳນົດການປະຊາສຳພັນ ແລະ ການແຈ້ງເຕືອນຂອງຈຸດໝາຍປາຍທາງການທ່ອງທ່ຽວເມືອງເຟືອງ**

1) ຈຸດໝາຍປາຍທາງການທ່ອງທ່ຽວຈະຕ້ອງມີແຜນການປະຊາສຳພັນ ແລະ ແຈ້ງເຕືອນກ່ຽວກັບວິກິດການສຳລັບນັກທ່ອງທ່ຽວ: ກຳນົດບັນດາວິກິດການຕ່າງໆທີ່ເຄີຍເກີດ ແລະ ຄາດວ່າຈະເກີດຂຶ້ນ ໂດຍສະເພາະໃນຈຸດໝາຍປາຍທາງການທ່ອງທ່ຽວ, ສ້າງຕັ້ງໜ່ວຍງານສະເພາະກິດໃນການປະຊາສຳພັນໃຫ້ແກ່ນັກທ່ອງທ່ຽວ, ກຳນົດຮ່າງເອກະສານເນື້ອໃນການປະຊາສຳພັນ ແລະ ກຳນົດຊ່ອງທາງການເຜີຍແຜ່ຂໍ້ມູນຂ່າວສານ, ຂອດປະສານງານກັບບັນດາພາກສ່ວນກ່ຽວຂ້ອງໃນການສື່ສານ ແລະ ອື່ນໆ.

2) ການກຳນົດຊ່ອງທາງໃນການປະຊາສຳພັນ ແລະ ແຈ້ງເຕືອນ ໂດຍຄຳນຶງເຖິງຄວາມວ່ອງໄວ ແລະ ຄວາມສະດວກໃນການເຂົ້າເຖິງນັກທ່ອງທ່ຽວ ເຊັ່ນ: ການເຜີຍແຜ່ຂໍ້ມູນອອນລາຍທາງເວັບໄຊ, ສື່ສັງຄົມອອນລາຍ, ແອັບມືຖື ພ້ອມທັງສ້າງເວບໄຊ, ເຟດບຸກ, ຢູທູບ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເພື່ອເປັນກະບອກສຽງໃນການສື່ສານໃຫ້ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດຢ່າງກວ້າງຂວາງ ແລະ ຕໍ່ເນື່ອງ. ນອກນັ້ນ, ການຜະລິດແຜ່ນພັບສຳລັບແຈກຢາຍ ກໍສາມາດນຳໃຊ້ໄດ້ກໍລະນີຕ້ອງການເຜີຍແຜ່ຂໍ້ມູນໃຫ້ແກ່ນັກທ່ອງທ່ຽວກ່ຽວກັບການປ້ອງກັນສິ່ງທີ່ຍັງບໍ່ທັນເກີດ ຊຶ່ງສາມາດເຂົ້າເຖິງນັກທ່ອງທ່ຽວບາງກຸ່ມທີ່ບໍ່ໄດ້ນຳໃຊ້ເຕັກໂນໂລຊີ.

3) ພາສາທີ່ໃຊ້ໃນການປະຊາສຳພັນ ແລະ ແຈ້ງເຕືອນ: ຕ້ອງເປັນພາສາທີ່ແທດເໝາະກັບນັກທ່ອງທ່ຽວແຕ່ລະກຸ່ມຕາມຄວາມເໝາະສົມ.

4) ຕິດຕັ້ງປ້າຍຂໍ້ມູນ: ປະກອບມີປ້າຍຊີ້ບອກເສັ້ນທາງກໍລະນີເກີດເຫດສຸກເສີນ ເພື່ອຊີ້ບອກໄປຍັງໄປເຕົ້າໂຮມລວມສູນ, ປ້າຍເຕືອນ, ປ້າຍຫ້າມ ແລະ ປ້າຍຂໍ້ມູນກ່ຽວກັບຄວາມສ່ຽງ ແລະ ວິກິດການຕ່າງໆຈະຕ້ອງມີພາສາທີ່ແທດເຫມາະກັບນັກທ່ອງທ່ຽວ ຫລື ມີສັນຍາລັກທີ່ເຂົ້າໃຈຕາມຫລັກການສາກົນ.

5) ການຝຶກອົບຮົມ: ຈະຕ້ອງມີການຝຶກອົບຮົມໃຫ້ແກ່ຫນ່ວຍງານສະເພາະກິດທີ່ເປັນຈຸດໃຈກາງ ແລະ ພາກ ສ່ວນກ່ຽວຂ້ອງໃນການໃຫ້ການຊ່ວຍເຫລືອເບື້ອງຕົ້ນສໍາລັບນັກທ່ອງທ່ຽວ.

## 5. ຂໍ້ແນະນໍາແຜນການແກ້ໄຂ ແລະ ຊ່ວຍເຫຼືອຜູ້ປະກອບການໃນພາວະວິກິດການ

ເພື່ອເຮັດໃຫ້ຜູ້ປະກອບການໃນຂະແໜງການທ່ອງທ່ຽວສາມາດຜ່ານຜ່າວິກິດການຕ່າງໆ ທີ່ເກີດມີແຜນການແກ້ ໄຂ ແລະ ຊ່ວຍເຫຼືອ ມີດັ່ງລຸ່ມນີ້:

1) ບັນເທົາ/ຊ່ວຍເຫຼືທາງດ້ານເສດຖະກິດເພື່ເຮັດໃຫ້ຂະແໜງທອ່ງທຽ່ວສາມາດຜ່ານຜ່າວິກິດ (ຢູ່ລອດ)

- ເພີ່ມທະວີການຮ່ວມມື ລະຫວ່າງພາກລັດ ແລະ ພາກທຸລະກິດໃຫ້ຫຼາຍ.

- ການໃຫ້ການຊ່ວຍເຫຼືອ ແລະ ສ້າງສະພາບຄ່ອງໃຫ້ແກ່ທຸລະກິດ (ກອງທຶນຊ່ວຍເຫຼືອການທ່ອງທ່ຽວ, ສ້າງແຮງຈູງໃຈໃນການຮັກສາວຽກເຮັດງານທໍາ.

2) ສ້າງຄວາມໝັ້ນໃຈໃຫ້ແກ່ການທອ່ງທ່ຽວ ແລະ ສ້າງຄວາມເຂັ້ມແຂງໃຫ້ຂະແໜງການ

- ຈັດຕັ້ງປະຕິບັດບັນດາລະບຽບການ, ຂໍ້ແນະນໍາກ່ຽວກັບຄວາມປອດໄພດ້ານສຸຂະພາບ ແລະ ຍຸດທະສາດໃນການປະສານງານ (ຕິດຕໍ່ພົວພັນ).

- ການສຶກສາຄົ້ນຄວ້າຕະຫຼາດການທ່ອງທ່ຽວ (ການເກັບກໍາຂໍ້ມູນ & ການວິໄຈ), ການຝຶກອົບຮົມ ແລະ ເຄື່ອງ ມືດິຈິຕອນ ແລະ ວິທກີານ) .

3) ຍົກລະດັບ, ຂະຫຍາຍ ແລະ ສ້າງຄວາມຫຼາກຫຼາຍຂອງຜະລິດຕະພັນການທອ່ງທຽ່ວ

- ກະຕຸ້ນການລົງທຶນ (ການໝູນໃຊ້ຊັບສິນ).

- ສ້າງຄວາມຫຼາກຫຼາຍຂອງຜະລິດຕະພັນການທ່ອງທ່ຽວ (ໂດຍແນໃສ່ຄວາມເປັນມິດກັບສິ່ງແວດລ້ອມ ແລະ ຄວາມຍືນຍົງ) .

- ສ້າງຄວາມຫຼາກຫຼາຍຕະຫຼາດການທອ່ງທ່ຽວ.

- ລະດົມສ້າງກອງທຶນບັນເທົາ/ຊ່ວຍເຫຼືອທຸລະກິດການທ່ອງທຽ່ວ.

- ສະໜອງ/ແຈກຢາຍອຸປະກອນສໍາລັບການປ້ອງກັນພະຍາດ COVID 19 ໃຫ້ແກ່ຂະແໜງການທ່ອງທ່ຽວ.

- ອໍານວຍຄວາມສະດວກໃນການເຂົ້າເຖິງການຝຶກອົບຮົມ ແລະ ການຊ່ວຍເຫຼືອດ້ານວິຊາການໃຫ້ແກ່ພາກທຸລະກິດ ເພື່ອປະຕິບັດຕາມຂັ້ນຕອນຕ່າງໆ.

- ສ້າງຍຸດທະສາດດ້ານການສື່ສານ ເພື່ອເຜີຍແຜ່ ຂັ້ນ/ລະບຽບການກ່ຽວກັບສຸຂະພາບໃຫ້ແກ່ນັກທ່ອງທ່ຽວ, ຊຸມຊົນ, ພາກທຸລະກິດ ແລະ ປັບປຸງອຸປະກອນ/ເຄື່ອງມືການສຶກສາຕ່າງໆ.

- ຈັດຕັ້ງປະຕິບັດແຜນຍຸດທະສາດດ້ານການສື່ສານ.

- ສ້າງເຄື່ອງມືໃນການລາຍງານ ເພື່ອຊ່ວຍສະໜັບສະໜູນການຈັດຕັ້ງປະຕິບັດບັນດາລະບຽບການຕ່າງໆ ໃນຂະແໜງການທ່ອງທ່ຽວ ໂດຍສະເພາະແມ່ນການລາຍງານ ແລະ ການຕິດຕາມ.
- ສ້າງລະບຽບ, ຂັ້ນຕອນກ່ຽວກັບດ້ານສຸຂະພາບ, ຄວາມ ປອດໄພທາງຊີວະພາບທີ່ໄດ້ມາດຕະຖານ.
- ຊ່ວຍເຫຼືອທາງດ້ານເສດຖະກິດເພື່ອເຮັດໃຫ້ຂະແໜງທ່ອງທ່ຽວສາມາດຢູ່ລົດໄດ້.
- ສະໜອງເງິນໃຫ້ແກ່ຜູ້ປະກອບການທີ່ໄດ້ຮັບຜົນກະທົບ.
- ສ້າງລາຍການໂຄສະນາການທ່ອງທ່ຽວ ແລະ ສະນັບສະນູນທຸລະກິດໃນການພັດທະນາຜະລິດຕະພັນ
- ສ້າງຕັ້ງໜ່ວຍງານສະເພາະກິດກ່ຽວກັບການຮັບມືວິກິດຕ່າງໆ.
    a. ລະດົມກອງທຶນບັນເທົາ/ຊ່ວຍເຫຼືອທຸລະກິດທ່ອງທ່ຽວ
    b. ຊ່ວຍເຫຼືອຜູ້ປະກອບການໃຫ້ເຂົ້າເຖິງແຫຼ່ງທຶນໂດຍໃຫ້ທະນາຄານອອກສິນເຊື່ອສຸກເສີນເພື່ອ ຟື້ນຟູ, ດອກເບ້ຍ 0,415%
    c. ຊ່ວຍເຫຼືອສ້ອມແປງ, ປັບປຸງເລັ່ງດ່ວນໃຫ້ຜູ້ປະກອບການໃນດ້ານອຸປະກອນທີ່ຈຳເປັນ ເຊັ່ນ: ລະບົບໄຟຟ້າ

- **ແຜນຮັບມືຜົນກະທົບ**

1. ຝຶກອົບຮົມການຊ່ວຍເຫຼືອຊີວິດຂັ້ນພື້ນຖານ ແລະ ການປະຖົມພະຍາບານຂັ້ນຕົ້ນໃນກໍລະນີເກີດໄພ ພິບັດ
2. ການອອກແບບໂຄງສ້າງລີສອດ, ຮ້ານອາຫານ, ເຮືອນແພຕ້ອງແຂງແຮງ
3. ການກຳນົດເສັ້ນທາງອົບພະຍົກ, ວິທີການອົບພະຍົກ ແລະ ຈຸດປອດໄພ ລວມມີປ້າຍຊີ້ບອກເສັ້ນທາງ ທີ່ຊັດເຈນ: ເສັ້ນທາງໜີໄຟ
4. ໃຫ້ຄວາມຮູ້ແກ່ຜູ້ປະກອບທຸລະກິດການທ່ອງທ່ຽວ ແລະ ພະນັກງານດ້ານຄວາມປອດໄພ ແລະ ຂໍ້ປະ ຕິບັດໃນການກຽມຄວາມພ້ອມຮັບມືໄພພິບັດ ລວມທັງແບ່ງຄວາມຮັບຜິດຊອບທີ່ຊັດເຈນ
5. ຊ້ອມແຜນອົບພະຍົກໜີໄຟ (ໃນກໍລະນີພື້ນທີ່ສູງ ເຊັ່ນ: ໜ້າເຂື່ອນ)
6. ກະກຽມສຳຮອງອາຫານ, ນ້ຳດື່ມ ແລະ ເຄື່ອງໃຊ້ໃນບ່ອນທີ່ປອດໄພ ແລະ ກວດສອບວັນໝົດອາຍຸ
7. ກຽມຄວາມພ້ອມລະບົບສື່ສານທີ່ມີປະສິດທິພາບ, ມີຊ່ອງທາງການສົ່ງຂໍ້ມູນຂ່າວສານຫຼາຍຊ່ອງທາງ ເພື່ອແຈ້ງເຕືອນໄພ ແລະ ສາມາດສື່ສານໃຫ້ນັກທ່ອງທ່ຽວຮັບຮູ້ທັນເວລາ
8. ມີສູນຂໍ້ມູນການທ່ອງທ່ຽວເພື່ອເປັນບ່ອນປະຊາສຳພັນໃຫ້ຂໍ້ມູນເລື່ອງໄຟພິບັດ
9. ການປະກັນໄພຄວາມເສຍຫາຍຫາກເກີດໄຟຕ່າງໆ

# ພາກທີ V

# ໜ້າທີ່ຮັບຜິດຊອບ, ມາດຕະການ, ການຕິດຕາມ - ກວດກາ ແລະ ປະເມີນຜົນ

## 1. ໜ້າທີ່ຮັບຜິດຊອບຂອງພາກລັດ,ພາກທຸລະກິດ ແລະ ປະຊາຊົນທ້ອງຖິ່ນ

1) ພາກສ່ວນລັດ

- ກຳນົດນະໂຍບາຍ ແລະ ລະບຽບການທີ່ເອື້ອອຳນວຍໃຫ້ແກ່ການລົງທຶນ.
- ການພັດທະນາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ.
- ການສ້າງບຸກຄະລາກອນໃນຂະແໜງການທ່ອງທ່ຽວ.
- ຊຸກຍູ້ສົ່ງເສີມ.
- ແຕ່ງຕັ້ງຄະນະຮັບຜິດຊອບເພື່ອຜັນຂະຫຍາຍການຈັດຕັ້ງປະຕິບັດແຜນພັດທະນາການທ່ອງທ່ຽວເມືອງເຟືອງ.

2) ພາກສ່ວນທຸລະກິດ

- ການລົງທຶນພັດທະນາຕາມທ່າແຮງຢູ່ໃນແຕ່ລະເຂດ.
- ການສ້າງບຸກຄະລາກອນ.
- ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການພັດທະນາ ແລະ ປົກປັກຮັກສາຊັບພະຍາກອນການທ່ອງທ່ຽວ.
- ປະຕິບັດຕາມນະໂຍບາຍ ແລະ ລະບຽບການຕ່າງໆ.
- ສົ່ງເສີມ ແລະ ນຳໃຊ້ຜະລິດຕະພັນຂອງທ້ອງຖິ່ນ ເຊັ່ນ: ອາຫານ, ເຄື່ອງດື່ມ, ເຄື່ອງທີລະນຶກ, ເຄື່ອງຫັດຖະກຳ.

3) ປະຊາຊົນທ້ອງຖິ່ນ

- ປະກອບສ່ວນເຂົ້າໃນການປົກປັກຮັກສາຊັບພະຍາກອນການທ່ອງທ່ຽວ.
- ມີສ່ວນຮ່ວມໃນການວາງແຜນການພັດທະນາຢູ່ໃນທ້ອງຖິ່ນຂອງຕົນ.
- ປະຊາຊົນໃນເຂດເປົ້າໝາຍຕ້ອງໄດ້ຮັບບູລິມະສິດໃນການມີສ່ວນຮ່ວມການບໍລິການການທ່ອງທ່ຽວ, ການສົ່ງເສີມການພັດທະນາທຸລະກິດ SME.

ເພີ່ມທະວີ ການປະສານງານຢ່າງກົມກຽວລະຫວ່າງພາກລັດຂັ້ນສູນກາງ ແລະ ທ້ອງຖິ່ນທັງສາຍຕັ້ງ ແລະ ສາຍຂວາງ, ໃຫ້ກຳນົດໃຫ້ຊັດເຈນວ່າໂຄງການໃດ ສູນກາງຮັບຜິດຊອບ ແລະ ໂຄງການໃດທ້ອງຖິ່ນຮັບຜິດຊອບ.

ເພື່ອຮັບປະກັນໃຫ້ບັນລຸທິດທາງລວມຂອງການພັດທະນາການທ່ອງທ່ຽວໄລຍະ 8 ປີ ທີ່ວາງໄວ້ໃຫ້ໄດ້ໝາກຜົນ, ບັນດາທ່ານຫົວໜ້າພະແນກການຂັ້ນແຂວງ, ຫົວໜ້າຫ້ອງການຂັ້ນເມືອງ, ອົງການ, ກົມກອງ ແລະ ອຳນາດການປົກຄອງຂັ້ນບ້ານຕ້ອງໄດ້ຍົກສູງຄວາມຮັບຜິດຊອບໃຫ້ຈະແຈ້ງ, ໂດຍນຳໃຊ້ກົນໄກການຄຸ້ມຄອງຕາມທິດ 3 ສ້າງແຕ່ຂັ້ນແຂວງຫາຂັ້ນທ້ອງຖິ່ນຮາກຖານໃຫ້ມີຄວາມສະດວກ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີຜົນສຳເລັດ ແລະ ມີປະສິດທິຜົນ.

ພາກລັດ ແລະ ພາກທຸລະກິດ ສົມທົບກັນຈັດຕັ້ງປະຕິບັດ ແລະ ມີການປຶກສາຫາລືກັນຢ່າງເປັນປົກກະຕິ; ຫ້ອງການ ຖວທ ເມືອງ ຜັນຂະແໜ 8 ປີ ຂອງຂະແໜງທ່ອງທ່ຽວແຕ່ປີ 2023- 2030 ໂດຍຫັນບັນດາຄາດໝາຍ, ແຜນຈຸດສຸມອອກເປັນອັນລະອຽດຕາມພາລະບົດບາດຂອງຕົນ, ໂດຍໃຫ້ສອດຄ່ອງລະຫວ່າງແຜນງານ, ແຜນເງິນ ແລະ ແຜນຄົນໃນແຕ່ລະປີ.

4) ແຫຼ່ງງົບປະມານຈັດຕັ້ງປະຕິບັດ

ສຳລັບແຫຼ່ງທຶນ ທີ່ຈະນຳມາພັດທະນາວຽກງານການທ່ອງທ່ຽວຂອງເມືອງເຟືອງ ແມ່ນແຫຼ່ງທຶນມາຈາກລັດຖະບານ, ການຊ່ວຍເຫຼືອຈາກປະເທດເພື່ອນມິດຍຸດທະສາດ, ພາກທຸລະກິດພາຍໃນ ແລະ ຕ່າງປະເທດ ແລະ ຈາກອົງການຈັດຕັ້ງຕ່າງໆ. ອົງການປົກຄອງແຂວງ, ເມືອງ ຈະໄດ້ຄົ້ນຄວ້າຊອກຫາຊ່ອງທາງເພື່ອລະດົມທຶນເຂົ້າມາຈັດຕັ້ງປະຕິບັດແຜນພັດທະນາການທ່ອງທ່ຽວຂອງເມືອງເຟືອງໃຫ້ເປັນຮູບປະທຳ.

## 2. ມາດຕະການຈັດຕັ້ງປະຕິບັດ

ເພື່ອເຮັດໃຫ້ແຜນພັດທະນາວຽກງານທ່ອງທ່ຽວ ຂອງເມືອງເຟືອງ, ແຂວງວຽງຈັນ ສຳລັບປີ 2022-2030 ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ບັນລຸຕາມທິດທາງລວມ ແລະ ຄາດໝາຍສູ້ຊົນ, ອຳນາດການປົກຄອງທຸກຂັ້ນເອົ້າລວມ ເອົ້າສະເພາະແມ່ນ ຫ້ອງການຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈະຕ້ອງໄດ້ວາງບາງມາດຕະການໃນການຈັດຕັ້ງປະຕິບັດ ດັ່ງນີ້:

1) ນຳເອົາເນື້ອໃນຂອງແຜນພັດທະນາການທ່ອງທ່ຽວເມືອງເຟືອງ, ແຂວງວຽງຈັນ ໄປຜັນຂະເປັນແຜນງານ, ໂຄງການປະຈຳປີ, ປະຈຳໄຕມາດ ແລະ ປະຈຳເດືອນ ເພື່ອຈັດຕັ້ງປະຕິບັດຢ່າງມີຈຸດສຸມ ແລະ ຕໍ່ເນື່ອງ;

2) ເຜີຍແຜ່ເນື້ອໃນແຜນພັດທະນາການທ່ອງທ່ຽວ ເມືອງເຟືອງ, ແຂວງວຽງຈັນ ສະບັບນີ້ເພື່ອໃຫ້ພາກລັດ ແລະ ພາກທຸລະກິດໄດ້ຮັບຮູ້ ແລະ ເຂົ້າໃຈ ເຫັນໄດ້ເຖິງຄວາມສຳຄັນຂອງວຽກງານການທ່ອງທ່ຽວປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງໄດ້ຢ່າງແຂງແຮງ;

3) ອຳນາດການປົກຄອງແຂວງ, ເມືອງ ເປັນເຈົ້າການໃນການຊີ້ນຳ-ນຳພາ ແລະ ຊຸກຍູ້ບັນດາຂະແໜງການທີ່ກ່ຽວຂ້ອງກັບຂະແໜງການທ່ອງທ່ຽວທັງພາກລັດ ແລະ ພາກທຸລະກິດ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຕໍ່ບັນດາໂຄງການທີ່ໄດ້ກຳນົດໃນແຜນພັດທະນາສະບັບນີ້;

4) ສຳລັບການໃຫ້ພາກທຸລະກິດເຊົ່າ ແລະ ສຳປະທານທີ່ດິນຂອງລັດເພື່ອພັດທະນາເປັນສະຖານທີ່ທ່ອງທ່ຽວນັ້ນ ພາກລັດຕ້ອງມີການຄຸ້ມຄອງ, ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບລະບຽບກົດໝາຍ;

5) ສຳລັບການຂຸດຄົ້ນແຮ່ທາດຕ່າງໆ ທີ່ເປັນຜົນກະທົບຕໍ່ການທ່ອງທ່ຽວ ພາກລັດຈະຕ້ອງໄດ້ຈັດສັນທີ່ດິນໃຫ້ຈະແຈ້ງລວມທັງການຈັດສັນສຳລັບການປົກປັກຮັກສາສິ່ງແວດລ້ອມໄປພ້ອມກັນ;

6) ພາກລັດຕ້ອງລົງທຶນເຂົ້າໃນການພັດທະນາພື້ນຖານໂຄງລ່າງພື້ນຖານ ແລະ ສ້າງສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວທີ່ຈຳເປັນ ເພື່ອເປັນພື້ນຖານໃນການດຶງດູດການລົງທຶນໃນຂະແໜງການທ່ອງທຽວ ແລະ ດຶງດູດນັກທ່ອງທ່ຽວໃຫ້ມາທ່ຽວນັບມື້ຫຼາຍ;

7) ຄັດເລືອກເອົາບາງໂຄງການເຂົ້າໃນບັນຊີຮຽກການລົງທຶນຂອງແຂວງ ແລະ ສູນກາງເພື່ອລະດົມການລົງທຶນ;

8) ເອົາໃຈໃສ່ພັດທະນາບຸກຄະລາກອນທັງພາກລັດ ແລະ ພາກທຸລະກິດໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບສູງ.

## 3. ການຕິດຕາມ, ກວດກາ ແລະ ປະເມີນຜົນ

1) ພະແນກ ຖວທ ແຂວງວຽງຈັນຊຸກຍູ້, ຕິດຕາມການຈັດຕັ້ງປະຕິບັດແຜນພັດທະນາການທ່ອງທ່ຽວເມືອງເຟືອງ ປີລະ 2 ຄັ້ງ, ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງຂອງແຂວງເພື່ອຮັບປະກັນວ່າວຽກຂອງແຕ່ລະຂະແໜງການທີ່ໄດ້ກຳນົດເຂົ້າໃນໂຄງການໄດ້ຮັບການຈັດຕັ້ງປະຕິບັດ;

2) ຫ້ອງການ ຖວທ ເມືອງ ປະສານສົມທົບກັບຫ້ອງການທີ່ກ່ຽວຂ້ອງຂອງເມືອງໃນການຈັດຕັ້ງປະຕິບັດ ແລະ ມີການປະເມີນຜົນທຸກໆປີ ພ້ອມທັງລາຍງານໃຫ້ແກ່ອົງການປົກຄອງທ້ອງຖິ່ນຮັບຊາບ;

3) ຫ້ອງການ ຖວທ ເມືອງເປັນເຈົ້າການໃນການຕິດຕາມສະພາບປະກົດການຫຍໍ້ທໍ້ທີ່ກ່ຽວຂ້ອງກັບວຽກງານທ່ອງທ່ຽວ ເພື່ອຄົ້ນຄ້ວາ ແລະ ແກ້ໄຂບັນຫາໃຫ້ທັນເວລາ ພາຍຫລັງທີ່ແຜນພັດທະນາການທ່ອງທ່ຽວຂອງເມືອງເຟືອງ ສຳລັບປີ 2022-2030 ໄດ້ຖືກຮັບຮອງຈາກອຳນາດການປົກຄອງແຂວງວຽງຈັນ ແລ້ວສະເໜີໃຫ້ມີການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການໃນທຸກໆປີ. ການປະເມີນຜົນດັ່ງກ່າວ ແມ່ນເພື່ອສະຫລຸບຖອດຖອນບົດຮຽນ, ສົ່ງເສີມຈຸດດີ ແລະ ແກ້ໄຂຈຸດອ່ອນຂໍ້ຄົງຄ້າງທີ່ຄວນໄດ້ຮັບການປັບປຸງແກ້ໄຂ, ຍົກໃຫ້ເຫັນເຖິງຜົນກະທົບດ້ານບວກ ແລະ ດ້ານລົບຕໍ່ສະພາບການພັດທະນາວຽກງານການທ່ອງທ່ຽວຂອງເມືອງ.

# ລາຍຊື່ຄະນະຮັບຜິດຊອບ

| ລ/ດ | ຊື່ແລະນາມສະກຸນ | ຕໍາແໜ່ງ | ໜ້າທີ່ຮັບຜິດຊອບ | ເບີໂທຕິດຕໍ່ |
|---|---|---|---|---|
| I | ຄະນະຮັບຜິດຊອບຈາກສູນກາງ | | | |
| 1 | ທ່ານ ອຸ່ນທອງ ຂາວພັນ | ຮອງລັດຖະມົນຕີ ກະຊວງ ຖວທ | ຫົວໜ້າຄະນະຊີ້ນໍາລວມ | |
| 2 | ທ່ານ ນາງ ແພງຈັນ ແພງ ເມືອງ | ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ | ຮອງຫົວໜ້າຄະນະຊີ້ ນໍາລວມ | |
| 3 | ທ່ານ ນາງ ພອນມະລີ ອິນ ທະພົມ | ຫົວໜ້າກົມພັດທະນາ ການທ່ອງທ່ຽວ | ຮອງຫົວໜ້າຄະນະຊີ້ ນໍາລວມ | 22226810 |
| 4 | ທ່ານ ນາງ ສີພອນໄພ ສິດທິໄຊ | ຮອງຫົວໜ້າກົມຄຸ້ມຄອງ ທຸລະກິດການທ່ອງທ່ຽວ | ຄະນະຊີ້ນໍາລວມ | |
| 5 | ທ່ານ ນາງ ມະນີສາຄອນ ທໍາມະວົງໄຊ | ຮອງຫົວໜ້າກົມ ໂຄສະນາການທ່ອງທ່ຽວ | ຄະນະຊີ້ນໍາລວມ | |
| 6 | ທ່ານ ໂອເງິນ ປັນຍານຸວົງ | ຮອງຫົວໜ້າກົມ | ຫົວໜ້າກອງເລຂາ | 5561 0533 |
| 7 | ທ່ານ ນາງ ຈໍາພອນ ວົງສາ | ຫົວໜ້າພະແນກ | ຮອງຫົວໜ້າກອງເລຂາ | 2222 7374 |
| 8 | ທ່ານ ສອນໄຊ ຈັນທະວົງ | ຫົວໜ້າພະແນກ | ຄະນະຮັບຜິດຊອບສໍາ ຫຼວດ ແລະ ເກັບກໍາຂໍ້ມູນ | 2240 4208 |
| 9 | ທ່ານ ນາງ ພອນມະນີ ສຸຂະ ທໍາມະວົງ | ຮອງຫົວໜ້າພະແນກ | ຄະນະຮັບຜິດຊອບສໍາ ຫຼວດ ແລະ ເກັບກໍາຂໍ້ມູນ | 2366 9662 |
| 10 | ທ່ານ ທິດພະສອນ ສຸວັນນະ ພົງ | ຮອງຫົວໜ້າພະແນກ | ຄະນະຮັບຜິດຊອບສໍາ ຫຼວດ ແລະ ເກັບກໍາຂໍ້ມູນ | 5952 2599 |
| 11 | ທ່ານ ສຸວັນນິກອນ ຜາຕັນ | ຮອງຫົວໜ້າພະແນກ | ຄະນະຮັບຜິດຊອບສໍາ ຫຼວດ ແລະ ເກັບກໍາຂໍ້ມູນ | 5452 3768 |
| 12 | ທ່ານ ບຸນທຽມ ຈິດຕະພອນ | ວິຊາການ | ກົມເຄຫາ ແລະ ຜັງເມືອງ, ກະຊວງ ຍທຂ | |
| 13 | ທ່ານ ນາງ ລໍາພຶດ ໄຊຍະວົງ | ວິຊາການ | ຄະນະຮັບຜິດຊອບສໍາ | 2889 9066 |

| | | | | |
|---|---|---|---|---|
| | | | ຫຼວດ ແລະ ເກັບກຳຂໍ້ມູນ | |
| 14 | ທ່ານ ວົງແກ້ວ ສີອຳພອນ | ວິຊາການ | ຄະນະຮັບຜິດຊອບສຳຫຼວດ ແລະ ເກັບກຳຂໍ້ມູນ | 5647 7773 |
| 15 | ທ່ານ ພອນສຸກ ໄຊສົມພັນ | ວິຊາການ | ກອງເລຂາ | 5553 7793 |
| 16 | ທ່ານ ທົນນະກອນ ທົງທິລາດ | ວິຊາການ | ກົມຄຸ້ມຄອງການທ່ອງທ່ຽວ | |
| 17 | ທ່ານ ນາງ ມີນາ ພົງສະຫວັດ | ວິຊາການ | ສສວທ | |
| 18 | ທ່ານ ຊັບສິນ ສີນຸວົງ | ວິຊາການ | ກົມໂຄສະນາການທ່ອງທ່ຽວ | |
| II | ຄະນະຮັບຜິດຊອບຈາກຄະນະສະຖາປັດຕະຍະກຳ, ມຊ | | | |
| 1 | ທ່ານ ຣສ. ມະໂນລົດ ພິມິດ | ຮອງຄະນະບໍດີ | ທີ່ປຶກສາ | 99269599 |
| 2 | ທ່ານ ຣສ. ປອ. ສຸກັນ ຈິດປັນຍາ | ຮອງຄະນະບໍດີ | ທີ່ປຶກສາ | 58826312 |
| 3 | ທ່ານ ອານຸຊາ ຄຳມຸງຄຸນ | ຮອງຫົວໜ້າພາກວິຊາ | ຫົວໜ້າຄະນະຮັບຜິດຊອບຝ່າຍ ມຊ | 2223 1339 |
| 4 | ທ່ານ ນິດຖາ ບຸນປານີ | ຄູອາສາ | ຜູ້ຊ່ວຍຫົວໜ້າຄະນະຮັບຜິດຊອບ | 99600699 |
| 5 | ທ່ານ ພູວອນ ແກ້ວລີໄຊ | ຄູສອນ | ວິຊາການວາງແຜນໂຄງລ່າງພື້ນຖານ | 22 235 359 |
| 6 | ທ່ານ ດາວຣຽງ ອິນທະວົງ | ຄູອາສາ | ວິຊາການດ້ານການສຳຫຼວດ ແລະ ແຜນທີ່ | 22 235 359 |
| 7 | ທ່ານ ນາງ ມະລິນີ ພິມິດ | ຮອງຫົວໜ້າພະແນກ | ວິຊາການດ້ານພັດທະນາຜະລິດຕະພັນ | 56 991 949 |
| 8 | ທ່ານ ນາງ ພຸດທະສອນ ເພັດສົມພອນ | ຄູສອນ | ຜູ້ຊ່ວຍວິຊາການດ້ານພັດທະນາຜະລິດຕະພັນ | |

| | | | | |
|---|---|---|---|---|
| III | ຄະນະຮັບຜິດຊອບຂັ້ນແຂວງ | | | |
| 1 | ທ່ານ ນາງ ອິ່ນຄໍາ ພັນດາລາ | ຫົວໜ້າ ພະແນກ ຖວທ | | 99815914 |
| 2 | ທ່ານ ແສງແກ້ວ ສູນທະວົງສາ | ຮອງຫົວໜ້າ ພະແນກ ຖວທ | | 52962451 |
| 3 | ທ່ານ ພົງສະຫວັນ ບັນນາວົງ | ຫົວໜ້າຂະແໜງເຄຫາ-ຜັງເມືອງ ພະແນກ ຍທຂ | | 28149250 |
| 4 | ທ່ານ ບຸນທະສິນ ຈິດວິລະພົນ | ຫົວໜ້າຂະແໜງແຜນການ ພະແນກ ແຜນການ | | 91925999 |
| 5 | ທ່ານ ພູວົງ ອຸດົມທອງ | ຮອງຂະແໜງທີ່ດິນ ພະແນກ ຊສ | | 22911430 |
| 6 | ທ່ານ ກາລະເກດ ສຸທໍາມະວົງ | ຮອງຂະແໜງ ພະແນກ ພະລັງງານ-ບໍ່ແຮ່ | | 22206283 |
| 7 | ທ່ານ ປັນຍາສິດ ບຸນສິງຄາມ | ຫົວໜ້າຂະແໜງທ່ອງທ່ຽວ | | 99935416 |
| 8 | ທ່ານ ແສງອາລຸນ ວິໄລເຮືອງ | ຮອງຂະແໜງທ່ອງທ່ຽວ | | 58682128 |
| 9 | ທ່ານ ວິໄລພອນ ກົງມະນີເຄນ | ຮອງຂະແໜງແຜນການ | | 55011178 |
| 10 | ທ່ານ ສະໄຫວ ພິມມະໄກສອນ | ວິຊາການໜ່ວຍງານພັດທະນາ | | 99810440 |
| 11 | ທ່ານ ວິນ້ອຍ ສຸດທິວົງ | ວິຊາການພະແນກອຸດສາຫະກໍາການຄ້າ | | 22992996 |
| 12 | ທ່ານ ນາງ ບັນທະນາ ເພັງສຸພົນ | ວິຊາການຂະແໜງສິ່ງແວດລ້ອມ | | 28309683 |
| IV | ຄະນະຮັບຜິດຊອບຂັ້ນເມືອງ | | | |

| | | | | |
|---|---|---|---|---|
| 1 | ທ່ານ ຄຳເພັດ ຈັນສີມພູ | ເຈົ້າເມືອງໆເຟືອງ | | 55181269 |
| 2 | ທ່ານ ນ. ສົມຄິດ ຈິດດາວົງ | ຫົວໜ້າຫ້ອງການ ຖວທ ເມືອງ | | 56659988 |
| 3 | ທ່ານ ຄຳຜາ ຫຼວງສາມາດ | ຫົວໜ້າ ຫ້ອງການ ພະລັງງານ ແລະ ບໍ່ແຮ່ | | 97896523 |
| 4 | ທ່ານ ຄຳເພັດ ທະລັງສີ | ຮອງຫົວໜ້າຫ້ອງການ ຖວທ ເມືອງ | | 99711430 |
| 5 | ທ່ານ ຕິໂນ່ ຈັນທະດາວົງ | ຮອງຫົວໜ້າຫ້ອງວ່າການ ເມືອງເຟືອງ | | |
| 6 | ທ່ານ ພວງເພັດ ສາຍທອງ | ຮອງຫົວໜ້າຫ້ອງການ ຍທຂ ເມືອງ | | 59422232 |
| 7 | ທ່ານ ນ. ຄຳມີ ອ່ອນວິເນດ | ຮອງຫົວໜ້າຫ້ອງການ ຖວທ ເມືອງ | | 59391543 |
| 8 | ທ່ານ ບຸນແຍງ ດວງອິນ | ຫົວໜ້າ ໜ່ວຍງານທ່ອງ ທ່ຽວ ຖວທ ເມືອງ | | 78206009 |
| 9 | ທ່ານ ບຸນຊ່ວງ ອຸໄລພອນ | ຫົວໜ້າໜ່ວຍງານຂົວ ທາງ ຫ້ອງການ ຍທຂ | | 55625109 |
| 10 | ທ່ານ ອອນ ເກີດມະນີໄຊ | ຫົວໜ້າໜ່ວຍງານ ຫ້ອງການ ຊສ ເມືອງ | | 22235359 |
| 11 | ທ່ານ ສົມພົງ ທິບພະຈັນ | ຫ້ອງການສາທາລະນະ ສຸກເມືອງ | | 99299341 |
| 12 | ທ່ານ ໄພວັນ ແກ້ວປະເສີດ | ພະແນກ ສືບສວນ ກອງ ບັນຊາການ ປກສ ເມືອງ | | |
| 13 | ທ່ານ ສີງຄາມ | ຮອງຫົວໜ້າຫ້ອງການ ແຜນການເມືອງ | | 55907883 |
| 14 | ທ່ານ ແຫລວຄຳ ໃຈຈະເລີນ | ຫົວໜ້າໜ່ວຍງານ ຖວທ ເມືອງ | | 56535658 |